ເຟໂດເຣັນໂກ ຢຸດຢືນຢູ່ຂ້າງໆດ້ວຍທ່າທີ່ຊ້າງສະຫງ່າງາມແບບສະເພາະຂອງມັນ ແລ້ວເວົ້າອອກມາດ້ວຍນ້ຳສຽງຫ້າວຕ່ຳເນັ້ນຍ່ຳຄຳເຫລົ່ານີ້ວ່າ:

-ອານໂຕນ ເຊມືອໂນວິດ, ເຊີນຕ້ອນຮັບກອງທີ ຊ ຂອງ ເຟໂດເຣັນໂກ ໄດ້, ກອງນີ້ໄດ້ມາດຕະການທຸກຢ່າງແລ້ວ.

ຢູ່ຄຽງຂ້າງມັນໂອເລັກ ອອກເນັບ ຢຽດພີສົບຍົ້ມອອກ ສະແດງອາລົມສຳນຶກອອກຢ່າງສະຫລາດສະຫລຽວ, ຫນ້ົ້ກົ້ມຫົວລົງຢ່າງອາຍໆ:

-ໃນພິທີລ້ຽງບາບໃຫ້ປະຊາຊົນເຫລົ່ານີ້, ຂ້າຂໍປະກອບສ່ວນຕາມກຳລັງເລັກນ້ອຍທີ່ມີຢູ່ ຂໍໃຫ້ທ່ານບັນທຶກໃສ່ປຶ້ມນ້ອຍຂອງທ່ານໄວ້ດ້ວຍ ຖ້າຫາກວ່າໃນວັນຫນ້ົ້າຂ້ານີ້ພຶດຕິກຳຊົ່ວຮ້າຍລົງ.

ຂ້າພະເຈົ້າຂົ້ມບ່າໃຫລ່ ໂອເລັກ ແບບກັນເອງ ທັງນ້ົ້ເພາະຂ້າພະເຈົ້າຮູ້ສຶກວ່າ ຢາກກອດຮັດເອົາມັນແບບບໍ່ເປັນຕາຍິກໂທດໃຫ້ພຸ້ນແລ້ວ... ຢາກກອດພວກເຂົາທັງຫມົດ... ທັງ ເຟໂດເຣັນໂກ ແລະ ເດັກນ້ອຍທີ່ຫນ້າຮັກຫມົດທຸກຄົນຂອງຂ້າພະເຈົ້າ. ບາດນ້ົ້ ຂ້າພະເຈົ້າຮູ້ສຶກລຳບາກໃຈຫລາຍໃນການຈົດບັນທຶກສິ່ງໃດສິ່ງຫນ້ົ່ງໄວ້ໃນປຶ້ມນ້ອຍຫລືໃນຫົວໃຈ. ໃນທັນໃດວົ່ນຍານຂອງຂ້າພະເຈົ້າກໍຮູ້ສຶກອົ່ມເຕັ້ມໄປດ້ວຍກະແສແນວຄຶດທຸກຢ່າງ, ຄວາມຮົ່ນຕອງ, ຮູບພາບ, ການຮ້ອງເພງປາສະຈາກສຽງ ແລະ ຈັງຫວະເຕັ້ນລຳ. ພໍແຕ່ຂ້າພະເຈົ້າບໍ່ທັນຈົດສິ່ງໃດສິ່ງຫນ້ົ່ງເທົ່ານັ້ນ ມັນກໍຫາຍໂຕເຂົ້າ

ໄປໃນຝຸງຊົນ ແລ້ວກໍມີສິ່ງໃຫມ່ຮ້ອງຫາຂ້າພະເຈົ້າອີກ, ດຶງດູດ ຄວາມສົນໃຈເອົາໃຈໃສ່ຈາກຂ້າພະເຈົ້າ. "ການລ້າງບາບ ແລະ ການປ່ຽນແປງໂສມຫນ້າ" ຂ້າພະເຈົ້າຄິດຫາເຫດຜົນເມື່ອຢ່າງຕາມ ທາງ, ມັນແມ່ນເລື່ອງຂອງສາດສະຫນາແລ້ວແນວຫມູ່ນີ້. ແຕ່ວ່າ ຫນ້າຍິ້ມແຍ້ມຂອງ ໂກໂຣຕອບ ຊໍ້າເຫລື່ອມບັງຮູບພາບດັ່ງ ເດີມອັນນີ້ເປັນລະຍະໆ. ແມ່ນແລ້ວ, ແມ່ນຂ້າພະເຈົ້າເອງທີ່ຈົ່ງຈົ່ງ ຊື່ ໂກໂຣຕອບ ເຂົ້າຢູ່ໃນກອງທີ ຊ, ຍ້ອນແນວນີ້ທ້າວ ເຟໂດ ເຣັນໂກ ຜູ້ຕາແຫລມຈົ່ງກອດບ່າໄຫລ່ມັນເຂົ້າ ດວງຕາຄູ່ສີຫມົ້ນ ຂອງຫມໍຍືນຍັນຄໍາເວົ້າຫນັກແຫນ້ນວ່າ:

-ເຈົ້າເລືອກສະມາຊິກນິຄົມທີ່ດີໃຫ້ຂ້ອຍແທ້ໆ, ອານໂຕນ ເຊ ມືໂນວິດ. ຂ້ອຍລົມກັບມັນແລ້ວເດ້, ບໍ່ດົນມັນກໍຊິເປັນນາຍກອງ ທະຫານ.

ໂກໂຣຕອບ ແນມເບິ່ງຫນ້າຂ້າພະເຈົ້າກ່ຽງຢ່າງເຄັ່ງຂຶມ ແລ້ວ ເວົ້າດີ ໆ ວ່າ:

-ຂ້ອຍຢາກລົມກັບເຈົ້າຈັກຫນ້ອຍໄດ້ບໍ?

ເຟໂດເຣັນໂກ ກວາດແສງຕາເບິ່ງຫນ້າມັນແບບເຍີ້ຍໆ ທັງຍິ້ມ ແຍ້ມແລ້ວເວົ້າວ່າ:

-ຈັ່ງແມ່ນໂຕພຶ້ກເວີ້ຍ! ເປັນຫຍັງຈົ່ງຢາກລົມກັບລາວ? ບໍ່ ຈໍາເປັນນ່າ, ຊິບອກລາວເຮັດຫຍັງ?

ໂກໂຣຕອບ ເອງກໍແນມເບິ່ງຫນ້າຫນໍຫົວແຫລມ ເຟໂດເຣັນ ໂກ ຢ່າງລະມັດລະວັງຄືກັນ:

-ໂຕເຂົ້າໃຈບໍ? ມີເລື່ອງພິເສດສະເພາະອັນຫນຶ່ງນ່າ.

-ໂຕບໍ່ມີກິດທຸລະພິເສດອັນໃດດອກ, ເຊົາໆ... ຢ່າເວົ້າ ເທາະ.

-ກັນກະ ເອ້... ຢາກໃຫ້... ເອ້ ເພິ່ນສັ່ງຂ້ັ... ຢູ່ຫ້ອງຂ້ັ ຄືກັນບ່າ.

ເຟໂດເຮັນໂກ ຫົວຂຶ້ນ:

-ໂອ້ ແລ້ວແມ່ນມັນຕ້ອງການອັນນີ້ຫວະ! ມັນຍັງບໍ່ທັນເທົ່ງ ເວລາດອກ... ເກົ່າເອ້ີ... ກ່ອນຊິຖືກສັ່ງຂ້ັງແນວນີ້ໂຕຕ້ອງໄດ້ຊ່ືວ່າ ເປັນຊາວນິຄົມກ່ອນ, ໄດ້ຮັບຫມາຍການກ່ອນ ໂຕເຂົ້າໃຈບໍ່? ໂຕ ຫັ້ນຫວະຊິໃຫ້ເພິ່ນສັ່ງຂ້ັງໄດ້? ຄັນເພິ່ນສັ່ງວ່າ: "ໄປຢູ່ຫ້ອງຂ້ັ" ໂຕກະຊິຕອບວ່າ "ເປັນຫຍັງລະ? ຂ້ອຍບໍ່ໄດ້ເຮັດຫຍັງນ່າ".

-ແລ້ວ ຄັນຖ້າຫາກວ່າ ຂ້ອຍບໍ່ໄດ້ຜິດແທ້ໆເດ້ລະ?

-ເຫັນບໍ່... ເຫັນບໍ່ ໂຕບໍ່ເຂົ້າໃຈເລ່ືອງນ້ີຈັກຫນ້ອຍເລີຍ. ໂຕຄິດວ່າ "ເອົາລະ ເຮົາບໍ່ໄດ້ເຮັດຜິດຫຍັງ... ແລະ ອັນນ້ີແມ່ນ ສ່ິງສໍາຄັນກວ່າຫມູ. ແຕ່ເມ່ືອໃດໂຕໄດ້ຊ່ືວ່າເປັນຊາວນິຄົມໂຕຈະ ເຂົ້າໃຈອີກແບບຫນ່ຶ... ຊິວ່າແນວໃດເນາະ?... ສ່ິງສໍາຄັນມັນ ໂລດແມ່ນ ລະບຽບວິໄນ, ໂຕຊິຜິດຫລືບໍ່ຜິດ ຄວາມຈິງແລ້ວ ມັນ ບໍ່ແມ່ນເລ່ືອງຮ້າຍແຮງຫຍັງເລີຍ... ແມ່ນແນວນ້ັນຕ່ວ່າເນາະ ອານ ໂຕນ ເຊມືອໂນວ?

ຂ້າພະເຈ້ົາງຶກຫົວໃຫ້ມັນ. ເບຣແຊນ ແນມເບ່ິງພວກເຮົາ ຄ ກັບວ່າພວກເຮົາເປັນສັດປະຫລາດໃນໄຫແກ້ວ ແລ້ວແກ້ມທ້ັງສອງ ເບ້ືອງຂອງນາງກໍເປ້ົາອອກຄ ແກ້ມຫມາຫຍ ຂ້າພະເຈ້ົາຫາທາງ

ທັນປ່ຽນຄວາມສົນໃຈຂອງນາງອອກຈາກເລື່ອງບໍ່ຫນ້າຟັງເຫລົ່ານີ້, ໂດຍຮ້ອງທ້ວງຂຶ້ນວ່າ:

-ເອີ ແລ້ວແມ່ນພວກໃດມາຫັ້ນນະຮຶ? ຫມໍນັ້ນແມ່ນໃຜ?

-ໂອະ ບັກຂຽດຫັ້ນຫວະ? - ເຟໂດເຣັນໂກ ຕອບ, - ເດັກນ້ອຍຫົວແຂງຄົນຫນຶ່ງ, ເຂົາວ່າມັນກຶກຊັດຢ່າງຫນັກວ່າຊັ້ນເດ້.

-ເອີ ແມ່ນໃດເນາະ, ກອງຂອງຫມໍ ໄຊເຊັນໂກ ຕວ່າຫັ້ນ, ຂ້ອຍຈື່ພວກເຂົາໄດ້ແລ້ວ.

-ແມ່ນໃຜຕີມັນ? - ນາງ ເບຣແຊນ ຖາມຂຶ້ນ.

-ໃນຕອນກາງຄືນນ່າ... ເຂົາເຮັດມັນ... ກະຊິແມ່ນພວກຢູ່ຫນ້ານີ້ແລ້ວ.

-ມີເຫດຜົນຫຍັງ? ແລ້ວເປັນຫຍັງພວກເຈົ້າຈຶ່ງບໍ່ລາຍງານ? ເລື່ອງມັນເກີດດົນແລ້ວຫວະ?

-ວາວະຣາ ວິກໂຕຣິບນາ, - ຂ້າພະເຈົ້າເອົ້ນນາງນ້ຳສຽງແຂງກະດ້າງ, - ພວກເດັກນ້ອຍຢູ່ ກູເຣຍແຊ ຖືກຂົ່ມເຫງຖືກຕີມາຫລາຍປີແລ້ວ ແລ້ວເຈົ້າເອງກໍໃຫ້ຄວາມສົນໃຈເອົາໃຈໃສ່ໃນເລື່ອງນ້ອຍໆເລັກນ້ອຍເທົ່ານັ້ນ ຈົນຂ້ອຍເອງເຊື່ອວ່າອຸບັດເຫດເທື່ອນີ້ຄົງບໍ່ສົມຢູ່ໃນຄວາມສົນໃຈຂອງເຈົ້າຄືກັນ, ໂດຍສະເພາະແລ້ວໃນເມື່ອວ່າຂ້ອຍເອງໄດ້ເອົາໃຈໃສ່ຫ່ວງໃຍມັນຢູ່ແລ້ວ.

ນາງ ເບຣແຊນ ເຂົ້າໃຈເອົາເອງວ່າ ຄຳເວົ້າຮ້າຍໆຂອງຂ້າພະເຈົ້າເທື່ອນີ້ເປັນການບອກໄລ່ນາງທາງອ້ອມ ຈຶ່ງເວົ້າສຽງກະດ້າງວ່າ:

-ເອົາລະ, ຂ້ອຍເມື່ອກ່ອນ.

ຈາກນັ້ນ ຈໍ່ຍ່າງໄປຫາລິດຂອງນາງ, ສະຫາຍ ໂຊຢາ ພວມ ປ່ອນຫົວອອກຈາກລິດພໍດີ.

ຂ້າພະເຈົ້າຫາຍໃຈຍ່າງປອດໂປ່ງ ແລ້ວຍ່າງໄປຫາກອງທີ ໑໒ ຂອງບັກນ້ອຍ ໂຊເຊັນໂກ.

ວາເນຍ ນຳພາກອງມາຍ່າງມີໄຊ. ພວກເຮົາຕັ້ງພາໂລປະກອບ ກອງທີ ໑໒ ຂຶ້ນ ດ້ວຍເດັກນ້ອຍ ກູເຮຍເຊ ອ້ອຍຕ້ອຍ, ຈັ່ງຊັ້ນ ມັນຈໍ່ງເຮັດໃຫ້ກອງນີ້ ແລະ ນາຍກອງຂອງມັນ ມີສັບພະລ້ຳສີພີ ເສດ. ວາເນຍ ເຂົ້າໃຈເລື່ອງນີ້ແລ້ວ, ເຟໂດເຣັນໂກ ນັ້ນກໍຫົວ ຢ່າງສຸດຂີດ ທັ້ງເວົ້າວ່າ:

- ເບິ່ງພວກເດັກນ້ອຍຫມູ່ນີ້ແມ້ ຈັ່ງແມ່ນເປັນຕາຫົວ!

ກອງທີ ໑໒ ເດີນແກວເຂົ້າມາຢ່າງຂຶງຂັງອີງອາດພໍປານຊິໄປ ເສິກ. ພວກເດັກນ້ອຍ ໔0 ຄົນຢ່າງເປັນແກວລະ ໔, ກົກຕົ້ນ ພ້ອມກັນ ທັ້ງແກວ່ງແຂນພໍປານພົນທະຫານ. ເຮັດແນວໃດ ໂຊ ເຊັນໂກ ຈໍ່ທັນມີເວລາເຝິກແອບການຢ່າງແບບທະຫານແນວນີ້? ຂ້າພະເຈົ້າຕັດສິນໃຈສະຫນັບສະຫນຸນພຶດຕິກຳແບບທະຫານຂອງ ກອງທີ ໑໒, ຈໍ່ຍົກມືຂຶ້ນແຕະປາຍຫມວກແງ໊ບ ແລະ ເວົ້າວ່າ:

- ສະບາຍດີ, ສະຫາຍທັ້ງຫລາຍ!

ແຕ່ເດັກນ້ອຍໃນກອງທີ ໑໒ ຍັງບໍ່ທັນໄດ້ຮຽນແບບເຄົາລົບ ກັນຢ່າງນີ້ເທື່ອ ຮ້ອງຕອບບໍ່ພ້ອມກັນ ຈົນ ວາເນຍ ໃຈຮ້າຍຍົກມື ຂຶ້ນແກວ່ງທ່າທາງຄຸງດຂີ່ມ:

- ຢ່າເຮັດແນວນີ້ ໂອ້ຍ! ພວກຊາວນາເອີ!

ເຟໂດເຣັນໂກ ນັ້ນດີໃຈແຮງຈົນຟາດຫົວເຂົ່າຕົນເອງ:

- ເບິ່ງແມ້! ມັນຮຸນໄດ້ແລ້ວນ່າ!

ດັ່ງນັ້ນເພື່ອລົບລ້າງອຸບັດເຫດອັນນີ້ດ້ວຍວິທີການໃດວິທີການ ຫນຶ່ງ ຂ້າພະເຈົ້າຈຶ່ງເວົ້າວ່າ:

- ກອງທີ ໑ຊ, ພັກໄດ້! ເວົ້າໃຫ້ຟັງເບິ່ງວ່າ ພວກເຈົ້າພາ ກັນລ້ຽງອາບນ້ຳແບບໃດ?

ປົວິດ ມາລີກອບ ຍິ້ມສິດໃສບາດຫນຶ່ງ:

- ພວກເຮົາອາບນ້ຳແບບໃດວ່າຕິ? ອາບຢ່າງຄັກເລີຍລະບໍ່ ແມ່ນບໍ່ຮຶຕົມ ?

ໂອດາຣີຢຸກ ຫັນກັບຄືນ ແລະ ຊຸ່ມຊຸ້ນກັບໃຜຜູ້ຫນຶ່ງຢູ່ທາງ ຫລັງມັນວ່າ:

- ກູສະບູ.

ໂຊເຊັນໂກ ແນມເບິ່ງຂ້າພະເຈົ້າຢ່າງທໍລະນົງ:

- ນັບແຕ່ມື້ນີ້ໄປພວກເຮົາຈະອາບນ້ຳກູສະບູທຸກມື້, ໂອດາຣີຢຸກ ເປັນຫົວຫນ້າເສດຖະກິດຂອງພວກເຮົາ... ເຈົ້າຮູ້ແລ້ວຕິ?

ມັນຊຸ້ມໄປໃສ່ແອບສີນ້ຳອ້ອຍຢູ່ໃນມືຂອງສ່ຽວມັນ ແລ້ວເວົ້າວ່າ:

- ມື້ນີ້ຫມົດໄປຕັ້ງ ໔ ກ້ອນ, ສອງກ້ອນເຕັມໆເລີຍ! ແຕ່ມື້ ມັນແມ່ນຍ້ອນມື້ທຳອິດຊຸ່ງດອກ ຕໍ່ໄປຊິບໍ່ເປັນຫັ້ນ... ພວກເຮົາມີ ບັນຫາຫນຶ່ງ... ຢາກຖາມ, ແມ່ນອນແລ້ວວ່າພວກເຮົາບໍ່ມາຈົ່ມຕໍ່ ວ່າຕໍ່ຂາບຫຍ້າດອກ, ແມ່ນບໍ່ຫມູ່ພວກເຮົາບໍ່ມາຈົ່ມຕໍ່ວ່າຫຍັງໃດ ເນາະ? - ມັນງວກໄປຖາມຫມູ.

- ໂອ້ຍ... ພວກເດັກນ້ອຍ ຈັ່ງແມ່ນສຸດັກເອີ! - ເຟໂດເຣັນ ໂກຮ້ອງຂຶ້ນຢ່າງຕື່ນເຕັ້ນຍິນດີ.

-ໂອ້ຍ ບໍ່ດອກ, ພວກເຮົາບໍ່ຈົ່ມວ່າຫຍັງເລີຍ, ບໍ່ຈົ່ມບໍ່ວ່າ ຫຍັງຫມົດ! - ພວກເດັກນ້ອຍຮ້ອງຂຶ້ນເປັນສຽງດຽວກັນ.

ວາເນຍ ງວກໄປເບິ່ງຂ້າງນັ້ນຂ້າງນີ້ຫລາຍເທື່ອ:

-ແຕ່ວ່າ ມັນມີຢູ່ບັນຫາຫນຶ່ງນ່າ ເຈົ້າເຂົ້າໃຈບໍ?

-ເຂົ້າໃຈດີແລ້ວ, ພວກເຈົ້າບໍ່ໄດ້ມາຮ້ອງຈົ່ມວ່າ ແຕ່ພວກເຈົ້າ ມີບັນຫາຢາກຖາມຂໍ້ຫນຶ່ງເທົ່ານັ້ນ.

ວາເນຍ ເຮັດສີບຍາວແລ້ວເຫລືອດຕາໄປມາ:

-ແມ່ນຈັ່ງຊັ້ນແລ້ວ, ພວກເຮົາຢາກຮູ້ວ່າເປັນຫຍັງຢູ່ໃນກອງ ອົນງຈຶ່ງມີສະມາຊິກເກົ່າ ກ້ອກົ, ບ່ອນລະ ມີ ບ່ອນ ຜ... ແມ່ນ ບໍ່ລະ? ແຕ່ວ່າກອງພວກເຮົາ ຊ້ຳບໍ່ມີຈັກຄົນ... ບໍ່ມີຈັກຄົນເລີຍ... ກະທຳນັ້ນແລ້ວ!

ເມື່ອເວົ້າຮອດບ່ອນວ່າ "ບໍ່ມີຈັກຄົນ" ນັ້ນສຽງຂອງຫມໍແຈດ ແຫລມຂຶ້ນປະກອບດ້ວຍທ່າທາງຫນ້າຮັກ ຄືກົ້ມຂຶ້ນແຕະຫູກ້ຳ ຂວາ ແລ້ວຈ່ຽງດອກທາງຂ້າງ.

ຄາວຫນຶ່ງສຽງຫົວຂອງນັ້ນກໍດັງກ້ອງຂຶ້ນ:

-ພວກເຮົາໂລດບໍ່ມີຜ້າຫົ່ມ! ບໍ່ມີເລີຍ! ບໍ່ມີເລີຍ! ບໍ່ມີເສື່ອ ນອນບໍ່ມີຈັກຫົວເລີຍ!

ສຽງຫົວຂອງ ວາເນຍ ແຈ່ມໃສຂຶ້ນເລື້ອຍໆ ແລ້ວທັນໃດທັງ ກອງທີ ໑ຊ ທັງຫມົດກໍຫົວຂຶ້ນນຳ.

ຂ້າພະເຈົ້າເຮັດເຈ້ຍນ້ອຍໃຫ້ນາຍກອງຂອງພວກເຂົາເພື່ອຖືໄປ ຫາໂວນກອບ, ໃນນັ້ນເວົ້າວ່າ: ເບີກຜ້າຫົ່ມ ຝ ຜືນ ແລະ ເສື່ອ ນອນ ຝ ຫົວ ໃຫ້ກອງນີ້ທັນທີ.

ຕາມເສັ້ນທາງທີ່ມຸ່ງສູ່ຫ້ວຍນັ້ນ ເກີດມີການເຄື່ອນເຫນ້ຍ່າງ ຂະຫນານໃຫຍ່, ສະມາຊິກໃນກອງ່ຍ່າງພ້ມພ້ອມຊຸໄປເຮັດວຽກ ຍິ່ງໃຫຍ່ສຳຄັນ.

ຢູ່ດ້ານຫລັງໂຮງຄົວ, ເທິງປ່າຫຍ້າຮົກເຮ້ືອນັ້ນເອງ ເພິ່ນໄດ້ ຈັດບ່ອນເຮັດວຽກໃຫ້ຊ່າງຕັດຜ້ມ ຫ ຄົນທີ່ມາຈາກໃນເມືອງນ້ີເຊ້ົາ ນ້ີ. ເປືອກຫຸ້ມດ້ານນອກຂອງ ກູເຮຍແຊ ຊຸຫລິ່ນອອກຈາກກາຍ ອົງຄະປະຊາກອນຂອງມັນ, ເປັນການຢືນຢັນທັດສະນະອັນຫນ້ັນ ຄົງຂອງຂ້າພະເຈ້ົາ ທີ່ວ່າ: ພວກເຂົາແມ່ນເດັກນ້ອຍທຳມະດາ, ມີ ຊີວິດຊີວາ, ຊ່າງລ້ມຊ່າງປາກ ແລະ ເປັນຜູ້ນ້ັກມ່ວນຄຶດທີ່ວໆ ໄປ.

ຂ້າພະເຈ້ົາແນ່ເຫັນຄວາມພ້ໃຈອັນແທ້ຈິງ ເປ່ັງປະກາຍໃນ ດວງຕາຂອງພວກເຂົາ ເວລາພວກເຂົາພ້ຈາລະນາເບ່ິງເຄ່ືອງຊຸດ ໃຫມ່, ທ້ັງພາກັນຈັບແປງກີບເສ້ືອໃຫ້ເຂ້ົາຮູບເຂ້ົາຮອຍແບບຄົນ ນ້ັກໂກ້ນ້ັກງາມ ສ່ວນຫນວກເ້ົາໃນມ້ືກ້ືກປ້ັນໄປປ້ັນມາບ່ຮູ້ຈັກ ຫລິບຈັກຕ່ວ. ໃນຂະນະທ່ີ ອາໂລດຊາ ໂວນກອບ ຜູ້ຕາແຫລມ ຂອງພວກເຮົາຄ້ົນຄຸ້ຍກອງເຄ່ືອງເສດຫັກພ້ງຢູ່ຕາມຫນ້າດິນອ້ອມໆ ສ້ິນນ້ັນ ຫ້ໍໄດ້ພ້ບແວ່ນກະຈ້ກແຜ່ນຫນ່ຶ ເຊ່ືງຕ່ໍມາເດັກນ້ອຍສອງ ຄົນໄດ້ແປງຂອບໃສ່ມ້ນໂລດ. ບ່ໍພ້ດາວກ້ໍມ້ີຜູ້ຄົນເປ້ັນກຸ່ມເປ້ັນຫມູ່ ໄປແຫຍ້ຍາກແຍງຄົງຢູ່ໃນແວ່ນ. ປ້ກິດວ່າຢູ່ ກູເຮຍແຊຫນ້ົ່ກ້ມ ເດັກນ້ອຍຫນ້າຮັກຫລາຍຄົນ, ສ່ວນອ້ກຈ່ໍານວນຫນ່ຶ ້ັ ກ່ໍຄົງ ອ້ກບ່ໍດົນເລ້ຍເພາະຄວາມງາມເອງກ່ໍ ົ ້ນກ້ບວຽກງານ ແລະ ອາຫານ ການກ້ນ ້ັ ນເອງ.

ຢູ່ຫໍພັກພວກເດັກນ້ອຍແມ່ຍິງນັ້ນ ກໍໃຫ້ວ່າຟົດຟື້ນມ່ວນຊື່ນ ກັບສຸດອົກສຸດໃຈເລີຍ. ພວກສາວນ້ອຍ ກ້ອກກີ ພາກັນເອົາເຄື່ອງ ເອ້ເຄື່ອງນຸ່ງເຮັດຂຶ້ນເປັນພິເສດມາຕ້ອນພວກຫມູ່ສາວນ້ອຍ ກູເຮຍ ແຊ ຕັ້ງຫລາຍແນວ ຄືມີທັ້ງກະໂປງສີຟ້າກືບພັບໃຫຍ່ໆ, ເສື້ອ ຂາວແພເນື້ອດີ, ກ້ຽຕົນສີຟ້າ ແລະ ເກີບກ້ວາ. ກູດລາຕ ອະນຸ ຍາດໃຫ້ພວກແມ່ຍິງເອົາຈັກຫຍິບເຄື່ອງມາໃຊ້ຢູ່ຫໍພັກ, ຈັ່ງຊັ້ນຢູ່ ບ່ອນນີ້ ຈ່ຳກາຍເປັນບ່ອນຊຸມນຸມຄວາມຊຸນລະມຸນແບບແມ່ຍິງ: ມີ ການຈັດແທກ ຕັດ ລອງ ຣິດ. ໃນມື້ນີ້ພວກເຮົາກໍປະຫ້ອງຊັກເຄື່ອງ ໄວ້ໃຫ້ພວກແມ່ຍິງໃຊ້ຢ່າງເຕັມຂີດ. ເມື່ອສອນທາງກັບ ເປເຣດ ຂ້າພະເຈົ້າເວົ້າກັບມັນຢ່າງເຄັ່ງຄັດ ວ່າ:

- ໄປບ່ຽນນຸ່ງສົ້ງກັນເປື້ອນແລ້ວດັ່ງໄຟໃສ່ເຕົາຫ້ອງຊັກເຄື່ອງໃຫ້ ພວກແມ່ຍິງ, ຢ່າເຕົ້ນໄປເຕົ້ນມາລ້ຽງຫລາຍ, ໄອ... ຂ້ຽວເຂົ້າ.

ເປເຣດເດ່ຫນ້າທີ່ຫຸ້ມດ້ວຍຮອຍຕາບບາດແຜເຂົ້າມາຫາຂ້າ ພະເຈົ້າແລ້ວເວົ້າທັ່ງເອົາບ໋ວມຊ໋ໃສ່ຫນ້າເອົກຕົນເອງວ່າ:

- ໃຫ້ຂ້ອຍຫວະ... ໃຫ້ຂ້ອຍຕົ້ມນ້ຳໃຫ້ພວກແມ່ຍິງຫວະ?

- ເອ໋.

ເປເຣດ ເບ່ງຫ້ອງຂຶ້ນ, ເຮັດແກ້ມເປົ້າແລ້ວຮ້ອງສຽງກ້ອງໄປ ທ໋ອບ໋ລິເວນອັດ ທ້ຽຄຳນັບແບບທະຫານ:

- ຈັດການຕົ້ມນ້ຳ!

ແນ່ນອນວ່າ ຫມໍເປັນຄົນເຂັ້ມແຂງຮ່າງກ໊ດໃຫຍ່ ແຕ່ເມື່ອ ຜ່ານພິທີການອັນນີ້ແລ້ວ ຫມໍຄ໊ວ່າກາຍເປັນຄົນຂວັນອ່ອນແຕກຕື່ນ ໂລດ:

- ແມ່ນ... ແລ້ວ, ແຕ່ວ່າຊິໃຫ້ຂ້ອຍໄປເອົາສິ່ງກັນເປື້ອນຢູ່ໃສ? ກອງທີ ໙ ຂອງພວກເຮົາຍັງບໍ່ໄດ້ເບີກຈັກຊຸດເລີຍ.

ຂ້າພະເຈົ້າເວົ້າກັບມັນວ່າ:

- ນີ້ນ່າ ບັກຫລ້າ... ໂຕໂລດຊິໃຫ້ເຮົານີ້ຈູງແຂນຍ່າງພາໂຕໄປປ່ຽນເຄື່ອງນຸ່ງຊັ້ນຫວະ? ແລ້ວກະຍັງອີກດົນປານໃດໂຕຈັ່ງຊິເຊົາໃບ່ເວີ້ຍ!

ພວກເດັກນ້ອຍທີ່ຢູ່ອ້ອມໆຫົວໂຄບຂຶ້ນ, ເປເຣດ ແກວ່ງຫົວມົນອຸ້ມລຸ້ມຂອງມັນໄປມາ ແລ້ວຮ້ອງຂຶ້ນຢ່າງບໍ່ມີທ່າທາງຫຍັງວ່າ:

- ເອີ... ຂ້ອຍຊິໄປເອງ! ຊິໄປເອງດອກ, ເຈົ້າບໍ່ຕ້ອງກ້າວົນ!

ວ່າແລ້ວ ມັນກໍແລ່ນຫນີໄປ.

ບັດນີ້ ການປະຊຸມນ້ອຍຈັດຂຶ້ນຢູ່ກະໂຕກ້ອງຊຸ້ມປະຕູບ່ອນກອງຂອງ ກູດ ກໍເອົາເປັນຫນ້ອນນັ່ງເອງ.

ລາປິດ ຢືນຢູ່ທັ້ນແລ້ວເວົ້າວ່າ:

- ພວກຫມູ່ນາຍກອງ, ພວກເຮົາບໍ່ຕ້ອງນັ່ງກະໄດ, ເວົ້າກັນນາທີດຽວຫນຶ່ງດອກ. ຂໍໃຫ້ພວກໂຕໄປອະທິບາຍໃຫ້ເດັກນ້ອຍໃນກອງຫມົດທຸກຄົນແດ່ວ່າຄວນເຊັດດັ່ງສັ່ງຂີ້ມູກແນວໃດ. ອັນນີ້ເປັນແນວໃດ ພວກເຂົາພາກັນຍ່າງໄປທົ່ວທີ ຂີ້ມູກຍ້ອຍຍາມຍ່າງ. ແລ້ວກະຍັງອີກເລື່ອງຫນຶ່ງ ການໃຊ້ວິດ, ອັນທີ່ ໂຈຣາເວົ້າຢູ່ໃນກອງປະຊຸມນັ້ນແລ້ວ, ຕໍ່ມາ ອາໂລດຊາ ໄດ້ຈັດເອົາກະຕ່າຂີ້ເຫຍື້ອໄປໃສ່ທຸກຫ້ອງແລ້ວ ແຕ່ຍັງພາກັນກົ້ມຊະຊາຍຢູ່.

- ໂຕຢ່າຟ້າວຫລາຍແມ້, ທຳອິດນີ້ ຊິຕ້ອງໄດ້ປັດກວາດກຳຈັດແນວຂີ້ດຽດ... ຈັ່ງຊັ້ນ ກະຕ່າ... ກັບທຸກແນວກໍ່ຄືກັນ! - ເວດ ກອບສະກີ ເວົ້າທັ້ງຫົວ.

- ເລື່ອງນີ້ປະໄວ້ກ່ອນ ໂກສເຈຍ! ການປັດກວາດໃຫ້ສະອາດ ເປັນບັນຫາຢ່າງຫນຶ່ງ ແລະ ຄວາມເປັນລະບຽບກໍເປັນອີກເລື່ອງ ຫນຶ່ງ. ແລ້ວໂຕຍັງຊິເປັນນັກທ່ອງທ່ຽວອີກ! ເອີ ອີກເລື່ອງຫນຶ່ງ ຢ່າລືມເຕືອນໃຫ້ທຸກຄົນຮູ້ຈັກລະບຽບຂອງພວກເຮົາ ບໍ່ຊັ້ນຍາມໃດ ພວກເຂົາກະຊິມາຈົ່ມວ່າ "ພວກເຮົາບໍ່ຮູ້ເດ້! ຊິໄປຮູ້ມາແຕ່ ໃສ?...".

- ລະບຽບອັນໃດ?

- ລະບຽບກ່ຽວກັບການຖິ້ມນ້ຳລາຍ ຄາກກະເທົ... ເອົາລະ ເວົ້າພ້ອມກັນ.

ຂະນະທີ່ ລາປົດ ຍົກມືຂຶ້ນໃຫ້ຈັງຫວະນັ້ນ, ພວກນາຍກອງ ກໍພາກັນຫົວ ແລະ ຮ້ອງປະກາດພ້ອມກັນວ່າ:

- ຖິ້ມນ້ຳລາຍບາດຫນຶ່ງ - ລ້ຽງເຮືອນສາມມື້!

ພວກເດັກນ້ອຍແອວຍາວຂອງ ກູເຮຍແຊ ເຊິ່ງແນມເບິ່ງກອງ ປະຊຸມນາຍກອງທ້ຽວຫູທ້ຽວຕາ ດ້ວຍຄວາມຮູ້ສຶກເກງກົວຕໍ່ຫົວຄິດປະ ດິດສ້າງໃຫມ່ອ່ຽມພາກັນຮ້ອງອຸທານ ແລ້ວຟ້າວເອົາຝ່າມືປຸ້ມປາກ ໄວ້ທັນທີ. ລາປົດ ອັດກອງປະຊຸມ ແລ້ວພວກເດັກນ້ອຍກໍພາກັນ ແລ່ນໄປບ່ອນຕ່າງໆທີ່ໃຊ້ເປັນຫ້ນອນເພື່ອກະຈາຍຄຳສັ່ງ. ພວກ ເຂົານຳຂ່າວນີ້ໄປບອກຮອດ ຄາລາບູດາ ເຊິ່ງເຮັດໃຫ້ຂ້າພະເຈົ້າຄຶດ ຕ່າງໃຈທີ່ສຸດ ເພາະລາວຫ້ນອອກມາຈາກຄອກງົວ ຕົນໂຕເຕັມ ໄປດ້ວຍຝຸ່ນ ເສັ້ນເຟືອງ ແລະ ແມ່ຂີ້ງົດເສດອາຫານອື່ນໆ, ລາວຈົ່ມພຸມໆສຽງຫ້າວໆວ່າ:

- ພວກແມ່ຍິງເຮົາຊ່ວຍນັ້ນໂລດເມື່ອຫນີປະຂ້ອຍ, ບັດນີ້ຂ້ອຍ

ເລີຍຊິ້ຕ້ອງໄດ້ຍ່າງໄປຮອດສະຖານີລົດໄຟ... ເອີ... ກຸ່ມນ້ຳລາຍ ບາດຫນຶ່ງ ລ້ຳງເຮືອນສາມມື້! ຄັກເວີ້ຍ!... ວິເຕຍ, ໂຕກໍ່ອີ່ຕົນ ຄົນແກ່ຄົນເກົ້າແດ່ດຸ... ຢູ່ນີ້ແມ່ນໂຕໃດເນາະເປັນເຈົ້າການໃນເລື່ອງ ນ້ຳ, ກະເອົາຂໍ້ຮ້ອນຈັກໂຕມາແກ້ລົດນ້ຳພາຂ້ອຍໄປສົ່ງຟຸ້ນແດ່ ເດ້.

ວິເຕຍ ແນມເບິ່ງ ບຮາເຊັນໂກ ຜູ້ຫນ້າເກງຂາມ, ແລ້ວ ອານໂຕນ ບຮາເຊັນໂກ ຜູ້ມີສຽງທຸ້ມຕ່ຳຄືກັນຈ່ຳເບ້ງສຽງດັ່ງກ່າວ ອອກມາວ່າ:

-ນ້ຳຂໍ້ຮ້ອນຫວະ... ຢ່າໃດ! ເອົາບັກນ້ອຍຫັ້ນເດ້ອອກມາ ທຽມລົດແລ້ວພາສຸພາບບຸລຸດຊະລາຄົນນີ້ໄປສົ່ງ, ນ້ຳຂໍ້ແມ່ນລາວໃດ ທ່ຳພັນບາດໃຫ້ ອ່ ໂຈຣາ. - ບຮາເຊັນໂກ ງວາກມາຫາ ຄາລາບູດາ ບອກວ່າ, - ບັດນີ້ຮອດຜຽນເຈົ້າໃຫ້ເຂົາເຮັດອະນາໄມໃຫ້ແລ້ວ.

ຕາຣາເນັດ ທ່າທາງກະວົນກະວາຍ, ຫຍັບເຂົ້າມາຫາຂ້າພະ ເຈົ້າ, ກົກແຂນພັນຜ້າສີແດງຂອງມັນຫມາຍບອກວ່າ ມັນເປັນເວນ ປະຈຳວັນ:

-ມື... ອັນນ່າ - ພວກນັກກະເສດຈຳພວກຫນຶ່ງຢູ່ເຮືອນຫລັງ ນັ້ນ ພວກເຂົາບໍ່ຍອມອອກຈາກຫ້ຳພັກ, ພວກມັນພາກັນເວົ້າວ່າ "ພວກເຮົາບໍ່ໄດ້ຢູ່ໃນກອງໃດຫນຶ່ງ".

-ແລ້ວ... ຕາມໂຕເບິ່ງຫັ້ນ ເຂົາຢູ່ສະອາດແດ່ບໍ ?

-ຂ້ອຍຫາກໍມາແຕ່ຫັ້ນລະ, ທັນໄດ້ເບິ່ງແຕ່ຕຽງນອນ... ຈັກ ແມ່ນຫຍັງຕໍ່ຫຍັງຫ້ອຍເຕັມໄປຫນຶ່ງ, ມີຫັ້ງເຫົ່າ ເຮືອດ...

-ໄປເບິ່ງນ້ຳກັນອີກ.

ຫ້ອງນອນຂອງພວກນັກກະເສດຊະຊາຍບໍ່ເປັນລະບຽບ ຈັກ
ຫນ້ອຍເລີຍ, ເບິ່ງກໍຮູ້ວ່າບໍ່ມີການເຮັດອະນາໄມມາຕັ້ງດົນແລ້ວ.
ໂອສໂກໂບຍນິກິບ ໄດ້ຮັບແຕ່ງຕັ້ງເປັນຫົວຫນ້າກອງຮັບຜິດຊອບ
ຄອກງົວ ແລະ ຍັງມີອີກສອງຄົນກໍຢູ່ໃນຫນ່ວຍຂອງມັນ, ສາມຄົນ
ນັ້ນຍອມຮັບເອົາການຈັດຕັ້ງດັ່ງກ່າວ: ພວກເຂົາເອົາເຄື່ອງນຸ່ງມາ
ສົ່ງເພື່ອຂ້າເຊື້ອພະຍາດແລ້ວກໍອອກໄປ ປ່ອຍໃຫ້ເຮືອນຮ້າງອັນເປັນ
ບ່ອນຢູ່ຂອງພວກເຂົາຣົກເຮື້ອໄປດ້ວຍເສດຂີ້ຫຍ້າເຫຍື້ອເປື່ອນ
ຄ້າຍເຮືອນຮ້າງເຮືອນເພ. ແຕ່ຍັງມີອີກຈຳນວນຫນຶ່ງຄ້າງເຫລືອຢູ່
ໃນຫັ້ນ ແລະ ພວກເຂົາກໍຕ້ອນຮັບຂ້າພະເຈົ້າຢ່າງບໍ່ເປັນມິດເລີຍ.
ແຕ່ທັງພວກເຂົາທັງໂຕຂ້າພະເຈົ້າເອງຕ່າງຄົນຕ່າງຮູ້ແລ້ວວ່າ ຝ່າຍ
ໃດຈະເປັນຝ່າຍຊະນະ, ຈັ່ງຊັ້ນພວກເຂົາຈຶ່ງຈຳເປັນໄດ້ເຮັດໄປ
ຕາມຮູບການກ່ອນຈະຍອມຈຳນົນເທົ່ານັ້ນ.

ຂ້າພະເຈົ້າຖາມວ່າ:

-ພວກເຈົ້າບໍ່ຢາກປະຕິບັດຕາມຄຳຕົກລົງຂອງກອງປະຊຸມ ໃຫຍ່
ຫລະ?

ບໍ່ມີຄຳຕອບ.

-ພວກເຈົ້າໄດ້ໄປຮ່ວມກອງປະຊຸມບໍ່?

ມິດຕາມເຄີຍ, ຕາຣາເນັດ ຕອບຂຶ້ນວ່າ:

-ພວກເຂົາບໍ່ໄດ້ໄປຮ່ວມ.

-ຂ້ອຍໃຫ້ເວລາພວກເຈົ້າພຽງພໍເພື່ອຄິດ ແລະ ຕັດສິນໃຈ
ແລ້ວ. ພວກເຈົ້າຈະເອົາແບບໃດ? ເປັນຊາວນິຄົມ ຫລື ເປັນຄົນ
ເຊົ່າເຮືອນ?

ມິດ, ບໍ່ມີຄຳຕອບ.

-ຖ້າພວກເຈົ້າຖືຕົນວ່າເປັນຄົນເຊົ່າເຮືອນ ຂ້ອຍບໍ່ອາດອະນຸຍາດ ໃຫ້ພວກເຈົ້າຢູ່ໃນເຮືອນນີ້ຕໍ່ໄປກາຍສິບມື້, ແລະ ຂ້ອຍກໍຈະບໍ່ລ້ຽງພວກເຈົ້າອີກຕໍ່ໄປ.

-ແລ້ວແມ່ນໃຜຊິລ້ຽງຊັ້ນນະ? - ສະວາດໂກ ເວົ້າຂຶ້ນ.

ຕາຣາແນັດ ຫົວໃສ່:

-ຈັ່ງແມ່ນພວກເຂົາຄັກເນາະ!

-ອັນນັ້ນຂ້ອຍບໍ່ຮູ້, ແຕ່ບໍ່ແມ່ນຂ້ອຍກໍແລ້ວກັນ! - ຂ້າພະເຈົ້າເວົ້າ.

-ແລ້ວມັນເດ້ ເຈົ້າກະຊິບໍ່ໃຫ້ພວກເຮົາກິນເຂົ້າຫວະ?

-ບໍ່.

-ເຈົ້າມີສິດເຮັດແນວນີ້ຫວະ?

-ມີ.

-ແລ້ວຄັນຖ້າພວກເຮົາເຮັດວຸ້ນເດ້?

-ມີແຕ່ຊາວນິຄົມເທົ່ານັ້ນຈຶ່ງເຮັດວຸ້ນຢູ່ນີ້ໄດ້.

-ພວກເຮົາຊິເຂົ້າເປັນສະມາຊິກນິຄົມ ແຕ່ວ່າພວກເຮົາຈະຢູ່ໃນເຮືອນຫ້ອງນີ້ຕໍ່ໄປ.

-ບໍ່.

-ຊັ້ນພວກເຮົາຊິເຮັດແນວໃດ?

ຂ້າພະເຈົ້າຍົກແຂນຂຶ້ນເບິ່ງໂມງ:

-ພວກເຈົ້າມີເວລາຄິດ ๕ ນາທີ ! ແລ້ວໄປບອກສິບເວນປະຈຳອັນວ່າຕັດສິນໃຈແນວໃດ.

- ເຈົ້າ! - ຕາຣາແນັດ ຮັບຄຳ.

ອີກເດົ່ງຊ໋ອໂມງຕໍ່ມາ ຂ້າພະເຈົ້າຈ໋ຽຍ່າງກາຍມາຂ້າງຝາອ້ອມ ຕຶກພວກນັກກະເສດ. ອາໂລດຊາ ໂອນກອບ ໄດ້ເອົາດອກກຸ້ນແຈ ມາໃສ່ປະຕູໄວ້ແລ້ວ, ຕາຣາແນັດ ຢືນປະຈຳການຕາມຫນ້າທີ່ຂອງ ມັນຢູ່.

- ເປັນແນວໃດ, ພວກເຂົາອອກຫນີແລ້ວຫວະ?

- ບໍ່ອອກຊິໄດ້ຫວະ! - ຕາຣາແນັດ ເວົ້າທ້ວງຫ້ວນ.

- ພວກໂຕແບ່ງຢາຍພວກເຂົາໃສ່ກອງຕ່າງໆຫວະ?

- ເຈົ້າ, ກອງຫນຶ່ງຮັບຄົນຫນຶ່ງ.

ອີກຫນຶ່ງຊ໋ອໂມງເດົ່ງຕໍ່ມາ. ຢູ່ທີ່ໂຕະອາຫານສະເຫລີມສະ ຫລອງ ເຊິ່ງປູລາດດ້ວຍຜ້າຂາວພາຍໃນໂຮງອາຫານ ເຊິ່ງກອງລະ ວ້ງຫນ້າພິເສດໄດ້ຈັດການເຮັດຄວາມສະອາດ, ປະດັບປະດາດ້ວຍ ພຸ່ມໄມ້ ແລະ ດອກໄມ້ຕັ້ງແຕ່ບໍ່ທັນແຈ້ງ ແລະ ຢູ່ເທິງຝານັ້ນ ອາ ໂລດຊາ ໂອນກອບ ກໍໄດ້ນຳເອົາຮູບ ເລນິນ, ສະຕາລິນ, ໂວໂຣ ຊີລິບ* ແລະ ກ້ອກກີ ມາຕິດໃສ່ທັນທີ ພວກເຂົາມາແຕ່ສະກາບີລິດ ໄຟ, ສ່ວນເຊລາປູຕິນ ພ້ອມດ້ວຍ ໂຕສະກາ ກໍໄດ້ຕິດປ້າຍຄຳ ຂວັນ, ຄຳຕ້ອນຮັບຕ່າງໆ ເຊິ່ງໃນນັ້ນມີປ້າຍຫນຶ່ງສະດຸດຕາເປັນພິ ເສດ ຄືນັ້ນເວົ້າວ່າ: "ບໍ່ມີສງ໋ຈ໋ມ".

ອາຫານທ່ຽງແບບເປັນທາງການກໍໄດ້ເກີດຂຶ້ນ.

---

* ສະຕາລິນ ແລະ ໂວໂຣຊີລິບ: ບັນດາຜູ້ນຳຂອງລັດໂຊວຽດ ທຳອິດ.

ໃນທີ່ສຸດພວກເດັກນ້ອຍ ກູເຮຍແຊ ເຊິ່ງເປັນຝ່າຍພ່າຍແພ້, ຫມິດປັນຍາ, ທຸກຄົນສະອາດອ່ຽມຕັດຜົມຫ້ຽນ ໃນເສື້ອແຂນຍາວ ສີຂາວໃຫມ່ ກໍ່ກຸກລຸ້ບລ້ອນ ປົນເຂົ້າກັບພວກເດັກນ້ອຍ ກ້ອກິ ຜູ້ ສະຫງ່າງາມ ແລະ ພົ່ທີພັກ, ບັດນີ້ພວກເຂົາບໍ່ມີທາງຫລົກຫນີ ຝ່າຍນີ້ໄດ້ອີກແລ້ວ. ພວກເຂົາພາກັນນັ່ງຢ່າງສະຫງົບສະຫງຽມຢູ່ ຂ້າງໂຕະ, ມືທັ້ງສອງວາງໄວ້ເທິງຫົວເຂົ່າ, ແສງຕາເລື່ອກແນມ ເບິ່ງກອງເຂົ້າຈີ່ໃນຈານເນື້ອແກ້ວໃສ ແລະ ເຕົ້າແກ້ວໃສ່ນ້ຳ ດ້ວຍ ຄວາມຮູ້ສຶກນັບຖືຍຳເກງຢ່າງເລິກເຊິ່ງ.

ພວກເດັກນ້ອຍແມ່ຍິງໃສ່ຜ້າກັນເປື້ອນສີຂາວ, ເຊເວລີ, ເຊ ລາປູຕີນ ແລະ ເບຍລູກີນ ໃນເສື້ອສີຂາວເຄື່ອນຕົວໄປຢ່າງງຽບໆ ປາສະຈາກສຽງ, ຊົ່ມຊົ້ນແລກປ່ຽນຄວາມເວົ້າກັນຄ່ອຍໆ, ຈັບແປ ສ້ອມບ່ວງທົ່ວງເທິງໂຕະໃຫ້ຮຽບຮ້ອຍ, ເອົາອັນໃດອັນຫນຶ່ງມາ ຕົ້ມໃສ່ ທ້ວງຊອກຫາບ່ອນໃຫ້ຜູ້ໃດຜູ້ຫນຶ່ງ. ພວກເດັກນ້ອຍ ກູເຮ່ຍ ແຊ ປະຕິບັດຕາມຄຳແນະນຳຂອງພວກເຂົາຢ່າງເຫງົາຫງອຍ ຄ້າຍ ຄົນເຈັບໃນເຮືອນພັກຜ່ອນປົ່ນປົວ ແລະ ເບຍລູກີນ ກໍເອົາໃຈໃສ່ ໂຊມພວກເຂົາຄ້າຍກັບວ່າ ພວກເຂົາເປັນຄົນປ່ວຍ ຢ່າງຫ່ວງໄຍ ຈິງໃຈ.

ຂ້າພະເຈົ້ຶ້ຍຶດເອົາບ່ອນຫວ່າງຊົ່ກັບບ່ອນແຂວນຮູບ ເພ່ື່ອຍຶ່ນ ຕິດຕາມເບິ່ງສະພາບຢູ່ໃນໂຮງອາຫານຕັ້ງແຕ່ຕົ້ນຈົນສຸດ, ມັນປາ ກົດຕົວຂຶ້ນຢ່າງບໍ່ຄາດຝັນທ່າມກາງຊາກເພພັງແປນເປ່ົາຂອງສິ່ມ ຮ້າງ. ພາຍໃນນ້ຶ້ມີຄວາມງຽບສະຫງົບຢ່າງຫນຶ່ງຄອບຄອງຢູ່, ມັນ ກະທົບເຂົ້າເກ່ົງໂສດປະສາດ, ແຕ່ມັນຊ້ຳສະທ້ອນອອກຄ້າຍສັດຈະ

ທຳອັນແນ່ນອນຢ່າງຫນຶ່ງ, ຄ້າຍກັບຄວາມເລິກລັບແຫ່ງກຳເນີດ
ໃຫມ່ຢ່າງຫນຶ່ງຢູ່ເທິງພວງແກ້ມທີ່ອີ່ມເຕັມແດງອົ່ງຕ່ຳ ແລະ ໃນ
ແວວຕາຈຸ່ງກ້າຂອງພວກເຂົາ.

ແລະ ຢູ່ໃນຄວາມງຽບສະຫງົບອັນເກົ່າແກ່ ແລະ ເກືອບບໍ່ມີໃຜ
ສັງເກດເຫັນ, ນັກເປົ່າແກ ແລະ ນັກຕີກອງໄດ້ເດີນເຂົ້າມາ,
ເສືອດແສງຕາໃສ່ກັນຢ່າງຟ້າວໆ, ໃບຫນ້າແດງຮຶນດ້ວຍຄວາມກັງ
ວົນແບບຫນຶ່ງ ແລ້ວລຸນເຂົ້າອົ່ງຫລັງໃສ່ຝາ. ມາຮອດເວລານັ້ນ
ຫມົດທຸກຄົນຈຶ່ງເຫັນພວກເຂົາ, ແສງຕາທຸກຄູ່ຈຶ່ງແນມໄປຫາ
ພວກເຂົາຈົນລືມກິນເຂົ້າ.

ຕາຣາເນັດ ກ້າວເຂົ້າປະຕູມາແລ້ວຮ້ອງວ່າ:

- ເຄົາລົບທຸງ, ລຸກຂຶ້ນ! ຢືນກົງ!

ພວກເດັກນ້ອຍນຄມ ກອກກ ຢືນຕວກງຕາມຄວາມຊຸນເຄຍ. ສ່ວນພວກເດັກນ້ອຍ ກູເຣຍແຊ ນັ້ນຍັງຕົກຂະມ່ຳເກົ້ຟ້ຳຄ່ຳສ້ຳອັນນັ້ ຢູ່ເລີຍ ເກືອບບໍ່ທັນງວາກຫນ້າກັບມາ ແລະ ທັນໄດ້ເອົາມືຂຶ້ນໃສ່ ຫນ້າໂຕະເທົ່ານັ້ນ... ພວກເຂົາກໍຫູ້ໄປດ້ວຍສຽງສະນັ່ນກ້ອງຟ້າ ຂອງວົງດົນຕີຂອງພວກເຮົາ.

ຕາຣາເນັດ ກົ້ດັນທຸງຍ່າງເຂົ້າມາ, ບັດນັ້ຜນທຸງກົ້ກກອດອອກ ຈາກຝັກ ແລະ ປົ້ອສະບັດອວດອ້າງເນື້ອຜ້າໃຫມ່ອ່ອງເບົ້າສີແດງຊ້ຳ ຂອງມັນແລ້ວ. ຕາຣາເນັດ ພາທຸງມາຢຸດຕໍ່ຫນ້າຮູບຜູ້ນຳ, ສົ່ງດັ່ງ ກ່າວຍົ່ງຕື່ມຄວາມສະງ່າລາສີ ແບບຊາວໂຊວຽດ ໃຫ້ແກ່ໂຮງອາ ຫານຂອງພວກເຮົາຂຶ້ນອີກ.

- ນັ່ງ.

ຂ້າພະເຈົ້າກ່າວຄຳປາໄສສັ້ນໆກັບພວກເດັກນ້ອຍ, ໂດຍບໍ່ເວົ້າ ເຖິງການເຮັດວຽກ ແລະ ລະບຽບວິໄນ ແລະ ທັງບໍ່ຮຽກຮ້ອງສິ່ງ ໃດສິ່ງຫນຶ່ງນຳພວກເຂົາ ຫລືສະແດງຄວາມສົງໄສອັນໃດອັນຫນຶ່ງ ອອກມາ. ຂ້າພະເຈົ້າພຽງແຕ່ຊົມເຊີຍຊີວິດໃຫມ່ຂອງພວກເຂົາ ແລະ ສະແດງຄວາມເຊື່ອຫມັ້ນວ່າ ຊີວິດແບບນີ້ຈະສວຍງາມທີ່ສຸດ ເທົ່າທີ່ຊີວິດມະນຸດຜູ້ຫນຶ່ງຈະມີໄດ້.

ຂ້າພະເຈົ້າເວົ້າກັບພວກເຂົາວ່າ:

-ພວກເຮົາດຳລົງຊີວິດຢູ່ຢ່າງດີງາມ, ມີຄວາມສຸກ ມີຄວາມ ຫມາຍເພາະວ່າພວກເຮົາແມ່ນຄົນ, ເພາະວ່າຫົວພວກເຮົາຍັງຕັ້ງ ບ່າຢູ່ ແລະ ກໍຍ້ອນວ່າພວກເຮົາຕ້ອງການແນວນັ້ນ. ແລ້ວແມ່ນໃຜ ຊິມາຂັດຂວາງພວກເຮົາໄດ້? ບໍ່ມີໃຜຈະສາມາດຍາດແຍ່ງວຽກງານ ແລະ ຜົນງານຂອງພວກເຮົາໄປໄດ້. ຢູ່ໃນ ສະຫະພາບໂຊວຽດ ຂອງພວກເຮົາ ບໍ່ມີຄົນປະເພດນັ້ນອີກແລ້ວ. ຫລຽວແນມເບິ່ງ ຜູ້ຄົນ ທີ່ຢູ່ອ້ອມຮອບໂຕພວກເຈົ້າແມ້. ເຫັນບໍ ນັ້ນທະຫານກອງຫລອນ ຜູ້ອາວຸໂສຄົນຫນຶ່ງ, ນັ້ນກຳມະກອນ, ສະຫາຍ ຄາລາບູດາ ທີ່ໄດ້ ສະຫລະເວລາຫມົດມື້ຢູ່ກັບພວກເຮົາໃນມື້ນີ້, ຢູ່ທ່າມກາງພວກເຮົາ ຍັງລົດໄຟກັບພວກເຮົາ, ຂຶ້ນເຄື່ອງອອກຈາກຕູ້ລົດໄຟ, ພັນບາດໃຫ້ ນ້ຳ... ມັນເປັນການຍາກທີ່ຈະເວົ້າວ່າ ມີຜູ້ຄົນກ້າຫານ, ມະຫາບຸ ລຸດ, ຜູ້ນຳ, ນັກບອນເຊວິກ ຫລວງຫລາຍເທົ່າໃດທີ່ຄິດຫາພວກ ເຮົາ ແລະຢາກຊ່ວຍເຫລືອພວກເຮົາ. ຍົກຕົວຢ່າງ ບັດນີ້ຂ້ອຍຊິ ອ່ານຈົດຫມາຍສອງສະບັບສູ່ພວກເຈົ້າຟັງ ແລ້ວພວກເຈົ້າຈະເຫັນ ວ່າ ພວກເຮົາບໍ່ຖືກປະຖິ້ມໂດດດ່ຽວ, ພວກເຈົ້າຈະເຫັນວ່າ ມີຜູ້

ຮັກ ແລະ ຫ່ວງໄຍພວກເຮົາພໍພຽງໃດ:

"ຈົດໝາຍຈາກ ມາກຊິມ ກ້ອກກີ

ເກົ້າ ປະທານຄະນະກຳມະການບໍລິຫານງານເມືອງ ຄາຄົບ.

ຂ້າພະເຈົ້າຂໍຂອບໃຈທ່ານສຸດຫົວໃຈ ສຳລັບຄວາມຫ່ວງໄຍ ແລະ ການຊ່ອຍເຫລືອທີ່ທ່ານມີຕໍ່ນິຄົມ ກ້ອກກີ.

ຂ້າພະເຈົ້າຮູ້ຈັກນິຄົມ ກໍແຕ້ດ້ວຍຈົດໝາຍຕິດຕໍ່ກັບພວກເດັກນ້ອຍ ແລະ ຜູ້ອຳນວຍການຂອງນິຄົມເທົ່ານັ້ນ, ຂ້າພະເຈົ້າຮູ້ສຶກວ່າ ນິຄົມນີ້ຄວນໄດ້ຮັບຄວາມເອົາໃຈໃສ່ຢ່າງຈິງຈັງ ແລະ ການຊ່ອຍເຫລືອອັນມີຜົນຫລາຍກວ່ານີ້.

ການຄາດຕະກຳຍັງຄົງສືບຕໍ່ມີຫລາຍຂຶ້ນເລື້ອຍໆຢູ່ໃນຫມູ່ເດັກນ້ອຍໄຮ້ຍາດຂາດຜູ້ດູແລ; ຫນໍ່ແຫນງທີ່ບໍລິສຸດສວຍງາມຈະເກີດປົນກັບເມລັດຮ້າຍ. ພວກເຮົາຫວັງວ່າວຽກງານຂອງນິຄົມອື່ນໆທີ່ຄ້າຍຄືກັບນິຄົມທີ່ທ່ານໄດ້ໃຫ້ການຊ່ອຍເຫລືອນັ້ນຈະຊ່ວຍເສັ້ນທາງຕໍ່ສູ້ກັບພວກເຜດຜີຊົ່ວຮ້າຍ ເພື່ອກອບກູ້ເອົາຜູ້ດີອອກຈາກຜູ້ຊົ່ວຮ້າຍ ຄືກັບທີ່ນິຄົມນີ້ໄດ້ຮຽນຮູ້ ແລະ ເຮັດມາແລ້ວ.

ຂ້າພະເຈົ້າຂໍຈັບມືຢືນດ້ວຍທ່ານຢ່າງສຸດໃຈ, ແລະ ຂໍອວຍພອນໃຫ້ທ່ານມີສຸຂະພາບເຂັ້ມແຂງ, ມີກຳລັງໃຈດີ ແລະ ມີຜົນສຳເລັດອັນດີ ຢູ່ໃນພາລະກິດອັນຫນັກຫນ່ວງຂອງທ່ານ.

ມ. ກ້ອກກີ".

"ຈົດໝາຍຈາກຄະນະກຳມະການບໍລິຫານງານເມືອງ ຄາຄົບ

ເກົ້າ ມາກຊິມ ກ້ອກກີ.

ສະຫາຍທີ່ຮັກແພງ, ຄະນະປະທານກຳມະການບໍລິຫານງານ

ເຂດ ຄາຄົບຂໍສະແດງຄວາມຮູ້ບຸນຄຸນອັນເລິກເຊິ່ງມາຍັງທ່ານ ທີ່ໄດ້ມີເມດຕາຈິດຫ່ວງໄຍຕໍ່ນິຄົມເດັກ ເຊິ່ງໃຊ້ນາມສະກຸນຂອງທ່ານເປັນຊື່.

ບັນຫາວ່າດ້ວຍການຕໍ່ສູ້ຕ້ານກັບສິ່ງຊົ່ວຮ້າຍໃນຕົວຂອງເດັກນ້ອຍໄຮ້ຍາດ ແລະ ຕ້ານກັບພຶດຕິກຳແບບອັນຕະພານຂອງຊາວຫນຸ່ມນ້ອຍນັ້ນ ດຶງດູດຄວາມສົນໃຈຫ່ວງໄຍເປັນພິເສດຈາກພວກເຮົາ ແລະ ມັນກໍຊຸກດັນໃຫ້ພວກເຮົານຳໃຊ້ມາດຕະການເຂັ້ມງວດຈິງຈັງກວ່າເກົ່າ ທັງນີ້ເພື່ອຮັບປະກັນໃຫ້ພວກເດັກເຫລົ່ານີ້ໄດ້ຮັບການສຶກສາອົບຮົມ ແລະ ປັບປຸງຕົນເອງເຂົ້າກັບຊີວິດທີ່ບໍລິສຸດ ແລະ ຄຸນຄ່າຂອງແຮງງານ.

ແນ່ນອນແລ້ວວ່າ ນີ້ແມ່ນພາລະຫຍຸ້ງຍາກຢ່າງຫນຶ່ງ ທີ່ບໍ່ອາດລຸລ່ວງໄປໄດ້ໃນເວລາສັ້ນໆ ແຕ່ມາຮອດດຽວນີ້ ພວກເຮົາໄດ້ຄົ້ນຫາວິທີແກ້ໄຂມັນຢ່າງເລິກເຊິ່ງແລ້ວ.

ຄະນະປະທານແຫ່ງກຳມະການບໍລິຫານງານ ເຊື່ອຫມັ້ນວ່າພາຍໃຕ້ເງື່ອນໄຂໃຫມ່ນິຄົມຈະດຳເນີນວຽກງານໄດ້ຢ່າງພໍເຫມາະພໍດີ. ອີກບໍ່ດົນມັນຈະຂະຫຍາຍຂົງເຂດກິດຈະກຳອອກຢ່າງກ້ວາງຂວາງ ແລະ ຄວາມພະຍາຍາມຮ່ວມກັນຢ່າງເປັນເອກະສັນອັນຫນຶ່ງຈະກ້າວຂຶ້ນສູ່ກັນເກືອສູງສົ່ງສົມກັບຊື່ຂອງມັນ.

ສະຫາຍທີ່ຮັກແພງ, ພວກເຮົາຂໍອວຍພອນໃຫ້ທ່ານມີສຸຂະພາບເຂັ້ມແຂງ, ມີກຳລັງວັງຊາ ທັງນີ້ເພື່ອທ່ານຈະສາມາດຕິດຕາມກິດຈະກຳອັນເປັນກຸສົນຂອງພວກເຮົາ ແລະ ທ່ານຈະສາມາດຜະລິດຜົນງານໃຫມ່ອີກ".

ໃນເວລາອ່ານເນື້ອໃນຈົດຫມາຍເຫລົ່ານັ້ນ, ຂ້າພະເຈົ້າກໍສັ່ງ ຊອມເບິ່ງເດັກນ້ອຍຂ້າມຂອບແຜ່ນເຈ້ຍຈົດຫມາຍ. ພວກເຂົາຟັງ ຂ້າພະເຈົ້າ, ເບິ່ງອອກວ່າວິນຍານທັງຫມົດຂອງພວກເຂົາມາຕຸ້ມ ຕ່ອມຢູ່ໃນດວງຕາ, ທ່າທີເບີກບານໃຈເກມຝັນ ແຕ່ກໍບໍ່ສາມາດ ຮັບເອົາຄວາມລຶກລັບ ແລະ ຂອບເຂດອັນກ້ວາງໃຫຍ່ຂອງໂລກ ໃຫມ່ຫນ່ວຍນີ້ໄດ້. ຫລາຍຄົນລຸກຂຶ້ນຈາກໂຕະ, ແຂນສອກເທົ້າ ໃສ່ຫນ້າໂຕະ ແລ້ວຢື່ນເດ່ຫນ້າຫຍັບເຂົ້າມາຫາຂ້າພະເຈົ້າ. ນັກ ຮຽນຂອງພວກເຮົາຢືນເອ່ຍຝາ, ຍົ້ມຢ່າງຝັນໆ, ພວກເດັກນ້ອຍ ແມ່ຍິງພາກັນເລີ່ມເອົາມືເຊັດຕາ ແລະ ບ່າວສະກັນກໍເທສອດແສງ ຕາເບິ່ງພວກນາງ. ໂກໂຣຕອບ ນັ່ງຢູ່ໂຕະດ້ານຂວາ, ມັນຊຶ່ງຄົດ ທ້າຍູ່ວິງຄ້ວກ່ຽງງາມເຂົ້າຫາກັນ. ໂກວຣັກ ແນມອອກໄປທາງປ່ອງ ຢ້ຽມ ມັນກັດແຂ້ວກັດຄາງຈົນຫນ້າບິດຫນ້າບ້ຽວ ຄືພວມເຈັບ ປວດ.

ຂ້າພະເຈົ້າອ່ານຈົດຫມາຍສຸດແລ້ວ, ກະແສຟອງຊຸດແຮກແຫ່ງ ການເຄື່ອນເຫນັງ ແລະ ວາຈາກໍແລ່ນໄລ່ກັນໄປຕາມແກ້ວໂຕະ ໂລດ, ການຣາບນິບ ຈ່ຽຍກມືຂຶ້ນແລ້ວເວົ້າວ່າ:

-ພວກເຈົ້າຮູ້ແລ້ວຕິວ່າ ບັດນີ້ຊິຢາກໃຫ້ພວກເຮົາເວົ້າຮອດ ຫຍັງອີກ? ຮ້ອງເພງ... ແມ່ນດິ່ສຸດ... ຫ່າມັນເອີ... ຢ່າເວົ້າ ຫຍັງອີກເທາະ... ເອົາເລີຍ... ແຕ່ວ່າ ຮ້ອງດີໃດ໋ ຮູ້ເພງ... ສາ ກົນກຳມາຊິບ...

ພວກເດັກນ້ອຍຜູ້ຊາຍຮ້ອງກ໊ຶກຂຶ້ນທັງຫົວ ແຕ່ຂ້າພະເຈົ້າຈຳ ແນກໄດ້ວ່າເດັກນ້ອຍ ກູເຣຍເຊ ສ່ວນຫລວງຫລາຍຍັງມິດໄປຍ້ອນ

ເກົ່ເຂີນ. ຂ້າພະເຈົ້າຄຶດຕອງເອົາເອງວ່າ ພວກເຂົາບໍ່ຮູ້ຈັກເນື້ອເພງ "ສາກົນກຳມາຊີບ".

ລາປົດ ປົນຂົ້ນເທິງແປ້ນມ້າ:

- ເອົາແມ້, ພວກແມ່ຍິງຫັ້ນນ່າ ຮ້ອງດ້ງໆໃຫ້ພວກເຮົາໄດ້ຍິນສຽງແດ່!

ຫມໍແກວ່ງແຂນ ແລ້ວພວກເຮົາກໍພາກັນຮ້ອງເພງ.

ບາງທີອາດເປັນຍ້ອນວ່າ ເນື້ອຄວາມແຕ່ລະແກ່ວຂອງເພງສາກົນກຳມາຊີບ ສຽດໃກ້ກັບຊີວິດປັດຈຸບັນຂອງພວກເຮົາເອງຫລາຍ, ພວກເຮົາຈຶ່ງຮ້ອງມັນຢ່າງຂົ້ນອົກຂົ້ນໃຈ ແລະ ຍົ້ມແຍ້ມໄປນຳ. ພວກຜູ້ຊາຍເສືອດຕາແໝມເບິ່ງ ລາປົດ ແລະ ໂດຍບໍ່ຮູ້ສຶກໂຕພາກັນອອກທ່າອອກທາງຢ່າງມີຊີວິດຊີວາຄືຫມໍ, ເບິ່ງຄັ້ບວ່າທ່າທີຂອງ ລາປົດ ນັ້ນສາມາດສະທ້ອນແນວຄຶດມະນຸດຊາດອອກມາຢ່າງຈະແຈ້ງ ແລະ ເມື່ອພວກເຮົາຮ້ອງຊ້ຳທ່ອນນີ້ວ່າ:

ສຽງແກ່ງສະບັ້ນຂົ້ນແລ້ວ
ນັ້ນແມ່ນວາລະສຸດທ້າຍຂອງການຕໍ່ສູ້
ທຸກຄົນຈະມີຊີວິດ ເສລີພາບ...
ຍ້ອນ ສາກົນກຳມາຊີບ...

ລາປົດ ກໍໃຊ້ມືຊ້ໃສ່ແກຂອງພວກເຮົາ ດ້ວຍທ່າທີເຂັ້ມແຂງພ້ອມດຽວກັນນັ້ນ ແກກໍທັ່ງສຽງແຈ່ມໃສ ແລະ ແຈດແຫລມຂອງມັນອອກມາພ້ອມໆກັນ.

ເມື່ອສຽງເພງຢຸດຕິລົງແລ້ວ, ມັດເວີຍ ເບຍລູກິນ ຈຶ່ງດຶງ

ແພນີ້ນສີຂາວຂອງມັນອອກມາແກວ່ງໂບກ ແລ້ວຮ້ອງສຽງກ້ອງສະນັ້ນໄປທາງເຮືອນຄືວ່າ:

-ເຊີນເອົາສັບເປັດສັບໄກ່, ຫລາບກ້ອຍຊອຍເສືອ, ເຫລົ້າເດັດ, ຫມາກແຕງ ແລະ ນ້ຳຫວານເຕັມກ້ອຍມາຍາຍໄດ້!

ພວກເດັກນ້ອຍພາກັນຫົວໂຄບຂຶ້ນຫມົດແຮງ ທ້າວແພນເບິ່ງນັດເວີຍດ້ວຍແສງຕາຕື່ນເຕັ້ນ, ສ່ວນ ນັດເວີຍ ຕອບພວກເຂົາຄືນທ້າວເຮັດປາກແຫກກ້ວາງແບບຫນ້າຕະຫລົກ, ເວົ້າສຽງກ້ອງຫວ່ານວ່າ:

-ພວກຫມູ່ເອີ້ຍ ເພີ່ນລືມເອົາໂວດກາ, ເອົາຍຳຫມາກແຕງມາຊ້ຳ ແຕ່ມີນ້ຳຫວານເດີ! ເວົ້າແທ້ເດີ, ເອົາເລີຍບາດນີ້ ຈັດການກັບແກ່ງກ່ອນ!

ໃນທີ່ວໂຮງອາຫານປາກົດວ່າ ມີແຕ່ສຽງຫົວ ແລະ ຮອຍຍິ້ມແບບເປັນມິດຕໍ່ກັນ. ເມື່ອຂ້າພະເຈົ້າກວາດແສງຕາເບິ່ງພວກເຂົາຕໍ່ໄປເລື່ອຍໆນັ້ນ ກໍເລີຍປະທະກັບຕາຕື່ກ້ວ້າງຂອງນາງ ລຸກຣິນສະກາຍຢາ ພໍດີ. ນາງຍືນຢູ່ປະຕູ ແລະ ເບື້ອງຫລັງຂອງນາງແມ່ນໃບຫນ້າຍິ້ມແຍ້ມຂອງ ຢູເຣັບ. ຂ້າພະເຈົ້າແລ່ນໄປຫາພວກເຂົາ.

ນາງ ລຸກຣິນສະກາຍຢາ ເດ່ມືມາໃຫ້ຂ້າພະເຈົ້າຈັບຢ່າງບໍ່ຫົວຊາ ຄືກັບວ່ານາງບໍ່ມີແຮງຖອນແສງຕາອອກຈາກກັນແກວຫົວຕັດຜົມຫ້ານ, ບ່າໄຫລ່ຄຸມເສື້ອສີຂາວ ແລະ ຮອຍຍິ້ມແບບເປັນມິດນັ້ນເລີຍ.

-ຫມາຍຄວາມວ່າແນວໃດ? ອານໂຕນ ເຊມີໂນວິດ... ຟ້າວກ່ອນໂອ້ຍບໍ່ນ່າ... ຊິເປັນໄປໄດ້ແນວໃດ? ພີສິບຂອງນາງສະເໝີ

ຍິກໆ, ແມ່ນໆ... ລູກສິດຂອງເຈົ້າຫມິດຫວະ? ແລ້ວພວກຢູ່ຫນ້ເດ້ຊ້ນ...? ພວກເຂົາຢູ່ໃສຫມິດ? ...ເລົ່າເລ່ື່ອງສູ່ຂ້ອຍຟັງແດ່ ມັນເປັນແນວໃດແທ້?

-ມັນເປັນແນວໃດ? ໃຜຊິຮູ້ວ່າມັນເປັນແນວໃດ, ອັນນ້ີແລ້ວທ່ີເພ່ິນເອ້ີນວ່າ ການປ່ຽນແປງຮູບໂສມ... ແລ້ວກະແມ່ນນັກຮຽນພວກເຮົາຫມິດຫ້ັນແລ້ວ!

ບົດທ ໑໐

ທ່ີຕ້ັນພູ ໂອລ້ືມປັດ

ແຕ່ເດ້ືອນພຶດສະພາຫາເດ້ືອນມິຖຸນາຢູ່ ກູເຮຍແຊ, ພວກເຮົາມ້ືອງກເຮ້ັດຢ່າງລ້ົນຕ້ືນລ້ົນມ້ື, ມາຮອດຈຸປ້ັດບ້ັນຂ້ໍາພະເຈ້ົ້າກ້ໍຍ້ັງບ່ໍມ້ືເຈດຕະນາຢາກເວ້ົ້າຮອດວຽກງານເຫລ່ົ່ານ້ີ ດ້ວຍພາສາຄ່ໍາເວ້ົ້າທ່ີ່ສະອ້ືນສະອອນນ່ໍາມ້ັນປານໃດ.

ຖ້ໍາຫາກເບ່ິ່ງວຽກງານດ້ວຍສະຕ້ິສ່ໍາປະສ້ັນຍະອ້ັນເປ້ັນປົກກະຕ້ິແລ້ວ ຈະເຫ້ັນໄດ້ວ່າມ້ືວຽກງານຫລາຍແນວທ່ີ່ຫ້ັກຫນ່ວງ, ບ່ໍ່ຫນ້າອອນຊອນ ບ່ໍ່ຫນ້າສ້ືນໃຈ ແລະ ວຽກງານອ້ືກຈ່ໍານວນຫ່ື່ໍງ ຊ້ໍ່າຮຽກຮ້ອງໃຫ້ຮ່າງກາຍອ້ິດທ້ືນ ແລະ ຊ້ືນເຄ້ືຍຮ້ັບເອ້ົາຄວາມເຈ້ັບປວດຫ້ັກຫນ່ວງຕ່າງໆ. ວຽກງານຫລວງຫລາຍຈ່ໍານວນຫ່ື່ໍງສ່ໍາເລ້ັດລ່ວງໄດ້ກ້ໍຍ້ອນວ່າ ມະນຸດໄດ້ຮຽນຮູ້ເ້ືຖ່ິງຄວາມທຸກທ້ໍລະມານ ແລະ ສູ້ທົນຮ້ັບເອ້ົາມ້ັນ.

ຄ້ົນເຮົາສ້ ້າງຄວາມຊ້ືນເຄ້ືຍໃຫ້ແກ່ຕ້ົນເອ້ງມາຕ້ ້ັງດ້ົນນານແລ້ວ ເພ່ືອຜ່ານຜ່ າເອ້ົາຊະນະຄວາມທ້ົນທຸກ ແລະ ຄວາມອ່ະເຫ ຍ ້ ອ້ ງ ຫນ້າຂ ້ ົ ງ ກ ຂ ອ ງ ວ ຽ ກ ງ ານ ທ ່ ີ ່ ກ ່ ໍ ໃ ຫ ້ ເ ກ ິ ດ ຄ ວ າ ມ ຮ ູ ້ ສ ຶ ກ ດ ່ ັ ງ ກ ່ າ ວ ແ ຕ ່ ເ ຫ ດ

ຜົນທີ່ພາໃຫ້ປະນີປະນອມຍອມຮັບເອົາມັນນັ້ນ ມາຮອດປັດຈຸບັນ ບໍ່ໄດ້ເປັນທີ່ພໍອົກພໍໃຈຂອງພວກເຮົາປານໃດ. ດ້ວຍການຍອມຮັບຮູ້ຄວາມອ່ອນແອຂອງທາດແທ້ມະນຸດ, ໃນທຸກວັນນີ້ພວກເຮົາຈຶ່ງຍິນຍອມຮັບເອົາເຫດຜົນບາງຊະນິດທີ່ບາງບຸກຄົນພໍໃຈ, ທີ່ເປັນປະໂຫຍດແກ່ປັດເຈກກະຊົນ ແຕ່ພວກເຮົາຍັງຍຶດໝັ້ນຫນຽວແໜ້ນຢູ່ກັບການສັບປ່ຽນເຫດຜົນອັນຍິ່ງໃຫຍ່ມາເປັນສິດຜົນປະໂຫຍດສ່ວນໂຮມ. ແຕ່ໃນເວລາດຽວກັນນີ້ກໍ່ຈຳເປັນຕ້ອງຫລາຍຢ່າງພົ້ນໂຜ່ອອກມາຢູ່ໃນຂົງເຂດນີ້, ມັນຍັງສັບສົນຫຍຸ້ງຍາກຢູ່ ກູເຮຍ ແຊ ນີ້ຈຳເປັນໄດ້ແກ້ໄຂມັນຢ່າງເກືອບບໍ່ມີການຊ່ວຍເຫລືອມາຈາກພາຍນອກເລີຍ.

ມັນຄົງຈະມີສິ່ງໃດສິ່ງຫນຶ່ງດອກ ທີ່ຫລົກການສຶກສາສາດອັນແທ້ຈິງ ຕ້ອງມາໃຫ້ຄວາມແຈ່ມແຈ້ງແກ່ບັນຫານີ້, ມາກອດນ້ຳກັນໄກຂອງແຮງງານມະນຸດ, ຊຶ່ງບອກວ່າ ຄວາມນຸ່ງມາດຂອງມະນຸດ, ກຽດສັກສີ, ຄວາມລະອາຍ, ຄວາມແນບນຳ, ຄວາມຢ້ານກົວ, ການແຂ່ງຂັນ ທັງຫມົດເຫລົ່ານີ້ຄວນຢູ່ບ່ອນໃດ ແລະ ມັນຄວນສົມທົບປະສານເຂົ້າກັບປາກົດການທີ່ສະທ້ອນເຖິງສະຕິບໍລິສຸດ, ຄວາມເຊື່ອຫມັ້ນ ແລະ ເຫດຜົນແບບໃດ. ນອກຈາກນີ້ ປະສົບການຂອງຂ້າພະເຈົ້າຍັງຢືນຢັນຢ່າງເດັດຂາດວ່າ ຄວາມຫ່າງໄກລະຫວ່າງອົງປະກອບຂອງສະຕິບໍລິສຸດ ແລະການໃຊ້ພະລັງງານດ້ານຊົ່ນນັ້ນ ໂຍດຍາວສົມຄວນຈົນຂະຫນາດວ່າ ຈຳເປັນຕ້ອງໄດ້ໃຊ້ສາຍໂສ້ເຮັດດ້ວຍອົງປະກອບງ່າຍໆ ແລະ ຕົນຕໍແທ້ໆກວ່າດຶງຈ່ອງມັດມັນເຂົ້າໃສ່ກັນ.

ບັນຫາກ່ຽວກັບສະຕິສຳນຶກນີ້ ໄດ້ຮັບການແກ້ໄຂເປັນຢ່າງດີມາ
ແລ້ວ ໃນມື້ຊາວນິຄົມ ກ້ອກກີ ເດີນທາງມາຮອດ ກູເຮຍແຊ. ລະ
ຍະນຶ່ງອາທິດນັ້ນຊາວກູເຮຍແຊ ກໍຊາບຊຶມຫມັ້ນໃຈໂລດວ່າ ການ
ທີ່ຊາວນິຄົມ ກ້ອກກີ ໄດ້ມາຢູ່ຮ່ວມກັບພວກເຂົານີ້ ມັນໄດ້ນຳເອົາຊີ
ວິດທີ່ດີກວ່າມາໃຫ້ເຂົາ, ມີຜູ້ຄົນທີ່ຜ່ານບົດຮຽນ, ປະສົບການມາ
ຊ່ອຍເຫລືອພວກເຂົາ ດັ່ງນັ້ນພວກເຂົາຈຶ່ງສາມາດກ້າວໄປຂ້າງຫນ້າ
ຮ່ວມກັບຄົນເຫລົ່ານີ້. ບັດໃຈຕັດສິນຢູ່ຫນ້ຶຮອດບໍ່ແມ່ນການຕິລາຄາ
ແບບໃຫ້ທ່າດີກວ່ານັ້ນຊ້ຳ ແຕ່ແນ່ນອນແລ້ວມັນກາຍເປັນການຮຽກ
ຮ້ອງຂອງສ່ວນໂຮມ: ມັນບໍ່ແມ່ນການຄຶດໄລ່ດອກທີ່ເປັນສິ່ງຕັດສິນ
ແຕ່ແມ່ນຕາ, ແມ່ນຫູ, ແມ່ນສຽງເວົ້າສຽງຫົວພຸ້ນ. ຢ່າງໃດກໍ
ວັນທຳອິດນັ້ນ ມັນກໍໄດ້ສ້າງຜົນຮັບຢ່າງຫນຶ່ງຈຶ່ງຊາວນິຄົມ ກູເຮຍ
ແຊ ໃຜ່ຝັນຫາຢູ່ແລ້ວນັ້ນຄື ຄວາມປາກະຫນາອັນຫາສິ່ງໃດປຽບ
ບໍ່ໄດ້ທີ່ຈະເຂົ້າເປັນສ່ວນປະກອບຂອງຫນ່ວຍຊີວິດໂຮມຫມູ່ຂອງນິ
ຄົມ ກ້ອກກີ, ທັງນີ້ ແລະ ທັງນັ້ນບໍ່ແມ່ນຍ້ອນວ່າ ມັນແມ່ນ
ຫນ່ວຍຊີວິດໂຮມຫມູ່ຫນ່ວຍຫນຶ່ງ ແຕ່ມັນແມ່ນສິ່ງຫອມຫວານ
ເຊິ່ງຊີວິດຜ່ານມາຂອງພວກເຂົາບໍ່ເຄີຍໄດ້ສຳຜັດຈັກເທື່ອພຸ້ນຕ່າງ
ຫາກ.

ແຕ່ເທົ່ງນານມານີ້ ສະຕິສຳນຶກຂອງພວກເດັກນ້ອຍ ກູເຮຍແຊ
ຈຶ່ງເປັນຝ່າຍຖືກພິຊິດ ແລະ ສິ່ງດັ່ງກ່າວກໍຕັ້ງວ່າຂາດເຂີນເອົາກະດ໋ຳ.
ໃນມື້ຕໍ່ມານັ້ນໂລດຄວາມຂາດເຂີນດັ່ງກ່າວກໍເຜີຍຕົວອອກມາຢ່າງສັບ
ສົນຫຍຸ້ງເຫຍີງທີ່ສຸດ. ໃນຕອນແລງວານນັ້ນ, ຫນ່ວຍປະສົມພິ
ເສດຕ່າງໆໄດ້ປະກອບຕົວຂຶ້ນເພື່ອຮັບພາລະວຽກງານດັ່ງແຈ້ງຢູ່ໃນ

ຄຳປະກາດຂອງລາວຫນຸ່ມກົມໂຊໂມນ, ພວກຄູດູແລທຸກຄົນແລະ
ພວກນັກຮຽນເກົ່າຂອງ ກ້ອກກີ ກຸກລຸ້ອນເຂົ້າຢູ່ໃນທຸກໆກອງ
ແລະ ເຖິງແມ່ນວ່າການແຈກຢາຍພວກເດັກນ້ອຍ ກູເຮຍແຊ ໄດ້
ເຮັດໄປຢ່າງດີວິເສດສຸດແລ້ວ ກໍຕາມ ປາກົດວ່ານັບແຕ່ເຊົ້ານັ້ນມາ
ການເຮັດວຽກຂອງພວກເຮົາກໍຍັງບໍ່ເປັນຕາເອົາເລີຍ. ຈົນໃນທ້ອນ
ມີຫລາຍຄົນບໍ່ກັບຄືນໄປເຮັດວຽກ, ພາກັນໄປຫລິ້ນລໍ ແລະ ອີກ
ສ່ວນຫນຶ່ງພາກັນລັກເຂົ້າໄປໃນເມືອງ ແລະ ຣິຊອບ ຍ້ອນຄວາມ
ຊຸນເຄີຍ.

ຂ້າພະເຈົ້າລົງມືອອກກວດກາໄປທຸກໆກອງໂດຍຕົນເອງ, ທົ່ວ
ທຸກບ່ອນສະພາບຂອງກອງປະສົມເປັນແບບດຽວກັນຄື: ຫນໍ່ເນວ
ຂອງ ກ້ອກກີ ເບິ່ງຄືວ່າອ່ອນນ້ອຍໄຮ້ຄວາມຫມາຍ ສ່ວນລັກສະນະ
ຄອບງຳຂອງ ກູເຮຍແຊ ຊາພົດເດນຕາຕາຈນເປັນຕາຢ້ານວ່າ ແບບ
ແຜນເຮັດວຽກຂອງພວກເຮົາອາດຈະຄອບງຳກວມໄປຫມົດຄືກັນ
ໂດຍສະເພາະແລ້ວໃນເມື່ອວ່າ ໃນຫມູ່ເດັກນ້ອຍ ກ້ອກກີ ນັ້ນກໍມີ
ຄົນໃຫມ່ຫລາຍ, ນອກຈາກນັ້ນນັກຮຽນຮຸ່ນເກົ່າຂອງພວກເຮົາເຊົ່ງ
ໃນຖານະເປັນແຮງດົນເດ່ືອນເຫນັງທົ່ລະລາຍຢູ່ໃນນ້ຳແຫລວອ້ຳຕ້ຳ
ຂອງ ກູເຮຍແຊ ແນວນັ້ກຖືກນາບຊູ່ໃຫ້ສາບສູນລ້ານ.

ການນຳໃຊ້ມາດຕະການລະບຽບໃນຮູບນອກທົ່ອ່ານອຸ່ນແຮງ
ແລະ ເດັດຂາດກັບຫນ່ວຍຊີວິດໂຮມຫມູ່ທົ່ເປັນກ້ອນກຸ່ມແນວນັ້
ແລ້ວ ເປັນເລ່ືອງສ່ຽງອັນຕະລາຍສົມຄວນ. ຢູ່ທົ່ນັ້ນກ໋ເກ໋ເກ໋ເກ໋ເກ
ຫລາຍໂພດ ແລະ ການທົ່ຈະຕ໋ສູ້ກັບພວກເຂົາໂດຍກົງນັ້ນ ນັບວ່າ
ເປັນເລ່ືອງສັບສົນ ແລະ ໃຊ້ເວລາດົນສົມຄວນທັ້ງຈະບໍ່ມີປະສິດທິ

ຜົນໃດໆ ເພາະວ່າການຫມູນໃຊ້ມາດຕະການໃດໆກໍຕາມມັນຈະມີຜົນ
ກໍແຕ່ເມື່ອວ່າ ມັນສາມາດແຍກເອົາຕົວຜູ້ຜິດອອກມາຈາກກຸ່ມແກ
ໂຮມຫມູ່ ໂດຍແມ່ນສາທາລະນະຊົນເປັນຜູ້ຕັດສິນຍົ້ມຍັນເອງ.
ສາມາດເວົ້າຕື່ມອີກວ່າ ມາດຕະການຮູບນອກນີ້ ມີຜົນກະທົບພຽງ
ແຕ່ເບົາບາງທີ່ສຸດເທົ່ານັ້ນຢູ່ໃນຂົງເຂດການຈັດຕັ້ງຫນ່ວຍທີ່ໃຊ້ແຮງ
ງານກ້ານຊົນເປັນຕົ້ນຕໍ.

ຖ້າວ່າແມ່ນຜູ້ມີບົດຮຽນຫນ້ອຍແດ່ ເຂົາອາດຈະຄຶດອ່ອຍໃຈໂຕ
ເອງດ້ວຍການຕີລາຄາວ່າ: ພວກເດັກນ້ອຍຍັງບໍ່ຊົນເຄີຍກັບການ
ອອກແຮງງານທາງດ້ານຮ່າງກາຍ, ພວກເຂົາຍັງບໍ່ "ຄ່ອງແຄ່ວ",
ບໍ່ຮູ້ຈັກເຮັດວຽກ ທັງບໍ່ເຄີຍຕິດຕາມຈັງຫວະເຮັດວຽກຂອງພວກ
ຫມູ່ອື່ນໆ, ພວກເຂົາຂາດຄວາມທະນົງໃຈໃນສັກສີຂອງກຳມະກອນ
ທີ່ຍາມໃດກໍເຮັດໃຫ້ບຸກຄົນເດັ່ນຂຶ້ນຢູ່ໃນການດຳລົງຊີວິດໂຮມ
ຫມູ່; ທັງຫມົດເຫລົ່ານີ້ອາດຈະເກີດຂຶ້ນເອງໃນມື້ໃດມື້ຫນຶ່ງ ຈັ່ງ
ຊົນຄວນລໍຄອຍກ່ອນ. ແຕ່ຫນ້າເສຍດາຍ ຂ້າພະເຈົ້າເອງບໍ່ສາ
ມາດຍັບຍັ້ງໃຈຢູ່ນຳຄຳອື່ນອອຍປະເພດນີ້. ເບິ່ງໃນແງ່ນີ້ ມັນເກີດມີ
ກິດເກນອັນຫນຶ່ງທີ່ຂ້າພະເຈົ້າສຳນຶກໄດ້ເອງຄື: ໃນໂລກຂອງວິທະ
ຍາສາດການສຶກສານີ້ ມັນບໍ່ມີສາຍພົວພັນທີ່ຂັດຕໍ່ກັນ ແລະກັນຢ່າງ
ທຳມະດາ, ແລະ ຢູ່ຫນ້ຽງແມ່ນບ່ອນທີ່ບໍ່ຄວນຮັບເອົາຄຳລາວ່າ
ດ້ວຍການໃຊ້ເຫດຜົນຫລອກລວງການອະນຸໂລມແບບສັ້ນໆໄວໆຈັກ
ຫນ້ອຍເລີຍ.

ນີ້ແມ່ນສະພາບການຢູ່ ກູເຮຍແຊ ໃນເດືອນພຶດສະພາ; ຄວາມ
ຊັກຊ້າ ແລະ ການຂະຫຍາຍຕົວເປັນຂັ້ນໆຢູ່ໃນການເຮັດວຽກງານ

ມີທ່າວ່າຈະເປັນສິ່ງຄອບງຳນຳເອົາຮູບແບບການເຮັດວຽກທີ່ເຮ້ຍ
ທີ່ສຸດມາໃຊ້ແທນຮູບແບບການເຮັດວຽກທົ່ວໆໄປ ທ້າງຈະເຊື່ອມລະ
ລາຍທ່ວງທ່ານິ່ມນວນ, ຄ່ອງແຄ່ວລັກແນ່ ອັນເປັນລັກສະນະສະ
ເພາະຕົວຂອງຊາວນິຄົມ ກ້ອກກີ ນຳ.

ເວົ້າເຖິງຮູບແບບ ແລະ ສີສັນຂອງວຽກງານນີ້, ຫລັກທິດ
ສະດີຊຸການສຶກສາບໍ່ເຄີຍຮັບຮູ້ມັນເລີຍທ້າງທີ່ວ່າມັນເປັນພາກ
ສ່ວນທີ່ສຳຄັນ ແລະ ຕົ້ນຕໍທີ່ສຸດຂອງວິທີການສຶກສາອົບຮົມຮວມ
ໝູ່. ຮູບແບບເປັນສິ່ງລະອຽດອ່ອນຜ່ອຍບາງທີ່ສຸດ, ແຕກຫັກໄດ້
ໄວທີ່ສຸດ ຕ້ອງກະທົບອົບເພງມັນ, ເຝົ້າຮັກສາມັນໃນແຕ່ລະມື້,
ມັນຮຽກຮ້ອງໃຫ້ມີຄວາມເອົາໃຈໃສ່ຫ່ວງໄຍທີ່ຈິງຈັງທີ່ສຸດ ບໍ່ຕ່າງ
ຫຍັງກັບຫນາມດອກໄມ້ຫນາມຫນຶ່ງ. ຮູບແບບກຳເນີດຂຶ້ນເອງຢ່າງ
ລ້າໆ ເພາະວ່າມັນຈະເປັນໄປບໍ່ໄດ້ເລີຍຖ້າບໍ່ມີການສະສົມຮີດຄອງ
ຕ່າງໆ, ຫມາຍຄວາມວ່າຫລັກເກນ ແລະຄວາມຊຸ່ນເຄີຍທີ່ຮັບມາ
ແຕ່ກ່ອນ ໂດຍບໍ່ແມ່ນສະຕິສຳນຶກບໍລິສຸດກຳນົດໃຫ້ ແຕ່ແມ່ນຄວາມ
ນັບຖືຢ່າງມີສະຕິຕໍ່ບົດຮຽນຂອງຄົນຮຸ່ນກ່ອນ ແລະ ອຳນາດອັນຍິ່ງ
ໃຫຍ່ຂອງຫນ່ວຍຊີວິດໂຮມຫມູ່ທ້າງຫມົດ ເຊິ່ງໄດ້ດຳລົງຄົງຕົວມາ
ໄດ້ລະຍະຫນຶ່ງແລ້ວ. ການທີ່ອົງການສະຖາບັນກ່ຽວກັບເດັກຫລາຍ
ບ່ອນບໍ່ປະສົບຄວາມສຳເລັດນັ້ນ ມັນກໍແມ່ນຍ້ອນວ່າ ຢູ່ໃນສະຖານ
ທີ່ເຫລົ່ານັ້ນບໍ່ເກີດມີຮູບແບບໃດໆເປັນຂອງຕົນເອງ, ມັນບໍ່ເກີດມີ
ຄວາມຊຸ່ນເຄີຍ ຫລືຮີດຄອງໃດໆ, ຖ້າຫາກວ່າມັນເລີ່ມກໍ່ຕົ້ວຂຶ້ນມາ
ພວກຜູ້ກວດການຈາກກະຊວງສຶກສາປະຊາຊົນກໍພາກັນທຳລາຍລົບ
ລ້າງມັນຢ່າງສະຫມ່ຳສະເຫມີຢ່າງເປັນລະບົບ ແລະ ທ້າງເຮັດໄປ

ແບບຕິລາຄາມັນຕ່ຳຕ້ອຍທີ່ສຸດ. ຍ້ອນແນວນີ້ແລ້ວ "ພວກບຸດນ້ອຍ" ແຫ່ງພະແນກສຶກສາອິບຣິມສັງຄົມຈຶ່ງດຳລົງຊີວິດຢູ່ຢ່າງ!ບໍ່ມີການສິ້ນ ທອດປະເພນີ ຫລືຣີດຄອງໃດໆໃນລະຍະສັ້ນໆຊໍ່ວຄາວຫລືເກົ່າແກ່ ເປັນປີ ໆ.

ຍ້ອນເຫດການທີ່ວ່າ ສະຕິສຳນຶກຂອງພວກເດັກນ້ອຍ ກູເຮຍ ແຊ ເປັນຝ່າຍຖືກພິຊິດ ມັນຈຶ່ງອຳນວຍໃຫ້ຂ້າພະເຈົ້າສ້າງສາຍ ພົວພັນກັບພວກເຂົາຢ່າງໃກ້ຊິດ ແລະ ຫນັກແຫນ້ນສົມຄວນ. ແຕ່ ສິ່ງດ່ວນກ່ວາອັນຍັງບໍ່ພຽງພໍເທື່ອ. ເພື່ອຍາດເອົາໄຊຊະນະອັນແທ້ຈິງ ໃຫ້ໄດ້, ຂ້າພະເຈົ້າຈຳເປັນໄດ້ໃຊ້ເຕັກນິກຂອງວິຊາການສຶກສາ. ຢູ່ໃນຂົງເຂດເຕັກນິກດັ່ງກ່າວນີ້ ຂ້າພະເຈົ້າເອງຮູ້ສຶກວ່າຕົນເອງ ຍັງຢູ່ໂດດດ່ຽວເທົ່າໆກັບຫວ່າງປີ ໑໙໘0 ທັງໆທີ່ວ່າຂ້າພະເຈົ້າບໍ່ ໄດ້ເປັນຄົນໂງ່ຈ້າຜູ້ຫນ້າຫົວຂວັນອີກແລ້ວ. ຄວາມໂດດດ່ຽວເປົ່າ ປ່ຽວນັ້ນມີຄວາມຫມາຍພິເສດຢ່າງຫນຶ່ງ. ຢູ່ພາຍໃນຫ່ວຍໂຮມ ຫມູ່ຂອງພວກເດັກນ້ອຍ ຂ້າພະເຈົ້າມີຜູ້ສະຫນັບສະຫນຸນເຂົ້າຂ້າງ ທີ່ແຂງຂັນແລ້ວ, ອາໄສກຳລັງແຮງຂອງພວກເຂົາ ຂ້າພະເຈົ້າກ້າ ພໍຈະບຸກເຂົ້າໃສ່ປະຕິບັດການທີ່ລັບສົນ ທີ່ສຸດແລ້ວ, ແຕ່ທຸກສິ່ງ ທຸກຢ່າງຢູ່ໃນລະດັບຫນ້າດິນເທົ່ານັ້ນ.

ແຕ່ຢູ່ເຫນືອກ່ວານັ້ນ ເທິງຟາກຟ້າ, ອ້ອມຮອບ ແລະ ເທິງ ຈອມພູໂອລິມປັດແຫ່ງວິຊາການສຶກສາສາດນີ້, ເຕັກນິກກ່ຽວກັບ ວິຊາການສຶກສາທຸກຢ່າງ ຢູ່ໃນຂົງເຂດວຽກງານການສຶກສາອິບຣິມນີ້ ລ້ວນແຕ່ຖືກຖ່ວ່າ ເປັນສິ່ງນອກຣີດນອກຄອງ.

"ຢູ່ເທິງຟ້າ" ເພິ່ນຖ່ວ່າພວກເດັກນ້ອຍເປັນຄ້າຍຄົ່ງມີຊີວິດ

ຊ່ຳປະກອບສ້າງດ້ວຍທາດອາຍຢ່າງຫນ່ຳ ເຊິ່ງເພິ່ນບໍ່ກ້າຮອດຈະ
ສ່ຽງໃສ່ຊ໊ຶໃຫ້ມັນວ່າແນວໃດ. ໃນຄວາມຈິງແລ້ວ ມັນກໍຊ້ຳແມ່ນຈິດ
ວິນຍານດວງເກົ່າດວງດຽວນ໊ີແລ້ວທ່ີ'ພວກ ສາວົກສະໄຫມເກົ່າ ຂອງ
ພະສາດສະຫນາໄດ້ແຜ່ອິດທິພົນຄອບງຳໄວ້. ເພິ່ນອຸປະໂຫລກວ່າ
(ຂໍ້ສົມມຸດຖານປະຈຳວັນ) ທາດອາຍຈະນິດນ໊ີມ໊ີຄຸນສົມບັດໃນການ
ຂະຫຍາຍຕົວຢ່າງເປັນໄປເອງແບບງ່າຍດາຍ, ພຽງແຕ່ວ່າປະປ່ອຍ
ມັນໄວ້ຜູ້ດຽວເທົ່ານ໊ັ້ນ. ເພິ່ນຂຽນປ໊ຶ້ມໄດ້ຫລາຍຫົວກ່ຽວກັບບັນຫາ
ນ໊ີ ແຕ່ຄວາມຈິງແລ້ວກໍແມ່ນການເວົ້າຊ້ຳຍ້ຳຂອງເກົ່າຂອງ ຈຸດໂຊທ່ີ
ວ່າ:

"ຄວນປະຕິບັດກັບເດັກນ້ອຍແບບນັບຖ໊ືຍຳແຍງ..."

"ລະວັງຢ່າຂັດຂວາງທຳມະຊາດ..."

ຂໍ້ຄວາມສັກສິດຕົ້ນຕໍໃນຄຳພີຂອງສາດສະຫນາສ໊ຶກສາສາດນ໊ັ້ນ
ຫມາຍຄວາມວ່າແນວນ໊ີ: ຢູ່ໃນເງ໊ືອນໄຂທ່ີບ່ໍ່ເກ໊ືດການຍຳແຍງ ແລະ
ການສັກກາລະທຳມະຊາດນ໊ັ້ນ, ທາດອາຍທ່ີວ່ານ໊ີ້ຈຳຕ້ອງເຕ໊ີບໃຫຍ່
ກາຍເປັນບຸກຄະລະພາບຂອງນັກກອມມູນ໊ິດຢ່າງຫລ໊ີກບ່ໍ່ໄດ້. ຄວາມ
ຈິງມ໊ີຢູ່ວ່າ ຕາມສະພາບທຳມະຊາດຫລ້ອນໆນ໊ັ້ນ, ສ໊ິ່ງທ່ີ່ງອກເງ໊ີຍບ່ໍ່ງ
ຂ໊ຶ້ນໄດ້ກໍ່ມ໊ີແຕ່ສ໊ິ່ງທ່ີ່ສາມາດບ່ໍ່ງຂ໊ຶ້ນໄດ້ຕາມທຳມະຊາດຂອງມັນເທົ່ານ໊ັ້ນ
ນ໊ັ້ນຫມາຍຄວາມວ່າ ພວກຫ້ຍ້າໄຮ້ປະໂຫຍດຕາມທ່ີ່ງນາທຳມະ
ດາໆ, ແຕ່ວ່າສ໊ິ່ງດ໊ັ່ງກ່າວບ່ໍ່ເຮັດໃຫ້ໃຜເດ໊ືອດຮ້ອນດອກ ໃນເມ໊ື່ອວ່າ
ປະຊາຊົນຊາວພູໂອລ໊ຶມປ໊ັດນ໊ີ ຕ່າງກໍ່ກະຫນອມແພ້ງຫລ໊ັກການ ແລະ
ແນວຄ໊ຶດຫລາຍ. ເມ໊ື່ອຂ້າພະເຈ້ົາຊ໊ຶ້ສະແດງໃຫ້ເຫ໊ັນເຖ໊ິງຄວາມແຕກ
ຕ່າງກັນລະຫວ່າງ ຫຍ້າຮ້າຍກັບອຸດົມການ ກ່ຽວກັບບຸກຄະລະພາບ

ຂອງນັກກອມມູນິດຂອງພວກເຮົາ, ເພິ່ນກໍຕູ່ຫາວ່າ ຂ້າພະເຈົ້າເປັນ ນັກອັດກະປະໂຫຍດ ແລະ ເມື່ອເພິ່ນຢາກເນັ້ນຍ້ຳເຖິງທາດແທ້ ຂອງຂ້າພະເຈົ້າ ບາງຄົນຈຶ່ງເວົ້າອອກມາວ່າ:

"ມາກາເຣັນໂກ ຫວະ? ລາວເປັນນັກປະຕິບັດງານທີ່ດີຢູ່ດອກ ແຕ່ໃນເລື່ອງທິດສະດີແລ້ວ ລາວບໍ່ຮູ້ຂີ້ຫມາຫຍັງເລີຍ!".

ຍັງມີການເວົ້າຮອດລະບຽບວິໄນອີກ. ພື້ນຖານທິດສະດີຢູ່ໃນ ປັນຫານີ້ແມ່ນຄຳສັບສອງຄຳທີ່ເພິ່ນໄດ້ຍິນເລື້ອຍໆຢູ່ບົດຄວາມຂອງ ເລນິນຄື: ສະຕິຕໍ່ລະບຽບ. ສຳລັບມະນຸດທຸກຮູບທຸກນາມທີ່ມີສະ ຕິສຳປະສັນຍະ, ຄຳເວົ້າສອງຄຳນີ້ບັນຈຸສັດຈະທຳງ່າຍໆ, ເລິກເຊິ່ງ ແລະ ຈຳເປັນຕໍ່ການປະຕິບັດແທ້ໆ. ການປະຕິບັດລະບຽບວິໄນຕ້ອງ ເຮັດໄປດ້ວຍຄວາມເຂົ້າໃຈໃນການຈຳເປັນຂອງມັນ, ໃນຄຸນປະ ໂຫຍດຂອງມັນ, ໃນພັນທະກໍລະນີຂອງມັນ, ໃນຄວາມຫມາຍທາງ ຈິນຕະນາການຂອງມັນ. ຢູ່ໃນທິດສະດີສຶກສາສາດນັ້ນ ມັນຈຳເປັນອີກແບບ ຫນຶ່ງ, ລະບຽບວິໄນບໍ່ເກີດຂຶ້ນຈາກປະສົບການທາງສັງຄົມ ຫລື ຈາກພຶດຕິກຳຕິດຈີ່ຂອງຫນ່ວຍຊີວິດໂຮມຫນຸ່ແບບອ້ອມນ້ອງ ແຕ່ ມັນຕ້ອງເກີດຂຶ້ນຈາກສະຕິສຳນຶກສິດໆ, ເກີດຈາກຄວາມເຊື່ອຫມັ້ນ ແບບໃຊ້ປັນຍາອ້ອຍຕ້ອຍ, ຈາກອາລົມແຕກຕື່ນແບບເດຍລະສານ ແລະ ຈາກຄວາມນຶກຄິດ. ຈາກນັ້ນພວກນັກທິດສະດີຍັງກ້າວໄປ ໄກກວ່ານັ້ນອີກ ແລ້ວຈຶ່ງຕັດສິນວ່າ "ສະຕິຕໍ່ລະບຽບ" ນັ້ນ ບໍ່ມີຄຸນຄ່າ ຫຍັງຫນຶ່ງ ຖ້າຫາກວ່າມັນໄດ້ຮູບການຈາກອິດທິພົນຂອງຜູ້ໃຫຍ່, ຈຶ່ງຊັ້ນມັນຈຶ່ງບໍ່ແມ່ນການມີສະຕິຕໍ່ລະບຽບວິໄນແທ້ໆ ແຕ່ມັນແມ່ນ ການເຝິກແອບ, ໃນສ່ວນເລິກແລ້ວເປັນການລະເມີດອາລົມແຕກ

ຕົນແບບເດຍລະສານນັ້ນເອງ. ສິ່ງທ່ຶ່ຄວນເຮັດບ່ໍ່ແມ່ນການມີສະຕິຕ່ໍ
ລະບຽບ ແຕ່ແມ່ນການ "ວາງລະບຽບໃຫ້ຕົນເອງ" ເຊ່ັນດຽວກັນ,
ອົງການຈັດຕັ້ງເດັກທຸກຢ່າງລ້ວນແຕ່ໄຮ້ສາລະໄຮ້ປະໂຫຍດທັ້ງປວງ,
ສິ່ງທ່ຶ່ຈ່ຳເປັນນັ້ນແມ່ນ "ການຈັດຕັ້ງໂດຍຕົນເອງ" ພຸ້ນຕ່າງຫາກ.

ເມ່ຶ່ອກັບມາຢູ່ທ່ຳ່ງໄກໂດດດ່ຽວຫມູ່ແລ້ວ ຂ້າພະເຈ້ົ້າຄ່ຶດຄ້ົ້ນ
ແລະ ເຫັນເຫດຜົນດັ່ງນ້ົ້ີ: ຫນ່ຶ່ງທຸກຄົນພວກເຮົາຮູ້ນ່ຳກັນແລ້ວວ່ຳ
ພວກເຮົາຄວນລ້ຽງດູອົບຮົມຄົນແບບໃດ, ກ່ຳນະກອນຜູ້ມ່ີຄວາມຮູ້
ແຕ່ລະຄົນ, ມ່ີສະຕິສ່ຳປະສັນຍະ ກ່ໍ່ຮູ້ດ່ີເທ່ຳ່ງກັບສະມ່ຶ່ຊິກພັກແຕ່ລະ
ຄົນ. ຍ້ອນແນວນ້ົ້ີຄວາມຫຍຸ້ງຍາກຂອງມັນຈ່ຶ່ງບ່ໍ່ນອນຢູ່ໃນບັນຫ່ຳ
ວ່ຳ ຄວນເຮັດອັນໃດ ແຕ່ແມ່ນ ຄວນເຮັດແນວໃດຫລ່ຳຍກວ່ຳ.
ນ້ົ້ແລ້ວທ່ຶ່ເປັນບັນຫ່ຳເຕັກນ່ຶກຂອງວ່ິຊ່ຳການສ່ຶກສ່ຳ່ງຫນ່ຶ່ງ.

ເລ່ຶ່ອງເຕັກນ່ຶກເປັນສ່ິ່ງທ່ຶ່ກ່ອດກ່ອນໄດ້ຈ່ຳກປະສົບການເທ່ຳ່ນ້ັ້ນ.
ກ່ິດເກນການຕັດສ່ິ່ນໂລຫະອ່ຳດຈະບ່ໍ່ກ່ຶ່ກຄ້ົ້ນພົບກ່ໍ່ໄດ້ ຖ້ຳຫ່ຳກວ່ຳ
ໃນບ່ິດຮ່ຽນທ່ຶ່ຜ່ຳນມ່ຶ່ຂອງມະນຸດຊ່ຳດນ້ັ້ນ ບ່ໍ່ມ່ີໃຜຈັກຄົນຕັດໂລຫະ.
ມັນມ່ີແຕ່ບ່ິດຮ່ຽນຕ່ິວຈ່ິງເທ່ຳ່ນ້ັ້ນທ່ຶ່ເຮັດໃຫ້ກ່ຳນປະດ່ິດສ້ຳ່ງ, ກ່ຳນ
ປັບປຸ່ງ, ກ່ຳນເລ່ືອກເຟ້ັ້ນ ແລະ ກ່ຳນປະກ້ົ້ມເປັນໄປໄດ້.

ກ່ຳນຜະລ່ິດທ່ຳ່ງດ້ຳນສ່ຶກສ່ຳສ່ຳດຂອງພວກເຮົ່ຳບ່ໍ່ເຄ່ີຍຈັດຕ່ັ້ງຂ້ົ້ນ
ເອ່ງຕ່ຳມຕ້ກກະສ່ຳດຂອງວ່ິຊ່ຳການເຕັກນ່ຶກຈ່ກເທ່ົ່ອ ແຕ່ຫ່ຳກເກ່ິດ
ຂ້ົ້ນຕ່ຳມແນວຈ່ຶ່ງຈ່ິດໃຈຫລ່ຳຍກວ່ຳ. ສ່ິ່ງດ່ັ່ງກ່ຳ່ວເຫ້ັນໄດ້ຢ່ຳ່ງຈະ
ແຈ້ງຢູ່ໃນຂ່ົ້ງເຂດວຽກງ່ຳນຂ້ັ້ນໂຮ່ຽນປະກ່ິມນ່ຳ.

ແຕ່ເຫດຜົນກ່ໍ່ຄ່ືວ່ຳ ພວກເຮົ່ຳຂ່ຳດເຂ່ີນທຸກສ່ິ່ງທຸກຢ່ຳ່ງໃນ
ເລ່ຶ່ອງຂະແຫນງກ່ຳນຕ້ັ້ນຕ່ໍ່ຂອງກ່ຳນຜະລ່ິດເຊ່ັ່ນ: ວ່ິທ່ີ່ດ່ຳ່ເນ່ີນທ່ຳ່ງ

ດ້ານເຕັກນິກ, ວິທີວາງແຜນຄິດໄລ່, ຫ້ອງການສຶກສາ, ການ
ຫມູນໃຊ້ຄົນຂັບ ແລະ ເຄື່ອງຈັກອື່ນໆ, ການຈັດແບ່ງແຮງງານ,
ການກວດກາ, ການອະນຸໂລມ ແລະ ການປະຕິເສດ.

ເມື່ອຂ້າພະເຈົ້າທົດລອງໃຊ້ຄຳສັບແບບນີ້ຢ່າງຈຸມປາກຈຸມຄຳ
ຢູ່ທົ່ວປ່ຽນພູ "ໂອລິມປັດ", ພວກເທວະດາກໍຮ້ອງດ່າ ແກ່ວ່ວີ້ກ້ອນ
ຫີນມາໃສ່ ແລະ ໂຈມຕີວ່າ ນັ້ນມັນແມ່ນທົດສະດີນິຍົມກິນໄກ.

ແຕ່ເມື່ອຍ້ຳຂ້າພະເຈົ້າຄິດໄປຫລາຍ ຂ້າພະເຈົ້າຈຶ່ງພົບວ່າ ມີ
ຄວາມຄ້າຍຄຽງກັນ ລະຫວ່າງຂະບວນວິວັດວຽກງານສຶກສາອົບຮົມ
ກັບຂະບວນວິວັດແບບທຳມະດາສາມັນຂອງວຽກງານການຜະລິດ
ທາງດ້ານວັດຖຸ ແລະ ມັນກໍບໍ່ມີສິ່ງໃດເປັນກົນໄກຮ້າຍແຮງພົ້ນຢູ່
ໃນຄວາມຄ້າຍຄຽງອັນນີ້. ໃນສາຍຕາຂອງຂ້າພະເຈົ້ານັ້ນບຸກຄະລະ
ພາບຂອງມະນຸດ ຍາມໃດກໍຍັງເປັນບຸກຄະລະພາບຂອງມະນຸດທີ່ຈົມ
ຈຸ່ມຢູ່ໃນຄວາມສັບສົນ, ຄວາມອຸດົມສົມບູນ ແລະ ຄວາມງົດງາມ
ຂອງມັນສະເຫມີ, ແຕ່ຂ້າພະເຈົ້າກໍຮູ້ສຶກວ່າ ມັນແມ່ນຍ້ອນກະໂຕ
ເຫດຜົນອັນນີ້ເອງທີ່ຄອນເລີ່ມຕົ້ນເຂົ້າເກົ່ງບັນຫານີ້ ໂດຍອາໄສອຸ
ປະກອນວັດແທກຊະນິດແນ່ນອນ, ດ້ວຍວິທີການອັນຈິງຈັງ ແລະ
ສອດຄ່ອງກັບວິທະຍາສາດ ບໍ່ແມ່ນໃຫ້ມັນຈົມຈຸ່ມຢູ່ໃນຄວາມສຳນຶກ
ເປັນເຈົ້າຂອງຢ່າງມືດມົນປ່ອງບ້າ. ແທນທີ່ວ່າຄວາມຄ້າຍຄຽງເລິກ
ເຊິ່ງຢ່າງຫນ້ຳລະຫວ່າງຂະບວນການຜະລິດອຸດສາຫະກຳ ແລະ ຂະ
ບວນວິວັດການສຶກສາອົບຮົມຈະເຮັດໃຫ້ແນວຄິດກ່ຽວກັບບຸກຄະລະ
ພາບຂອງມະນຸດໃນສາຍຕາຂອງຂ້າພະເຈົ້າມືດມົວອັບແສງລົງ, ກົງ
ກັນຂ້າມມັນຈຳຍູ້ດັນໃຫ້ຂ້າພະເຈົ້າເກີດຄວາມຮູ້ສຶກນັບຖືມັນເປັນພິ

ເສດ ເພາະວ່າຂ້າພະເຈົ້າບໍ່ອາດມີຄວາມຮູ້ສຶກແນວອື່ນນອກຈາກ
ຄວາມນັບຖືສໍາລັບຫນ່ວຍເຄື່ອງຈັກສັບສົນ ແລະ ຖືກສ້າງຂຶ້ນຢ່າງດີ
ແນວນັ້ນ.

ເຖິງຢ່າງໃດກໍດີ, ສໍາລັບຂ້າພະເຈົ້າແລ້ວມັນເປັນສິ່ງຈະແຈ້ງຢູ່
ວ່າ ຕ່ອນເຄື່ອງອາໄຫລ່ຈໍານວນຫລວງຫລາຍ ເພື່ອປະກອບບຸກຄະ
ລະພາບ ແລະ ການປະພຶດຕົວຂອງມະນຸດນັ້ ອາດສາມາດຖືກສ້າງ
ຂຶ້ນຈາກແມ່ພິມດ້ວຍການເຮັດແບບງ່າຍໆຄືພິມລອກເອົາເປັນຈໍາ
ນວນໃຫຍ່ໂລດ, ແຕ່ວ່າກະໂຕແມ່ພິມນີ້ເອງຊໍ້າຮຸງກຮ້ອງໃຫ້ເປັນ
ຜົນງານລະອຽດລະອໍຄັກແນ່, ໃຊ້ຄວາມລະມັດລະວັງຢ່າງຫລວງ
ຫລາຍ. ກົງກັນຂ້າມ ເຄື່ອງອາໄຫລ່ຕ່ອນອື່ນໆນັ້ນຊໍ້າຮຸງກຮ້ອງໃຫ້
ແມ່ນການຜະລິດຈາກຝີມືບຸກຄົນທີ່ເປັນກໍາມະກອນອ່ອນອຸ່ນອຸ່ນ
ແດ ຫມາຍຄວາມວ່າຜູ້ຄົນທົ່ວຜົນເທວະດາ ແລະ ແສງຕາເຫລົ
ຊະນິດເປົ່າແຈ້ງແຫ່ງຊອດໂລດ. ຍັງມີອີກຈໍານວນຫນຶ່ງເຊິ່ງເພິ່ນຈໍ
ເປັນຕ້ອງຮ້ອງຫາເຄື່ອງມືສະເພາະ ແລະ ສັບສົນ, ຮຸງກຮ້ອງໃຫ້ມີ
ພິກໄຫວ ແລະ ຝີມືມະຫັດສະຈັນ. ແຕ່ສໍາລັບທຸກສິ່ງທຸກຢ່າງ, ສໍ
ລັບວຽກງານທັ່ງຫມົດຂອງຄູດູແລ, ມັນຈໍາເປັນຕ້ອງມີວິທະຍາສາ
ສະເພາະອັນຫນຶ່ງ. ເປັນຫຍັງຢູ່ໃນສະຖາບັນການສຶກສາເດັກນ້ອຍ
ຊຸງ ພວກເຮົາຈຶ່ງໄດ້ຮຸງນເລື່ອງການຕ້ານທານຂອງວັດສະດຸ ແລະ
ເປັນຫຍັງຢູ່ໃນສະຖາບັນການສຶກສາວິຊາຄູຊັ້ນສູງ ພວກເຮົາຈຶ່ງບໍ່
ຮຸງນເລື່ອງ ການຕ້ານທານຂອງບຸກຄະລະພາບ ເມື່ອພວກເຮົາເລີ
ລ້ວນແລ້ວແຕ່ສຶກສາອົບຮົມມັນ? ທັ້ງໆທີ່ວ່າ ເລື່ອງຄວາມຕ້ານທານອັນນັ
ໄດ້ແມ່ນຄວາມລັບສໍາລັບຜູ້ໃດແລ້ວ. ເປັນຫຍັງພວກເຮົາຈຶ່ງບໍ່ມີພະ

ແນກກວດກາຫນ່ຶ່ງທ່ີສາມາດບອກກັບນັກສຶກສາສາດຜູ້ຂ້ຶ້ຍທ້ງ
ຫລາຍວ່າ:

-ຢູ່ໂຮງຮຽນຂອງເຈ້ົ້ານ້ັນ ເດັກນ້ອຍ ๙0% ແມ່ນເດັກໂສກ້ົມ
ແລ້ວເດ້ົ, ພວກເຈ້ົ້າບ່ໍໄດ້ຜະລິດບຸກຄະລະພາບນັກກອມມູນິດອອກ
ມາເລີຍ ແຕ່ຜະລິດອັນຕະພານ, ຂ້ົ້ກະໂຫຍ, ຂ້ົ້ເຫລ້ົ້າ, ຄົນເຈ
ຍາວ ແລະ ນັກສວຍໂອກາດອອກມາ. ເຊ່ືນຫ້ັກເອົ້າເງ່ືນເດ່ືອນ
ພວກເຈ້ົ້າຫ້ັນມາໃຊ້ແທນແດ່!

ເປ້ັນຫຍ້ັງພວກເຮົ້າຈ່ົ້ງບ່ໍ່ມ່ືວ່ິທະຍາສາດຂະແຫນງຫນ່ຶ່ງທ່ີ່ຕ້ອງ
ໃຊ້ວ້ັດຖຸດ່ິບຂອງພວກເຮົ້າເອ່ງ ແລະ ເຮ້ັດແນວໃດຈ່ົ້ງວ່ານ້ັ່ມ່ີໃຜຈ້ັກ
ຄົນຮູ້ຈ້ັກນ່ໍາໃຊ້ວ້ັດຖຸທ່ີ່ດ້ັ່ນ້ີ, ຊ່ິເອົ້າໄປເຮ້ັດກ້ັບໄຟເບ້ົ່າ ຫລ່ື
ເຮ່ືອບ່ິນເຊ່ືນດ່ີ? ພວກຂ້ັ້ນສ່ືງທ່ີ່ນ້ັ່ງຢູ່ເທ່ິງຈອມພູ ໂອລ່ິມປ້ັ ພ້ັ້ນ
ສາມາດແນມລ່ົ້ງມາເຫ້ັນສ່ວນຍ່ອຍໃດ່ໆ ຫລ່ືອງກ່ົ້ງນສ່ວນໃດສ່ວນ
ຫນ່ຶ່ງດອກ. ແນມມາຈາກບ່ອນສ່ືງແນວນ້ັ້ນ ເພ່ົ້ນເຫ້ັນແຕ່ແມ່ທ
ເລໄຮ້ຂອບເຂດແຫ່ງໂລກຂອງເດ້ັກທ່ີ່ປາສະຈາກບຸກຄະລະພາບ,
ລະຫວ່ົ້າງຝ່ານ້ັ້ນຫ້ອງການຂອງພວກເພ່ົ້ນກ່ໍ່ມ່ີຮູບປ້ັ້ນແບບຢ່ົ້າງເດ້ັກ
ນ້ອຍ ທ່ີ່ຜະລິດຈາກວ້ັດຖຸເບ່ົ້າບ່ົ້າງກວ່ົ້າຫມ່ໍ່ເຊ່ືນ: ແນວຄ່ິດ, ເຈ້ັຍ
ຫນ່ຶ່ງສ່ືພ້ົມ ແລະ ຄວາມເພ້ົ້ັນແບບມານ່ິລ່ິບ*. ເມ່ືອຊ່ົ້າວເມ່ືອ
ໂອລ່ິມປ້ັດມ້ັ້ຽມຍາມຂ້ົ້າພະເຈ້ົ້າຢູ່ນ່ິຄ່ິມນ້ັ້ນ ຂະເຈ້ົ້າກ່ໍ່ຮອດບ່ໍ່ມ່ືນ

---

* ມານ່ິລ່ິບ: ຕ່ິວລະຄອນໃນນ່ິຍາຍຂອງໂກໂກນ, ເລ່ືອງ "ວ່ິນ
ຍານຕາຍ".

ຄວາມເພ້ົ້ັນແບບ ມານ່ິລ່ິບ: ຄວາມເພ້ົ້ັນທ່ີ່ບ່ໍ່ເປ້ັນຈ່ິງ.

ຕາຈ້ຳ ແລະ ຫນ່ວຍຊີວິດໂຮມຫມູ່ທີ່ມຊີວິດຊີວາຂອງເດັກນ້ອຍກໍ ຮອດບໍ່ເປັນສິ່ງແປກໃຫມ່ຈ້ຳ, ກ່ອນອື່ນຫມົດພັນຮຸງກຮ້ອງໃຫ້ມີ ການອົບຮົມທາງດ້ານເຕັກນິກ. ແຕ່ໃນເວລາທີ່ພາພວກເພິ່ນເລາະ ຊົມນິຄົມນັ້ນ ຂ້າພະເຈົ້າເອງກໍຮູ້ສຶກບໍ່ເປັນປົກກະຕິແລ້ວທີ່ຕ້ອງປະ ທະຫລັກທິດສະດີກັບພວກເພິ່ນ ແລະ ຂ້າພະເຈົ້າກໍພວມຫຍຸ້ງຢູ່ ນຳສິ່ງເລັກໆນ້ອຍໆ ກ່ຽວກັບບັນຫາເຕັກນິກເທົ່ານັ້ນ.

ຢູ່ຫ້ພັກຂອງກອງທີ ๔, ພວກເດັກນ້ອຍບໍ່ລ້າງພື້ນເຮືອນ ເພາະວ່າຄຸເສຍ. ຂ້າພະເຈົ້າຄຶດເຫັນຄຸນຄ່າທາງດ້ານວັດຖຸຂອງຄຸ ແລະ ວິທີການຫາຍໃຕຂອງມັນ. ຄຸທີ່ເບີກຈ່າຍໃຫ້ແຕ່ລະກອງ ຢູ່ ໃນການເບິ່ງແຍງຂອງຮອງນາຍກອງທີ່ເປັນຜູ້ຈັດຜຽນລ້າງຖູ ດັ່ງນັ້ນ ເຂົາຈ້ຳຕ້ອງເປັນຜູ້ຮັບຜິດຊອບ. ແມ່ນແລ້ວ ສິ່ງນີ້ເອງ: ຄວາມຮັບ ຜິດຊອບຕຄຸ, ຕການລ້າງຖູ, ຕຜ້າເຊັດເຮືອນ ທັງຫມົດນີ້ ແມ່ນ ອົງປະກອບເຕັກນິກຢ່າງຫນຶ່ງສຳລັບຂ້າພະເຈົ້າ.

ສິ່ງເລັກໆນ້ອຍໆອັນນີ້ປຽບໄດ້ກັບໂຕະກົ້ງຊະນິດໄຮ້ຄ່າ ຄຸນນະ ພາບຕ່ຳ ຢູ່ໃນໂຮງງານຕາຍໆ ຫລ້າຫລັງບ່ອນຫນຶ່ງ. ໂຕະກົ້ງ ແບບນັ້ນແຕ່ກ້ຈ້ອນໄປໄວ້ແຈຫນຶ່ງໃກ້ໆ ບ່ອນເປື້ອນບ່ອນຂີ້ດຶງດ ກ່ອນຫມູ່ພຸ້ນລະ, ໃຜໆກໍຈະເອີ້ນມັນວ່າ "ບັກຂີ້ພະຍາດ". ມັນກ້ ຫມູນໃຊ້ເພື່ອຜະລິດອຸປະກອນສຳຮອງທຸກແບບທຸກແນວເຊັ່ນສາຍ ພານ, ເຄື່ອງອາໄຫລ່, ຕ່ຳ, ເຫລັກບູລອງສຳລັບຕອກຫ້ນຕອກ ຫນ້, ເກ້ຍ່ານັ້ນກໍຕາມ ເມື່ອ "ບັກຂີ້ພະຍາດ" ເລີ່ມບໍ່ສາມາດ ສະແດງລິດ ຄວາມວິຕົກກັງວົນຢ່າງຫນຶ່ງກໍຈະຄອບງຳໄປທົ່ວໂຮງ ງານໂລດ, ຢູ່ທີ່ຫ້ອງປະກອບຈ້ຳມີການປະກອບບໍ່ທັນສຳເລັດແບບ

ບ້ຳເອີນແລະຢູ່ໃນສ້ຳຈ້ຳນ້ຳເຄື່ອງທ້ຳບ່ຫນ້ຳອອນຊອນຄ້ຳຕ່ອນອ້ຳໄຫລ ຮູບຊ້ຳງເປັນຕ້ຳຊ້ຳງ ແບບ "ບ່ຄ້ຳບຊຸດ" ອອກມ້ຳກອ້ຳງເຕ້ນໄປຫນ້ຳ.

ຄວ້ຳມຮັບຜ້ຳດຊອບຕ່ຳຄຸນ້ຳ ແລະ ຜ້ຳເຊ້ຳດເຮ້ອນ ໃນສ້ຳຍຕ້ຳ ຂອ້ຳຂ້ຳພະເຈ້ຳ ເປັນຄ້ຳກັບເຄື່ອງກ້ຳອ້ຳນນ້ຳ ເຊ່ຳງເ້ຳງ ແມ່ນວ່ຳ ກ້ຳ ຈ້ຳດຢູ່ ໃນ ເ ກ ອ ຫ ລ້ຳ ງ ສຸ ດ ກ ໍ ຕ ້ ຳ ມ ແ ຕ່ ກ ໍ ແ ມ່ ນ ເ ບ ້ ຳ ກ ້ ຳ ງ ອ ້ ຳ ນ ນ ້ ຳ ແ ລ ້ ອ ທ ່ ຳ ເ ພ ່ ຳ ນ ້ ຳ ນ ສ ່ ງ ນ ລ ຳ ກ ະ ດ ູ ກ ຕ ່ ອ ນ ສ ຳ ຄ ັ ນ ສ ຸ ດ ຢ ູ ່ ໃ ນ ລ ັ ກ ສ ະ ນ ະ ຂ ອ ງ ມ ະ ນ ຸ ດ ນ ້ ຳ ນ ຄ ື ຄ ວ ້ ຳ ມ ຫ ມ າ ຍ ຂ ອ ງ ກ ້ ຳ ນ ຮ ັ ບ ຜ ້ ຳ ດ ຊ ອ ບ . ຖ ້ ຳ ບ ່ ມ ີ ລ ັ ກ ສ ະ ນ ະ ນ ້ ຳ ນ ແ ລ ້ ອ ກ ໍ ຈ ະ ບ ່ ມ ີ ຄ ົ ນ ກ ອ ມ ມ ູ ນ ິ ດ , ຈ ະ ມ ີ ກ ໍ ແ ຕ ່ ຊ ະ ນ ິ ດ "ສ ່ ງ ນ ບ ່ ທ ັ ນ ແ ລ ້ ອ" ເ ທ ົ ່ ຳ ນ ັ ້ ນ .

ພ ວ ກ ປ ະ ຊ ຳ ຊ ົ ນ ຊ ຳ ວ ພ ູ ໂ ອ ລ ົ ມ ປ ັ ດ ຖ ຸ ້ ມ ເ ຕ ັ ກ ນ ິ ກ . ຍ ້ ອ ນ ກ ຳ ນ ຄ ອ ບ ງ ຳ ເ ຫ ນ ຶ ອ ກ ວ ່ ຳ ຂ ອ ງ ພ ວ ກ ເ ຂ ົ ຳ , ແ ນ ວ ຄ ຶ ດ ກ ່ ຽ ວ ກ ັ ບ ເ ຕ ັ ກ ນ ິ ກ ຢ ູ ່ ໃ ນ ສ ະ ກ ຳ ບ ັ ນ ກ ຳ ນ ສ ຶ ກ ສ ຳ ວ ິ ຊ ຳ ຊ ີ ຊ ັ ້ ນ ສ ູ ງ ຂ ອ ງ ພ ວ ກ ເ ຮ ົ ຳ ເ ລ ີ ຍ ແ ຈ ບ ຈ ົ ນ ມ ຸ ດ ນ ້ ອ ຍ ໄ ປ ໂ ດ ຍ ສ ະ ເ ພ ຳ ະ ສ ່ ວ ນ ທ ີ ່ ກ ່ ຽ ວ ພ ັ ນ ກ ັ ບ ກ ຳ ນ ສ ຶ ກ ສ ຳ ອ ້ ອ ຍ ຕ ້ ອ ຍ ທ ັ ້ ນ . ຢ ູ ່ ໃ ນ ກ ຳ ນ ດ ຳ ລ ິ ງ ຊ ີ ວ ິ ດ ແ ບ ບ ໂ ຊ ວ ຍ ດ ຂ ອ ງ ພ ວ ກ ເ ຮ ົ ຳ ນ ້ ຳ ນ ບ ່ ມ ີ ຂ ົ ງ ເ ຂ ດ ໃ ດ ມ ີ ທ ີ ກ ຳ ນ ໃ ຊ ້ ເ ຕ ັ ກ ນ ິ ກ ເ ຮ ີ ຮ ້ ຳ ຍ ຊ ັ ກ ຊ ້ ຳ ເ ທ ົ ຳ ກ ັ ບ ຂ ົ ງ ເ ຂ ດ ກ ຳ ນ ສ ຶ ກ ສ ຳ . ນ ັ ນ ກ ຳ ຍ ເ ປ ັ ນ ເ ລ ື ່ ອ ງ ຂ ອ ງ ທ ັ ກ ກ ະ ກ ຳ ແ ລ ະ ຂ ອ ງ ອ ຸ ດ ສ ຳ ຫ ະ ກ ຳ ທ ້ ຳ ຫ ລ ້ ຳ ຫ ລ ັ ງ ກ ວ ່ ຳ ຫ ມ ู . ຍ ້ ອ ນ ກ ະ ໂ ຕ ເ ຫ ດ ຜ ົ ນ ອ ັ ນ ນ ີ ້ ແ ລ ້ ອ ທ ່ ຳ ຄ ຳ ຟ ້ ອ ງ ຮ ້ ອ ງ ຂ ອ ງ ລ ູ ກ ລ ູ ກ ດ ໂ ຄ ລ ບ ິ ບ ຢ ູ ່ ໃ ນ ບ ິ ດ ເ ລ ື ່ ອ ງ "ຜ ູ ້ ກ ອ ດ ກ ຳ ນ" ຂ ອ ງ ໂ ກ ໂ ກ ນ ຈ ົ ່ ຳ ຍ ັ ງ ຄ ົ ງ ຖ ຸ ກ ຕ ້ ອ ງ ຢ ู ่ :

"ບ ่ ມ ี ຫ ຍ ັ ງ ເ ປ ັ ນ ຕ ້ ຳ ຫ ນ ่ ຳ ຍ ກ ວ ่ ຳ ກ ຳ ນ ເ ຮ ັ ດ ວ ງ ກ ຢ ู ่ ນ ຳ ພ ວ ກ ນ ັ ກ ປ ຳ ດ ບ ັ ນ ດ ິ ດ , ຜ ู ້ ໃ ດ ກ ໍ ອ ້ ຳ ງ ໂ ຕ ສ ະ ແ ດ ງ ໂ ຕ ວ ່ ຳ ເ ພ ່ ຳ ເ ປ ັ ນ ຄ ົ ນ ສ ະ ຫ ລ ຽ ວ ສ ະ ຫ ລ າ ດ".

ຄ ຳ ເ ວ ົ ້ ຳ ນ ີ ້ ບ ່ ແ ມ ່ ນ ຄ ຳ ເ ວ ົ ້ ຳ ຕ ະ ຫ ລ ົ ກ ສ ຸ ດ ສ ີ ຫ ລ ື ຄ ຳ ເ ວ ົ ້ ຳ ຍ ອ ກ ໄ ຍ

ແບບແຮງໆເລີຍ ແຕ່ມັນແມ່ນຄວາມຈິງທີ່ໃຜໆກໍຮູ້. ແມ່ນໃຜກໍຕິນ
ເອງວ່າເປັນຜູ້ສະຫລາດສ່ອງໃສກວ່າຫມູ່ເພື່ອຈະແກ້ໄຂບັນຫາການ
ສຶກສາອົບຮົມທຸກຢ່າງໃຫ້ໄດ້? ຜູ້ສະເຫນີຕົວມາກ່ອນຫມູ່ບໍ່ທັນໄດ້
ນັ່ງລົງຕໍ່ຫນ້າໂຕະຂຽນຫນັງສືລາວຊໍ້າ ລາວກໍເລີ່ມຊັ່ງ, ເລີ່ມຜູກ
ແລະ ເລີ່ມແກ້ແລ້ວ. ຈະມີປຶ້ມຕໍາລາຫົວໃດຍັບຍັ້ງຫ້າມປາມລາວ
ໄດ້? ປຶ້ມຫົວຫນຶ່ງຊີ້ຫຍັງດີ ໃນເມື່ອລາວເອງກໍມີລູກຄົນຫນຶ່ງ
ແລ້ວ? ແຕ່ປານນັ້ນກໍຍັງມີອາຈານສຶກສາສາດຄົນຫນຶ່ງ, ຜູ້ຊ່ຽວ
ຊານດ້ານນີ້ໂດຍສະເພາະໄດ້ຂຽນຈົດຫມາຍເກົ່ງກະຊວງພາຍໃນວ່າ:

"ລູກຊາຍນ້ອຍຂອງຂ້ອຍລັກເງິນລັກຄໍາຂ້ອຍບໍ່ຮູ້ວ່າຕັ້ງທໍ່ໃດ
ເທົ່ອແລ້ວ, ມັນບໍ່ນອນເຮືອນ, ດ້ວຍເຫດນີ້ແລ້ວ ຂ້ອຍຈຶ່ງຂໍ່ວ່າ
ວອນຂໍຄວາມເຫັນໃຈນໍາພວກເຈົ້າ...".

ບາງຄົນຈະຍາກຖາມວ່າ ເປັນຫຍັງພວກເຊກາ* ຂອງພວກ
ເຮົາຈະຕ້ອງເປັນທັງນັກເຕັກນິກວິຊາການສຶກສາຊັ້ນສູງຫລາຍກວ່າ
ເປັນອາຈານຝ່າຍວິຊາການສຶກສາເອງ?

ຂ້າພະເຈົ້າເອງບໍ່ສາມາດພົບຄໍາຕອບໃຫ້ບັນຫາພິລຶກພິລໍ້ຂັ້ນ
ໃນທັນທີໂລດ, ແລະ ໃນເບິ້ງນັ້ນ ໃນປີ ໑໙໔໙ ຂ້າພະເຈົ້າເອງ
ກໍບໍ່ໄດ້ຢູ່ໃນສະຖານະທີ່ດີເດັ່ນປານໃດກ້າເວົ້າໃນແງ່ເຕັກນິກ, ບໍ່ຕ່າງ
ຫຍັງກັບ ການີເລໂອ ກັບກ້ອງສ່ອງດາວໃນຍຸກຂອງລາວດອກ.
ທາງເລືອກຂອງຂ້າພະເຈົ້າບໍ່ມີຫລາຍເສັ້ນເລີຍ: ລົ້ມແຫລວຢູ່
ກູເຣຍແຊ ຫລືລົ້ມແຫລວຢູ່ ໂອລິມປັດ ແລະ ຖືກຂັບໄລ່ຫນີຈາກ

---

* ເຊກາ: ຊື່ຕໍາຫລວດພິເສດ.

ສະຫວັນ. ຂ້າພະເຈົ້າເລືອກເອົາເສັ້ນທາງທີສອງ. ເທິງຫົວຂ້າພະເຈົ້າ ສະຫວັນເປັ່ງແສງໂຮງຮຸ່ງຂອງມັນລົງມາ, ທໍປະກາຍແຫ່ງທິດສະດີອອກມາທຸກສີ່ສັນ ແຕ່ຂ້າພະເຈົ້າຕັດສິນໃຈໄປຫາກອງປະສົມພິເສດຂອງຊຸມເດັກນ້ອຍ ກູເຮຍເຊ ແລ້ວເວົ້າກັບພວກເຂົາວ່າ:

- ເອົາລະ, ສູເອີ້! ວຽກງານຂອງພວກສູບໍ່ເປັນຕາເອົາຈັກດີ້ເລີຍ, ກັນຊິໄດ້ພາດກັບພວກໂຕຢູ່ກອງປະຊຸມລະບັດນີ້ນະ, ແມ່ນໃຜເລືອກເຮັດແນວນີ້ ຮ?

ພວກເດັກນ້ອຍຫນ້າແດງຮົ່ນຂຶ້ນ ແລ້ວຫມໍ່ຫນ້ຳອ່າວໃຫຍ່ສູງກວ່າຫມູ່ແດ່ຈ່ຳເດ່ສຽມມັນມາໃຫ້ຂ້າພະເຈົ້າເບິ່ງ ທັງເວົ້າສຽງຈ້ຳດຽງວ່າ:

- ກະສຽມມັນບໍ່ເຂົ້າເດ້... ເບິ່ງເທາະແມ້!

- ຂີ້ຕິວະ! - ໂຕສະກາ ໂສໂລແວັບ ຮ້ອງໃສ່ມັນ, - ໂຕຂີ້ຕິວະ ນ່າຮັບມາເສຍດີ໋ອ່າໂຕຂີ້ຕິວະ!

- ມັນປູ້ຫມິດຫັ້ນເດ້ ຊັ້ນນ່າ ຊິເຮັດແນວໃດ?

- ຈັ່ງຊັ້ນ ໂຕໄປນັ່ງຜິນໃຫ້ມັນເຂົ້າມັນຄົມຕັ້ງຊື່ວໂມງຫວະ?

- ເອົາລະ, - ຂ້າພະເຈົ້າເວົ້າກັບຫົວຫນ້າກອງ. - ພວກໂຕຕ້ອງເຮັດວຽກນີ້ໃຫ້ແລ້ວກ່ອນກິນແລງ, ກ້າບໍ່ແລ້ວກໍຕ້ອງເຮັດຫລັງຈາກກິນເຂົ້າແລ້ວ, ກັນຈະມາຢູ່ນຳພວກໂຕ.

- ພວກເຮົາຊິເຮັດໃຫ້ແລ້ວ! - ພວກເຈົ້າຂອງສຽມຫ້ຽນພາກັນຮ້ອງຂຶ້ນເປັນສຽງດຽວກັນ, - ຊິມີຫຍັງເຮັດຫລວງຫລາຍກະດ໋ຳຢູ່ຫນີ!

ໂຕສະກາ ຫົວຂຶ້ນ:

- ຫມໍ້ສະຫລອກກອກຢູ່ເດ້!

ໃນກໍລະນີເຊັ່ນນັ້ກບໍ່ມີຫຍັງຫນັກຫົວໃຈແລ້ວ: ໃນເມື່ອພວກ
ເດັກນ້ອຍຫາກຂີ້ແບະແຈ້ງອນ ແຕ່ກໍພະຍາຍາມຫາເຫດຜົນມາ
ອ້າງເພື່ອຍອມຈໍານົນເຮັດວຽກງານແລ້ວ ນັ້ນກໍຫມາຍຄວາມວ່າ
ພວກເຂົາພໍມີຫົວຄິດປະດິດສ້າງ ແລະ ແນວຄິດກໍ່ຕ້ອງອັນໃດອັນ
ຫນຶ່ງຢູ່ໃນຫົວແລ້ວ, ພວກເຂົາເປັນດັ່ງສິນຄ້າຄຸນຄ່າສູງຢູ່ໃນຕະ
ຫລາດຂອງ ໂອລິມປັດ. ທ້າຫາກນີ້ ນັ້ນກາຍເປັນວ່າເຕັກນິກຂອງ
ຂ້າພະເຈົ້ານັ້ນຍັງບໍ່ທັນແປວໄຟແຫ່ງຫົວຄິດປະດິດສ້າງຂອງພວກ
ເຂົາຢູ່ຫນ້ອຍຫນຶ່ງ ແຕ່ກໍມີເທົ່ານີ້ແລ້ວ, ແລະ ຂ້າພະເຈົ້າກໍດີໃຈ
ທີ່ເຫັນວ່ານັ້ນເກືອບບໍ່ມີສະພາບປະຕິເສດ ການເຮັດວຽກຢ່າງຈິງ
ຈັງອອກມາເລີຍ. ບາງຄົນພະຍາຍາມຫລົບຫລີກໄປຢ່າງງຸນງຸ
ເພື່ອຫນີໄປແຫ່ງໃດແຫ່ງຫນຶ່ງ, ແຕ່ພວກທີ່ເຮັດໃຫ້ຂ້າພະເຈົ້າວິ
ຕົກກັງວົນຫລາຍແມ່ນພວກທີ່ມີວິທີການເຕັກນິກເປັນຂອງຕົນເອງ
ຢູ່ແລ້ວ. ບໍ່ວ່າພວກປະເພດຂີ້ແບະແອອຍາວຈະໄປໂປໂລຢູ່ໃສ ພວກ
ເຂົາກໍຕ້ອງກັບມາກົ້ນເຂົ້າຢູ່ໂຕະຮ່ວມກັບສະມາຊິກອື່ນໆໃນກອງຢູ່ນັ້ນ
ເອງ. ພວກເດັກນ້ອຍ ກູເຣຍເຊ ຕ້ອນຮັບພວກເຂົາແບບບໍ່ໃຫ້
ເປັນເລື່ອງໂດ່ງດັງອຶກກະທຶກປານໃດ, ພໍພຽງແຕ່ເວົ້າສຽດໃສ່ແບບ
ໄຮ້ດຽງສາວ່າ:

- ພວກເຮົາໂລດຄຶດວ່າໂຕຫນີຈາກນິຄົມແລ້ວ.

ແຕ່ປາຍລົ້ນ ແລະ ຝີມືຂອງພວກເດັກນ້ອຍ ກ້ອກກີ ສ້າງ
ຄວາມແຕກຕື່ນໄດ້ດີກວ່າ. ເມື່ອທ້າວຂີ້ແບະພະຍາຍາມເລັດລອດໄປ
ນັ່ງມີຫນ້າຢູ່ອ້ອມໂຕະກົ້ນເຂົ້າດ້ວຍການເຮັດຫນ້າຊື່ຄືບ່ວ່າບໍ່ມີ

ຫຍັງດົງດູດຄວາມສົນໃຈຈາກໃຜເປັນ ພິເສດນັ້ນ. ນາຍກອງຊ້ຳ ເອົາໃຈໃສ່ວ່າສະມາຊິກຂອງເຂົາແຕ່ລະຄົນໄດ້ຮັບອັດຕາຂອງຕົນຫລື ເຂົາຮ້ອງໃສ່ຜູ້ໃດຜູ້ຫນຶ່ງວ່າ :

- ໂກເລຍ, ແມ່ນໂຕເຮັດອີ່ຫຍັງຢູ່ນັ້ນ? ບໍ່ເຫັນຊັ້ນເບາະວ່າ ກຣີໂວຈຸເຊັນໂກ ມານັ້ນບ່າ, ຫຍັບບ່ອນໃຫ້ມັນແມ້, ໄວໆ! ເອົາຈານສະອາດມາໃຫ້! ແລ້ວແມ່ນໂຕເອົາບ່ວງອີ່ຫຍັງມາໃຫ້ມັນລະ ນັ້ນ? ຕາຍແລ້ວ... ບ່ວງອີ່ຫຍັງເນອະນີ້ເອົາອັນດຽວມາໃຫ້ມັນ!

ແລ້ວບ່ວງກໍຈະຫາຍໂຕໄປທາງບ່ອງຍ້ຽມເຮືອນຄົວ.

- ກອກນ້ຳແກງຊຸ້ນໆໃຫ້ມັນແດ່. ເອົາຊຸ້ນໆໃດ໋ເດ້! ເປເຕຍ ໄປຫາພໍ່ຄົວໄວ ແລ້ວເອົາບ່ວງດຽວມາກ້ານຫນຶ່ງເດ້! ແລ່ນ ຈ້ວ! ຊະໂຕປາ ປາດເຂົ້າຈີ່ໃຫ້ຫມໍໄວ ໂອ້ຍ ແມ່ນໂຕປາດແນວໃດນັ້ນ? ແບບນົມນົມແນ່ນພວກຊາວນາເລອຍລາວນດອກຫນ... ເຮັດບ້ຽງ ໃຫ້ຫມໍແມ້ ໂອ້ວ ແລ້ວແມ່ນຫມໍ ເປເຕຍມັນໄປເຮັດຫຍັງຢູ່... ກັບບ່ວງຫັ້ນ? ເປເຕຍ ໄວແດ່ແມ້! ວາເນຍ ເອົ້ນເປເຕຍ ໄວ... ໃຫ້ມັນເອົາບ່ວງມາໄວ!

ທ້າວ ກຣີໂວຈຸເຊັນໂກ ຫນ້າແດງຮຶນໆຢູ່ຕໍ່ຫນ້າຈານໃສ່ແກງ ເຕັມປ່ຽມ, ນ້ຳແກງຊຸ້ນມີຕ່ອນຫລາຍຕາມຄຶດຢາກ. ຢູ່ໂຕະຂ້າງໆ ຊ້ຳມີຜູ້ໃດຜູ້ຫນຶ່ງກາມສຽງເຍັນໆວ່າ :

- ເຮ້ຍ! ກອງທີ ໑໓, ແມ່ນພວກເຈົ້າມີແຂກຊັ້ນຫວະ?

- ເອ່ີ... ທ່ານຜູ້ໃຫຍ່ຫາກໍມາຮອດນ່າ... ນີ້ເດ້ ລາວຢູ່ຫນີ້ພວມ ຊີກິນເຂົ້າ... ເປເຕຍ... ໂຕຊິເອົາບ່ວງມາໃຫ້ຫມໍນໍ່ລະ... ເຂົາບໍ່ ມີເວລາຫລາຍໃດ໋!

ເປເຕຍ ທ່າທາງພ້າວຟັ່ງຫົດຫອບເຂົ້າມາໃນຫ້ອງ ແລ້ວເດ່ ບ່ວງທຳມະດາສາມັນກ້ານຫນໍ່ງທີ່ໃຊ້ກັນທົ່ວໄປໃນນິຄົມມາໃຫ້, ຫນໍ່ອຸ້ມບ່ວງໄວ້ໃນມືທັ້ງສອງແລ້ວຍື່ນໃຫ້ຄືພວມກະຫວາຍອັນໃດອັນ ຫນໍ່ງ.

ນາຍກອງເກີດໃຈຮ້ອນ:

-ແມ່ນໂຕເອົາບ່ວງຫຍັງມາຫັ້ນນະ? ເຮົາບອກໂຕວ່າແນວໃດ ຮຶ? ໄປຊອກບ່ວງໃຫຍ່ກວ່ານີ້ມາ...

ເປເຕຍ ເຮັດຕາເຫລືອກຕາລານ, ທ່າທາງພ້າວຟັ່ງກວ່າເກົ່າ ບໍ່ຕ່າງຫຍັງກັບຄົນປ່ວງບ້າ, ແທນທີ່ຈະຕຳປະຕູ ຫນໍ່ຈ້ຳໄປຕຳ ປ່ວງຢ້ານ. ໂຮງອາຫານຈົ່ງເປັນຄ້າຍໂຮງລະຄອນຕະຫລົກປົນ ໂສກ ເຊິ່ງແມ່ນແຕ່ພວກອ້າຍເອື້ອຍລ້ຽງ ກໍເຂົ້າຮ່ວມສະແດງນຳ. ບາງຄົນກັ້ນລົມຫາຍໃຈໄປນຳ ເພາະວ່າມັນເປັນເລື່ອງບ້ຽເອີນ ຫລາຍ ທີ່ໂຕເຂົາເອງບໍ່ໄດ້ຕົກເປັນເປົ້າຫມາຍຂອງການຮີບຮ້ອນ ເພື່ອເອົາອົກເອົາໃຈແນວນີ້. ເປເຕຍ ບິນກັບເຂົ້າມາ, ໃນມືມີ ຕວຍຂະຫນາດໃຫຍ່ຫລືວ່າຈອງຕັກແກ ໃນເຮືອນຄົວ. ທົ່ວທັ້ງ ໂຮງອາຫານນັ້ນນອງໄປດ້ວຍສຽງຫົວ, ຮອດເວລານັ້ນ ລາປົດ ຈົ່ງລຸກຂຶ້ນຊ້າໆແລ້ວກ້າວຂຶ້ນສູ່ເວທີສະແດງ. ຫນໍ່ສັງເກດເບິ່ງນັກ ສະແດງໃນເລື່ອງໂສກເສົ້າເລື່ອງນີ້ມາຢ່າງມິດໆ. ຈາກນັ້ນຈົ່ງສັກ ແສງຕາຮ້າຍໆໃສ່ທ້າວນາຍກອງ ຕໍ່ມາໃບຫນ້າເຄັ່ງຮ້າຍຂອງຫນໍ່ຈົ່ງ ອ່ອນຍານລົງຈົນໃຜໆກໍສາມາດສັງເກດເຫັນວ່າມັນເຕັມໄປດ້ວຍ ຄວາມເວດທະນາປານີ ແລະ ເຫັນອົກເຫັນໃຈເຊິ່ງແມ່ນອາລົມຈິດ ຊະນິດທີ່ໃຜໆກໍຮູ້ວ່າບໍ່ອາດເກີດຂຶ້ນກັບ ລາປົດ ໄດ້. ທົ່ວທັ້ງຫ້ອງ

ອາຫານນັ້ນຫາຍໃຈນຳ, ລໍຄອຍນັກສະແດງວາດລວດລາຍທີ່ຄັກ ແລະຕະຫລົກຢ່າງແນບນຽນທີ່ສຸດອອກມາ! ລາປົດ ເດ໋ມ້ຂ້າງຫນ້ຳ ໄປລູບຫົວຫມໍ ກຣິໂວຣຸເຊັນໂກ ແລ້ວເປັ່ງສຽງເວົ້າທີ່ອ່ອນຫວານ ນຸ່ມນວນທີ່ສຸດອອກມາວ່າ:

-ກິນສາ.. ບັກຫລ້າເອີ້ຍ ບັກຄຳນ້ອຍຂອງອ້າຍ, ບໍ່ຕ້ອງ ຢ້ານ, ກິນໂລດ. ແມ່ນພວກເຈົ້າມ່ວນອົກມ່ວນໃຈອີ່ຫຍັງຊັ້ນຫວະ ທີ່ເຮັດໃຫ້ມັນທຸກໃຈແນວນີ້? ຮຶ? ກິນແມ້ຫລ້າ... ແມ່ນຫຍັງ, ບໍ່ມີບ່ວງຊັ້ນຫວະ? ໂອ້ຍ ຈັ່ງແມ່ນເປັນຕາຫນ່າຍແນ໋ະ? ເອົາມາ ໃຫ້ມັນເທາະແມ້ ເອ້ີ້ນນັ້ນລະ ເອົາມາ ເອົາມາໄວ...

ແຕ່ບັກຫລ້ານ້ອຍກິນບໍ່ລົງແລ້ວ, ມັນສະອົ້ນຂົ້ນທົ່ວຖ້ວນຄັບ ໂຮງອາຫານແລ້ວກໍອອກຈາກໂຕະກິນເຂົ້າ ປ່ອຍຈານນ້ຳແກງຊຸ້ນໄວ້ ເຕັມບໍ່ມີຮອຍບີກຮອຍກິນ. ລາປົດ ແນມນຳຜູ້ກຸກທ໋ະມານ, ສີ ຫນ້າຂອງຫມໍສະແດງວ່າເຈັບປວດທ໋ະມານນ໋ຳຢ່າງເລິກເຊິ່ງ.

-ເປັນໄປໄດ້ຫວະນີ້? -ລາປົດ ເວົ້າເກືອບສະອົ້ນ, -ແມ່ນ ຫຍັງ... ໂຕຊິບໍ່ກິນຊັ້ນຫວະຫນີ? ໂອ້ຍ... ຈັ່ງແມ່ນພວກເຂົາພາ ໂລມັນນໍ້

ລາປົດ ງວາກມາເບິ່ງພວກເດັກນ້ອຍອື່ນໆແລ້ວຫົວແບບງງໆ ຫມໍກອດໂອບເອົາບ່າໄຫລ່ທີ່ສັ່ນທົ່ວຍ້ອນແຮງສະອົ້ນຂອງຫມໍ ກຣິໂວຣຸເຊັນໂກ ແລ້ວພາຍ່າງລາກຂາອອກຈາກໂຮງອາຫານໄປ. ຜູ້ຊຸມຫົວກ໋ວກໆຂົ້ນ. ແຕ່ລະຄອນໂສກເລ້ົ້ານ້ັ້ຍງມີສາກສຸດທ້າຍ ເຊ່ິງຜູ້ຊຸມບໍ່ມີໂອກາດໄດ້ເຫັນນ໋ຳ. ລາປົດ ພາແຂກຂອງມັນມາໃນ

ເຮືອນຄົວ, ພາມັນນັ່ງລົງຕັ່ງຂ້າງໂຕະກ້ວາງໆແລ້ວສັ່ງໃຫ້ພໍ່ຄົວຫາ ອາຫານດີໆມາໃຫ້ "ຄົນຜູ້ນ້ອຍ" ກິນ ເພາະວ່າ "ຕົ້ວເຈົ້າເຫັນນັ້ນ ແລ້ວ, ພວກເຂົາເຮັດກ່ອຍໆໃສ່ມັນ" ແລະ ເມື່ອທ້າວ ກຣິໂວຮຸ ເຊັນໂກ ສະອຶ້ນຄ່ອຍລົງ ແລະກິນແກ່ງຫມົດໄປແລ້ວ, ສະຕິຂອງ ມັນແຈ່ມໃສຂຶ້ນພໍຈະເອົາໃຈໃສ່ເຊັດຂີ້ມູກ ນ້ຳຕາ, ລາປົດ ຈົ່ງຟາດ ບາດຄ້ອນອ່ອນໂຍນບາດສຸດທ້າຍໃສ່ວ່າ:

-ແລ້ວເປັນຫຍັງຫມວດນັ້ນຈົ່ງພາໂລໂຕແນວນີ້? ໂຕບໍ່ໄປ ເຮັດວຽກແມ່ນບໍ? ຄືຊິແມ່ນລະເນາະ?

ກຣິໂວຮຸເຊັນໂກ ງຶກຫົວທ້າງສະອຶ້ນ, ກອນຫັນໃຈໃຫຍ່ ອັນ ໃຫ້ຄວາມຫມາຍຫລາຍກວ່າຄຳເວົ້າຊ້ຳ.

-ຈັ່ງແມ່ນພວກເຂົາໂພດດອກເນາະ, ເດັກນ້ອຍຫມູ່ນີ້... ວ່າ ແນວນັ້ນ... ເອົາລະໂຕຄືບໍ່ເຮັດແບບນັ້ນແລ້ວເນາະ... ເປັນ ເທື່ອສຸດທ້າຍແລ້ວແມ່ນບໍ? ເລື່ອງຫຍັງຈົ່ງຊິຫາເລື່ອງກັບພວກເຂົາ ລະ? ພໍປານວ່າບໍ່ມີເລື່ອງມີລາວອື່ນໆຊັ້ນຫວະ? ເຮົາເນາະ ຕອນ ມາຢູ່ນິຄົມໃຫມ່ໆນັ້ນ ເຮົາບໍ່ອອກໄປເຮັດວຽກຕັ້ງ ຖ ມື້ພຸ້ນໃດ ແລ້ວໂຕຍັງມີແຕ່ ຄ ມື້ຫນຶ່ງ... ເອົາລະ ໃສ ເຮົາເບິ່ງກ້າມຊຶ້ນ ໂຕດຸ, ໂທ້ໆ... ບໍ່ທຳມະດາເດ້... ກ້າມຊຶ້ນແນວນັ້ຕ້ອງເຮັດວຽກ ໄດ້ສະບາຍແມ່ນບໍ?

ກຣິໂວຮຸເຊັນໂກ ງຶກຫົວອີກເທື່ອຫນຶ່ງ ແລ້ວລົງມືກິນກວນ ແປ້ງຂອງມັນ. ລາປົດ ເວົ້ານຳມັນກ່ອນກັບເຂົ້າມາໃນໂຮງອາຫານ ແບບຊົມເຊີຍຢ່າງບໍ່ຄາດຝັນວ່າ:

-ກັນເຫັນໂລດນ່າວ່າ ໂຕເປັນຄົນຈິບເຈື້ອຜູ້ຫນຶ່ງ.

ຕອນທ່ຽງ ຊີເນັນກີ ແລະ ໄຊເຊັນໂກ ກັບເຂົ້າມາໃນເດີ່ນ, ຮ່າງຄຶງເທິງອານ້ຳເອນກົ່ງລົງ, ພວກເຂົາເວົ້າຊຸ່ມຊັບກັບສິບເວນ ປະຈຳວັນຄື ນາງນາຕາຊາ ເປເຕຣັນໂກ. ຈາກນັ້ນ ຊີເນັນກີ ຈົ່ງຄວບມ້າຜ່າແຂກຄົນ ແລະ ເດັກນ້ອຍອື່ນໆໄປທ່ານກາງສຽງຫົວ, ຫນຸ່ມຸ່ງຫນ້າໄປຍັງເດີ່ນໂຮງນາ. ນາທີຫນຶ່ງຕໍ່ມາ, ສຽງສັນຍານ ຫອງກ້ອງກວ່າຫມູ່ຫມາຍຮຸກການເຕົ້າໂຮມກໍດັງລອຍມາຈາກທິດ ນັ້ນ. ວາເນຍ ໄຊເຊັນໂກ ເປົ່າຊ້ຳຄືນອີກເທື່ອຫນຶ່ງ. ບໍ່ທັນທີ ສຽງແກທ່ອນສຸດທ້າຍຈະທັນໄດ້ລ່ອງລອຍຮອດຣິຊອບຊ້ຳ, ພວກ ເດັກນ້ອຍປະລະແຂກຮັບເຊີນກໍພາກັນແລ່ນມາເຂົ້າແກ່ວລຽນຢ່າງ ຮຽບຮ້ອຍ, ທາງປີກຂວາຂອງແກ່ວ ມີເຕຍນິດຊິນອຍ ປາກົດຕົວ ອອກມາ, ບາດຕີນແຮງເປັນຈ້ຳຫວະກະທົບດິນ ເຮັດໃຫ້ຫົວໃຈຜູ້ ຊົມສະທ້ານໄປນຳ, ໃນມືຂອງຫນຸ່ມມີທຸ່ງສີຂຽວຜືນຫນຶ່ງ. ຂ້າພະ ເຈົ້າຮູ້ສຶກເຕັ້ນຫົວໃຈວ່າ ໄຊຊະນະມາລໍຄອຍຢູ່ໃກ້ເຕັ້ນທີ. ໃນທັນ ໃດ ກັນແກ່ວຊາວຫນຸ່ມຜູ້ເບີກບານຊ້ຳຄ້າຍຄືແກ່ບຜ້າສອງສີ ຂາວ ແລະ ຟ້າ ກໍໄດ້ປະກົດຕົວຂຶ້ນຕໍ່ຫນ້າແກ່ວຫນານດອກໄມ້, ສ້ຳດັ່ງ ກ່າວສ້າງຄວາມປະທັບຈິດໃຈ ດຶງດູດສາຍຕາຄວາມນິຍົມ ແລະ ຄວາມຊຶນເຄີຍຂອງຜູ້ຄົນທີ່ມາເຕົ້າໂຮມກັນ ທັ່ງບັນຊາໃຫ້ເກີດ ຄວາມເຄົາລົບ ຕໍ່ພວກເຂົາໃນທັນທີ. ໃບຫນ້າຂອງແຂກ ເຊ່ົ້ງມາ ຮອດປັດຈຸບັນແຜ່ງດ້ວຍຮອຍຍິ້ມແບບເວດທະນາອົ່ດ ຕາມແບບຂອງ ຜູ້ໃຫຍ່ໃຈກ້ວ້າງມີຕໍ່ເດັກນ້ອຍ, ທັນໃດນັ້ນໃບຫນ້າຂອງພວກເພື່ນ

ກໍເຄັ່ງຂຶມສະແດງຄວາມເອົາໃຈໃສ່ຫລາຍຂຶ້ນ. ຢູເຮັບ ເຊິ່ງຢືນຢູ່ເບື້ອງຫລັງຂ້າພະເຈົ້າເວົ້າຂຶ້ນແຮງໆວ່າ:

-ຊິມເຊີຍ ອານໂຕນ ເຊມືອໂນວ໌, ເຮັດມັນແນວນີ້ລະ!

ພວກເດັກນ້ອຍພະຍາຍາມຈັດແຖວໃຫ້ຊື່ຢ່າງລະມັດລະວັງ ທັງເສືອກແສງຕາມາເບິ່ງຂ້າພະເຈົ້າເປັນບາງຄັ້ງບາງຄາວ. ເມື່ອແນ່ໃຈວ່າ ທຸກຈຸດກຽມຕ້ອຮຽບຮ້ອຍດີແລ້ວ ຂ້າພະເຈົ້າຈຶ່ງອອກຄຳສັ່ງວ່າ:

-ເຄົ້າລິບທຸງ... ກ້າງ!

ຈາກດ້ານຫລັງຂອງສີມ ນາຕາຊາ ໂປໂລອອກມາດ້ວຍບາດກ້າວສະເໝີຕາມຈັງຫວະເຄົ້າລິບທຸງ, ນາງຍ່າງນຳຜູ້ກ້າທຸງອອກມາສູ່ປີກຂວາຂອງແຖວ.

ຂ້າພະເຈົ້າເວົ້າຊິມເຊີຍວັນບຸນ ແລະ ຍ້ອງຍໍໃຊ້ຊະນະຂອງພວກເຂົາສອງສາມຄວາມ.

-ແລະ ບັດນີ້ພວກເຮົາຂໍມອບກຽດໃຫ້ບັນດາສະຫາຍຜູ້ດີເດັ່ນຂອງພວກເຮົາ ກອງພິເສດທີ ຊ ນຳໂດຍ ບູຊຸນ ລ້ຽມກ່ຽວເຂົ້າມັດທີຫນຶ່ງ!

ສຽງແກດັ້ງສະນັ່ນຂຶ້ນອີກບາດໃຫມ່. ບານປະຕູໄຂຈ່ຳອອກ, ສະມາຊິກກອງພິເສດທີ ຊ ປາກົດຕົວອອກມາຈາກເດີ່ນໂຮງນາ. ໂອ້ຍ! ແຂກຄົນທີ່ຮັກແພງທັງຫລາຍເອີ໋ຍ, ຂ້າພະເຈົ້າເຂົ້າໃຈດີວ່າພວກທ່ານຕື່ນເຕັ້ນເທົ່າໃດ, ຂ້າພະເຈົ້າເຂົ້າໃຈສາຍຕາຫລ້ຽໃຫລຂອງພວກທ່ານ ເພາະວ່າຄັ້ງນີ້ບໍ່ແມ່ນເທື່ອທຳອິດໃນຊີວິດຂອກ ທີ່ຂ້າພະເຈົ້າຕົກຢູ່ໃນສະພາບງ່ຽງວ່າຕື່ນຕະລຶງຕໍ່ຄວາມຫນ້າຮັກນິສະເໜ່ຫລ້ຳຂອງກອງພິເສດທີ ຊ, ຂ້າພະເຈົ້າຄິງນີໂອກາດໄດ້

ເຫັນ ແລະ ຮູ້ສຶກຫລາຍກວ່າພວກເຈົ້າເປັນແນ່.

ອອກຫນ້າຫມູ່ແມ່ນ ບູຮູນ, ນັກຮຽນຮຸ່ນອາວຸໂສຜູ້ສະຫງ່າ ງາມທີ່ໄດ້ນໍາພາວຽກງານກອງຢູ່ໃນນິຄົມອີກຄັ້ງຫນຶ່ງ. ເຂົາແບກ ກ່ອງດ້າມຍາວປະດັບດ້ວຍພວງດອກດາວເຮືອງຂາວ, ຄົມກ່ອຝົນ ຂາວວາວວັບ. ມື້ ບູຮູນ ງາມສະຫງ່າຍິ່ງຫນັກ; ສໍາລັບຂ້າພະ ເຈົ້າແລ້ວ ເຂົາຍິ່ງສະງ່າເປັນພິເສດ ຂ້າພະເຈົ້າຮູ້ດີ, ເຂົາບໍ່ພຽງແຕ່ ເປັນໃບຫນ້າປະດັບເອ້ແຜ່ນຜ້າບຊີວິດໃນເກອຫນ້າເທົ່ານັ້ນ ແຕ່ທີ່ ແທ້ແລ້ວເຂົາເປັນຫົວຫນ້າທີ່ຮູ້ຈັກລູກນ້ອງດີ ແລະ ຮູ້ວ່າຈະພາ ພວກເຂົາໄປໃສ. ບົນໃບຫນ້າສະຫງົບ ແລະ ເຄັ່ງຂຶມນັ້ນ, ຂ້າພະ ເຈົ້າອ່ານແນວຄິດມັນອອກດັ່ງນີ້: ມື້ໃນເວລາ ນ0 ນາທີ ມັນຕ້ອງ ກ່ອງເຂົ້າໂອ໊ດເດ໋ເຮັກຕາ ແລະ ມ້ຽນມັນເປັນກອງໄວ້ຮຽບຮ້ອຍ. ພວກແຂກແມນບໍ່ເຫັນມັນ, ພວກເຂົາຮອດບໍ່ຮູ້ຈ້ໍາວ່າ ນາຍກອງ ຫນ່ອຍກ່ອງເຂົ້າວັນນີ້ແມ່ນນັກສຶກສາສະກາບັນການແພດ; ເປັນ ແນວນີ້ແລ້ວການຈັບຈ້ອນເຂົ້າເກອແບບໂຊວ໌ດຂອງພວກເຮົາ ສະ ແດງຕົວອອກຢ່າງຫນ້າເຊື່ອຫມັ້ນແນວນີ້ແລ້ວ. ຍັງມີອີກຫລາຍ ແນວຢູ່ທີ່ແຂກຮັບເຊີນຂອງພວກເຮົາແມນບໍ່ເຫັນ ແລະ ບໍ່ສາມາດ ແມນເຫັນເລີຍ, ເລື່ອງນີ້ຕລາດໄດ້ໂລດ ເພາະບໍ່ແມ່ນແຕ່ ບູຮູນ ຜູ້ດຽວເທົ່ານັ້ນທີ່ຫນ້າເບິ່ງຢູ່ຫນ້ໍ. ຢູ່ເບື້ອງຫລັງຂອງຫມໍ ນັກກ່ອ ເຂົ້າ ໑ຝ ຄົນລຽນແຖວສີ່, ໃນເສື້ອສີຂາວສະອາດອ່ມຄືກັນ ແລະ ກ່ອງດ້າມຍາວປະດັບພວງດອກໄມ້ເທົ່າກັນພ້ອມກ້າວນໍາມາ. ການ ນັບເບິ່ງຈໍານວນພວກເຂົານັ້ນງ່າຍຢູ່ດອກແຕ່ໃນນັ້ນມີຜູ້ຫຼີສຽງຮ້ອງ ດ໊ຕ໋ຫລາຍຄົນຄື ການຮາບານິບ, ຊາໂດຣອບ, ເບຍລຸກິນ, ຊະແນ

ແດກ, ເກອໍເກັບສະກີ! ຢູ່ໃນແກ່ວສຸດທ້າຍພຸ້ນຈ່ຳມີຊາວນິຄົມກ້ອກ ກີໃຫມ່ເຂົ້າຢູ່ນຳ ຄື: ໂວສະໂກໂບຍນິກິບ, ຊະວາດໂກ, ເປເຮດ ແລະ ໂກໂຮຕອບ.

ຢູ່ເບື້ອງຫລັງນັກກ່ຽວມີສາວນ້ອຍ ໑ຝ ນາງ, ແຕ່ລະຄົນສຸບ ພວງມາໄລດອກໄມ້ຄ້ຳງຫົວ, ແລະໃນດວງວິນຍານຂອງແຕ່ລະຄົນ ມີພວງມະໄລທີ່ເຮັດດ້ວຍມ້ວນເຮືອງຮຸ່ງຂອງຊາວໂຊວຽດ: ພວກ ນາງແມ່ນນັກນັດພ່ອນເຂົ້ານັ້ນເອງ.

ກອງພິເສດທີ ๘ ຫຍັບໃກ້ພວກເຮົາເຂົ້າມາຫລາຍແລ້ວເມື່ອ ບານປະຕູໃຫຍ່ໄຂອອກ, ຈັກກ່ຽວສອງຫນ່ວຍທຽມມ້າຄູ່ເຄື່ອນລຸດໆ ອອກມາ, ແພງຂົນຄ້ຳແຕ່ລະໂຕກ໊ຶກເປຍ ແລະ ປະດັບເອ້ດ້ວຍ ດອກໄມ້, ສ່ວນກະໂຕເຄື່ອງຈັກ ແລະ ປືກຂອງມັນກໍ້ລ້ວນແຕ່ມີ ດອກໄມ້ສອດແຊມເຕັມໄປຫມົດຄືກັນ. ເທິງຫລັງມ້າໂຕລະຕ໊ວມີ ຄົນຂີ່ປະຈຳຜູ້ຫນຶ່ງ ແລະ ເທິງອານນັ່ງຈັກກ່ຽວເຂົ້າຄັນທີ່ຫນຶ່ງແມ່ນ ກະໂຕອານໂຕນ ບຮາເຊັ່ນໂກ ສ່ວນຄັນທີ່ສອງແມ່ນ ກອກກິບສະ ກີ. ຢູ່ເບື້ອງຫລັງລິດກ່ຽວແມ່ນຄາດໃຫຍ່ ແລະ ລິດແກ່ກ້ຳງນ້ຳໂດຍ ແມ່ນ ກາລາແຕ້ງໂກ ເປັນຜູ້ບັນຊາ, ທ້າວອັນນ໊ເປັນຜູ້ຂ໊ຄ້ານສຸດ ຂ໊ດຢູ່ໃນນິຄົມ ແຕ່ສະພານາຍກອງກ໊ຶກງດມອບຕຳແຫນ່ງນ໊ພາຍໃນ ກອງທີ ๘ ໃຫ້ມັນໂດຍບ່ໍທ່ວງກ້ຳວິນ ແລະ ບັດນ໊ເພິ່ນກໍໄດ້ເຫັນ ແລ້ວວ່າຝ່າມ໊ອັນຄ່ອງໄວປາສະຈາກຄວາມກຽດຄ້ານຂອງຫມໍ່ໄດ້ດຸ ຫມັ່ນປະດັບດອກໄມ້ ໃສ່ກວຽນຂອງມັນຢ່າງໃດ. ມັນບ່ໍແມ່ນກະກ້ຳ ໃສ່ນ້ຳແລ້ວ ແຕ່ແມ່ນສວນດອກໄມ້ເຄື່ອນທີ່ຫອມຫວນອ໊ບອວນໄປ ທົ່ວ, ມີດອກໄມ້ເອ້ລ້ຳຮອດລ້ໍກວຽນ. ອັດທ້າຍຫມູ່ ຫລັງຈາກ

ກອງນ້ຳຂອງ ກາລາແຕ້ງໂກ ແມ່ນລິດນ້ຳຕິດປ້າຍກາໂຮງຫມໍ ເຊິ່ງ ໃນນັ້ນມີ ເອເລນາ ມິຄາຍລິບນາ ແລະ ຊະເມນາ. ໂສ້ ນີ້ສະແດງວ່າ ເພິ່ນກຽມໄວ້ທຸກຢ່າງເພື່ອເກີດອຸບັດເຫດໃນເວລາເຮັດວຽກ.

ກອງພິເສດທີ ຊ ຢຸດຈຶກລົງຕໍ່ຫນ້າພວກເຮົາ, ລາປິດ ອອກ ຈາກແກ້ວຂອງພວກເຮົາໄປ ແລ້ວເວົ້າວ່າ:

-ກອງພິເສດທີ ຊ! ຍ້ອນວ່າພວກເຈົ້າລ້ວນແຕ່ແມ່ນຊາວ ຫນຸ່ມ ກົມໃຊໂມນທີ່ດີ, ເປັນຊາວນິຄົມທີ່ດີ ເປັນເພື່ອນມິດທີ່ດີກັບ ທຸກຄົນ, ທາງນິຄົມຈຶ່ງຂໍມອບຮາງວັນກຽດສູງສຸດອັນນີ້ໃຫ້ພວກເຈົ້າ ຄືມອບໃຫ້ພວກເຈົ້າກ່ຽວເຂົ້າຮວງທຳອິດຂອງພວກເຮົາ. ເຊີນປະຕິ ບັດຕາມທີ່ຕ້ອງເຮັດ ແລະ ສະແດງໃຫ້ເດັກນ້ອຍຂອງພວກເຮົາທຸກ ຄົນເຫັນວ່າ ການເຮັດວຽກນັ້ນຕ້ອງເຮັດແນວໃດ. ສະພານາຍກອງ ຂໍຊົມເຊີຍພວກເຈົ້າ ແລະ ສະເຫນີໃຫ້ຫ້ອຫນ້າກອງ, ສະຫາຍ ບູຮຸນ ເປັນຜູ້ນັບຊາການ!

ຄຳປາໄສສັ້ນໆບິດນິ້ດິບດົ່ນໆ ທີ່ເວົ້າຕໍ່ໆມາ ບໍ່ມີໃຜຮູ້ແມ່ນໃຜ ເປັນຜູ້ແຕ່ງ, ພວກເຮົາເວົ້າກັນມາແບບນີ້ຫລາຍຟ້າຫລາຍປີ, ດ້ວຍ ຄຳສັບແບບເກົ່າເຊິ່ງທາງສະພານາຍກອງບັນທຶກໄວ້. ສິ່ງທີ່ພາໃຫ້ ພວກເຮົາສະດຸ້ງເປັນພິເສດທຸກໆຄັ້ງທີ່ຟັງມັນ ແລະ ພວກເດັກນ້ອຍ ພາກັນກົ້ນໃຈໄວ້ກໍແມ່ນຕອນທີ່ ບູຮຸນ ຫຍັບເຂົ້າມາຫາຂ້າພະເຈົ້າ ແລະ ເປັ່ງວາຈາສັກສິດຕາມຮີດຄອງເຫລົ່ານີ້ອອກມາ:

-ສະຫາຍ ອຳນວຍການ, ຈົ່ງອະນຸຍາດໃຫ້ຂ້ອຍນຳພາກອງພິ ເສດທີ ຊ ປະຕິບັດງານ ແລະ ຈັດສົ່ງພວກນີ້ໄປຊ່ອຍພວກເຮົານຳ ດ້ວຍ.

ຂ້າພະເຈົ້າກໍຕອບຕາມທີ່ຕ້ອງຕອບວ່າ:

-ສະຫາຍ ບູຮູນ, ນຳພາກອງທີ ຊ ປະຕິບັດວຽກໄດ້ ແລະ ເອົາພວກນີ້ໄປຊ່ອຍຕື່ມ!

ນັບແຕ່ວັນທີ່ນັ້ນມາ ບູຮູນ ຈຶ່ງເປັນນາຍກອງຂອງຫມິດນິຄົມ, ເຂົາອອກຄຳສັ່ງເປັນຊຸດໆເພື່ອບ່ຽນແກວໃຫມ່, ອີກນາທີຫນຶ່ງຕໍ່ມາ ຫມິດທຸກຄົນກໍພວມອອກເດີນທາງ. ຢູ່ເບື້ອງຫລັງນັກຕີກອງ ແລະ ຜູ້ຖືທຸງ ແມ່ນນັກກ່ຽວ ແລະ ຈັກຟາດຕິດຕາມດ້ວຍສະມາຊິກທັງ ຫມິດຂອງນິຄົມ ຕໍ່ມາຈຶ່ງແມ່ນແຂກເຊີ່ງກໍຍິນຍອມປະຕິບັດຕາມລະ ບຽບຮ່ອມອັນດຽວກັນ, ພວກແຂກຈັດແກວກັນແລ້ວຢ່າງເຂົ້າຈັງ ຫວະ. ຄາລາບູດາ ຢ່າງຢູ່ຂ້າງໆຂ້າພະເຈົ້າ ເວົ້າກັບສະຫາຍຜົມ ກ້ຽງວ່າ:

-ເວນຕາຍມຶ້ງເອີ້ຍ... ຍ້ອນເລື່ອງຜ້າຫົ່ມນັ້ນແທ້ໆ ບໍ່ຊັ້ນຂ້ອຍ ເຂົ້າໄປຢ່າງໃນແກວ ແບກກ່ຽວນຳພວກເຂົາແລ້ວ!

ຂ້າພະເຈົ້າງຶກຫົວໃສ່ ຊັນຕີ ທີ່ແລ່ນຄືຊິບິນໄປຍັງເດີ່ນລານ ເຂົ້າ. ເມື່ອພວກເຮົາໄປຮອດທົ່ງເຂົ້າ ບູຮູນ ຈຶ່ງສັ່ງຢຸດແກວຂັດກັບ ປະເພນີ ແລະ ຖາມເດັກນ້ອຍຂຶ້ນວ່າ:

-ມື້ສະເຫນີຕໍ່ກອງພິເສດທີ ຊ ໃຫ້ຮັບເອົານັກກ່ຽວເຂົ້າຄືນ ຫນ້ອ ຄຊດ ກາກໂປ໊ວດ ຄາລາບູດາ ເຂົ້າຕົ້ມໃນຫມວດຂອງ ຊາ ໂດຮອບ ມີໃຜຂັດຂ້ອງບໍ?

ພວກເດັກນ້ອຍຫົວໂຄບຂຶ້ນ ແລະ ຕົບມື. ບູຮູນ ຈັບເອົາກ່ຽວ ດວງຫນຶ່ງເອ້ຍ້ອງຢ່າງງາມຈາກມື ຊັນຕີ ແລະ ເດ່ໃຫ້ ຄາລາ ບູດາ. ທາງຝ່າຍນີ້ຟ້າວຮັບເອົາຢ່າງວ່ອງໄວກະລິກກະລີນແບບເດັກ

ນ້ອຍ, ກອດເສື້ອນອກອອກປຸບປັບໂຍນມັນລົງປ່າຫ້ຍ້າຂ້າງທົ່ງ ແລະ ເຍິ້ງກ່ຽວໃນມືຂຶ້ນ:

- ຂອບໃຈ!

ລາວໄປເຂົ້າປະຈຳບ່ອນທີ ๕ ໃນແຖວນັກກ່ຽວຂອງຫນ່ວຍ ຊາ ໂດຮອບເຊົ່ຶ້ພ້າວຍົກມືມາຊູ່ວ່າ:

- ລະວັງຢ່າໃຫ້ຂ້ອງເດ ົ່ ບໍ່ຊັ້ນເສຍກຽດຫນິດຫມູ່ໃດ໋.

- ບໍ່ຕ້ອງຫ່ວງ! - ຄາລາບູດາ ຕອບ, - ຂ້ອຍຍັງຊ໊ືສະແດງ ໃຫ້ເບ່ຶ້ງອີກວ່າ ເຮັດແນວໃດ.

ລອນແຖວພວກເດັກນ້ອຍນັກຮຽນມາລຽນກັບກອງຫນ ົ່ ຳຢູ່ອີກ ຟາກຫນ ົ່ ຳຂອງທົ່ງນາ. ທຸງ ົ່ ກນ ົ່ ຳມາປັກໄວ້ບ່ອນທ ົ່ ີ່ເພ ົ່ ີ່ນຕ້ອງມັດ ເຂົ້າພ່ອນທ ົ່ ີ່ຫນ ົ່ ຳ, ຢູ່ຂ້າງທຸງຈະແມ່ນ ບູຮຸນ, ນາຕາຊາ ແລະ ໂຊ ເຮນ ເຊ ົ່ ີ່ງເປັນສະມາຊ ົ່ ີ່ກຜູ້ຫນຸ່ມນ ົ່ ອຍທ ົ່ ີ່ສຸດຂອງນຄມ.

- ທຸກຄົນລະວ ົ່ ັ້ງ!

ບູຮຸນ ລົ ົ່ ງມ ົ່ ືແຮກກ ົ່ ຽວແລ ົ່ ້ວ... ບ ົ່ ໍ່ເທ ົ່ ົ່ າໃດນາດກ ົ່ ຽວ, ຮ ົ່ ົ່ ວງເຂ ົ ົ່ ້ ໂອ ົ ົ່ ຍວ ົ ົ່ ວດ ົ ົ່ ິກກ ົ ົ ົ

ແລະ ດ້ວງເຫັນຜູ້ເຖົ່າເງີກຫົວຂຶ້ນໄວ້ສູງໆ ເພື່ອຮັບເອົາຄຳເວົ້າທຸກໆ ຄຳຂອງ ບູຮຸນ:

-ຮັບເອົາເຂົ້າພ່ອນນີ້ຈາກມືຂອງເຮົາ, ຈົ່ງເຮັດວຽກ ແລະ ຮຽນເພື່ອໂຕຈະກາຍເປັນຊາວຫນຸ່ມກົມໂຊໂມນຄົນຫນຶ່ງ ເມື່ອໃດ ໂຕໂຫຍ່ແລ້ວກໍຂໍໃຫ້ໂຕໄດ້ຮັບກຽດຄືເຮົາໃນວັນນີ້ ຄືການໄດ້ເປັນຜູ້ ລ້ຽມເຮືອກ່ຽວຮວງເຂົ້າ!

ບັດນີ້ແມ່ນຜຽນຂອງ ໂຊເຣັນ ແລ້ວ. ດ້ວຍນ້ຳສຽງແຈ່ມໃສ ຄ້າຍສຽງນົກກາເວົ້າເວລາຈັບຢູ່ປາຍໄມ້ສູງໆ, ຫມໍຕອບ ບູຮຸນ ວ່າ:

-ຂອບໃຈເຈົ້າຫລາຍໆ ກຣິສໂກ ເຮີຍ! ຂ້ອຍຈະເຮັດວຽກ ແລະ ຮ່ຳຮຽນ, ເມື່ອໃຫຍ່ແລ້ວ ຂ້ອຍຈະເປັນຊາວຫນຸ່ມກົມໂຊ ໂມນ ແລະ ຈະໃຫ້ໄດ້ຮັບກຽດເປັນຜູ້ແຮກ່ຽວຮວງເຂົ້າທຳອິດຄື ກັນ ເພື່ອຍົ້ນສົ່ງຕໍ່ມັນໃຫ້ຜູ້ຫນຸ່ມນ້ອຍກວ່າ!

ໂຊເຣັນ ຮັບເອົາພ່ອນເຂົ້າແລ້ວໂຕຫມໍກໍຫລົບຫາຍເຂົ້າໃນມັດ ເຂົ້າ ແຕ່ພວກເດັກນ້ອຍອື່ນໆພາກັນໂຫ້ມາໃສ່ມັນພ້ອມດ້ວຍອູ່ສານ ປະດັບດອກໄມ້ ແລ້ວ ໂຊເຣັນ ກໍວາງຂອງຂວັນລ້ຳຄ່າຂອງມັນລົງ ໃສ່ຕຽງດອກໄມ້. ສຽງກອງລ້ວແຮງຂຶ້ນຢູ່ກາງທົ່ງ: ທຸງ ແລະ ພ່ອນເຂົ້າມັດທຳອິດເຄື່ອນທີ່ໄປຍັງປີກຂວາ.

ບູຮຸນ ຮ້ອງສັ່ງວ່າ:

-ນັກກ່ຽວ, ນັກມັດ... ປະຈຳທີ!

ພວກເດັກນ້ອຍແລ່ນເຂົ້າປະຈຳບ່ອນໃຜມັນຕະຫລອດທັງສີ່ດ້ານ ຂອງໄຮ່ເຂົ້າ. ຊິເນັນກ ຍ່ຽຍຕົນຂຶ້ນຢຽບຮ່ວງເຫລັກ ເປົ່າສັນຍານ "ລ້ຽມ"! ບໍ່ທັນຫມົດສຽງສັນຍານ, ນັກກ່ຽວເຂົ້າທັງ ໝາ ຄົນກໍ

ປົ່ນລ້ວງຄ້ວາງອອກສູ່ໄຮ່ເຂົ້າ. ຮວງເຂົ້າກອງລຽນທ້ຽງສອງຟາກ ແລະ ແປ່ເປັນທ່ຽງກ້ວາງ ເພື່ອໃຫ້ຈັກຟາດຕິດຕາມມາຢ່ຽງສະດວກ.

ຂ້າພະເຈົ້າແນມເບິ່ງໂມງຢູ່ແຂນ: ຫ ນາທີຜ່ານໄປພວກນັກກ່ຽວກ້ຍິກກ່ຽວຂຶ້ນ ແລະ ພວກມັດກ້ມັດແລ້ວຮຽບຮ້ອຍຄືກັນ ທ້ຽງຫອບມັນໄປກອງໄວ້ທ່ຽງຂ້ຽງດຽວກັນ.

ເວລາສຳຄັນຈຶ່ງຈ່ຽງກ່ວາຫມູ່ຂອງການອອກແຮ່ງ ງານມາເຖິງແລ້ວ, ອານໂຕນ, ວິເຕຍ ມ້າໂຕພ້ອມງາມແຂ່ງແຮ່ງຂອງພວກເຮົາກຽມຕົວພ້ອມຢູ່ແລ້ວ.

- ໄປ... ໄດ້!

ຈັກຟາດເຂົ້າເຄື່ອນເຂົ້າສູ່ເສັ້ນທ່ຽງທີ່ຖືກຖ່ຽງໄວ້ໃຫ້ແລ້ວນັ້ນໃນທັນທີ. ປະມານສອງສາມວິນາທີເທ່ົ່ານັ້ນ ມັນກໍສົ່ງສຽງດັ້ງຫ້ຽງຢູ່ກ່ຽງປ່າເຂົ້າໂອ໊ດ, ອ້ຽວຮ່ຽງຊຸກແຊກໄປມາຕາມກອງເຂົ້າ. ບູຮູນ ຕິດຕາມຟັ້ງສຽງຂອງມັນຢ່ຽງເປັນຫ່ວງ ເພາະໄລຍະສອງສາມມ້ືກ່ອນນ້ີ ເຂົາກັບ ແຊເຣ ໄດ້ພາກັນສ້ອມແປງ ມ້ຽງແລ້ວມ້ຽງອ້ືກ, ເຮັດວຽກຢູ່ເທ່ົ່ງລິດຟາດເຂົ້າພໍແຮ່ງແລ້ວທຳການທົດລອງຢູ່ໃນທ່ົ່ງສອງຄ້ັ້ງ. ຖ້າຫາກວ່າມ້າທ່ົ່ລາກແກ່ມັນນ້ັນບ່ໍຍອມແລ່ນຊຳ, ເຂົາຕ້ອງໄດ້ຮ້ອງໄລ່ມັນ ແລະ ຖ້າຫາກວ່າຈັກຟາດໂຕໃດໂຕຫນ່ຶ້ງຢຸດຊະງັກລ້ົ ແລ້ວກໍຄ້ົງເກີດເລ່ືອງອັບອາຍຂ້ຽຫນ້າເປັນແມ່.

ແຕ່ໃບຫນ້າຂອງ ບູຮູນ ແຈ່ມໃສຂ້ຶ້ນຊັກໄຮ. ຈັກຟາດເຂ້ົາເຮັດວຽກຂອງມັນດ້ວຍຈ້ັງຫວະສະຫ່ຳສະເຫ່ມ້ີຕາມແບບເຄ່ືອງກົນຈັກ, ມ້າເອງກໍແລ່ນຊຳຢ່ຽງສະບ່ຽຍບິນຫນ້າດິນດ້ວຍຝ້ີຕີນສະເຫ່ມ້ີ ຮອດ

ບ່ອນໂຄ້ງກໍຍັງບໍ່ຍ່ອນຄວາມໄວ, ອັດສະວິນເທິງຫລັງນັ່ງບໍ່ເຫນັງ ຕີງ. ຜ່ານໄປແລ້ວຮອບທີຫນຶ່ງ, ສອງຮອບ, ຮອດຮອບທີສາມ ຈັກຟາດເຂົ້າກາຍຫນ້າພວກເຮົາໄປແລ້ວຢ່າງອົງອາດສະຫງ່າງາມ ແລ້ວ ອານໂຕນ ຈຶ່ງຮ້ອງລາຍງານ ບູຮຸນ ນ້ຳສຽງຂຶງຂັງວ່າ:

-ສະຫາຍນາຍກອງ, ທຸກຢ່າງຮຽບຮ້ອຍດີ!

ບູຮຸນ ຫັນກັບໄປຫາແກວເດັກນ້ອຍ ແລ້ວຍົກກ່ຽວໃນມືຂຶ້ນ:

-ລະວັງ! ກຽມພ້ອມ!

ພວກເດັກນ້ອຍເລື່ອນມືໄປຕາມຮ່າງຮຽວຍາວຂອງພວກເຂົາ ແຕ່ໃນເວລາດຽວກັນຮ່າງຄີງຂອງພວກເຂົາກໍໂຍ້ວໄປທາງຫນ້າດ້ວຍ ກຳລັງແຮງຊະນິດທີ່ບໍ່ມີກ້ານຈຶ້ນທາງໃດສາມາດສະສົມໄວ້ໄດ້.

-ລົງໄປ... ທີ່ງເຂົ້າ... ໄປ!

ບູຮຸນ ເອົາມືຖືກ່ຽວລົງຕ່ຳ, ເດັກນ້ອຍກວ່າ ສ50 ຄົນ ແລ່ນ ບຸກລົງທີ່ງນາ, ຫລຽວເບິ່ງແຂ່ງຂາຊ່ວງແຂນຂອງພວກເຂົາສອດ ກ່ຽວປົນເຂົ້າກັບແກວຮວງເຂົ້າເປັນອຸ້ນໆ ສຽງຫົວສຽງຮ້ອງໃສ່ກັນ, ຊຸກກັນກ້ຳອຸ້ມລຸ້ມໆປານຫນ່ວຍຫມາກບານ, ພວກເຂົາມັດເອົາພ່ອນ ເຂົ້າ ແລ້ວແລ່ນຫຸ້ມນຳຫລັງຈັກຟາດ, ໂດດຸບຮວງເຂົ້າແຕ່ລະປຸ້ມ ບາດລະສາມ ບາດລະສີ່ຄົນພ້ອມກັນ:

-ເຮ້ຍ ນີ້ແມ່ນສຳລັບກອງທີ ໑໕ ເວີ້ຍ! ຢຸດ! ພຸ້ນແມ່ນສຳ ລັບກອງທີ ໙...

ພວກແຂກພາກັນຫົວທັ້ງເຊັດນ້ຳຕາ, ແລ້ວ ຄາລາບູດາ ເຊົ່ງ ກັບມາຢູ່ໃນກຸ່ມພວກເຮົາກໍຈ້ຳເບິ່ງນາງ ເບຣແຊນ ຢ່າງຮ້ອຍໆ ແລ້ວ ເວົ້າ:

-ເຈົ້າບັ້ນເວົ້າວ່າ... ກະເບິ່ງເອົາເທາະແມ້!

ເບຣແຊນ ຍິ້ມ:

-ເອີ ຂ້ອຍເຫັນແລ້ວລະ, ພວກເຂົາເຮັດວຽກເກັ່ງຫລາຍ ເຮັດຢ່າງມ່ວນຊື່ນນຳອີກ... ແຕ່ບັ້ນນີ້ມັນແມ່ນການອອກແຮງງານ ຈ໋ ໆ...

ຄາລາບູດາ ເບິ່ງສຽງອັນໃດອັນຫນຶ່ງອອກມາ ບໍ່ເປັນຄຳສັບຈະ ແຈ້ງໃສ່ເບຣແຊນ ແລ້ວຫັນໄປເບິ່ງສະຫາຍຜິວດ້ຳງດ້ວຍທ່າທີບໍ່ພໍ ໃຈທັງເວົ້າກັບລາວວ່າ:

-ເວົ້າກັບລາວແມ້!

ຢູເຣັບ ເອງກໍທັງຕື່ນເຕັ້ນ ທັງມີຄວາມສຸກໃຈ ລາວບີບມືຂ້າພະ ເຈົ້າ ແລະ ເລີ່ມເວົ້າເພື່ອເອົາຊະນະນາງຊຸກຣິນສະກາຍຢາ:

-ເວົ້າແທ້ໆເດີ... ພວກເຮົາຄິດພິຈາລະນາເບິ່ງ! ສຳລັບຂ້ອຍ ແລ້ວ... ສິ່ງນີ້ປະທັບໃຈຂ້ອຍຫລາຍ ຂ້ອຍບໍ່ຮູ້ວ່າເປັນຫຍັງ. ແນ່ນອນວ່າມັນແມ່ນວັນບຸນ... ມັນກະບໍ່ຄ້ວນເຮັດວຽກທຳມະດາ ແລ້ວ... ແຕ່ຄືພວກເຈົ້າເຫັນບໍ່ນ໋ ມັນແມ່ນຄວາມລຶກລັບອັນຫນຶ່ງ ຂອງການອອກແຮງງານໃດ໋, ພວກເຈົ້າເຂົ້າໃຈບໍ່...!

ບຸລຸດຜິວ ດ້ຳງຈ້ຳແນມເບິ່ງ ຢູເຣັບ ຢ່າງເອົາໃຈໃສ່:

- ຄວາມລຶກລັບຂອງການອອກແຮງງານຊັ້ນຫວະ? ເປັນ ຫຍັງຈຶ່ງແມ່ນອັນນີ້? ຕາມຄວາມເຫັນຂອງຂ້ອຍ ຂ້ອຍລະວ່າແນວ ນີ້: ພວກເດັກນ້ອຍມີຄວາມສຸກສະບາຍດີ, ຮູ້ຈັກຈັດຕັ້ງ ແລະ ຮູ້ ຈັກເຮັດວຽກ. ສຳລັບລະຍະເລີ່ມຕົ້ນ ກໍ່ວ່າພຽງພໍແລ້ວ, ເຈົ້າຄິດ ວ່າແນວໃດ ສະຫາຍ ເບຣແຊນ?

ເບຣແຊນ ບໍ່ທັນມີເວລາຄິດນຳຄຳກາມຊ້ຳ, ຊິເບັນກີ ກໍຂ້ຳ ມາຢຸດຢູ່ຕໍ່ຫນ້າພວກເຮົາ ແລະ ແຈ້ງການວ່າ:

-ບູຮຸນ ໃຫ້ມາບອກວ່າ... ໃຫ້ທຸກຄົນໄປກອງເພື້ອງ... ຫມົດ ທຸກຄົນ... ໄປເຕົ້າໂຮມກັນຢູ່ກອງເພື້ອງ!

ຢູ່ທີ່ກອງເພື້ອງພາຍໃຕ້ພົ້ນທຸງປືອສະບັດ ພວກເຮົາພາກັນຮ້ອງ ເພງ "ສາກົນກຳມາຊີບ". ຕໍ່ມາຈ່ຳມີການກ່າວຄຳປາໄສ ແລະ ຜູ້ ທີ່ກ່າວຄຳປາໄສກໍລ້ວນແຕ່ແມ່ນຜູ້ຄົນທີ່ມີຈິດໃຈເອື້ອອາລີ, ດີ, ແມ່ນຄົນຂອງຊາວຜູ້ອອກແຮງງານ, ເປັນຜູ້ຮູ້ສຶກອ່ອນຊ້ອນນຳບຸນ ນຳເດັກນ້ອຍ, ອ່ອນຊ້ອນນຳທ້ອງຟ້າປອດໂປ່ງເຫນືອຫົວ ແລະ ສຽງອ່ອນຫວານແຫລມແຈດເປັນບາງເວລາຂອງແມ່ຈົ່ນາຍໃນ ທ້ອງທົ່ງນາ.

ຂ້າກັບ, ພວກເຮົາຮ່ວມພາເຂົ້າແລງກັນຢ່າງບໍ່ມີການແບ່ງໂຕະ ແບ່ງກັບແກວ, ແບ່ງອາຍຸ ໄວຂອງຜູ້ມາຮ່ວມ, ກະທັ້ງຮອດສະ ຫາຍ ນາງ ໂຊຢາ ກໍຍັງຫົວຍິ້ມແຍ້ມ ແລະ ເວົ້າຍອກໄຍເບັນ.

ງານບຸນຂອງພວກເຮົາດຳເນີນໄປດົນເຕີບ, ມີການຄົບງັນ ຫລາຍແນວເຊັ່ນຫລິ້ນເສືອໄລ່ແມວ, ຜ້າມັດຕາ. ພວກເດັກນ້ອຍ ເອົາຜ້າມັດຕາ ຄາລາບູຕາ, ເອົາຜ້າແພພົ້ນນ້ອຍໆຍັດໃສ່ມືໃຫ້ລາວ ແລ້ວບັງຄັບໃຫ້ລາວຕິດຕາມ... ບັກນ້ອຍຫນ່ຳຊ່ຳຫ້ອຍບັກກະແລ້ ດັ່ງກ້ຳໆ ແຕ່ດົນເຕີບລາວກໍຍັງບໍ່ສາມາດນຳພ້ຳ. ຕໍ່ມາກໍພາແຂກໄປ ອາບນ້ຳໃນຫນອງ ຈາກນັ້ນພວກເດັກນ້ອຍຈ່ຳສະແດງນິທານກ້ອມ ຢູ່ກາງເດີ່ນໃຫຍ່ເລື່ອງຫນ່ຳ. ນິທານເລີ່ມຕົ້ນດ້ວຍການເລົ່າຄຳກ້ອນ ພ້ອມໆກັນວ່າ:

- ພວກເຮົາຈະໃຫ້ທ່ານໄດ້ເຫັນຫຍັງໃນ ๕ ປີຂ້າງໜ້າ
ນະຄອນຫລວງແຫ່ງຫນຶ່ງພ້ອມດ້ວຍສະພາໂຊວຽດ.
ມີໂຮງຊ່າງອ້ອມຮອບໄປທົ່ວເມືອງ
ສວນຫມາກໄມ້ຍາຍລະດາດຕາມເນີນພູ
ແລະ ຖ້າບໍ່ແມ່ນຄວາມເພີ້ຝັນເກີນໄປ
ພວກເຮົາກໍຢາກມີເຄື່ອງຕ່າງໂອນຊາແລ່ນໄຟຟ້າ.

ການເວົ້າຄຳກອນສຸດລົງດ້ວຍຄຳອວຍພອນວ່າ:

ຊາວນິຄົມຈະເຂັ້ມແຂງແຮງດັ່ງຊ້າງ
ບໍ່ກະດ້າງແຂງກະແດ້ງຄືໄມ້ແຫ້ງ...

ຫລັງຈາກການຍິງປັ້ງໄຟດອກຢູ່ແຄມຫນອງແລ້ວ ພວກເຮົາກໍເດີນທາງໄປສົ່ງແຂກຮອດ ຣີຊອບ ຜູ້ທີ່ຂີ່ໂອໂຕມາ ກັບເມືອກ່ອນ, ເມື່ອເວົ້າລາຂ້າພະເຈົ້ານັ້ນ, ຫົວຫນ້າໃຫຍ່ຜົມຄ້ຽງເວົ້າວ່າ:

- ເອົາລະ, ດີແລ້ວ, ສະຫາຍ ນາກາເຮັນໂກ ສືບຕໍ່ຈົ່ງຊື່ເນ!
- ເຈົ້າ, ຂ້ອຍຈະສືບຕໍ່ຈົ່ງຊື່ລະ! - ຂ້າພະເຈົ້າຕອບ.

ບົດທີ ๑๘

ຊີວິດດຳເນີນຕໍ່ໄປ

ອີກຄັ້ງຫນຶ່ງຈັນເວລາຜ່ານໄປ, ມັນເຕັມໄປດ້ວຍຄວາມຫນັກຫນ່ວງແຕ່ມ່ວນຊື່ນເບີກບານ, ມີວັນອອກແຮງງານ, ເຕັມໄປດ້ວຍຄວາມວິຕົກກັງວົນ, ຄວາມສຳເລັດເລັກນ້ອຍໆ ແລະ ຄວາມປະລາໄຊຍ໌ບ່ອຍ, ເບື້ອງຫລັງສິ່ງເຫລົ່ານີ້ ພວກເຮົາເອງກໍຮອດບໍ່ສັ່ງເກດເຫັນບາດກ້າວອັນຍິ່ງໃຫຍ່ ແລະ ການຄົ້ນພົບອັນມະຫາສານ

ທີ່ໄດ້ກຳນົດຊີວິດຂອງພວກເຮົາໄວ້ລ່ວງໜ້າແລ້ວ. ຄືກັນກັບແຕ່ຄາວກ່ອນນັ້ນແລ້ວ, ແມ່ນໃນຊຸມວັນເວລາເຮັດວຽກ ແລະ ໂດຍສະເພາະໃນເວລາຄ້ອຍຄ່ຳອ່າວຍຶດເຍື້ອສະຫງົບງຽບນັ້ນແລ້ວທີ່ຄວາມນຶກຄິດຈັດຕັ້ວກັນຢ່າງເປັນລະບຽບ, ມີການຕີລາຄາຊັ່ງຊາເນື້ອຄິດເຮັ່ງຮີບໃນວັນໜ້ານ ແລະ ຈິດໃຈກໍອາວອນເກົ່ງຂອບເຂດອະນາຄິດທີ່ຫອມຫວານຊະນິດຫາຈັບດົມບໍ່ໄດ້.

ແຕ່ອະນາຄິດກໍກ້າວມາເຖິງຈົນໄດ້ ແລະ ມັນກໍໄດ້ເຜີຍຕົວອອກມາວ່າມັນບໍ່ໄດ້ເປາະຜ່ອຍປານໃດ ແລະ ເຮົາກໍສາມາດຈັດການກັບມັນແບບຮຸນແຮງໂດຍບໍ່ຕ້ອງມີພິທີການໃດໆ ໂດຍບໍ່ຕ້ອງເສຍເວລາອາວອນນຳໂອກາດທີ່ຫລຸດລອຍໄປແລ້ວຫລາຍພໍປານໃດ, ພວກເຮົາໄດ້ຮຽນຮູ້ສິ່ງໃດສິ່ງໜຶ່ງຕື່ມ ແລ້ວພວກເຮົາກໍຮຽນຮູ້ຊີວິດ, ມີບົດຮຽນຫລາຍຂຶ້ນ ທັ້ງເພື່ອຈະບໍ່ເຮັດຜິດຕື່ມອີກ ແລະ ເພື່ອດຳເນີນຊີວິດຂອງພວກເຮົາຕໍ່ໄປ.

ຄືກັນກັບແຕ່ຄາວກ່ອນນັ້ນແລ້ວ ມີສາຍຕາຮ້າຍຂາດຫລາຍຄູ່ສອດແນມເບິ່ງພວກເຮົາຕະຫລອດເວລາ, ພວກເຮົາຖືກກວດກາ ແລະ ຖືກສົ່ງຂ່າວວ່າ ພວກເຮົາບໍ່ຄວນເຮັດຜິດ, ວ່າພວກເຮົາຄວນດຳລົງຊີວິດຢູ່ຕາມກົດລະບຽບ, ວ່າພວກເຮົາບໍ່ຮູ້ຈັກທົດສະດີ, ວ່າພວກເຮົາບໍ່ຄວນເຮັດ... ເວົ້າລວມ... ພວກເຮົາ ຖືກແຫ້ມມາຈາກທຸກດ້ານ.

ບໍ່ດົນຢູ່ນິຄົມກໍມີການຜະລິດແບບອຸດສາຫະກຳຢ່າງແທ້ຈິງ. ດ້ວຍວິທີການຕ່າງໆ ທັ້ງແບບຖືກຕ້ອງ ແລະ ບໍ່ຖືກຕ້ອງ ພວກເຮົາຕັ້ງໂຮງຈ່ຳໄມ້ປະກອບເຄື່ອງຂຶ້ນແຫ່ງໜຶ່ງ ໃນນັ້ນມີທັ້ງຈັກກົນ

ໄມ້, ຈັກເລື່ອຍ. ພວກເຮົາແຕ້ມຮູບອອກແບບ ແລະ ສ້າງຮອດ ຈັກເຂົ້າກອນໄລເອົາເອງ. ພວກເຮົາກ້າວເຂົ້າຮອດຂັ້ນມືຕະຫລາດ ສົ່ງອອກ, ໄດ້ຮັບເງິນລ່ວງໜ້າ ແລະ ກ້າວເຖິງຂັ້ນຂາດສະຕິສຸດ ຂີດ ຄືການມີບັນຊີຝາກເງິນຢູ່ທະນາຄານ.

ພວກເຮົາກ້າວເຖິງການຜະລິດຮັ່ງເຜົ້ງ. ປາກົດວ່ອງກັບສັບສົນ ສົມຄວນ, ຮຽກຮ້ອງໃຫ້ມີຄວາມຊຳນິຊຳນານຄັກແນ່ແທ້ໆ ໃນທີ່ ສຸດພວກເຮົາກໍມີຄວາມສາມາດວ່ອງໄວ ແລະ ສາມາດຜະລິດຮັ່ງ ເຜົ້ງອອກໄດ້ເປັນຮ້ອຍໆຮັ່ງ. ມີຮອດບ່ອນເຮັດໂຕະຕັ່ງ, ກະໂລ່ງ ໃສ່ອາວຸດ ແລະ ອື່ນໆອີກຫລາຍແນວ. ພວກເຮົາໄຂໂຮງງານ ຫລອມເຫລັກ ແຕ່ແທນທີ່ຊິໄດ້ຮັບຜົນສຳເລັດໃນດ້ານນີ້ ແຕ່ພວກ ເຮົາຊ້ຳປະສົບຄວາມຫາຍະນະຊ້ຳ.

ຫລາຍເດືອນຜ່ານໄປແບບນີ້, ພວກເຮົາຕໍ່ສູ້, ແລ່ນຕຳຊ້າຍ ຕຳຂວາ, ທ້າປັບປຸງໂຕເອງ ທ້າເມື່ອຍລ້າທໍ້ຖອຍ, ບາງເວລາເຖິງ ກັບກັດແຂ້ວຮ້ອງໂກ໊ກໆ, ບາງຄັ້ງກໍປະເຊີນກັບໄລພິດ ແລະ ຫລາຍ ເທື່ອຮອດອ້າປາກງັບຂາສັ້ງທຸກຄົນທີ່ຂວາງທາງ, ເຖິງຢ່າງນັ້ນພວກ ເຮົາກໍຍັງດຳລົງຊີວິດຢູ່ຕໍ່ມາ ແລະ ນັບມື້ນັບຮັ່ງມີຂຶ້ນນຳ.

ພວກເຮົາມີຫມູ່ເພື່ອນຫລາຍຂຶ້ນນຳຄົນ. ນອກຈາກຊຸກຣົນ ສະກາຍຢາ ກັບຢູເຣັບ ແລ້ວຍັງມີ ຜູ້ຄົນໃນກະຊວງສຶກສາປະຊາຊົນ ນຳ, ເພິ່ນພວກນີ້ທ້າງສະຫລາດຢ່າງແທ້ຈິງ, ມີຈິດສຳນຶກຕໍ່ຄວາມຍຸ ຕິທຳແບບທຳມະຊາດ ແລະ ຕ້ອງການຄິດ ພິຈາລະນາຢ່າງຄັກແນ່ ກ່ຽວກັບລາຍລະອຽດຕ່າງໆຢູ່ໃນກິດຈະກຳອັນສັບສົນຂອງພວກເຮົາ. ຢູ່ໃນວົງສັງຄົມທົ່ວໄປ ພວກເຮົາກໍມີຫມູ່ເພື່ອນຫລາຍຄົນເຊັ່ນ: ຢູ່

ໃນອົງການຈັດຕັ້ງຂອງພັກ ແລະ ແຂວງ, ແມ່ນແຕ່ຢູ່ໃນວົງການ ຫນັງສືພິມ ແລະກໍມະກອນ ພວກເຮົາກໍມີມິດສະຫາຍຄັກັນ. ແມ່ ຍ້ອນພວກເພິ່ນນີ້ແລ້ວ, ອາກາດຫັນໃຈອັນຈໍາເປັນເພື່ອຊຸກຍູ້ຄວາມ ພະຍາຍາມຂອງພວກເຮົາຈຶ່ງບໍ່ຂາດເຂີນໄປ.

ວຽກງານທາງດ້ານວັດທະນະທໍາກໍດໍາເນີນໄປຢ່າງເລິກເຊິ່ງຄື ກັນ. ໂຮງຮຽນຂະຫຍາຍອອກເປັນຮອດ ຝ ຫ້ອງ. ໃນເວລານັ້ນ ວາດຊຶລີ ນິໂກລາຍວິດແປກຊະກີ ບຸລຸດຜູ້ຫນ້າສົນໃຈຄົນຫນຶ່ງຈຶ່ງ ປາກົດຕົວຂຶ້ນຢູ່ໃນນິຄົມຂອງພວກເຮົາ. ເຂົາຜູ້ຊ້ັຽວ່າແມ່ນ ອັດສະ ວິນປະເພດ ດອນກີຊົດ ຄົນຫນຶ່ງແທ້ໆ, ເຂົາສະຫງ່າງາມດ້ວຍ ການຮອບຮູ້ວິທະຍາການ, ວັນນະຄະດີ ແລະ ສິລະປະທີ່ສະສົມມາ ໄວ້ຫລາຍສະຕະວັດ. ຮ່າງຄີງຈ່ອຍຜອມກໍ່ໂກະຂອງເຂົາພໍປານວ່າ ຖືກປັ້ນຫລໍ່ມາຈາກ ເຊກວັນເຕັສ ໂດຍກົງ ແລະ ສິ່ງດົ່ງກ່າວກໍຊໍ້າ ຊ່ອຍໃຫ້ເຂົາສາມາດ "ຄົນຫນ່ຽງ" ແລະ ຈັດຕັ້ງວຽກງານຫນ້າທີ່ ຕ່າງໆຢູ່ໃນສະໂມສອນເປັນຢ່າງດີ. ເຂົາເປັນຜູ້ມີຄວາມຄິດປະດິດ ສ້າງແປກແຫວກແນວແທ້ໆ ຂ້າພະເຈົ້າເອງບໍ່ກ້າຮັບປະກັນດອກວ່າ ຕາມຄວາມນຶກຄິດຂອງລາວນັ້ນ ໂລກນີ້ບໍ່ໄດ້ປະກອບດ້ວຍຕັ້ງແຕ່ຟູດ ຜິຮ້າຍ ແລະ ດີ ແຕ່ຂ້າພະເຈົ້າກໍຂໍແນະນໍາໃຫ້ທຸກໆຄົນມອບວຽກ ງານສະໂມສອນໃຫ້ກັບຄົນປະເພດ ດອນກີຊົດ ນີ້ເທົ່ານັ້ນ. ພວກ ເຂົາຮູ້ຈັກແນມຫາຊີວິດໃນອະນາຄົດຢູ່ໃນແຕ່ລະຕ່ອມເຫລັກ; ອາ ໄສແຜ່ນໄມ້ອັດ ແລະ ສີສັນສ້າງສາກເມືອງສະຫວັນ; ຢູ່ກັບພວກ ເຂົາ, ພວກເດັກນ້ອຍຮູ້ຈັກເຮັດຫນັງສືພິມຕິດຝາຍາວຮອດ ๔0 ແມັດ, ອາໄສຕົວຢ່າງເຮືອບິນເຮັດດ້ວຍເຈ້ຍ ພວກເຂົາຮຽນຮູ້ວ່າ

ຍິນຊະນິດໃດແມ່ນຍິນກົ້ມລະເບີດ ແລະ ຊະນິດໃດແມ່ນທຳມະດາ ແລະ ຮູ້ຈັກຈາລະນາ ປົກປ້ອງຄວາມຍິ່ງໃຫຍ່ຂອງໂລຫະວ່າເຫນືອ ໄມ້ຢ່າງເດັດຂາດແບບເອົາເປັນເອົາຕາຍ. ພວກອັດສະວິນ ດອນກີ ຊິດ ພວກບ້ສ້າງປັດໄຈພົ້ນການເຊັ່ນ ຄວາມຟົດຟົ້ນຄວາມເມົາມົວຕໍ່ ວຽກງານໃຫ້ເກີດມີຢູ່ໃນສະໂມສອນ, ພັດວິຍຸແຍ່ໃຫ້ແຈວປະເສີດ ລຸກວ່ຶ້ນ ແລະ ກະຕຸ້ນໃຫ້ນັກປະດິດສ້າງທັ່ງຫລາຍເຕ່ືອນເຫນັ່ງ ບ່ໍເຊົາ. ຢູ່ທ່ີ້ນ້ຳພະເຈ້ົາບ່ໍຂໍ່ເວ້ົາຮອດພິນພິຊິດທັ່ງຫມົດຂອງ ແປກ ຊະກີ ດອກ ຂ້ຳພະເຈ້ົາຈະເວ້ົາພຽງສັ້ນໆວ່າ ເຂົາໄດ້ເຮັດໃຫ້ເວລາ ບ່ຳຍ ຄ້ອຍຄ່ຳ ຂອງພວກເຮົາປ່ຽນຮູບໂສມໄປຫມົດ, ເຮັດໃຫ້ນ້ຳມັນອຸ ດົມໄປດ້ວຍຂ້ົ້ກບ, ຂ້ົ້ຝອຍໂລຫະ, ແກ້ວກາວ, ໂຄມຕະກຽງ ເຫລ້ົ້າ, ສຽງແຈ້ດແຫລມຂອງເລ່ືອຍ, ສຽງດັງວ່ຶ້ນຂອງຫມາກປ່ືນ, ສຽງອິນອໍ້ຂອງກຸ່ມຮ້ອງເພງ ແລະ ພວກແອບລະຄອນກ໊ົກ.

ພວກເຮົາເລ່ີ້ມຈ່ຳຍເງິນຈ ຳນວນຫລວງຫລາຍເພ່ືອຊຸ້້ປ່ມຄ້ັນ. ໃນໃຈກາງຫ້ອງສະໂມສອນ ບ່ໍ່ມ້ີຕູ້ພ້ຽງບ່ໍ່ມ້ີແລ້ວ, ທ້ັງບ່ອນນ່ັ່ງ ສ ຳ ລັບຄົນອ່ານໃນຫ້ອງອ່ານຫນ້ັງສ ືກ ບ່ໍ່ພຽງພ ໍ ຄ້ັນ.

ຍ້ັງມ ີ ແນ ວ ອ ່ ື ນ ອ ີ ກ!

ທ ຳ ອ ິ ດ ພ ວ ກ ເ ຮ ົ າ ມ ີ ວ ິ ງ ດ ິ ນ ຕ ! ນ ິ ຄ ົ ມ ຂ ອ ງ ພ ວ ກ ເ ຮ ົ າ ອ າ ດ ແ ມ ່ ນ ບ ່ ອ ນ ທ ຳ ອ ິ ດ ໃ ນ ອ ຸ ກ ຣ າ ອ ິ ນ ຫ ລ ື ໃ ນ ທ ິ ່ ວ ສ ະ ຫ ະ ພ າ ບ ກ ໍ ່ ບ ່ ຮ ູ ້ ທ ້ ່ ສ ້ າ ງ ສ ິ ່ ງ ປ ະ ເ ສ ີ ດ ເ ລ ີ ດ ລ ້ ຳ ອ ັ ນ ນ ້ ີ ໃ ຫ ້ ແ ກ ່ ຕ ົ ນ ເ ອ ງ. ສ ະ ຫ າ ຍ ນ າ ງ ໂ ຊ ຢ າ ຫ ມ ົ ດ ຄ ວ າ ມ ສ ິ ງ ໄ ສ ຢ ອ ດ ສ ຸ ດ ທ ້ າ ຍ ຂ ອ ງ ນ າ ງ ທ ິ ່ ວ ່ າ ຂ ້ ຳ ພ ະ ເ ຈ ້ ົ າ ເ ປ ັ ນ ນ າ ຍ ທ ະ ຫ ານ ເ ກ ົ ່ າ ແ ລ ້ ວ, ແ ຕ ່ ພ ວ ກ ເ ດ ັ ກ ນ ້ ອ ຍ ຊ ້ ຳ ພ າ ກ ັ ນ ດ ີ ໃ ຈ ໃ ນ ເ ລ ື ່ ອ ງ ອ ັ ນ ນ ້ ີ. ເ ວ ້ ົ າ ແ ທ ້ ແ ລ ້ ວ, ກ ານ ສ ້ າ ງ ຕ ັ ້ ງ ວ ິ ງ ດ ິ ນ ຕ ີ ຢ ູ ່ ໃ ນ ນ ິ ຄ ົ ມ ເ ປ ັ ນ ຂ ້ ໍ ພ ິ ສ ຸ ດ ອ ັ ນ ຫ ນ ັ ກ

ແຫ້ນກ່ອກັບຄວາມຫນາວເຫັ້ນຂອງເສັ້ນປະສາດ ພວກເຮົາ, ເພາະວ່າຕະຫລອດເວລາ ๔ ເດືອນເຕັມໆ ບໍ່ມີແຈໃດທີ່ຈະບໍ່ມີເດັກ ນ້ອຍນິ້ມກົ້ມຫົວຕົວໂກ່ງຢູ່ເທິງຕັ່ງອີ, ເທິງໂຕະ; ເຄື່ອງດົນສຽງ ຕ່ຳສຽງສູງພະລິດສຽງດັງສະນັ້ນກ້ອງພໍປານແກ້ວຫູຊິແຕກ, ນອກນີ້ ຍັງມີເຄື່ອງອື່ນໆເຊິ່ງລ້ວນແຕ່ພະລິດສຽງເປັນຕາເຈັບຫົວທັງນັ້ນ. ແຕ່ພໍຮອດວັນທີ ๑ ພຶດສະພາ ພວກເຮົາກໍເດີນສວນສະຫນາມເຂົ້າ ໃນເມືອງດ້ວຍວິດີໂອຂອງພວກເຮົາເອງ. ຈັ່ງແມ່ນມີຄວາມຕື່ນເຕັ້ນ ສະອົ້ນສະອ່ອນນຳ, ມີນ້ຳຕາແຫ່ງຄວາມປິ້ມປິ້ຕິ ຄວາມອ່ອນຊ່ອນ ຊຶມຊື່ນ... ທັງຜູ້ຄົນທີ່ເປັນປັນຍາຊົນ, ແມ່ເກົ້າແມ່ນາຍ, ພວກນັກ ຫນັງສືພິມ ແລະ ກະທັ້ງພວກເດັກນ້ອຍພະເນຈອນ ໃນທ້ອງກະ ຫນົນເມືອງ ຄາຄົບ.

ຄວາມສຳເລັດອັນທີສອງຂອງພວກເຮົາແມ່ນຮູບເງົາ. ສົງຄ ກ່າວອະນຸມັດໃຫ້ພວກເຮົາມາຂ້ອງກ່ຽວກັບວຽກງານຂອງພະໃນວິ ຫານທີ່ຕັ້ງຢູ່ກາງເດີ່ນຂອງພວກເຮົາ. ຄະນະກຳມະການວິຫານທັງ ຮ້ອງໄຫ້ຂໍ້ມຂູ່ພວກເຮົາພໍແຮງ ແຕ່ພວກເຮົາເລີ່ມສາຍຮູບເງົາຂອງ ພວກເຮົາຫລັງຈາກພະຕີກອງແລງແລ້ວເທົ່ານັ້ນ. ຜ່ານມາສຽງຕີລະ ຄັ້ງແບບນີ້ບໍ່ເຄີຍຮຽກຄົນມາເຕົ້າໂຮມໄວວາ ແລະ ຫລວງຫລາຍ ປານນີ້ຈັກເທື່ອ. ອັນນີ້ຫຍັງ, ຜູ້ຕີລະຄັ້ງບໍ່ທັນລົງຈາກຫໍລະຄັ້ງຊ້ຳ, ທີ່ປະຕູສະໂມສອນຂອງພວກເຮົາໂລດມີແກວຄົນປະມານ ๘๐๐-๙๐๐ ຄົນມາຢືນລໍຖ້າຢູ່ແລ້ວ. ໃນຂະນະທີ່ຄຸນພໍ່ພວມສຸບເສືອຄຸມ ດ້ານນອກຂອງເພິ່ນ, ຊ່າງສາຍຮູບເງົາກໍປ່ອຍມ້ວນຟິມເຂົ້າໃນເຄື່ອງ ສາຍ, ພໍແຕ່ຄຸນພໍ່ເລີ່ມສູດມົນ "ຂໍລາຊະອານາຈັກຈົ່ງຈະເລີນ..."

ຊ່ວງສາຍຮູບເງົາກໍເຮັດວຽກເຂົ້າ. ມັນແມ່ນການສ້າງຄວາມໃກ້ຊິດ ສະຫນິດສະຫນົມຢ່າງສົມບູນທີ່ສຸດ!

ແຕ່ສໍາລັບ ນາງ ເວຣາ ເບເຣຊອບສະກາຢາ ແລ້ວຄວາມໃກ້ຊິດອັນນີ້ສຸດລົ້ງຢ່າງຫນ້າເສົ້າໃຈ. ເວຣາ ເປັນນັກຮຽນຍິງຄົນຫນຶ່ງ ຈໍ່ຕ້ອງໃຊ້ຕົ້ນທຶນໃນການກໍ່ສ້າງເອົານາງສູງກວ່າຫມູ່ ສໍາລັບວິສະຫະກິດຂອງຂ້າພະເຈົ້າ, ເວົ້າໄດ້ວ່າ ມັນລົ່ມກາຍສົ່ງທີ່ຄາດຄິດໄວ້ ທຸກຢ່າງອີກ.

ໃນລະຍະຕົ້ນຫລັງຈາກ "ພະຍາດຫມາກໄຂ່ຫລັງ", ເວຣາ ກໍ ສະຫງົບສະຫງຽມຂຶ້ນ ແລະ ບຸກບືນເຮັດວຽກງານຫລາຍຂຶ້ນ. ແຕ່ ພໍພວງແກ້ມສີແດງຮອງງຶ້ນ, ພໍແຕ່ມີເນື້ອຫນັງເປັນຕາເຍງແດ່ ເວຣາ ກໍເລີ່ມສະແດງຕົນແຈກຫວ່ານສະເຫນ, ຍ່າງຍຶກບ່າໄຫລ່, ສາຍຕາລອກແລກ ນາສຽງ ແລະ ກລ່ຽວວ່າຈາບ້ຽບອກການເຊີນ ຊວນ. ຫລາຍຄັ້ງຫລາຍຄາວ ຂ້າພະເຈົ້າໄປຈວາດພົບມັນຢູ່ໃນແຈ ອ່າວມືດກັບຜູ້ບ່າວທີ່ເຫັນແຕ່ເງົາບໍ່ຈະແຈ້ງ. ຂ້າພະເຈົ້າແນມເຫັນ ປະກາຍຕາສີເງິນວາວວັບຂີ້ຫລັກຂອງນາງ, ນ້ໍາສຽງທີ່ເວົ້າກັບຂ້າພະ ເຈົ້າກໍເຕັມໄປດ້ວຍຄວາມຫລອກລວງຫນ້າຊັງ, ນາງແກ້ໂຕວ່າ:

- ຈັກແມ່ນຫຍັງເນາະ... ອານໂຕນ ເຊມືອໂນວ ຄົນເຮົາຊິ ເວົ້າຊິລົມກັນແດ່ກະບໍ່ໄດ້ຊັ້ນຫວະ?

ຢູ່ໃນວຽກງານການດັດສ້າງສຶກສາອົບຮົມນີ້ ບໍ່ມີຫຍັງຍາກໄປ ກວ່າການແກ້ໄຂບັນຫາຜູ້ສາວນ້ອຍທີ່ເຄີຍຜ່ານ "ບົດຮຽນ" ມາແລ້ວ. ສໍາລັບເດັກນ້ອຍຜູ້ຊາຍນັ້ນ ເຖິງແມ່ນວ່າມັນເຄີຍທ່ຽວຊະເລພະເນ ຈອນຕາມທ້ອງຖະຫນົນມາພໍແຮງແລ້ວກໍຕາມ, ເຄີຍສ່ຽງໄພສັບ

ສິນ ແລະ ຫນັກຫນ່ວງມາແລ້ວທໍ່ໃດກໍຕາມ, ເກີ່ງວ່າມັນຈະແຂງ ກະດ້າງຕໍ່ຕ້ານການໃຊ້ຫລັກວິທະຍາການສຶກສາກັບມັນກໍຕາມ ຂໍແຕ່ ວ່າໃຫ້ມັນມີສະຕິປັນຍາຈັກຫນ້ອຍຢູ່ໃນຕົວເທົ່ານັ້ນ, ແລ້ວຖ້າມັນ ໄດ້ມາຕົກຢູ່ໃນຫນ່ວຍຊີວິດໂຮມຫມູ່ທີ່ດີ ມັນກໍສາມາດກາຍເປັນຄົນ ດີໄດ້. ສາເຫດຂອງມັນກໍແມ່ນວ່າເດັກຊາຍຄົນນັ້ນມາຊ້າໄປ ຈັ່ງຊັ້ນ ເພິ່ນຈ່ຳສາມາດວັດແທກລະຍະແລ້ວຕັດລະຍະທີ່ມັນຢູ່ຫ່າງຈາກລະ ດັບທຳມະດາຖິ້ມໄປເສຍ. ແຕ່ສາວນ້ອຍຄົນ ຊ່ຳເລີ່ມມີການພົວພັນ ເພດນັບແຕ່ເລີ່ມເປັນສາວນັ້ນ ເປັນຄົນມີບາດແຜເລິກເຊິ່ງຢ່າງ ຫນ່ຳໃນຄົນບໍ່ວ່າທາງຮ່າງກາຍ ແລະ ຈິດໃຈ, ບາດແຜນັ້ນທ້າງຈັບ ປວດ ແລະ ສັບສົນຈົນບອກບໍ່ຖືກ. ມີແສງຕາແນມມາເບິ່ງນາງດ້ວຍ "ຄວາມເຂົ້າໃຈ", ບາງຄັ້ງກໍຕ່ຳຊ້າລາມົກ, ບາງຄັ້ງກໍຫມົ່ນປະຫມາດ ຫລືເຫັນອົກເຫັນໃຈ ແລະ ຫລັ່ງນ້ຳຕານຳ. ຢ່າງໃດກໍຕາມ ແສງ ຕາເຫລົ່ານັ້ນ ກໍລ້ວນແຕ່ຕູ່ໂທດຄືກັນ. ມັນບໍ່ອະນຸຍາດໃຫ້ສາວນ້ອຍ ຄົນຫນຶ່ງລືມຄວາມທຸກທໍລະມານຂອງຕົນ, ຍາມໃດກໍເຝົ້າຕອກຍ້ຳ ໃຫ້ນາງຮູ້ສຶກຕົວຢູ່ຕະຫລອດເວລາວ່າ ຕົນຕ່ຳຕ້ອຍກວ່າຫມູ. ແຕ່ ໃນຂະນະດຽວກັນ ການຂາດເຂີນບຸກຄະລະພາບຊ້ຳສອດຄ່ອງເຂົ້າ ແກັບເຂົ້າເກຍກັນດີກັບເດັກນ້ອຍປະເພດນີ້ ດ້ວຍຄວາມສຳນຶກອວດ ອ້ຳຕົວແບບປະກົມປະການຢ່າງຫນ້ຳ. ໃນສາຍຕາຂອງມັນພວກສາວ ນ້ອຍອື່ນໆເປັນຄືທ່ານນ້ອຍສີຂາວບໍລິສຸດ, ເປັນເດັກຍິງບໍ່ຮູ້ຫຍັງ ເມື່ອປຽບທຽບໃສ່ກັບນາງທີ່ເປັນ "ແມ່ຍິງ" ແລ້ວ, ເປັນຜູ້ຮູ້ຈັກໄດ້ ສຳຜັດກັບຄວາມລຶ້ລັບຢ່າງຫນ້ຳ ຊ່ຳຜູ້ອື່ນໆຍັງບໍ່ຮູ້ ທັງເປັນຜູ້ມີອຳ ນາດມີສະເຫນ່ແບບຫນ້ຳເຫນືອຈິດໃຈຜູ້ຊາຍເຊິ່ງນາງເອງຮູ້ຈັກສຳ

ແດງອອກໄດ້ໃນຍາມຕ້ອງການ. ທ່ານນາງຮູອຸໂມງທີ່ແສນຄົນໂຄ້ງ ສັບສົນແຫ່ງຄວາມທໍລະມານ ແລະ ຄວາມທະນົງຕົວເລັກໆນ້ອຍໆ ປະສົມກັບຄວາມຂາດເຂີນ ແລະ ຄວາມອຸດົມສົມບູນ, ທ່ານນາງລາ ຕິອາບນ້ຳຕາ ແລະ ອັນເວລາທີ່ໄດ້ເລາະທ່ຽວມາຢ່າງເພີດເພີນແນວ ນີ້ຄົງຕ້ອງເປັນຜູ້ມີໃສເຂັ້ມແຂງພໍສົມຄວນ ຈຶ່ງຈະສາມາດຂີດ ເສັ້ນທາງເດີນແລ້ວປະຕິບັດຕາມຢ່າງເຄັ່ງຄັດ, ປະເຊີນກັບບົດຮຽນ ແບບໃຫມ່, ຄວາມຊຶມເຄີຍອັນໃຫມ່, ຄວາມຄ່ອງແຄ່ວໃນຮູບ ໃຫມ່ ແລະ ຄວາມລະແວດລະວັງແບບໃຫມ່.

ເວຣາ ເບເຣຊອບສະກາຢາ ເປັນບຸກຄົນທີ່ມີໃສສັບສົນຄົນ ຫນຶ່ງສຳລັບຂ້າພະເຈົ້າ. ຫລັງຈາກໂຍກຍ້າຍມາຢູ່ ກູເຣຍແຊ ແລ້ວ ນາງໄດ້ສ້າງບັນຫາເຈັບປວດໃຫ້ຂ້າພະເຈົ້າຕື່ມ, ຂ້າພະເຈົ້າຄຶດສົງ ໃສໄວ້ແລ້ວວ່າ ໃນລະຍະຜ່ານມານັ້ນນາງຄົງໄດ້ສ້າງຂອດບັນຫາ ແລະ ຄວາມສັບສົນໃຫ້ແກ່ຊີວິດຕົນເອງຕື່ມຂຶ້ນແລ້ວ. ຈຳຕ້ອງໄດ້ ໂອ້ລົມສົນທະນາກັບນາງຢ່າງນຸ່ມນວນອ້ອມຄ້ອມ. ນາງຄຸງດ່ຽງ ໂມໂຫໄວ, ຂັດລັ່ງແບບຕ່າງໆ ທັງພະຍາຍາມຫລົບຫນ້າຂ້າພະເຈົ້າ ແລ້ວແລ່ນໄປລີ້ໄຫ້ຢູ່ໃນກອງເພື່ອງຕາມໃຈມັກຂອງນັ້ນ. ແຕ່ສິ່ງດັ່ງ ກ່າວບໍ່ສາມາດເກືອດຫ້າມນາງບໍ່ໃຫ້ສ້າງສາຍສຳພັນໃຫມ່ໆໄດ້. ການ ຕັດສາຍສຳພັນກັບຄູ່ຮັກປະເພດນີ້ບໍ່ມີບັນຫາເທົ່າໃດ ເພາະວ່າພວກ ຜູ້ບ່າວຂອງນາງຍ້ານໄດ້ຂຶ້ນປາກົດໂຕຢູ່ກາງສະພານາຍກອງ ເພື່ອ ຕອບຄຳຖາມຂອງ ລາປົດ ທີ່ຮ້ອງເຕືອນກ່ອນວ່າ:

-ລະວັງ... ຢືນກົງ ແລ້ວເລົ່າຄວາມຈິງອອກມາທຸກແນວ.

ໃນທີ່ສຸດ ເວຣາ ກໍເຂົ້າໃຈເອົາເອງວ່າ ພວກຜູ້ບ່າວນີ້ຄົມເອງ

ບໍ່ສອດຄ່ອງກັບເປົ້າຫມາຍຂອງນາງ ຈຶ່ງຫັນຫນ້າໄປຜະຈົນໄພໃນ
ເລື່ອງຄວາມຮັກຂອງນາງໃນສະຫນາມໃຫມ່ທີ່ບໍ່ເປັນພິດໄພ. ອ້າຍ
ບ່າວຊ່າງໂທລະເລກຄົນຫນຶ່ງຫນ້າຕາລ່າງໆມາແຕ່ ຣີຊອບ ນັກມາວິນ
ອຸນຢູ່ໃກ້ໆ ເວຣາ. ເຂົາຜູ້ນີ້ເປັນອ້າຍບ່າວນ້ອຍຫນ້າສືອ່ຳທ່າທາງ
ເຫງົ້າຫງອຍ ແຕ່ມີຄວາມເຊື່ອຫມັ້ນຢ່າງເລິກເຊິ່ງວ່າຍອຍສີເຫລືອງ
ແຂບເຄື່ອງແບບຂອງຫມໍນັ້ນເປັນຕົວແທນຍອດຍ້ຽມແຫ່ງອາຣະ
ຍະທຳບິນແຜ່ນທໍລະນີຂອງເຮົາ. ເວຣາ ເລີ່ມນັດພົບຫມໍຕາມພຸ່ມ
ໄມ້ນ້ອຍໆ, ພວກເດັກນ້ອຍຜູ້ຊາຍໄປພໍ້ພວກເຂົາແລ້ວມາຟ້ອງ ແຕ່
ພວກເຮົາເບື່ອທີ່ຈະແລ່ນຕິດຕາມ ເວຣາ ແລ້ວ. ລາປົດ ກໍບໍ່ສາມາດ
ເຮັດຫຍັງນອກຈາກສົ່ງດອກໍ່ຫມໍພໍເຮັດໄດ້ນັ້ນ ຄືເຈລະຈາກັບຫມໍ
ຊຶນແວດສະຕຣິບ ນາຍຊ່າງໂທລະເລກແບບໂຕຕໍ່ໂຕຢູ່ແຈຫນຶ່ງໄກ
ຫມູ ແລ້ວບອກວ່າ:

-ເຈົ້າພວມຊິເຮັດໃຫ້ ເວຣາ ເສຍຄົນແລ້ວ, ລະອ້າງເດີ, ພວກ
ຂ້ອຍຊິໃຫ້ພວກເຈົ້າເອົາກັນໃດ.

ທ້າວຊ່າງໂທລະເລກຫັນໃບຫນ້າເຕັມແຕ່ສືອ່ຳນີ້ໄປທາງອື່ນ
ແລ້ວກາມສຽງອຸ່ນໆວ່າ:

-ແລ້ວເປັນຫຍັງຂ້ອຍຊິເອົາກັບມັນລະ?

-ຟັງເດີ ຊຶນແວດສະຕຣິບ, ຖ້າໂຕບໍ່ຢາກເອົາກັບ ເວຣາ ພວກ
ເຮົາຊິບໍ່ແພງກຳປັ້ນກັບໂຕດອກ, ໂຕຮູ້ພວກເຮົາດີແລ້ວວ່າເປັນແນວ
ໃດ... ຕໍ່ໃຫ້ໂຕໄປລີ້ຢູ່ໃນຫ້ອງການຂອງໂຕ ໂຕກໍຫນີບໍ່ພົ້ນດອກ,
ຫນີໄປເມືອງໃຫມ່ພວກເຮົາກະໄປນຳໂຕມາໃຫ້ໄດ້.

ສ່ວນ ເວຣາ ນັ້ນນາງບໍ່ສົນໃຈນຳກິດລະບຽບອັນໃດຫມົດ, ພໍ

ແຕ່ມີເວລາຫວ່າງກໍບິນໄປພົບກັບຫມໍຊ່ຽງໂຫລະເລກໂລດ. ເມື່ອ ສວນທາງກັບຂ້າພະເຈົ້ານາງກໍອາຍຫນ້າແດງທໍາທ່າແປງຊົງຜົມ ແລ້ວເປີດຫນັງໂລດ.

ໃນທີ່ສຸດ ເວຣາ ກໍຈົນຕາແຈ. ແລງຫນຶ່ງອ່າວເດິກເຕີບ ມັນ ເຂົ້າມາຫາຂ້າພະເຈົ້າຢູ່ຫ້ອງການ, ນັ່ງເອະລີ່ງຕັ້ງອົ້ຫນ່ວຍຫນຶ່ງຢ່າງ ບໍ່ລະອ້ງກິລິຍາ ແລ້ວຍົກຂາຂົ້ນໄຂວ່ກັນ, ນາງຫລັບຕາລົງແລ້ວກໍ ເຮັດຫນ້າແດງຮົ້ນຢູ່ຄາວຫນຶ່ງ ຍົກໂຕໂງຫົ່ວຂົ້ນສູງໆ, ເວົ້າແຮງໆ ອອກມາແບບຈອງຫອງວ່າ:

-ຂ້ອຍມີເລື່ອງເວົ້າກັບເຈົ້າ.

-ເຊີນເລີຍ, -ຂ້າພະເຈົ້າຕອບດ້ວຍນ້ໍາສຽງເປັນທາງການຄືກັນ.

-ຂອຍຈາເປັນຕອງຫລຸລູກ.

-ຫະ?

-ແມ່ນແລ້ວຂ້ອຍມີລູກ, ເຈົ້າເຮັດຫນັງສືເກົ້ງໂຮງຫມໍໃຫ້ແດ່.

ຂ້າພະເຈົ້າແນມເບິ່ງນາງໂດຍບໍ່ປາກ, ເວຣາ ກົ້ມຫົ່ວລົ່ງ.

-ມີທໍ່ລ້ໍ້ແລ້ວ.

ຂ້າພະເຈົ້າຍັງມິດງຽບໄປອົກຄາວຫນຶ່ງ. ເວຣາ ພະຍາຍາມ ເສືອດແສງຕາຜ່ານຫນັງຕາເທິບໆຂອງນາງມາເບິ່ງຂ້າພະເຈົ້າ ແຕ່ ທັ້ງແສງຕາກັບພວງແກ້ມທໍ່ແຕ້ມສີນັ້ນ, ແລະ ວິທີເວົ້າຂອງນາງບົ່ງ ບອກວ່າ ບັດນີ້ນາງຫມົດຄວາມອາຍພໍແຮງແລ້ວ.

-ເທ່ໍ້ລ້ໍ້ເຈົ້າຊິຕ້ອງອອກລູກ. -ຂ້າພະເຈົ້າບອກສຽງແຫ້ງໆ.

ເວຣາ ເລື່ອກແສງຕາເສື້ອງໆມາເບິ່ງຂ້າພະເຈົ້າ, ວາງທ່າເຈົ້າ
ຊູ້ແລ້ວແກວ່ງຫົວ:

-ບໍ່, ຂ້ອຍບໍ່ຢາກໄດ້.

ຂ້າພະເຈົ້າບໍ່ຕອບຫຍັງ, ອັດລົ້ນຊັກໂຕະແລ້ວດຶງຫມວກເງົ
ມາສຸບ, ນາງລຸກຂຶ້ນແສງຕາຍັງເລື່ອດມາເບິ່ງຂ້າພະເຈົ້າຢູ່, ທ່າ
ທາງບອກວ່າຈຸ່ນວາຍໃຈ.

-ໄປ! ຮອດຍາມຫລັບຍາມນອນແລ້ວ! - ຂ້າພະເຈົ້າບອກ.

-ແຕ່ວ່າ... ຂ້ອຍ ຂ້ອຍຢາກໄດ້ຫນັງສືນ້ນ່າ, ຂ້ອຍກ້າຕໍ່ໄປ
ບໍ່ໄດ້ອີກບໍ່ໄດ້ແລ້ວ, ເຈົ້າເຂົ້າໃຈແດ່ແມ້!

ພວກເຮົາກາຍມາຮອດຫ້ອງມືດງບ່ອນສະພານາຍກອງແລ້ວຢຸດ.

-ຂ້ອຍບອກເຈົ້າແລ້ວ ແລະ ຈະບໍ່ປ່ຽນຄວາມຕັດສິນໃຈ ບໍ່ມີ
ການຫລຸລູກອີກ! ເຈົ້າຊິຕ້ອງອອກລູກ!

-ໂອ້ຍ! - ເວຣາ ຮ້ອງກົ້ກໆ ແລ້ວກໍແລ່ນອອກໄປທ້າງອັດປະຕູ
ແຮງໆ.

ສ່ໍ້ໍ່ມ່ໍ່ມາໃນນາງກໍມາລັດພົບຂ້າພະເຈົ້າອີກ ເມ່ື່ອຂ້າພະເຈົ້າກັບມາ
ແຕ່ບ້ານອ່າວເວັນແດ່, ນາງໝາຍ່າງຮຽງຂ້າງຂ້າພະເຈົ້າແລ້ວຫາວິທີ
ໂອ້ລົມນໍາແບບຈິງໃຈ ທັ້ງເວົ້າສຽງອ່ອນສຽງຫວານວ່າ:

-ອານໂຕນ ເຊມືອໂນວິດ, ເຈົ້າໂລດມີແຕ່ເວົ້າຫລິ້ນ ສ່ວນ
ຂ້ອຍໂລດບໍ່ມີໃຈຊິເວົ້າຢອກເວົ້າຫລິ້ນໃດ?

-ໂຕຢາກໄດ້ຫຍັງລະ?

-ໂອ້ຍ ຈັ່ງແມ່ນທໍາທ່າບໍ່ເຂົ້າໃຈເນາະ ກະເຈ້ຍອັນນັ້ນເດ້ ເຈົ້າ
ຄຶດເມ່ືອໃດຈ່ຶງສະແດງລະຄອນແບບນ້ີ!

ຂ້າພະເຈົ້າດຶງແຂນນາງມາເກາະຕ່ອງ ແລ້ວພາຍ່າງມຸ່ງຫນ້າ ອອກໄປທາງທົ່ງນາ:

-ເອົາລະ... ລົມກັນເບົ່າຈັກຫນ້ອຍດຸຊັ້ນ.

-ອຸ້ຍ ຊິມີຫຍັງລົມອີກ? ພ້າເອີ້ ນີ້ແມ່ນເລື່ອງຫຍັງອີກ ເນາະ! ເຈົ້າຂຽນໃບອະນຸຍາດໃຫ້ຂ້ອຍແລ້ວກະແລ້ວນ່າ!

-ເວຣາ, ຟັງເດີ້, ຂ້ອຍບໍ່ໄດ້ສະແດງລະຄອນ ແລະ ກະບໍ່ເວົ້າ ຫລິ້ນຈັກຫນ້ອຍ. ຊີວິດແມ່ນສິ່ງທີ່ສຳຄັນຄວນຈິງຈັງກັບມັນ, ບໍ່ ຄວນເຫັນຊີວິດເປັນເຄື່ອງຫລິ້ນ, ມັນອັນຕະລາຍ... ເຈົ້າພວມປະ ສົບກັບເລື່ອງສຳຄັນຢ່າງຫນຶ່ງເຈົ້າມັກຮັກກັບຄົນຜູ້ຫນຶ່ງເປັນແນວນີ້ ແລ້ວກະແຕ່ງດອງກັບເຂົາແມ້.

-ໂອ້ຍ... ເຜດເອີ້ຍ, ຂ້ອຍບໍ່ໄດ້ຕ້ອງການແຕ່ງດອງ, ບໍ່ຕ້ອງ ການນັກອັນນັ້ນເລີຍ ເຈົ້າຄຶດແນວໃດຈ່ຶງຊິໃຫ້ຂ້ອຍເອົາກັບມັນ? ເຈົ້າຄຶດຢາກໃຫ້ຂ້ອຍນີ້ເບົ່າແຍງລ້ຽງດູເດັກນ້ອຍຊັ້ນຫວະ! ໂອ້ຍ ຂຽນເຈ້ຍໃບນັ້ນໃຫ້ຂ້ອຍສາ ຂ້ອຍບໍ່ໄດ້ມັກໄດ້ຮັກໃຜເລີຍ.

-ເຈົ້າບໍ່ມັກຮັກກັບໃຜຊັ້ນຫວະ? ຊັ້ນແມ່ນໂຕຕັ້ງມັກລ້ວເລ ຫວະ?

-ເອ ມັກລ້ວເລ ຫັ້ນລະ ເຈົ້າຫັ້ນເວົ້າແນວໃດກະເວົ້າໄດ້ດອກ.

-ເອ... ຊັ້ນຊິເວົ້າແນວນີ້ລະ: ຂ້ອຍຊິບໍ່ປ່ອຍໃຫ້ໂຕລ້ວອີກຕໍ່ໄປ! ໂຕມີລູກກັບຊາຍຄົນຫນຶ່ງ ໂຕນີ້ໂຕກະຊິຕ້ອງເປັນແມ່ຄົນ!

-ເຮັດເຈ້ຍນັ້ນໃຫ້ຂ້ອຍສາ ຂໍຮ້ອງເທາະ! -ເວຣາ ຮ້ອງທັງ ໃຫ້ນ້ຳຕາອາບຫນ້າ, -ເປັນຫຍັງເຈົ້າຈ່ຶງທໍລະມານຂ້ອຍແທ້?

-ຂ້ອຍຊິບໍ່ໃຫ້ເຈ້ຍນັ້ນແກ່ເຈົ້າຢ່າງເດັດຂາດ... ແຕ່ຖ້າເຈົ້າຈຸ່ນ

ວາຍຈ້ຈ້ຫລາຍ ກະຊິສະເຫນີບັນຫານ້ຂ້ນສະພານາຍກອງ.

-ໂອ້ຍ ພ້ານເອີ້ຍ! - ນາງຮ້ອງເຫລ້ຶ້ນ ແລະ ນັ່ງເປະລິງແຄມ ທາງຂ້າງທ່ຳນາ, ສະອ້ືນໄຫ້ທິດໆຈົນໂຕສັ່ນ, ບ່າໄຫລ່ສະເທ້ືອນ ຍ້ອນແຮງສະອ້ືນຫນ້ານ້ເວດທະນາ.

ຂ້າພະເຈ້ຍ້ືນກ້ົມຫ້ວເບ່ືນາງນ້ດໆ. ກາລາແຕ້ງໂກ ອອກມາ ຈາກສວນຫມາກໂມ, ຫຍັບເຂ້ົ້ມາຫາພວກເຮົາ, ຫນ້ໍແນ່ນເບ່ືາ ເວຣາ ຜູ້ນ່ັງຢູ່ກັບພ້ືນດິນຢ່າງພິຈາລະນາ ແລ້ວເວ້ົາອອກມາຢ່າງບ່ໍ ພ້ານບ່ໍ່ຟ້ງວ່ານ:

-ຂ້ອຍຄ້ດສ້ງໃສຢູ່ວ່ານ ແມ່ນໃຜມາເຮ້ັດອ້ີຫຍ້ງຢູ່ຫນ້ີ ໂລດແມ່ນ ສາວ ເວຣາ ນ້ີຫວະມາຮ້ອງໄຫ້... ກ່ອນນ້ີຍາມໃດກ້ໍຄ້ືວ່ານເຫ້ັນເພ້ືນ ຫ້ວອ້ກໆຢູ່ນ່ານ ແລ້ວບ້ັດນ້ີຊ້ໍ້ມາຮ້ອງໄຫ້.

ເວຣາ ເຊ້ົາໄຫ້ລຸກຂ້ຶ້ນຢ້ືນ, ສ້ັນກະໂປງຢ່າງລະມ້ັດລະວ້ງ ແລ້ວຫ້ັນຫນ້າຍ່າງຄ້ືນໄປນ້ິດ້ນຫ້ັງແຕ່ວ່ານແຂນແຫ່ງນຫນ້ານເບ່ືາຫມ່ ດາວໃນທ້ອງຟ້ານ.

ກາລາແຕ້ງໂກ ເວ້ົາຂ້ຶ້ນວ່ານ:

-ນາຕູບພ້ໍ້ແມ້, ອານໂຕນ ເຊມ້ອໂນວ້ດ, ຂ້ອຍຊ້ືາຫມາກ ໂມຫນ່ວຍຄ້ກໆໃຫ້ເຈ້ົ້າຊ້ືມ... ຊະນ້ິດທ້ໍ່ເອ້ີນວ່ານ ຫມາກໂມແມ່ພະ ຍາພຸ້ນລະ! ພວກຫມູ່ລ່ານຄ້ນກ້ໍຢູ່ຫ້ັນແລ້ວ!

ສອງເດ້ືອນຜ່ານໄປ, ຊ້ີວ້ດຂອງພວກເຮົາລ່ຽນກ້ໍ່ໄປຄ້ຽຍ້ດ ໄຟແລ່ນຕາມຮ່ານ; ຮອດບ່ານ່ວນກ້ໍເລ່ັ່ງໄວສຸດແຮງ, ບ່ານ່ວນ ມ້ອຸປະສັກເຊ່ັ່ນ ຂ້ວບ່ໍ້ດ້ໍ່ກ້ໍແລ່ນຊ້ໍ້າລ້ົ່ງ, ຫ້ານສຸດຂ້ດເວລາລ້ົ່ງຄ້ອຍ. ຊ້ີວ້ດຂອງ ເວຣາ ກ້ໍ່ລ່ຽນກ້ໍ່ຕ້ດໄປນ້ໍາພວກເຮົາ ດ້ວຍພະລ້ັງດ້ໍ

ພາຍໃນ ແຕ່ນາງໂດຍສານໄປໃນລົດໄຟຂະບວນດຽວກັບພວກເຮົາ ແບບລັບລັ້ນລັ້ນລົ້ນເອົາ.

ສະພາບຂອງນາງບໍ່ສາມາດຫລອກສາຍຕາຊາວນິຄົມໄດ້ອີກ ແລ້ວ, ເບິ່ງຢ່າງຫນ້ງເບິ່ງຄ່ວ່ານາງເອງໄດ້ເປີດເຜີຍຄວາມລັບອັນນີ້ສູ່ຫມູ່ຄູ່ໃກ້ຊິດຂອງນາງຟັງແລ້ວ, ໃຜກໍຮູ້ດອກວ່າ ອັນພວກແມ່ຍິງສາມາດຮັກສາຄວາມລັບໄດ້ພໍປານໃດ. ຂ້າພະເຈົ້າເອງຮູ້ສຶກວ່າ ພວກເດັກນ້ອຍຜູ້ຊາຍມີຈິດໃຈກ້ວ້າງຂວາງເຜື່ອແຜ່ດີຫລາຍ ແລະ ກ່ຽວກັບເລື່ອງນີ້ຂ້າພະເຈົ້າເອງກໍຄາດຄິດເຊື່ອຫມັ້ນໄວ້ລ່ວງຫນ້າ ແລ້ວ. ພວກເຂົາບໍ່ເວົ້າຍອກເຍ້ີ ທັງບໍ່ຮາວີ ເວຣາ. ໃນສາຍຕາ ຂອງພວກເຂົາ ການຖືພາມານ ແລະ ການອອກລູກບໍ່ແມ່ນສິ່ງອັບ ອາຍຂາຍຫນ້າ ຫລືຄວາມຊົ່ວຮ້າຍແຕ່ຢ່າງໃດ. ບໍ່ມີໃຜຈັກຄົນເວົ້າ ແນວເປັນຕາຄຽດໃສ່ ເວຣາ ທັງບໍ່ເບິ່ງນາງແບບຫມິ່ນປະຫມາດ. ສ່ວນທ້າວຊ່າງໂທລະເລກນັ້ນ ແມ່ນອີກບັນຫາຫນ້ງຕ່າງຫາກ. ຢູ່ ຫ້ພັກ ແລະ ຫ້ອງຮັບແຂກ, ຢູ່ກອງພິເສດ, ຢູ່ສະໂມສອນ, ຢູ່ເດີ່ນຫຍ້າ, ຢູ່ໂຮງຊ່າງ... ຢູ່ທຸກແຫ່ງ ມີການກ່ຽວຂ້ງບັນຫາໃນ ທຸກແງ່ທຸກມຸມ ເພາະວ່າ ລາປົດເອງໄດ້ສະເຫນີໂຄງການນີ້ສູ່ຂ້າພະ ເຈົ້າຟັງຄັ້ງບວ່າ ເລື່ອງນັ້ນສຸກງອມພໍແຮງແລ້ວ:

-ມັ້ນພວກເຮົາຊິເອົາໂຕທ້າວ ຊຶນແວດສະຕຣິບ ຂຶ້ນສະພານາຍ ກອງເຈົ້າມີຫຍັງຄັດຄ້ານບໍ?

-ບໍ່, ບໍ່ມີຫຍັງຄັດຄ້ານ ແຕ່ຫນໍ ຊຶນແວດສະຕຣິບ ອາດຊິບໍ່ ຈັກດອກ?

-ພວກເຮົາຊິເອົາໂຕມັ້ນມາ ຊິໄດ້ຮູ້ກັນວ່າ ຫນໍເປັນກົນໂຊໂມນ ປະເພດໃດ.

ມື້ແລ້ງ ໂຈຣາ ແລະ ໂວໂລຄິບ ລາກໂຕ ຊຶນແວດສະຕຣິບ ມາ, ເຖິງແມ່ນວ່າສະພາບການເປັນຕາເສົ້າໃຈພຽງໃດກໍຕາມ ຂ້າພະເຈົ້າກໍອົດຍິ້ມບໍ່ໄດ້ເມື່ອເຫັນຫມໍຖືກບັງຄັບໃຫ້ອອກມາຢືນຢູ່ກາງ ຫ້ອງ ແລະ ເມື່ອ ລາປົດ ຂູ່ຫມໍອີກເປັນຄຳສຸດທ້າຍວ່າ:

-ລະວັງ, ຢືນກົງ.

ຢູ່ຕໍ່ຫນ້າສະພານາຍກອງແບບນີ້ ຊຶນແວດສະຕຣິບ ຢ້ານຈົນຕັບສັ່ນ, ມັນບໍ່ພຽງແຕ່ຈະຢືນກົງຕາມຄຳສັ່ງເທົ່ານັ້ນ ແຕ່ຍັງຍິນດີເຮັດທຸກຢ່າງ, ພ້ອມທີ່ຈະແກ້ໄຂຄວາມເລິກລັບສັບສົນທຸກແນວ ພໍພຽງແຕ່ໃຫ້ຫມໍລອດພົ້ນອອກຈາກຫ້ອງ ນາຣິກແຫ່ງນີ້. ແຕ່ເຫດການກັບຫັນປ່ຽນໄປຢ່າງບໍ່ຄາດຝັນ ແລະ ມັນກາຍເປັນ ວ່າສະພານາຍກອງພົ້ ຕ້ອງເປັນຜູ້ແກ້ບັນຫາເລິກລັບສັບຊ້ອນ ເພາະ ຊຶນແວດສະຕຣິບເວົ້າອ້ຶງ ອະ ອອກມາວ່າ:

-ສະຫາຍ... ຊາວນິຄົມ... ຊິຫາວ່າຂ້ອຍເປັນຄົນຊົ່ວ, ອັນຕະພາບຊັ້ນຫວະ?... ພວກເຈົ້າບອກວ່າ... ແຕ່ງດອງເອົາກັບນາງແມ້... ຂ້ອຍກະຍິນດີ... ດ້ວຍຄວາມເຕັມໃຈນ່າ... ແຕ່ຂ້ອຍຊິເຮັດແນວໃດ ແມ່ນນາງພຸ້ນນ່າບໍ່ຢາກເອົາ!

-ວ່າແນວໃດເກາະ...? ເວຣາ ຫວະບໍ່ຢາກເອົາ? - ລາປົດຮ້ອງທ້າງເຕັ້ນ, - ແມ່ນໃຜບອກໂຕ?

-ກະ ເວຣາ ເອງຫັ້ນແລ້ວ... ບອກກັບຂ້ອຍເອງ.

-ຊັ້ນຫວະ... ດີແລ້ວ ເອ້ີ ເວຣາ ມາສະພານາຍກອງ, ໄຊເຮັນໄປເອ້ີ!

ໄຊເຮັນ ໂດດອອກປະຕູໄປ, ຕຳຊະຊາຍ, ປະມານ ๔ ນາທ

ກໍກັບຄືນມາພໍປານລູກສອນເລ່ງຈາກຄັນທະນູ, ສັ່ນຫນ້າທໍ່ມີປາຍ ດ່ງໆໄປບອກ ລາບິດ ທ້ງືກຫູເບ້ືອງຂວາຫາຍບອກທິດທາງ ບ່ອນ ເວຣາ ຢູ່:

-ມັນບໍ່ຢາກມາ! ເຈົ້າເຂົ້າໃຈບໍ່... ຂ້ອຍບອກມັນແລ້ວ ແຕ່ມັນ ໄລ້ຂ້ອຍຫນີ!

ສາຍຕາຂອງ ລາບິດ ກວາດໄປທ່ົວສະພາ ແລ້ວຢຸດກືກລົງທ່ີ ເຟໂດເຣັນໂກ. ຝ່າຍນ້ັເຂ້ົາໃຈທັນທີ, ລຸກຂ້ຶນຈາກບ່ອນນ່ັງ, ຍົກ ມ້ືຂ້ຶນຄຳນັບຢ່າງບໍ່ເອົາໃຈໃສ່ ແລ້ວຮັບຄຳຄ່ອຍໆວ່າ "ເອ້" ຈາກນ້ັນ ຈ່ົງຫັນຫນ້າຍ່າງອອກໄປທາງປະຕູ. ໂຊເຣັນ ຫລຽບແລ່ນອອກໄປ ນອກຫ້ອງລອດກ້ອງແຂນຫນ່ໍໄປ ແລະ ຍ່ຳຂ້ຶນໄດສຽງດ້ງ໊ຕ້ຶງຕ້ຶງ ພໍປານສຽງຟ້າຮ້ອງ. ຊຸນແວດສະຕຣິບ ຢືນຫນ້າລ່ຳຕາຕາຍຢູ່ກາງ ຫ້ອງ, ແນມເບ່ິງຫນ້າພວກເດັກນ້ອຍນ້ິດທ່ີພວມເຈາະຈ້ຶມຊຸກ ສິບນາງຟ້າແຫ່ງຄວາມຮັກອັນແຫລກສະຫລາຍຂອງຫນ່ໍຢູ່ຕໍ່ຫນ້າ ຕໍ່ຕາ.

ຂ້າພະເຈ້ົາແລ່ນນ ຳ ເຟໂດເຣັນໂກ ແລ້ວບອກມັນຢຸດ ທັນຢູ່ ກາງເດ່ືນ:

-ກັບເມ່ືອກອງປະຊຸມສາ, ກັນຊ່ໄປເອ້ັນ ເວຣາ ເອງ.

ເຟໂດເຣັນໂກ ປ່ອຍໃຫ້ຂ້າພະເຈ້ົາໄປໂດຍບໍ່ຕອບຈັກຄວາມ.

ເວຣາ ນ່ັງຢູ່ເທ່ິງຕຽງລ ຳຄອຍຄ ຳ ຖາມ ແລະ ຄ ຳ ອ້ອນວອນຢ່າງ ອິດທິນ, ມ ືທ ັ ງສອງບ ີ ບກ ຳ ຫມ ອນກ ະ ດ ຸ ມໃຫຍ ່ ສ ີ ຂ າວ. ໂຊເຣັນ ແລ່ນມາຢຸດກ ືກ ຢ ຸ ດ ຕ ໍ ່ ຫ ນ ້ າ ນ າ ງ ພ ໍ ປ ານ ຫ ມ າ ໃ ຫ ່ ເ ນ ື ້ ອ ແ ທ ້ ໆ ແ ລ ້ ວ ເ ວ ົ ້ າ ສຽງແຫລມປານສຽງເທ່ົາວ່າ:

-ນາ່ ເອຣາ, ນາ... ບ່ຊັ້ນຫນໍ ເຟໂດເຣັນໂກ ຊິນາ! ໄປ ເອງດີກວ່ານ່າ! - ມັນຊິ່ນບອກວ່າ, - ບ່ຊັ້ນຫນໍ ເຟໂດເຣັນໂກ ມັນຊິນາລາກແຂນເຈົ້າໄປເດ໊ີ!

ພໍ ໂຊເຣັນ ແນມເຫັນຂ້າພະເຈົ້າ ມັນກໍຫາຍໂຕໄປອັບປ່ອຍ ໄວ້ແຕ່ຄັນສີຄາມລອຍຢູ່ເຫນືອບ່ອນມັນຢູ່.

ຂ້າພະເຈົ້ານັ່ງລົງຂອບຕຽງຂອງ ເອຣາ ແລ້ວກົ໊ກຫົວໃຫ້ຫມູ່ ຂອງນາງສອງສາມຄົນອອກໄປ.

-ເຈົ້າບ່ຢາກເອົ້ากับ ຊິນແວດສະຕຣິບ ຊັ້ນຫວະ?

-ບ່ໍ, ຂ້ອຍບ່ຢາກເອົ້າ.

-ເອ໊... ດີແລ້ວລະ, ມັນບ່ສິນດອກ, ເຈົ້າເຮັດກົ໊ກແລ້ວ.

ທ້ັງໆທ່ີ່ບົບກະດຸ່ມຢູ່ໃນມ໊ື, ເອຣາ ເວົ້ากับພວກມັນຫລາຍກວ່າ ເວົ້ากับຂ້າພະເຈົ້າວ່າ:

-ພວກເຂົ້າທຸກຄົນຢາກໃຫ້ຂ້ອຍເອົ້ากับມັນ, ແລ້ວຂ້ອຍບ່ຢາກ ເອົ້າເດ໊ີ່ຊິເປັນຫຍັງ?... ໃຫ້ຂ້ອຍເຮັດຫລຸສາໄດ້ບ່ໍ?

-ບ່ໍ!

-ແຕ່ຂ້ອຍຂໍນ້ໍາເຈົ້າແດ່... ອະນຸຍາດສາ... ໃຫ້ຂ້ອຍເຮັດຫລຸ ສາເພາະວ່າຂ້ອຍຢາກເຮັດ... ເຈົ້າບ່ມ໊ີສິດຫ້ານ.

-ຊ້ານ້ໍາເກ໊ີນໄປແລ້ວ.

-ມັນຊິເປັນຫຍັງ.

-ມັນຊ້ານ້ໍາເກ໊ີນໄປແລ້ວ, ບ່ມ໊ີແພດຜູ້ໃດຮັບເຮັດດອກ.

-ມ໊ີ... ມ໊ີຢູ່ນ່ານ... ເຮັດໄດ້... ເພ໊ີ່ນເອ໊ີ້ນ ເຈາະລູກອອກ...

-ເຈົ້າຮູ້ບ່ວ່ານັ້ນເປັນແນວໃດ?

-ຮູ... ກະປາດໄຂຫນ້າທ້ອງອອກ ແລ້ວກະແລ້ວ.

-ມັນອັນຕະລາຍຫລາຍ ເຈົ້າອາດຊິຕາຍຍ້ອນ.

-ເອ້ ແລ້ວຊິເປັນຫຍັງ, ຕາຍໄດ້ກະດີ ດີກວ່າມີລູກ!

ຂ້າພະເຈົ້າວາງມືໃສ່ກະດຸມຂອງມັນ, ເວຣາ ຫັນຫນ້າໄປເບິ່ງຫມອນ.

-ຟັງເດ໊ ເວຣາ, ສຳລັບພວກແພດຫມໍເອງ ຂະເຈົ້າກໍມີກົດຫມາຍຄ້ຳນພວກເພິ່ນສາມາດປາດເອົາລູກອອກໃຫ້ຄົນໄດ້ກໍຕໍ່ເມື່ອແມ່ເດັກບໍ່ສາມາດອອກລູກໄດ້ຕາມທຳມະດາ.

-ຂ້ອຍກະຄ້ຳນບັ້ນຕວ່າ, ຂ້ອຍອອກບໍ່ໄດ້.

-ເຈົ້າອອກໄດ້ຢູ່... ແລ້ວເຈົ້າກໍຈະມີລູກເປັນໂຕເປັນຕົນ!

ນາງປັດມືຂ້າພະເຈົ້າອອກຈາກກະດຸມ, ລຸກຂຶ້ນແລ້ວໂຍນກະດຸມໃສ່ຕງຢ່າງແຮງ.

-ຂ້ອຍອອກບໍ່ໄດ້... ຂ້ອຍບໍ່ຢາກມີລູກ! ຮູ້ໄວ້ແດ່. ຂ້ອຍຊິຜູກຄໍຕາຍຫລືໂຕນນ້ຳຕາຍກະໄດ້ ແຕ່ຂ້ອຍຊິບໍ່ເອົາລູກ!

ເວຣາ ລົ້ມນອນລົງຕງແລ້ວຮ້ອງໄຫ້ສະອຶກສະອື້ນ.

ໂຊເຣັນ ໂປໂລຫົວອອກມາຢູ່ຮ່ອມລະບງ:

-ອານໂຕນ ເຊມືອໂນວິດ, ລາບິດ ໃຫ້ມາກາມວ່າ ຊິໃຫ້ກ້າເວຣາບໍ? ຊິໃຫ້ຜັດແນວໃດກັບຫມໍ ຊິນແວດສະຕຣິບ?

-ໄປບອກເຂົາ ເວຣາ ຈະບໍ່ເອົາກັບມັນ.

-ແຕ່ຫມໍ ຊິນແວດສະຕຣິບ ເດ້?

-ໄລ່ມັນເມືອສາ!

ໂຊເຣັນ ແລ່ນປົວໄປເຫັນແຕ່ຊາຍເສື້ອປົວວັບໆລັບຫາຍອອກ ຈາກປ່ອງປະຕູ.

ຂ້າພະເຈົ້າຈະເຮັດແນວໃດ? ມະນຸດເຮົາດຳລົງຊີວິດຢູ່ບົນພື້ນພິພົບນີ້ມາຈັກສະຕະວັດແລ້ວ ແລະ ຄວາມຮັກໄດ້ກໍ່ໃຫ້ເກີດຄວາມສັບສົນຂຶ້ນໃນຊີວິດມະນຸດສະເຫມີ, ບໍ່ວ່າ ໂຣເມໂອ ກັບ ຈູລຽດ ຫລື ໂອເຕັນໂລ ກັບ ເດສເດມອນ, ຫລືໂອເນກິນ ກັບ ຕາເຕຍນາ ແລະ ເວຣາ ກັບ ຊຶນເວດສະຕຣິບ. ປານໃດບັນຫານີ້ຈຶ່ງຈະຫມົດໄປ? ປານໃດຫົວໃຈຂອງນັກຮັກຈຶ່ງຈະມີເຄື່ອງວັດແທກແຮງຮັດຕຶດໄວ້ເຊັ່ນ ເຄື່ອງແທກອຳແປໄຟຟ້າ, ແທກແຮງດັນໄຟຟ້າ ແລະ ເຄື່ອງດັບມອດອັດຕະໂນມັດທີ່ເຮັດວຽກເອງເປັນລະຍະໆ? ອີກດົນປານໃດ ຈຶ່ງຈະໄດ້ເຊົາຄຶດນຳພວກເຂົາແລ້ວເຝົ້າຖາມວ່າ: ແມ່ນມັນຊິຜູກຄໍຕາຍ ຫລື ຊິບໍ່ຜູກ?

ດ້ວຍຄວາມໂມໂຫຂ້າພະເຈົ້າຫນີອອກມາ. ພວກເດັກນ້ອຍນຳໂຕທ້າວຜູ້ບ່າວອອກໄປແລ້ວ. ຂ້າພະເຈົ້າຂໍນຳພວກຫົວຫນ້າກອງແມ່ຍິງຢູ່ຕໍ່ເພື່ອສົນທະນາບັນຫາຂອງ ເວຣາ ອີກ: ນາງ ໂອເລຍ ລາໂນວາ, ສາວຕຸ້ຍແກ້ມນົມພັ້ງຂ້າພະເຈົ້າເວົ້າຢ່າງເຂົ້າໃຈດີ, ນາງເວົ້າວ່າ:

-ແມ່ນແລ້ວ, ຖ້າປ່ອຍໃຫ້ມັນເຮັດແນວນັ້ນກະເສຍຄົນກ້ຳລ້າ!

ນາຕາຊາ ເປເຕຣັນໂກ ນິດອ້ົມສົ້ມຢູ່ທ້ັງແນມເບິ່ງ ໂອເລຍ, ແສງຕາສະຫງົບຂອງນາງເປັ່ງປະກາຍສະຫລຽວສະຫລາດ.

-ນາຕາຊາ... ເຈົ້າຄຶດວ່າແນວໃດ?

-ອາມໂຕນ ເຊມີໂນວິດ, -ນາຕາຊາ ຕອບ, -ຖ້າຫາກ

ວ່າຄົນຜູ້ຫນຶ່ງຢາກຜູກຄໍຕາຍ ແລ້ວໃຜຊິຫ້າມມັນກະບໍ່ໄດ້ດອກ ຈັ່ງ
ຊັ້ນຈຶ່ງບໍ່ສາມາດເຝົ້າຕິດຕາມມັນສະເຫມີ. ຫລາຍຄົນອາດຊິເວົ້າ
ວ່າ: ພວກເຮົາຊິບໍ່ວາງຕາຈາກມັນ... ແມ່ນແທ້ວ່າພວກເຮົາຈະລະ
ມັດລະວັງ ແຕ່ພວກເຮົາຊິແນມນຳມັນທຸກບາດກ້າວບໍ່ໄດ້.

ພວກເຮົາແຍກທາງກັນ, ພວກເດັກນ້ອຍແມ່ຍິ່ງກັບໄປຫ້ອງ
ເພື່ອຫລັບນອນສ່ວນຂ້າພະເຈົ້າກັບມາເພື່ອຄຶດ ແລະ ລໍຄອຍວ່າຈະ
ມີໃຜຜູ້ຫນຶ່ງມາເຄາะຝາແກ້ວປ່ອງຢ້ຽມ.

ຫລາຍຄືນຜ່ານໄປ, ຂ້າພະເຈົ້າຍັງຄົ້ນຄຶດວິນວາຍນຳແຕ່ເລື່ອງ
ນີ້. ບາງຄືນ ເວຣາ ກໍມາຫາທ່າທາງຫມິດຫວັງເມື່ອຍອ່ອນ ແລະ
ເປັນທຸກ, ນາງນັ່ງລົງຕໍ່ຫນ້າຂ້າພະເຈົ້າແລ້ວກ່ອກເຫຄຳເວົ້າປະເພດ
ໂງ່ຈ້າກ່ຽວກັບຊີວິດອັນອາພັບອັບຈົນຂອງນາງ, ປ້ອຍດ່າຄວາມໃຈ
ຫີນໂຫດຫ້ຽມຂອງຂ້າພະເຈົ້າ ແລະ ເວົ້າເກີ່ງການປາດເອົາລູກ
ອອກທີ່ປະສົບຄວາມສຳເລັດຫລາຍກໍລະນີ. ຂ້າພະເຈົ້າສວຍໂອກາດ
ນັ້ສັ່ງສອນ ເວຣາ ~ ດ້ວຍການອ້າງເກີ່ງຫລັກການປັດຊະຍາອັນຈຳ
ເປັນໃນການດຳລົງຊີວິດທີ່ນາງເອງບໍ່ຮູ້ຈັກ ຈັກຫນ້ອຍນັ້ນນຳ ຂ້າພະ
ເຈົ້າສັ່ງສອນນາງ:

-ເຈົ້າທຸກທໍລະມານຫົວໃຈ, ຍ້ອນຄວາມໂລບມາກໂລພາ,
ເຈົ້າຕ້ອງການຄວາມອ່ອນຊຶ່ນ, ຄວາມສະຫນຸກ, ຄວາມພໍອົກພໍ
ໃຈ... ເຈົ້າຄຶດວ່າຊີວິດແມ່ນງານລາຕີທີ່ເຂົ້າຊຸ່ມຟ້ຽໄດ້, ຄົນໄປ
ບຸນ... ຫມິດທຸກຄົນອອນຊອນເອົາໃຈມັນ, ເຕັ້ນລຳກັບມັນ, ທຸກ
ຢ່າງເຮັດໄປເພື່ອໃຫ້ມັນພໍໃຈ ແບບນັ້ນຫວະ?

-ແລ້ວເຈົ້າຄິດວ່າ ຄົນເຮົາຕ້ອງທຸກທໍລະມານໄປເລື້ອຍໆ ຫວະ?

-ສຳລັບຂ້ອຍ, ຊີວິດບໍ່ອາດເປັນຄວັນບຸນຕະຫລອດໄປ ອັນບຸນແທ້ມີຫນ້ອຍດຽວ, ສ່ວນຫລາຍເປັນອັນເຮັດວຽກ, ອັນທີ່ມີບັນຫາ, ອັນທີ່ຄົນຕ້ອງເຮັດພັນທະກໍລະນີຂອງຕົນ, ແບບນີ້ຊີວິດຊາວຜູ້ອອກແຮງງານ. ຄວາມເບີກບານມ່ວນຊື່ນແລະຄວາມຫມາຍຂອງຊີວິດແບບນີ້ ມີຫລາຍກວ່າຢູ່ໃນຊີວິດຫລິ້ນໆແບບເພີດເພີນຂອງເຈົ້າ. ແຕ່ສະໄຫມກ່ອນກໍມີແທ້ຄົນປະເພດທີ່ບໍ່ເຮັດວຽກເຮັດງານອັນໃດລ້ຽງໂຕເອງຫັ້ນນ່າ, ຄົນທີ່ເອົາແຕ່ຫລິ້ນກິນ, ຟຸມເຟືອຍຫາເມົາຫາມ່ວນ ຄົນແບບນີ້ຄືເຈົ້າຮູ້ນັ້ນແລ້ວພວກເຮົາໄລ່ຫນີຊື່ນີ້ລະ!

-ເຈົ້າ, -ເວຣາ ຕອບທັງສະອື້ນ. -ໃນເມື່ອວ່າໄດ້ເປັນຜູ້ອອກແຮງງານແລ້ວ ກໍເລີຍຕ້ອງທຸກທໍລະມານໄປ!

-ເປັນຫຍັງຈ໋ຳຊິທຸກທໍລະມານລະ? ແຮງງານກັບຊີວິດທີ່ເຮັດວຽກ... ພໍສາມາດເປັນຄວາມສຸກມ່ວນຊື່ນໄດ້ຄືກັນ. ເຈົ້າຊິໄດ້ລູກ. ແລ້ວເຈົ້າກໍຈະຮັກມັນ, ເຈົ້າຈະມີຄອບຄົວ, ເຈົ້າຈະເອົາໃຈໃສ່ລ້ຽງດູລູກເຈົ້າ. ເຈົ້າຈະເຮັດວຽກເຮັດງານຄືກັບຜູ້ອື່ນໆ, ບາງຄັ້ງກໍໄດ້ພັກຜ່ອນ, ຊີວິດເປັນແບບນີ້ແລ້ວ, ເມື່ອລູກເຈົ້າໃຫຍ່ຂຶ້ນມາເຈົ້າຫາກຈະຄຶດຂອບໃຈ້ຂ້ອຍດອກທີ່ໄດ້ຫ້າມເຈົ້າໄວ້ຈ໋ຳຊິ.

ເວຣາ ຄ່ອຍໆຫງ່ຽງຫູຟັງຄຳເວົ້າຂອງຂ້າພະເຈົ້າ ແລະ ຄ່ອຍໆຮັບຮູ້ມັນ. ຈາກນັ້ນຈ໋ຳເລີ່ມຄຶດເຫັນອະນາຄົດໂດຍບໍ່ຫວາດກົວ ແລະ ເບື່ອຫນ່າຍ. ຂ້າພະເຈົ້າລະດົມກຳລັງຝ່າຍຍິງທັງຫມົດຢູ່ໃນ

ນິຄົມ, ພວກເຂົາໂອບອຸ້ມ ເວຣາ ໄວ້ດ້ວຍຄວາມເຫັນໃຈ ເຂົ້າໃຈ ແບບພິເສດ ທັງເຝົ້າຄອຍວິໄຈຊີ້ແຈງຊີວິດສູ່ນາງຟັງ. ສະພານາຍ ກອງມອບຫ້ອງໃຫ້ນາງຕ່າງຫາກຫ້ອງຫນຶ່ງ. ມູດລາຕີ ເອງຕັ້ງຕົວ ເປັນຫົວໂປ່ຫມູ່ໃນຄະນະກຳມະການສາມຄົນ ເພື່ອຂົນຍ້າຍເຄື່ອງຕູ້ ຕຽງໂຕະ, ເຄື່ອງໃຊ້ປະຈຳຄອບຄົວ ແລະ ຂອງເລັກນ້ອຍໆສຳລັບ ໃຊ້ປະຈຳວັນມາໄວ້ໃນຫ້ອງນີ້. ພວກເດັກຮຸ່ນນ້ອຍກໍເລີ່ມສະແດງ ຄວາມສົນໃຈຕໍ່ການກະກຽມເຫລົ່ານີ້, ເຖິງຢ່າງນັ້ນພວກເຂົາກໍຍັງ ຫລີກບໍ່ເວັ້ນຄວາມເຫັນແກ່ຕົວຕາມຄວາມຊົມເຄີຍຂອງພວກເຂົາເອງ ແລະ ຍ້ອນຂາດຄວາມຈິງຈັງຕໍ່ຊີວິດຂອງພວກເຂົາເອງ. ນີ້ແມ່ນສາ ເຫດອັນດຽວທີ່ເຮັດໃຫ້ຂ້າພະເຈົ້າໄດ້ຮ້ອງ ຊິເນັນກີ ໃນວັນຫນຶ່ງ ເມື່ອພົບຫມໍສຸບຫມວກກັກສຳລັບແອນ້ອຍເກີດໃຫມ່ຢ່າງກາຍມາ:

-ເຮ້ຍ... ນີ້ແມ່ນຫຍັງກັນ? ເປັນຫຍັງໂຕຈຶ່ງໃສ່ຫມວກນີ້?

ຊິເນັນກີ ຟ້າວດຶງຫມວກອອກມາ ແລ້ວຫັນໃຈແຮງໆ...

-ໂຕໄດ້ມາແຕ່ໃສ?

-ກະ... ແມ່ນເຄື່ອງລູກຂອງ ເວຣາ ນ່າ... ແມ່ນຫມວກສຸບ ທີ່ພວກແມ່ຍິງເຂົາເຮັດໃຫ້...

-ຫມວກສຸບ ແລ້ວມັນເປັນຫຍັງຈຶ່ງມາຢູ່ຫົວໂຕ?

-ຂ້ອຍກາຍມາຫັ້ນ...

-ແລ້ວເປັນແນວໃດ?

-ຂ້ອຍກາຍມາ ແລ້ວ ເຫັນມັນວາງຢູ່ຫັ້ນ...

-ມຶງກາຍເຂົ້າໄປໃນຫ້ອງຕັດຫຍິບພຸ້ນຫວະ?

ຊິເນັນກີ ເຂົ້າໃຈແລ້ວວ່າ "ມີເວລາທີ່ຫມໍຄວນປາກ ແລະ ມີ

ເວລາທີ່ຫມໍ່ບໍ່ຄວນປາກ", ຈ່ຳຊັ້ນຈ່ຳພຽງແຕ່ກົກຫົວຊ່ຶ່ງທ້ຳແນມໄປ ທາງຂ້ຳງ.

-ພວກແມ່ຍິງພາກັນເຮັດວຽກທ່ີ່ສົມຄວນເຮັດແຕ່ໃຕ້ຈ້ຳຜັດ ອາດຈະຈືກມັນ ມ້ຳງເພແລ້ວໂຍນກ້ຶ່ມ, ເຮັດແບບນ້ຶ່ຫມາຍຄວາມ ວ່າແນວໃດ?

ແຕ່ການຕູ່ຫາອັນນ້ຶ່ລົ່ນກາຍຂອບເຂດກຳລັ້ງເລັກ້ນ້ອຍ້ຂອງ ຊ ເນັນກ: ເ

-ບໍ່... ບໍ່ນ່ຳ, ເຈ້ົ້ຳກ້ຳເບ່ຶ່ງກ່ອນແມ້, ຂ້ອຍຍ ບັນມ ກ ເພາະ ວ່ຳ ນ ຕ ຊ ບອກວ່ຳ: "ຈ່ຳແມ່ນໂຕບໍ່ມ ມ ລະຍ ດນ້ໍ!" ຂ້ອຍ ເລ ຍຕອບວ່ຳ "ຂ້ອຍຊ ເອ ໄປ ້ຳ ເ ຣ ", ຈ່ຳຊ ນ ນ ຕ ຊ ຈ ່ຳ ວ່ຳ "ເ ັ ນ ະເ ໄປ ".ຂ້ອຍ ະແ ນໄປ ຫ ເ ຣ ແ ັ ບ ່ ຢ ່, ັ ນ ອ ກ ໄ ໂ ຫ ມ ້ ອ ຍ, ເ ້ ຊ ້ ັ ດ ຫ ວ ່ ຂ ້ ອ ຍ ຈ ຈ ກ ັ ນ ຂ ດ.

ອ ກ ເ ື ອ ນ ຫ ່ ໆ ຜ ່ ນ ໄ ປ : ເ ຣ ມ ີ ທ ່ ທ ີ ປ ະ ນ ີ ປ ະ ນ ອ ມ ກ ັ ບ ພ ວ ກ ເ ຮ ົ ່ ແ ລ ະ ດ ້ ວ ຍ ຄ ວ ມ ມ ຸ ນ ນ ະ ແ ບ ບ ເ ກ ່ ົ ນ ໆ ໄ ດ ມ ຊ ຊ ີ ຂ ໍ ຮ ້ ອ ງ ນ ຳ ຂ ້ ຳ ພ ະ ເ ຈ ້ ຳ ໃ ຫ ້ ອ ະ ນ ຸ ຍ ຳ ດ ນ ັ ນ ປ ຳ ດ ທ ້ ອ ໆ , ນ ັ ນ ອ ິ ຕ ກ ກ ັ ງ ວ ນ ນ ຳ ກ ຳ ນ ອ ອ ກ ລ ກ ຫ ລ ຍ . ຊ ນ ແ ວ ດ ສ ະ ຕ ຣ ິ ບ ປ ຳ ກ ິ ດ ຕ ິ ອ ຂ ນ ໃ ນ ນ ິ ຄ ມ ອ ກ ແ ລ ະ ກ ະ ໂ ຕ ກ ຳ ລ ຳ ແ ຕ ງ ໂ ກ , ອ ້ ຍ ບ ່ ຳ ວ ຜ ູ ້ ມ ີ ຫ ົ ວ ຄ ິ ດ ເ ລ ກ ແ ລ ະ ຄ ນ ຫ ນ ໍ ່ ໆ ກ ຈ ນ ບ ໍ ່ ຮ ູ ້ ຈ ະ ວ ່ ຳ ແ ນ ວ ໃ ດ ໄ ດ ້ ແ ຕ ່ ວ ຳ ແ ຂ ນ ອ ອ ກ ກ ວ ້ ຳ ງ ໆ ເ ວ ້ ຳ ວ ່ ຳ :

-ເ ລ ຍ ບ ໍ ່ ເ ຂ ້ ຳ ໃ ຈ ຫ ຍ ງ ຫ ນ ດ ! ບ ຳ ດ ນ ້ ໍ ພ ວ ກ ເ ຮ ຳ ເ ລ ຍ ຊ ເ ອ ຳ ກ ນ ຄ ນ ອ ກ .

ຊີວິດຂອງພວກເຮົາແລ່ນໄປຕາມກະແສຂອງມັນ, ຢູ່ໃນຂະບວນລົດໄຟຂອງພວກເຮົາ ມີຊີວິດຊີວາຫລາຍກວ່າເກົ່າອີກ, ມັນຈຶ່ງແລ່ນໄປຫນ້າທັງກະຈາຍຄວັນຫອມສີດຂຶ້ນໄປທົ່ວທ້ອງທົ່ງນາທົ່ວພວມຕົ້ນຕີວໃນຍຸກໂຊວຽດ. ປະຊາຊົນໂຊວຽດແນມເບິ່ງຊີວິດຂອງພວກເຮົາແລ້ວກໍພໍໃຈ, ດີໃຈນໍາມັນ. ໃນວັນອາທິດມີຄົນມາຢ້ຽມຢາມພວກເຮົາ ເຊັ່ນພວກນັກສຶກສາ ກໍາມະກອນເປັນກຸ່ມໆ, ພວກຄູສອນ, ນັກຫນັງສືພິມ ແລະ ຜູ້ຕາງຫນ້າຂ່າວສານ. ຢູ່ໃນຫນ້າຫນັງສືພິມ ແລະ ວາລະສານລາຍສອງອາທິດ ມີບົດຄວາມສັ້ນໆແບບງ່າຍໆເປັນກັນເອງ ເວົ້າເຖິງພວກເຮົາ, ມີຮູບພວກເດັກນ້ອຍ, ປ້າຍຕິດຢູ່ຫນ້າຄອກຫມູ, ໂຮງຊ່າງໄມ້. ພວກແຂກອໍາລາຈາກພວກເຮົາດ້ວຍຈິດໃຈອ່ອນໂຍບລົງຫນ້ອຍຫນຶ່ງ ຍ້ອນສະພາບຄວາມຫລູຫລາແບບກ່ອນຕົວຂອງພວກເຮົາ, ພວກເພື່ນບົນມິດໃຫມ່ຂອງພວກເພື່ນແຮງໆ ທັງຕອບຄໍາເຊື້ອເຊີນໃຫ້ມາຢ້ຽມຢາມອີກຄັ້ງໃຫມ່ຂອງພວກເຮົາດ້ວຍການຄໍານັບແບບພວກເຮົາ ແລະ ຕອບສັ້ນໆວ່າ "ຈ້າວ!".

ເພື່ນສິ່ງແຂກຕ່າງປະເທດມາຢາມພວກເຮົາຫລາຍຂຶ້ນ. ພວກສຸພາບບຸລຸດນຸ່ງເຄື່ອງໂກ້ເສືອດຕາເບິ່ງຄວາມອຸດົມສົມບູນສະໄຫມດຶກດໍາບັນຂອງພວກເຮົາຢ່າງສຸພາບ, ແນມເບິ່ງຄວາມເກົ່າແກ່ຂອງປະຕູກົ່ງໃນສົນ ແລະ ສົ້ງອ້ຽງຜ້າຝ້າຍຂອງພວກເດັກນ້ອຍ. ພວກເຮົາບໍ່ສາມາດເຮັດໃຫ້ພວກເຂົາຕື່ນເຕັ້ນປະທັບໃຈໃນຄອກົ່ວຂອງພວກເຮົາຊໍ້. ແຕ່ໃບຫນ້າແຈ່ມໃສມີຊີວິດຊີວາຂອງພວກເດັກນ້ອຍ, ຄວາມເອົາຈິງເອົາຈັງຕ່ໍວຽກງານ, ອາລົມຕະຫລົກເລິກໆທີ່ແຝງຢູ່ໃນສາຍຕາ ຍາມເສືອດເບິ່ງກົ່ງຂາຫລາກສີ, ເສັ້ນອກເຂົ້ນກັ້ນ,

ໃບຫນ້າສະອາດອ່ຽມ ແລະ ປົ້ມບັນທຶກນ້ອຍຂອງແຂກຍັ່ງມຢາມ ພຸ້ນທີ່ເຮັດໃຫ້ພວກເພິ່ນປະຫລາດໃຈ.

ແຂກຕ່າງປະເທດສໍ້ສິນ ລ່ານແປດ້ວຍຄຳຖາມເຈາະຈົ້ມຫລາຍ ຂໍ້ ແລະ ບໍ່ເຊື່ອຈັກຫນ້ອຍວ່າພວກເຮົາໄດ້ນ້ຳທະລາຍກຳແພງວັດ ລົງແລ້ວ... ເຖິງແມ່ນວ່າໃນເວລານັ້ນບໍ່ເຫລືອຮ່ອງຮອຍກຳແພງນັ້ນ ເລີຍ, ພວກເພິ່ນຂໍເວົ້າລົມກັບເດັກນ້ອຍໂດຍກົງ, ຂ້າພະເຈົ້າຕົກ ລົງໂດຍມີຂໍ້ແລກປ່ຽນວ່າບໍ່ໃຫ້ສຳພາດກ່ຽວກັບອະດີດຂອງ ພວກເຂົາ ຈັກຄວາມ. ພວກເຂົາພາກັນສົງໄສຢ່າງແຮງ ແລະ ເລີ່ມຖົກຖຽງ ກັນ. ລ່ານໄດ້ບອກຂ້າພະເຈົ້າຢ່າງເກງໃຈວ່າ:

- ພວກເຂົາຖາມວ່າ: ເປັນຫຍັງທ່ານຈຶ່ງຕ້ອງປຶດບ້ຽອະດີດຂອງ ພວກນັກຮຽນ? ຖ້າເຂົາເຄີຍຊ່ວມາແລ້ວ, ສິ່ງດັ່ງກ່າວກໍ່ຍັ່ງເປັນກຽດ ຢ່າງສູງສຳລັບທ່ານ.

ເມື່ອຂ້າພະເຈົ້າຕອບຄືນ, ລ່ານຈຶ່ງແປໃຫ້ຢ່າງບໍ່ມີຄວາມສັບ ສົນລັ່ງເລຈັກຫນ້ອຍວ່າ:

- ພວກເຮົາບໍ່ຢາກໄດ້ກຽດອັນນີ້. ຂ້ອຍຮຽກຮ້ອງຂໍໃຫ້ມີແຕ່ ຄວາມລະມັດລະວັງງ່າຍໆປະກົບປະກາບຂໍ້ດຽວນີ້. ພວກເຮົາເອງກໍ່ບໍ່ ສົນໃຈຢາກຮູ້ປະຫວັດຂອງແຂກທີ່ມາຢ້ຽມຢາມ.

ແຂກຍັ່ງມພາກັນຍິ້ມແຍ້ມແຈ່ມໃສ ທັງົກຫົວເຫັນພ້ອມແບບ ເປັນກັນເອງ:

- ໂອ... ແຢສ... ແຢສ!

ແຂກລາໄປຂຶ້ນລົດໂອໂຕຄັນງາມຂອງພວກເຂົາແລ້ວ ສ່ວນພວກ ເຮົາກໍ່ສືບຕໍ່ດຳລົງຊີວິດຂອງພວກເຮົາໄປ.

ເກີ່ງລະດູໃບໄມ້ຫລົ່ນ ນັກຮຽນກຸ່ມຫນຶ່ງກໍລາຈາກພວກເຮົາໄປ ອີກ ເພື່ອໄປເຂົ້າຮຽນຕໍ່ວິທະຍາໄລກຳມະກອນ. ອີກຄັ້ງຫນຶ່ງລະດູ ຫນາວກ້າວມາຢາມ, ພາຍໃນຫ້ອງຮຽນພວກເຮົາໄດ້ພາກັນເຝົ້າພຽນ ອິດທິນກໍ່ສ້າງເສັ້ນທາງເດັດດ່ຽວມຸ່ງສູ່ການສຶກສາວັດທະນະທຳ.

ແລະ ແລ້ວ... ລະດູບານໃຫມ່ກໍຫມູນວຽນມາຮອດອີກຄັ້ງ ຫນຶ່ງ! ມັນຢູ່ກັບພວກເຮົາຢ່າງພ້າວພັ່ງ! ພຽງສາມມື້ເທົ່ານັ້ນ ທຸກ ຢ່າງກໍອາວະສານແລ້ວ. ຕາມທາງຍ່າງດົນແຂງ ແລະ ຮາບພຽງນັ້ນ ຫລຶບຫີມະແຂງເປັນຊັ້ນນ້ອຍໆພວມຫຸດນ້ອຍໄປ. ໃຜຜູ້ຫນຶ່ງຍ່າງ ກາຍມາຕາມທາງໃຫຍ່ ພ້ອມດ້ວຍສຽງຄຸກໆເປົ່າຕຳກັນດັງຢູ່ເທິງ ກອງນໍ້. ທ້ອງຟ້າເປັນສີຄາມສົດໃສປອດໂປ່ງ, ຜືນທຸ່ງປົວສະບັດ ພົບໆເມື່ອກີ້ກລິ່ນອຸ່ນແຫ່ງລະດູບານໃຫມ່ລ່ວງຕຳແຮງເປັນລ່ຳ. ປະຕູ ໃຫຍ່ເຂົ້າຫ້ອງສະໂມສອນໄຂກ້ວ້າງທັງສອງບານ ແລະ ຢູ່ພາຍໃນ ຫ້ອງໂລ່ງທີ່ແຈ່ມໃສສົດຊື່ນ ທຸກສິ່ງທຸກຢ່າງສະອາດໃສອ່ອງຕ່ອງ ໄປຫມົດ, ພາຍຫລັງການລ້າງຖູຢ່າງຄັກແລ້ວພວກເຮົາໄດ້ເອົາຜ້າ ພົມຜືນຫນຶ່ງມາປູໃສ່.

ຢູ່ໃນເຮືອນແກ້ວນ້ອງກາງນຫລາຍອັນຫລາຍແນວພວມດຳ ເນີນ ໄປຢ່າງຊຸ້ນຂ້ຽວ. ຕອນກາງເວັນສາດກໍ່ຮ້ອອກ ຍັງເຫລືອແຕ່ຫລັງ ຄາແກ້ວກັບເສົາຄ້ຳນັ້ນ. ພວກເດັກນ້ອຍທ້ຽງ ແລະ ຊາຍນັ່ງຢູ່ ໃກ້ໆ, ໃນມືໄມ້ຄ້ອນປາຍແຫລມໆສັກຮູຍອດແນວເຂົ້າປູກ ທັງໂອ້ ລົມກັນບໍ່ຂາດສົບຂາດປາກ. ເຊເນຍຊວກບິນາ ນາງນ້ອຍຫນ້າຮັກ ຜູ້ຫາກໍເຫັນເສງສະຫວ່າງເປັນຄັ້ງທຳອິດໃນປີ ໑໙໘໔ ແລະ ເທື່ອ ນີ້ເປັນຄັ້ງທຳອິດທີ່ໄດ້ສຳຜັດກັບພົນດິນຢ່າງອິດສະຫລະເສລີ ແນ

ເບິ່ງຫລຸມເລິກເພື່ອຝັງເສົາ, ແລ້ວເສືອດຕາກ້ວາມໄປເບິ່ງໂຮງມ້າ ເພາະຮູ້ວ່າບັກນ້ອຍຢູ່ໃນນັ້ນ, ບາດແລ້ວຈຶ່ງຕັ້ງຄຳຖາມທີ່ນາງສົນໃຈ ອອກມາວ່າ:

-ແລ້ວ... ແມ່ນໃຜຊິໄກລະຫນໍ? ພວກຜູ້ຊາຍແມ່ນບໍ? ແລ້ວ ເພິ່ນໄກແບບໃດເນາະ?

ພວກໄທບ້ານສະເຫລີມສະຫລອງບຸນວັນເກີດໃຫມ່ຂອງພະເຍ ຊູເຈົ້າ. ຫນິດຄືນພວກເຂົາພາກັນມາແຫຍ້ອ້ອງອໍຢູ່ໃນເດີ່ນ ທ້ຳຫອບ ຫ້ວຫ່ໍເຕ່ືອງ ແລະ ທຽນໃຫຍ່. ຕະຫລອດຄືນມີຜູ້ຂຶ້ນໄປຕີລະຄັ້ງຢູ່ ເທິງຫໍລະຄັ້ງ, ຮອດມື້ເຊົ້າຈຶ່ງກະຈາຍແຍກຍ້າຍເພື່ອທຳລາຍຄວາມ ຫິວ ແລະ ກໍກັບມາໃນສະພາບເມົາມາຍກະຈາຍກັນອອກທົ່ວບ້ານ ແລະ ອ້ອມບ້ານ. ແຕ່ພວກເຂົາບໍ່ຢຸດຢູ່ຄ່ານີ້ເລີຍ ແຕ່ປ່ຽນຜຽນກັນ ປີນຂຶ້ນຫໍລະຄັ້ງແລ້ວຕີລະຄັ້ງຫນິດແຮງ. ໃນທີ່ສຸດນາຍກອງປະຈຳ ວັນຂອງພວກເຮົາກໍເລີຍປີນຂຶ້ນໄປຕີກັນແລ້ວຈຶ່ງໄລ່ພວກເຂົາເຫລົ່ ນັ້ນກັບຄືນໄປບ້ານ. ຄະນະກຳມະການວິຫານໃນຊຸດເສື້ອໃຫຍ່ວັນ ບຸນພ້ອມດ້ວຍລູກຊາຍ ແລະ ອ້າຍນ້ອງພວກເຂົາໂທ້ມາຮ້ອງໂຮ, ຜູ້ກ້າຫານກວ່າຫມູ່ເກົ່ງກັບຮ້ອງດ່າວ່າ:

-ພວກສູບໍ່ມີສິດ! ອຳນາດໂຊ່ງດອະນຸຍາດໃຫ້ສະຫລອງວັນ ບຸນສາດສະຫນາ! ຕີລະຄັ້ງໄດ້! ບຸນຕ້ອງເປັນບຸນ! ແມ່ນໃຜມາ ຫ້າມບໍ່ໃຫ້ຕີລະຄັ້ງ!

-ບໍ່ຈຳເປັນຕີລະຄັ້ງເຈົ້າເມົາແລ້ວ!

ລາປົດ ຕອບ.

- ມັນບໍ່ແມ່ນວຽກຂອງນ້ຽງດອກ, ກູຊິເມົ້າ ຫລືບໍ່ເມົ້າ ແຕ່ເປັນຫຍັງຈ່ຳບໍ່ໃຫ້ຕີລະຄ້ຽລະ?

- ພໍ່ເກົ້າເອ້ີຍ! - ກູດລາຕ ຕອບ, - ບອກຊ່ຳເດ້ ພວກເຮົາຫນອກຫູຊິຕາຍຢູ່ແລ້ວ... ເຈົ້າເຂົ້າໃຈບໍ່? ບຸນນ້ີມັນແມ່ນບຸນຫຍັງລະ? ພະເຍຊູເຈົ້າມາເກີດຄືນແມ່ນບໍ່? ແລ້ວມັນກ່ຽວຂ້ອງກັບເຈົ້າບ່ອນໃດລະ? ຢູ່ບ້ານ ໂປດອອກກ ພຸ້ນ ບໍ່ມີໃຜຟ້ືນຊີບຄືນຕ່ຳເບາະ? ບໍ່ມີຈັກຄົນ, ແລ້ວເປັນຫຍັງພວກເຈົ້າຈ່ຳໄປສົນນຳລະ, ມັນບໍ່ແມ່ນວຽກພວກເຈົ້ເກາະ!

ພວກຄະນະກຳມະການວິຫານເຊຫ໊ອດອນຢູ່ກັບບ່ອນ, ຍົກແຂນຂ້ຶ້ນທ້ັງຮ້ອງວ່ຳ:

- ບໍ່ມີຫຍັງຫຍຸ້ງກ່ຽວ... ຕີລະຄ້ຽທ໊ັ້ນ ຕີແລ້ວກະແລ້ວ!

ພວກເດັກນ້ອຍພາກັນເກາະແຂນເຮ໊ດເກ໋ວຍາວໆ ແລ້ວຍຸ້ດັນພວກຂ້ຶເມົ້າອອກໄປ.

ໂກເຊຍ ແນມເບ່ິ່ງຢູ່ໄກໆ, ຍົກມ໊ືລຸບຫນວດເຄ້ົາຢ່ຳງບໍ່ເຫັນດີນຳ.

- ຈັ່ງແມ່ນພວກເຂົ້ຳຂ້ຶ້ຮ້ຳຍ, ເຮ໊ດໃຫ້ໂຕເອງ... ສະເຫລ໊ືມສະຫລ໋ວຍຢູ່ບ້ານໂຕເອງງ່ຽບໆແລ້ວກະແລ້ວ... ບໍ່ພໍໃຈ ມາຫ່ຳວຸ່ນວ່ຳຍຫມູ່... ໂອ້ຍ ພວກຈ້ຳເອ້ີຍ!

ຕອນຄ່ຳບ້ານປະຊ່ຳຊົນພຸ້ນມ໊ືການໄລ່ແທ່ງໄລ່ຂ້ຳກັນ ບໍ່ຈັກຜິດກ່ຽງບ້ອຍດ່ຳສ່ຽງອ໊ືກກະທ໊ືກ ເພ່ິ່ນເອ້ົາຄົນເຈັບມ່ຳສ່ິ້ງໃຫ້ພວກເຮ້ົາຢູ່ໂຮງຫມໍ້ນ້ອຍຫລ່ຽຍກວ່ຽນ, ມ໊ືຜູ້ເລ໊ືອດຍ້ອຍ ບ່ຳດແຜເຕ້ັນໂຕ. ຕ່ຳຫລວດກອງຫນ໋ຶ່ງມ່ຳແຕ່ໃນເມ໊ືອງເພ່ິ່ອລະງ້ັບເຫດກ່ຳນ. ຢູ່ຕ໋ຳຫນ້ຳ

ຕຶກໂຮງຫມໍ ມີພວກພໍ່ແມ່ອ້າຍນ້ອງຫມູ່ຄູ່ ແລະ ຜູ້ຮູ້ເຫັນເຫດ
ການລໍຄອຍເຕັ້ນໄປຫມົດ, ໃນນັ້ນກໍມີພວກກໍາມະການວິຫາຄກັບ
ລູກຊາຍ ແລະ ນ້ອງຊາຍພວກເພິ່ນນໍາອີກ. ພວກເດັກນ້ອຍນິຄົມ
ກາມເຍ້ີ ທັງຫົວໃສ່ຫນ້າວ່າ:

-ວ່າຈັ່ງໃດພໍ່ເກົ້າ, ຊິໃຫ້ຕີລະຄ້ອງອີກບໍ?

...ຫລັງຈາກບຸນສະຫລອງນີ້ແລ້ວ ມີສຽງຊ່າລືດັງມາເຂົ້າຫູ
ພວກເຮົາວ່າ: ຢູ່ຟາກເມືອງ ຄາຄົບ ອີກເບ້ືອງຫນ່ຶງພຸ້ນ ຄະນະກໍາ
ມະການ ເກ. ເປ. ອູ*. ໄດ້ສ້າງອາຄານຫລັງໃຫມ່ໃຫ້ແກ່ນິຄົມ
ເດັກແຫ່ງຫນ່ຶງ, ນິຄົມນັ້ນຈະບ່ໍຂຶ້ນກັບກະຊວງສຶກສາປະຊາຊົນ ແຕ່
ຈະຂຶ້ນກັບຄະນະກໍາມະການ ເກ. ເປ. ອູ. ພວກເດັກນ້ອຍຮັບຮູ້
ຂ່າວນ້ີຄ້າຍກັບວ່າ ມັນແມ່ນຕິວແທນຂອງຍຸກສະໃຫມຫນ່ຶງ:

-ເພິ່ນສ້າງຕຶກໃຫມ່ຫລັງຫນ່ຶງ, ໃຫມ່ອ່ຽມເລີຍນ່າ ເຈົ້າຄິດ
ເບ່ິງ!

ກາງລະດູຮ້ອນ ລົດໂອໂຕຄັນຫນ່ຶງແລ່ນມາຈອດຢູ່ນິຄົມ ແລ້ວ
ບຸລຸດໃສ່ເສ້ືອຄໍແຂບແດງກໍບອກຂ້າພະເຈົ້າວ່າ:

-ຂໍເຊີນເຈົ້າມານໍ ກ້າວ່າເຈົ້າພໍມີເວລາ, ໄປກັບພວກເຮົາ
ເລີຍ. ພວກເຮົາສ້າງຕຶກຫລັງນັ້ນໃກ້ຈະແລ້ວໆ ສໍາລັບນິຄົມ ເຊກ
ຊິນສະກີ... ຄວນໄປເບ່ິງແດ່... ເບ່ິງວ່າໃນແງ່ສຶກສາສາດມັນຈະ
ເປັນແນວໃດ...

ພວກເຮົາອອກເດີນທາງໄປນໍາກັນ.

---

* ເກ. ເປ. ອູ: ແມ່ນຊື່ຕັ້ງໃຫມ່ໃຫ້ແກ່ອົງການ ເຊກາ.

ຂ້າພະເຈົ້າຕົ້ນຕະລຶງຕໍ່ສິ່ງທີ່ໄດ້ເຫັນ. ເປັນໄປໄດ້ຫວະ? ເດັກນ້ອຍໄຮ້ຍາດຈະໄດ້ຢູ່ເຮືອນຕຶກໃຫຍ່ກາງແດດ ສະຫວາດສະເຫວີຍປານນີ້? ພົ້ນປູ ໄມ້ດີ ແລະ ເພດານທາສີສວຍງາມຢ່າງນີ້?

ຂ້າພະເຈົ້າບໍ່ໄດ້ຄຶດຝັນໄປລ້ຽງເລີຍ ຕະຫລອດເວລາ ๗ ປີ. ຂ້າພະເຈົ້າເຄີຍຝັນເຫັນ ฝ00 ຫໍຜາສາດໃຫຍ່ປານນີ້ ມາເປັນບ່ອນກະຈາຍວິທະຍາສາດການສຶກສາ. ດ້ວຍຄວາມຮູ້ສຶກຄຶງດເຄ້ນ ແລະ ອຶດສາ, ຂ້າພະເຈົ້າຂະຫຍາຍອະທິບາຍ "ທັດສະນະໃນດ້ານສຶກສາສາດ" ໃຫ້ທ້າວ ເຊກາ ຜູ້ນັ້ນຟັງ, ເຂົາຍອມຮັບນັ້ນດ້ວຍຄວາມເຊື່ອຫມັ້ນວ່າ ນັ້ນເປັນຫມາກຜົນຈາກປະສົບການຂອງການເປັນຄູສອນຂອງຂ້າພະເຈົ້າ ແລ້ວຂອບໃຈຂ້າພະເຈົ້າຕາມທຳນຽມ.

ຂ້າພະເຈົ້າກັບມານິຄົມ. ຫົວໃຈຮ້ອນຮຸ່ມດ້ວຍຄວາມອຶດສາ. ແມ່ນຊາຍໂຊກດີຄົນໃດນໍ ຈະໄດ້ເຂົ້າໄປເຮັດວຽກຢູ່ໃນຫໍຜາສາດຫລັງນີ້? ການສ້າງຕຶກອາຄານໃຫຍ່ນັ້ນນັ້ນບໍ່ຫຍຸ້ງຍາກເລີຍ ແຕ່ນັ້ນຍັງມີຂົງຫນ້ຳພຸ້ນທີ່ຍາກກວ່າ. ເຖິງຢ່າງໃດກໍຕາມ ຂ້າພະເຈົ້າບໍ່ຄຶດເຈັບແຄ້ນເຫລືອໃຈຢູ່ດົນດອກ. ຫນ່ວຍຊີວິດໂຮມຫມູ່ຂອງຂ້າພະເຈົ້ານັ້ນບໍ່ມີຄ່າສູງກວ່າຫໍຜາສາດຈັກຫລັງພຸ້ນຫວະ?

ນາຮອດເດືອນ ກັນຍາ, ເວຣາ ກໍອອກລູກເປັນຜູ້ຊາຍ. ສະຫາຍ ນາງໂຊຢາ ມາຍັງນິຄົມ, ຫລັງຈາກອັດປະຕູຮ່ຽບຮ້ອຍແລ້ວ ນາງກໍໂຈມຕີຂ້າພະເຈົ້າຢ່າງກ້ຽງໂລດ:

- ພວກເດັກນ້ອຍແມ່ຍິງຢູ່ນິຄົມເຈົ້າອອກລູກຫວະ?

- ເປັນຫຍັງຈຶ່ງເວົ້າວ່າ "ພວກ" ແລະ ຍ້ອນຫຍັງເຈົ້າຢ້ານຈົນຕາເຫລືອກຕາລານແນວນີ້?

- ກາມໄດ້ວ່າເປັນຫຍັງ "ຂ້ອຍຈ່ຳຍ້ານຕາເຫລືອກຕາລານ" ພວກແມ່ຍິງອອກລູກ... ຊັ້ນຫວະ?

- ບໍ່ໃຫ້ເຂົາອອກລູກ ແລ້ວຊິໃຫ້ເຂົາອອກຫຍັງ?

- ສະຫາຍຢ່າເວົ້າຫລ້ຳ!

- ຂ້ອຍບໍ່ໄດ້ເວົ້າຫລ້ຳ.

- ຕ້ອງຂຽນເຮັດຫນັງສືໂລດໃດ໋.

- ທາງກອງທະບຽນເຂົາເຮັດທຸກສິ່ງທຸກຢ່າງແລ້ວຮຽບຮ້ອຍ.

- ກອງທະບຽນກັບພວກເຮົາເປັນສອງສ່ວນ, ຕ້ອງເຮັດຫນັງສືຕ່ໍ.

- ບໍ່ມີໃຜມອບອຳນາດໃຫ້ພວກເຮົາມີສິດເຮັດໃບຊາຕ່ຳ.

- ບໍ່ແມ່ນເຮັດໃບຊາຕ່ຳ... ເຮັດຫນັງສືອ່ຳ... ຮ້າຍກ່ວ່ານັ້ອີກ.

- ຊິມີຫນັງສືຫຍັງຮ້າຍກ່ວ່າໃບຊາຕ່ຳອີກ... ຕາມຂ້ອຍຮູ້ນັ້ບໍ່ມີອີກແລ້ວ... ແມ່ນແຕ່ ໂຊແປນຮາວເວ* ຫລ່ວ່າໃຜອີກບຸກ໋ຍັງເວົ້າໄວ້...

- ສະຫາຍ, ເຊົ້າເວົ້າສຽງແບບນ້ັ້ເທາະ.

- ຂ້ອຍຊິບໍ່ເຊົ້າ.

- ເຈົ້າຊິບໍ່ເຊົ້າເວົ້າສຽງແບບນ້ັ ຫມາຍຄວາມວ່າແນວໃດ?

- ຕ້ອງບອກກັບເຈົ້ຍ່າງຈິງຈັງກ່ອນ ມັນຫມາຍຄວາມວ່າຂ້ອຍເບ່ືອຂ້ອຍອ່ືມທຸກຢ່າງ... ເຈົ້າເຂົ້າໃຈບໍ່, ຂ້ອຍເບ່ືອພໍ່ແຮງແລ້ວ... ເຊ່ືນເຈົ້ກັບເມ່ືອໄດ້, ບໍ່ມີຫຍັງໃຫ້ຂຽນໃຫ້ເຮັດດອກ!

---

* ນັກປັດຊະຍາທຸກຂະທັດນິຍົມ.

- ດີຫລາຍ!

ນາງກັບໄປແລ້ວ ແລະ ບໍ່ມີຫຍັງເກີດຂຶ້ນພາຍຫລັງຄຳວ່າ "ດີຫລາຍ" ຂອງນາງອີກ.

ເວຣາ ປະຕິບັດຕົນເປັນແມ່ທີ່ດີ, ເອົາໃຈໃສ່ດູແລ ແລະ ຫ່ວງໃຍລູກນ້ອຍຂອງນາງເປັນຢ່າງດີ. ຂ້າພະເຈົ້າຊິຢາກໄດ້ຫຍັງອີກ? ພວກເຮົາຫາວຽກໃຫ້ນາງເຮັດຢູ່ພະແນກບັນຊີ.

ພວກເຮົາກ່ຽວເຂົ້າຝາດເຂົ້າແລ້ວ ແລະ ຈັດມ້ຽນທຸກຢ່າງໄວ້ຮຽບຮ້ອຍແລ້ວ, ໂຮງຊ່າງຕ່າງໆແຫ້ນນັ່ງໄປ້ດອຍວັດກຸດິບທີ່ໄດ້ຮັບມາໃຫມ່ໆ.

ຝອຍຫິມະໂຮຍຮຳລິງມາແຕ່ຫ້ວປີ, ມື້ຫນຶ່ງກ່ອນນັ້ນອາກາດຍັງອົບອຸ່ນຢູ່ເລີຍແຕ່ໃນຕອນກາງຄືນຝອຍຫິມະ ໄດ້ບິນຮ່ອນລົງມາມິດໆທ້ຳຄ່ຳມຄືນເພື່ອໂອບພຶນດິນກູເຮຍແຊ ໄວ້. ນາງນ້ອຍ ເຊເນຍ ຊວກບິນາ ຟາງຂ້ຳຕາລຸກຂຶ້ນມາໃນຕອນເຊົ້າ, ອອກມາຢືນຢູ່ເກີຍຊານ ຕ່ຳຕາຢູ່ຫ້ວບ່ຳຂອງນາງເບິ່ງແຜ່ນພຶນສີຂາວໃນເດິ່ນແລ້ວຮ້ອງສຽງຕົ່ນເຕ້ນວ່າ:

- ຕາຍແລ້ວ... ແມ່ນໃຜເອົາເກືອມາໂຮຍເຕັມເດິ່ນ?... ແມ່ເອີ... ຕ້ອງແມ່ນພວກຜູ້ຊາຍຄັກໆຕວ່າ!

ບົດທີ ໑໓

"ຈ່ອຍບັກນ້ອຍນີ້ແດ່"

ອາຄານຂອງນິຄົມ ແຊກຊຶນສະກີ ກໍ່ສ້າງສຳເລັດແລ້ວ. ເຮືອນຕຶກສີຫມົ່ນງົດງາມຫລັງນີ້ປຸກຕັ້ງຢູ່ແຄມປ່າຕົ້ນໄມ້ໃຫຍ່ ໂອ໊ກ ແລະ

ປົ່ນຫນ້າໄປທາງເມືອງ ຄາຄົບ, ສີຝາແອ້ມຂອງມັນແຈ່ມໃສເຫລື້ອມ ແມ້ບໆດີ. ພາຍໃນມີຫ້ໍພັກຫ້ອງສູງໂລ່ງແຈ້ງ, ຫ້ອງຕ່າງໆລ້ວນ ແຕ່ປອດໂປ່ງ, ຂັ້ນໄດຂຶ້ນກວ້າງຂວາງມີທ້ັງຮູບແຕ້ມ ແລະ ຜ້າມ່ານ ກ້ັງຮຸງບຮ້ອຍ. ທຸກສິ່ງທຸກຢ່າງໃນນິຄົມນັ້ນໄດ້ເຮັດຂຶ້ນດ້ວຍຄວາມ ຮອບຄອບເຫມາະສົມ ເຊ່ິງບໍ່ເປັນແບບນິຄົມຂອງກະຊວງສຶກສາປະ ຊາຊົນຈັກຫນ້ອຍ.

ມີສອງຫ້ອງກ໊ືກຈັດໄວ້ເປັນໂຮງຊ່າງນ້ອຍ ຢູ່ແຈຫນ່ໍາຂອງຫ້ອງ ຂ້າພະເຈ້ົາເຫັນວ່າແມ່ນໂຮງຊ່າງເຮັດເກີບ ຂ້າພະເຈ້ົາຮູ້ສຶກຕ່ືນເຕ້ັນ ແປກໃຈເປັນທ່ີສຸດ.

ໂຮງຊ່າງໄມ້ມີອຸປະກອນຢ້ັງມເລີຍ, ແນມເບ່ິງກ໋ໍພໍ້ຮູ້ໂລດວ່າ ຢູ່ໃນຂະແຫນງການນ້ີນ້ັກຈັດຕ້ັງບ່ໍມີຄວາມແນ່ນອນໃຈຕົນເອງເລີຍ.

ຜູ້ກ໋ໍ່ສ້ົາງຕ໊ກ່ນິຄົມໄດ້ມອບຫມາຍໃຫ້ຂ້າພະເຈ້ົາ ແລະ ນິຄົມ ກ້ອກ໊ີ ກະກຽມພ້ິໃຈສະການທ່ີໃຫມ່ແຫ່ງນ້ີ. ຂ້າພະເຈ້ົາແຕ່ງຕ້ັງ ກຽກ໊ີຊອບ ເປັນຫ໊ົວຫນ້າຄະນະ, ເບ່ິງພວກເຂົາສຸມຈິດໃຈເຮັດ ວຽກໃຫມ່ອັນນ້ີຈົນເງ່ຍຫ໊ົວບ່ໍ້ຂຶ້ນ. ກອມມູນແຊກຊົນສະກ໊ີ ມ໊ີບ່ອນ ພຽງພໍສໍາລັບເດັກນ້ອຍຮ້ອຍຄົນເທ່ົານ້ັນ, ແຕ່ນ້ີແມ່ນອານຸສອນຂອງ ແຊກຊົນສະກ໊ີ, ແລະ ພວກ ເຊກາ ອຸ້ກຣາອ້ົນ ທ່ີໄດ້ທຸ້ມເທໃສ່ກອມ ມູນນ້ີ ບ່ໍພຽງແຕ່ດ້ານເງ້ນຄໍາເທ່ົານ້ັນ, ແຕ່ຕະຫລອດເວລາຫວ່າງ ທ້ັງຫມົດ, ພ້ອມທ້ັງພະລ້ັງຈິດໃຈ ແລະ ແນວຄິດອ໊ີກດ້ວຍ. ແຕ່ ສ໊ິງດຽວທ່ີພວກເຂົາເຈ້ົາບ່ໍສາມາດມອບໃຫ້ແກ່ກອມມູນໃຫມ່ໄດ້, ກ໋ໍ ຄ໊ືພວກ ເຊກາ ບ່ໍມ໊ີຄວາມຮູ້ທາງດ້ານທ໊ິດສະດ໊ີ. ແຕ່ວ່າພວກເຂົາ ເຈ້ົາກ໋ໍບ່ໍໄດ້ຢ້ານກ໊ົວຕ໋ການປະຕ໊ິບ໊ັດຕ໊ິວຈ໊ິງທາງດ້ານວ໊ິຊາການຄູ໊ເລີຍ,

ຂ້າພະເຈົ້າຄຶດສິ່ງໃສ່ຍາກຮູ້ວ່າພວກສະຫາຍຈາກ ເຊກາເຫລົ່ານີ້ຈະຜ່ານຜ່າບາດກ້າວຫຍຸ້ງຍາກບາດກ້າວນີ້ແບບໃດ. ແນ່ນອນວ່າພວກເຂົາອາດເບິ່ງຂ້າມທຶດສະດີໄດ້ ແຕ່ວ່າທຶດສະດີນັ້ນຕ໊ຈະຍອມເບິ່ງຂ້າມພວກເຊກາ ບໍ່? ຢູ່ໃນທຸລະກິດໃຫມ່ອ່ຽນອັນນີ້ທ໊ັ່ງເປັນບ່ອນວາງທຶນຮອນຫລວງຫລາຍສ໋ຳຄັນເທ໋ົ່ານີ້ ເພິ່ນບໍ່ໄດ້ເນັ້ນຍ້ຳແລ້ວເບາະວ່າໃຫ້ນ໋ຳໃຊ້ຜົນການຄົ້ນຄ້ວ້ໃຫມ່ອ່ຽນ ຂອງວິທະຍາສາດການສຶກສາ ເຊັ່ນວ່າ "ລະບົບບໍລິຫານພາຍໃນຕົນເອງແບບໃຕ້ດິນ". ພວກເຊກາ ອາດຈະຍິນຍອມເສຍສະຫລະອາຄານທ໋ົ່ມີເພດານຫາສ໋ີພ້ອມດ້ວຍເຄ໋ື່ອງປະກອບສວຍງາມເຫລົ່ານ໋ີ ເພ໋ື່ອຜົນປະໂຫຍດຂອງວິທະຍາສາດ? ອັນເວລາຕ໋ໍ່ມາພິສູດວ່າພວກເຊກາ ບໍ່ໄດ້ຄຶດວ່າຈະສະຫລະຫຍັງເພ໋ື່ອຫຍັງເລີຍ. ສະຫາຍ ບ. ເຊີນຂ້າພະເຈົ້ານັ່ງເທ໋ົ່າຕ໋ັ່ງນວມໃຫຍ່ເລ໋ືກຢູ່ພາຍໃນຫ້ອງການຂອງລາວ ແລ້ວເວ໋ົ້າວ່າ:

-ຂ້ອຍຢາກຂ໋ໍ້ຮ້ອງນ໋ຳເຈ້ົ້າຢ່າງນ໋ີ: ພວກເຮົາຈະບໍ່ອະນຸຍາດໃຫ້ມ໋ີການທ໋ຳລາຍນ້ຳງເພ໋ື່ອເຫລົ່ານ໋ີຢ່າງເດ໋ັດຂາດ. ແນ່ນອນວ່ານ໋ິຄົມເປັນສ໋ິ່ງຈ໋ຳເປັນ ແລະ ມັນກ໋ໍ່ຄ໋ົງຕ໋ໍ່ຢູ່ຢ່າງນ໋ັ້ນດົນນານ. ພວກເຮົາຮູ້ວ່າ ພວກເຈ້ົ້ามีหบ่อยช๊ิดโรมหมู่ท่ี่ยู่ในละบบบดีแล้อ, จั่งช๊ันเพ๋ื่อเล๋ิ่มต๊ันยู่ท่ัน ขอให้พวกเรำจัก ๕0 ค๋ินแด่ แล้วพวกเรำจะเกับเอำพวกยู่ข้ำงกะหนิมมำต๋ิ่มเอง... เร๊ักแนวน๊ั้พวกเขำจ๋ำยู่ในกิดละบบบ และ ม๊ีอ๊ิบ๊ໍລิหำนเป๊ันของตินเอง โลด... เจ้ำเข๊ำใจละต๋ิ?

ข้าพะเจ้าเข้าใจแท้! ข้าพะเจ้ารู้ย่างดีแน่แล้วว่า บุลุด

ສະຫລຸງວສະຫລາດຄົນນີ້ບໍ່ຮູ້ຫຍັງຫມົດກ່ຽວກັບວິທະຍາສາດການ
ສຶກສາ. ໃນເວລານັ້ນ ຂ້າພະເຈົ້າຮູ້ສຶກວ່າຕົນເອງໄດ້ສ້າງໂທດກຳ
ຢ່າງຫນັກ, ເວັ້ຍຢ່າງຈະແຈ້ງກໍແມ່ນວ່າຂ້າພະເຈົ້າປົດບັງສະຫາຍ ບ.
ວ່າມັນມີວິທະຍາສາດການສຶກສາຢ່າງຫນັກ ແລະ ຂ້າພະເຈົ້າບໍ່ຜິ
ປາກຫຍັງຈັກຄວາມກ່ຽວກັບ "ລະບົບປົກຄອງຕົນເອງແບບໃຕ້ດິນ".
ຂ້າພະເຈົ້າຮັບຄຳລາວວ່າ "ຈ້າວ!" ແລ້ວກໍຖອຍຫ່າງອອກຈາກລາວ
ມາດ້ວຍຝີຕີນຄ່ອຍເບົາ ທັ້ງເສືອກແສງຕາແນມພຸ້ນພ້ອມດ້ວຍຮອຍ
ຍິ້ມແບບຫຍໍ້ຫຍັ້ນຢູ່ບົນຮີມສົບ.

ຂ້າພະເຈົ້າຮູ້ສຶກພາກພູມອອນຊອນໃຈ ທີ່ເພິ່ນມອບໃຫ້ນັກຮຽນ
ຂອງນິຄົມກ້ອກກີ ເປັນຜູ້ຮັບພາລະສ້າງຕັ້ງຫນ່ວຍຊີວິດໂຮມຫມູ່
ໃຫມ່, ແຕ່ນັ້ນຫານີ້ກໍຫາກມີຈຸດອະຫນາດຂອງມັນຢູ່. ຈະມອບ
ພວກຕີເດັ່ນກ່ວາຫມ່ໃຫ້ໄປບໍ? ເປັນໄປໄດ້ບໍ? ນິຄົມ ກ້ອກກີ
ເອງກໍມີຄວາມຈຳເປັນຮັກສາອົງປະກອບປະເພດນີ້ໄວ້ ສຳລັບຕົນເອງ
ບໍ່ແມ່ນຫວະ?

ຄະນະຂອງ ກຽກກີ ຊອບ ເຮັດວຽກສຳເລັດແລ້ວ. ໂຮງຊ່າງ
ໄມ້ຂອງພວກເຮົາໄດ້ສ້າງໂຕະຕັ່ງສຳລັບນິຄົມໃຫມ່ຮຽບຮ້ອຍແລ້ວ,
ແລະ ພວກແມ່ຍິງຊ່າງຕັດຫຍິບກໍລົງມືອອກແບບຕັດເຄື່ອງນຸ່ງສຳລັບ
ຊາວນິຄົມໃນອະນາຄົດ. ຈຳເປັນຕ້ອງໄດ້ວັດແທກກ່ອນເພື່ອຕັດ
ຫຍິບໃຫ້ກົກໂຕ ດັ່ງນັ້ນຈຳຕ້ອງໄດ້ເລືອກເຟັ້ນເອົາສະມາຊິກ ๕๐
ຄົນສຳລັບກອງມູນ ແລກຊຸນສະກີ ນິໂລດ.

ກອງປະຊຸມສະພານາຍກອງໄດ້ສຶກສາຄົ້ນຄ້ວາບັນຫາຢ່າງຈິງຈັງ,
ລາປິດເວົ້າວ່າ:

-ຕ້ອງສົ່ງຄົນດີໄປກອມມູນ ແຕ່ບໍ່ແມ່ນເອົາພວກເກົ່າ. ໃຫ້ພວກເກົ້າແກ່ແລ້ວຫັ້ນຢູ່ເປັນຊາວນິຄົມ ກັອກກີ ຕາມເດີມເກົາຢ່າງໃດອີກບໍ່ດົນພວກເຂົາກໍຈະກ້າວເຂົ້າສູ່ເສັ້ນທາງຊີວິດແລ້ວ.

ພວກນາຍກອງເຫັນດີນຳ ລາປົດ ແຕ່ພໍເກົາເວລາເຮັດບັນຊີລາຍຊື່ບຸກຄົນກໍຊ້ຳນິການກົກກ່ຽງກັນຢ່າງເອົາເປັນເອົາຕາຍ. ທຸກຄົນພະຍາຍາມເລືອກເອົາຜູ້ທີ່ຢູ່ໃນກອງອື່ນ. ວາລະປະຊຸມຍືດເຍື້ອຈົນຮອດເດິກດື່ນທ່ຽງຄືນ ແລະ ໃນທີ່ສຸດພວກເຮົາກໍໄດ້ລາຍຊື່ເດັກນ້ອຍຜູ້ຊາຍ ๔0 ຄົນ ແລະ ແມ່ຍິງ ๑0 ຄົນ. ໃນບັນຊີນັ້ນມີສອງອ້າຍນ້ອງ ເຊເວລີ, ກອກກິບສະກີ, ວາເນຍ ໄຊເຊັນໂກ, ມາລີ ກອບ, ໂອດາຣີຢຸກ, ໂຊເຣັນ, ນິດຊິນອບ, ຊີເນັນກີ, ຊາຣອບ ສະກີ, ກາກດິນອບ, ມາກ ເຊັນຮອສ. ເພື່ອຍວາມຫນັກແຫນ້ນ ແລະແມ່ນກໍລະນີພິເສດແທ້ໆເພິ່ນໄດ້ຕື່ມຊື່ມຊາ ອອບຊາເຣັນໂກ ໃສ່ອີກ. ຂ້າພະເຈົ້າກວດກາເບິ່ງລາຍຊື່ອີກຄັ້ງຫນຶ່ງ ແລະ ຮູ້ສຶກພໍໃຈເປັນທີ່ສຸດ: ພວກເຂົາລ້ວນແຕ່ແມ່ນເດັກເຂັ້ມແຂງກ້າຫານ ແລະ ຫນຸ່ມນ້ອຍຢູ່.

ພວກນັກຮຽນທີ່ໄດ້ຮັບຄັດເລືອກໄປກອມມູນໃຫມ່ກຽມຕົວອອກເດີນທາງ, ພວກເຂົາຍັງບໍ່ທັນເຫັນເຮືອນຫລັງໃຫມ່ ຈັ່ງຊັ້ນກໍເລີຍມີແຕ່ເສົ້າໂສກທີ່ຈະຕ້ອງໄດ້ພັດພາກຈາກຫມູ່ໄປ ບາງຄົນເວົ້າຮອດວ່າ:

-ໃຜຊິຮູ້ວ່າຢູ້ພຸ້ນເປັນແນວໃດເນາະ! ເຮືອນຫັ້ນຈົບຢູ່ດອກ ແຕ່ຄົນຫັ້ນຕິ ... ໃຜຊິຮູ້ນຳ.

ໃນທ້າຍເດືອນພະຈິກ, ທຸກສິ່ງທຸກຢ່າງກຽມພ້ອມແລ້ວເພື່ອ

ການໂຍກຍາຍ. ຂ້າພະເຈົ້າເລີ່ມເກັບກຳສະພາບພະນັກງານຂອງ ກອມມູນໃຫມ່ດ້ວຍການສົ່ງ ກຸ່ມກິລອບ ໄປຫາພວກເຂົາເພື່ອເປັນ ສ່ຶງກະຕຸ້ນສະກາມະການ.

ທ້າຫມິດນ້ີດຳເນີນໄປໃນບັນຍາກາດຫນ່ຶງ ຄ່ືການຕັດຂາດຢ່າງ ສິ້ນປູນລະຫວ່າງຂ້າພະເຈົ້າກັບ "ບັນດາແນວຄິດຝ່າຍວິຊາການ" ຂອງກະຊວງສຶກສາປະຊາຊົນແຫ່ງລັດ ອູກຣາອິນ ໃນຍຸກສະໄຫມ ນັ້ນ. ໃນລະຍະຫລ້ງໆມານ້ີ ທ່າທີຂອງວິຊາການນ້ີ ບ່ໍພຽງແຕ່ບ່ໍສະ ຫນັບສະຫນູນຊ່ຶງແຕ່ຍັງສະແດງທ່າທີເກ ືອບວ່າຫນ ໍ່ືນປະຫມາດນ ໍ. ເປ ໍ່ືນວ່າວິຊາການນ ້ີຄັບແຄບຫລາຍ ແລະ ຜູ ້ືຄົນພະນັກງານພາຍໃນ ຂອງມັນກ ໍ ່ືວ ່ານ ໍ ່ືນຕ ໍ ່ານ ໍ ່ືເຂ ້ືາໃຈໄດ ້ືງ ່ານດ ໍ ່ືນສ ໍ ່ືມຄວນ ແຕ ່ານ ໍ ່ືງ ່ານໃດ ກ ໍ ່ືຕ ໍ ່ານສ ໍ ່ືລ ໍ ່ືບຂ ້ືາພະເຈ ້ືາແລ ້ືວແມ ່ານ ໍ ່ືມ ໍ ່ືຄ ໍ ່ືວ ໍ ່ືມຫ ໍ ່ືວ ໍ ່ືງໃດ ໆ ເລ ໍ ່ືຍ.

ບ ໍ ່ືວ ່ານ ໍ ່ືຈ ໍ ່ືດ ໍ ່ືວ ໍ ່ືຍເຫ ໍ ດຜ ໍ ່ືນໃດ ກ ໍ ່ືບ ໍ ່ືງ ໍ ່ືເ ໍ ່ືກ ໍ ່ືດ ້ືຂ ໍ ່ືນ ໍ ່ືເ ໍ ່ືອ ໍ ່ືງ ຫ ໍ ່ືລ ໍ ່ືຕ ໍ ່ານ ຫ ໍ ່ືລ ໍ ່ືກ ໍ ່ືການ, ບ ໍ ່ືມ ໍ ່ືມ ້ືໃ ໍ ່ືຄ ໍ ່ືຍ ໍ ່ືນ ໍ ່ືໃ ໍ ດ ໍ ່ືກ ໍ ່ືຕ ໍ ່ານ ໍ ່ືຂ ້ືາພ ໍ ່ືເ ໍ ່ືຈ ້ືາ ໍ ່ືຈ ໍ ່ືະ ໍ ່ືບ ໍ ່ືກ ໍ ່ືສ ໍ ່ືອ ໍ ່ືງ ໍ ່ືແ ໍ ່ືສ ໍ ່ືງ ໍ ່ືເ ໍ ່ືຈ ໍ ່ືາ ໍ ່ືະ ຈ ໍ ່ືມ ໍ ່ືໃ ໍ ່ືຫ ້ືເ ໍ ່ືຂ ້ືາ ໍ ່ືໃ ໍ ່ືຈ ໍ ່ືວ ໍ ່ືາ ໍ ່ືຕ ໍ ່ານ ໍ ່ືເ ໍ ່ືອ ໍ ່ືງ ໍ ່ືພ ໍ ່ືວ ໍ ່ືມ ໍ ່ືຕ ໍ ່ານ ໍ ່ືກ ໍ ່ືຕ ໍ ່ານ ໍ ່ືຮ ໍ ່ືອ ໍ ່ືດ ໍ ່ືຂ ້ືນ ໍ ່ືໃ ໍ ດ, ຈ ໍ ່ືນ ໍ ່ືໃ ໍ ່ືນ ໍ ່ືທ ໍ ່ືສ ໍ ່ືຸ ໍ ດ ໍ ່ືຂ ້ືາ ໍ ່ືພ ໍ ່ືະ ໍ ່ືເ ໍ ່ືຈ ້ືາ ໍ ່ືກ ໍ ່ືຕ ໍ ່ານ ໍ ່ືຫ ໍ ່ືມ ໍ ່ືດ ໍ ່ືຄ ໍ ່ືວ ໍ ່ືາ ໍ ່ືມ ໍ ່ືອ ໍ ່ືດ ໍ ່ືທ ໍ ່ືນ ແລະ ເ ໍ ່ືລ ໍ ່ືມ ໍ ່ືສ ໍ ່ືງ ໍ ່ືໄ ໍ ່ືສ ໍ ່ືໃ ໍ ່ືນ ໍ ່ືຄ ໍ ່ືວ ໍ ່ືາ ໍ ່ືມ ໍ ່ືສ ໍ ່ືາ ໍ ່ືມ ໍ ່ືາ ໍ ດ ຂ ໍ ່ືອ ໍ ່ືງ ໍ ່ືຕ ໍ ່ານ ໍ ່ືເ ໍ ່ືອ ໍ ່ືງ.

ເຫດການອັນຫນ ້ືາ ໍ ່ືຊ ໍ ່ືົ ໍ ່ືນ ໍ ່ືຊ ໍ ່ືມ ໍ ່ືສ ໍ ່ືມ ໍ ່ືໃ ໍ ່ືຈ ໍ ່ືຳ ໍ ່ືພ ໍ ່ືັ ໍ ່ືນ ໍ ່ືປ ໍ ່ືຽ ໍ ່ືນ ໍ ່ືເ ໍ ່ືປ ໍ ່ືັ ໍ ່ືນ ໍ ່ືການ ໍ ່ືພ ໍ ່ືິ ໍ ດ ໍ ່ືພ ໍ ່ືາ ໍ ດ ຢ ໍ ່ືາ ໍ ່ືງ ໍ ່ືກ ໍ ່ືະ ໍ ່ືທ ໍ ່ືັ ໍ ່ືນ. ຢ ໍ ່ືາ ໍ ່ືງ ໍ ່ືໃ ໍ ດ ກ ໍ ່ືຕ ໍ ່ານ, ທ ້ືາ ໍ ່ືຫ ໍ ່ືມ ໍ ່ືດ ້ືນ ້ືຂ ້ືາພ ໍ ່ືເ ໍ ່ືຈ ້ືາ ໍ ່ືອ ໍ ່ືາ ໍ ດ ເ ໍ ່ືປ ໍ ່ືັ ໍ ່ືນ ຜ ໍ ່ືູ ້ືຜ ໍ ່ືິ ໍ ດ ກ ໍ ່ືເ ໍ ່ືປ ໍ ່ືັ ໍ ່ືນ ໍ ່ືໄ ໍ ່ືດ ້.

ຢ ໍ ່ືູ ່ືທ ໍ ່ືີ ຄ ໍ ່ືາ ໍ ຄ ໍ ່ືິ ບ ມ ໍ ່ືີ ໍ ່ືການ ໍ ່ືໄ ໍ ່ືຂ ໍ ່ືກ ໍ ່ືອ ໍ ່ືງ ໍ ່ືປ ໍ ່ືະ ໍ ່ືຊ ໍ ່ືຸ ໍ ມ ໍ ່ືໃ ໍ ່ືຫ ໍ ່ືຍ ໍ ່ືຂ ໍ ່ືອ ໍ ່ືງ ໍ ່ືວ ິ ໍ ່ືງ ການ "ມ ໍ ່ືິ ໍ ດ ໍ ່ືສ ໍ ະ ຫ ໍ ່ືາ ໍ ຍ ໍ ່ືຂ ໍ ່ືອ ໍ ່ືງ ໍ ່ືເ ໍ ່ືດ ັ ໍ ່ືກ" ແລະ ນ ໍ ່ືິ ໍ ຄ ໍ ່ືົ ໍ ມ ໍ ່ືຂ ໍ ່ືອ ໍ ່ືງ ໍ ່ືພ ໍ ່ືວ ໍ ່ືກ ໍ ່ືເ ໍ ່ືຮ ໍ ່ືົ ໍ ່ືາ ໍ ກ ໍ ່ືຈ ໍ ່ືະ ໍ ່ືເ ໍ ່ືດ ໍ ່ືີ ໍ ່ືນ ໍ ່ືທ ໍ ່ືາ ໍ ງ ໍ ່ືໄ ໍ ປ ໍ ່ືຄ ໍ ່ືຳ ໍ ່ືນ ໍ ່ືັ ໍ ບ

ຊຸມເຊີຍກອງປະຊຸມຄັ້ງນີ້, ມີການຕົກລົງກັນແລ້ວວ່າ ພວກເຮົາຈະໄປ ຮອດພຸ້ນໃນເວລາ ສາມ ໂມງກົງ.

ພວກເຮົາຕ້ອງຍ່າງໄປປະມານສິບກິໂລແມັດ ຈັ່ງຊັ້ນຈົ່ງບໍ່ພາກັນ ຟ້າວຟັ່ງເທົ່າໃດຄ່ອຍຍ່າງຫລົ້ນໄປ ແລະ ຂ້າພະເຈົ້າກວດເບິ່ງເຂັ້ມ ໂມງເລື້ອຍເພື່ອໃຫ້ຮູ້ຄວາມໄວໃນການເດີນທາງຂອງພວກເຮົາ, ສິ່ງ ດັ່ງກ່າວໄດ້ອະນຸມັດໃຫ້ເດັກນ້ອຍໄດ້ພັກຜ່ອນ, ກິນນ້ຳ ແລະ ຊຸມຕົວ ເມື່ອງ. ເວລາຜ່ານໄປຕາມກະຫນິນຫົນທາງນັ້ນພວກເຮົາດົ່ງດູດ ຄວາມສົນໃຈຄົນສົມຄວນ, ເວລາຢຸດກໍມີຄົນມາຫຸ້ມ, ສໍ້ກາມ ແລະ ທຳຄວາມຮູ້ຈັກ. ພວກເດັກນ້ອຍໃນຊຸດເສື້ອຜ້າສະອາດຈົບງາມເວົ້າ ຢອກລໍ້ແລກປ່ຽນເລື່ອງຕະຫລົກກັນຢ່າງອ່ອນຊຸ້ນ, ພວກເຂົາຮູ້ດີວ່າ ຫນ່ວຍຊີວິດໂຮມຫມູ່ຂອງພວກເຂົາຈົບງາມ. ທຸກຢ່າງຮຽບຮ້ອຍດີ ມີແຕ່ເປົ້າຫມາຍຂອງການເດີນທາງເທົ່ານັ້ນ ທີ່ສ້າງຄວາມອຶດົກັງ ວົນໃຫ້ພວກເຮົາຢູ່ຫນ້ອຍຫນຶ່ງ, ພໍເຂັ້ມໂມງ ຊຸ ບອກເວລາສາມ ໂມງ ພວກເຮົາກໍມາເຖິງຫ້ອງບ່ອນດຳເນີນກອງປະຊຸມພ້ອມດ້ວຍ ສຽງດົນຕີ ແລະ ຜົ້ນທຸງປືອສະບັບນຳຫນ້າ. ແຕ່ແມ່ຍິງຂີ້ໂມໂຫຄົນ ຫນຶ່ງໄດ້ແລ່ນອອກມາຂວາງຫນ້າພວກເຮົາໄວ້ ແລ້ວກາມສຽງຊູ່ເຂັ້ນ ວ່າ:

- ເປັນຫຍັງເຈົ້າຈົ່ງມາແຕ່ເວັ້ນແທ້? ແລ້ວບາດນີ້ເຈົ້າຊຸ ໄປ ຄວບຄຸມເດັກນ້ອຍໄວ້ກາງກະຫນິນຫວະ?

ຂ້າພະເຈົ້າຍົກໂມງໃຫ້ເບິ່ງ, ເພິ່ນຊ້ຳບອກຕື່ມວ່າ:

- ເວນຕາຍເອີ... ກໍຕ້ອງໃຊ້ເວລາກະກຽມແດ່ລະບໍ.

- ພວກເຮົາຕົກລົງກັນວ່າສາມໂມງເດ້ຊັ້ນ!

- ໂອ້ຍ ສະຫາຍເອີ, ເວົ້າກັບພວກເຈົ້ານີ້ຫາກມີບັນຫາເລີຍໆ ເນາະ!

ພວກເດັກນ້ອຍບໍ່ເຂົ້າໃຈຈັກຫນ້ອຍວ່າ ເປັນຫຍັງພວກເຂົາຈຶ່ງ ເປັນຝ່າຍຜິດ ແລະ ເປັນຫຍັງຈຶ່ງຖືກເບິ່ງຢ່າງຫນຶ່ນປະຫມາດ.

- ແລ້ວເປັນຫຍັງຈຶ່ງເອົາເດັກນ້ອຍມານໍາລະ?

- ນີ້ແມ່ນສະມາຊິກທັງຫມົດຂອງນິຄົມ.

- ໂອ້ວ... ເຮັດແນວໃດກັນເນາະ? ພວກເດັກນ້ອຍຢ່າງຕັ້ງສິບກິໂລແນ່... ເຈົ້າບໍ່ມີສິດໃຊ້ອໍານາດແບບນີ້ເດ ເພື່ອຢາກເດັ່ນດັງນ່າ!

- ພວກເດັກນ້ອຍດີໃຈຢ່າງຫມາ. ຫລັງຈາກການພົບປະແລ້ວ ພວກເຮົາຊິໄປຊຸມກາຍຍະສິນ, ຂ້ອຍຊິປະພວກເຂົາໄວ້ຢູ່ນິຄົມໄດ້ ແນວໃດ?

- ໄປເບິ່ງກາຍຍະສິນວ່າຕິ? ແລ້ວພວກເຈົ້າຊິກັບມາຈັກໂມງ ລະ?

- ທ່ຽງຄືນ.

- ສະຫາຍ... ສິ່ງເດັກນ້ອຍຫມູ່ນັ້ນຄືນເມືອດຽວນີ້!

ພວກ "ເດັກນ້ອຍ" ໃຊເຈັນໂກ, ນາລິກອບ, ໂຊເຣັນ, ຊິເນັນກິຫນ້າຈືດລົງ ແລະ ພາກັນເສືອກແສງຕາອ້ອນວອນຂໍຄວາມຫວັງຄັ້ງສຸດທ້າຍມາໃສ່ຂ້າພະເຈົ້າ.

- ໃຫ້ຂ້ອຍກາມພວກເຂົາກ່ອນໄດ້ບໍ? - ຂ້າພະເຈົ້າສະເຫນີ.

- ຊິມີຫຍັງຕ້ອງກາມພວກເຂົາອີກ, ທຸກຢ່າງແຈ່ມແຈ້ງແລ້ວ, ສິ່ງພວກເຂົາກັບຄືນນິຄົມດຽວນີ້.

- ຂໍໂທດ, ຂ້ອຍບໍ່ສາມາດປະຕິບັດຕາມຄໍາສັ່ງຂອງເຈົ້າໄດ້.

- ຈັ່ງຊັ້ນຂ້ອຍຊິສັ່ງການເອງ.

- ເຊີນເລີຍ! - ຂ້າພະເຈົ້າຕອບ ທັງອົດກັ້ນຮອຍຍິ້ມໄວ້ຢ່າງຍາກລຳ.

ແມ່ຍິງຜູ້ເວົ້າ ກ້າວເຂົ້າຫາເດັກນ້ອຍໃນແຖວປີກຊ້າຍ.

- ຫລ້າເອີ... ເອີ້ພວກເຈົ້ານັ້ນລະ ພາກັນກັບເມືອສາ... ເມືອດຽວນີ້ໂລດ, ແມ່ນຢູ່ວ່າພວກເຈົ້າເມື່ອຍ.

ບໍ່ມີໃຜເອົາໃຈໃສ່ໃນນ້ຳສຽງອ່ອນຫວານຂອງນາງ, ໃຜຜູ້ຫນຶ່ງເວົ້າຂຶ້ນແຮງວ່າ:

- ເມືອເຮືອນວ່າຕິ... ມັນແມ່ນເລື່ອງຫຍັງລະ... ຈ້າງກະບໍ່ເມືອ.

- ແລ້ວພວກເຈົ້າກະບໍ່ຕ້ອງໄປຊຸມກາຍຍະສົນດອກ ມັນຊິເດີກໂພດ.

ພວກເດັກນ້ອຍຫົວໂຄບຂຶ້ນ. ໄຊເຣັນ ຍົກຄ້ວ້ວຕາພໍປານສາວນ້ອຍໃນເວທີລຳວົງ:

- ໂອ້ຍ...! ອານໂຕນ ເຊມືອໂນວິດ, ສາວອັນນີ້ຈາແມ່ນພີ້ວກເນາະຂ້ຫລັກຂະຫນາດເລີຍ!

ດ້ວຍທ່າທີເປັນຂອງຕົນເອງ, ວາເນຍ ໄຊເຊັນໂກ ຜາຍມືອອກຢ່າງສະຫງ່າງາມຊິໃສ່ຜົນທຸງແລ້ວເວົ້າວ່າ:

- ຢ່າເວົ້າແບບນີ້ເດ້! ບໍ່ຄວນເວົ້າແບບນີ້ກັບພວກເຮົາເວລາຢູ່ໃນແຖວ... ຕ້ອງເວົ້າແບບນີ້ເດ້: ນຶ່ງ... ສອງ... ເຈົ້າເຫັນບໍ່, ແຖວເດີນ, ທຸງ... ເຈົ້າເຫັນບໍ?

ສຸພາບສັດຕ້ຽງແນມເບິ່ງພວກເດັກນ້ອຍທີ່ເດັດດ່ຽວປານທະ
ຫານຢ່າງຫມິດຫວັງ ແລ້ວຈຶ່ງກ່ອຍຫນີ.

ແນ່ນອນວ່າການປະທະແບບນີ້ບໍ່ໄດ້ສ້າງຜົນກະທົບອັນຫຍຸ້ງຍາກ
ແຕ່ຢ່າງໃດໃສ່ການດຳລົງຊີວິດປະຈຳວັນຂອງພວກເຮົາ ແຕ່ມັນຫາກ
ສ້າງບັນຍາກາດໂດດດ່ຽວອ້າງວ້າງອ້ອມຮອບຕົວຂ້າພະເຈົ້າຢູ່ໃນວົງ
ງານການຈັດຕັ້ງຂອງຂ້າພະເຈົ້າເອງເຊິ່ງຜ່ານມາຂ້າພະເຈົ້າຄິດວ່າຕົນ
ເອງສາມາດຜ່ານຜ່າ ແລະ ລ້ຽງເຄີຍກັບມັນໄດ້. ນອກນີ້ຂ້າພະເຈົ້າ
ຍັງລ້ຽນຳການປະເຊີນຫນ້າກັບການປະທະທຸກຄັ້ງດ້ວຍອາລົມບໍ່ດີ.
ເລື່ອງນີ້ຄ່ອຍເບົາໄປເທື່ອລະຂັ້ນດອກ, ບາງເທື່ອກໍອິດທົນຫາວິທີ
ແກ້ໄຂແບບໃດແບບຫນຶ່ງ. ຂ້າພະເຈົ້າພະຍາຍາມບໍ່ເວົ້າແນວກົງກັນ
ຂ້າມ ແລະ ຖ້າຫາກວ່າມີບາງຄັ້ງຄາວຂ້າພະເຈົ້າຮ້າຍກ່ຽງແດ່ ນັ້ນກໍ
ແມ່ນເຮັດໄປຕາມມາລະຍາດດອກເພາະວ່າການບໍ່ປາກບໍ່ເວົ້າກັບຂັ້ນ
ເທິງຂອງຕົນເອງນັ້ນກໍຄືວ່າບໍ່ຄັກປານໃດ.

ໃນເດືອນຕຸລາ ພວກເຮົາເກີດບັນຫາຮ້າຍແຮງກັບ ອາກາດ
ອຸ່ນກອບ, ສິ່ງດັ່ງກ່າວເປັນຄືຮ່ອງເຫວເລິກຂວາງກັ້ນຂ້າພະເຈົ້າເອງ
ແລະ ພວກເຂົາໄວ້.

ໃນວັນອາທິດຫນຶ່ງ ພວກນັກຮຽນວິທະຍາໄລກຳມະກອນກັບມາ
ພັກຜ່ອນນຳພວກເຮົາ ແລະ ພວກເຮົາກໍມອບຫ້ອງຮຽນຫນຶ່ງໃຫ້
ເປັນບ່ອນນອນສຳລັບພວກເຂົາ, ໃນຕອນກາງເວັນພວກເຮົາຈັດໃຫ້
ມີບຸນສະຫລອງຢູ່ໃນປ່າ. ໃນຂະນະທີ່ທຸກຄົນພວມຫລິ້ນຢູ່ນັ້ນ ອຸ່ນ
ກອບ ກໍດອດເຂົ້າໄປໃນຫ້ອງນອນພວກເຂົາລັກເອົາກະຕ໊ຳບໃສ່ເງິນ
ເບ້ຍລ້ຽງທີ່ພວກນັກຮຽນຫາກໍຮັບມາສົດໆຮ້ອນໆໄປຫມົດ.

ພວກເດັກນ້ອຍນັ້ນຮັກແພງພວກອ້າຍນັກຮຽນວິທະຍາໄລຂອງ
ພວກເຂົາຫລາຍກວ່າຄວາມຮັກລະຫວ່າງລູກພໍ່ແມ່ດຽວກັນຊໍ້າ, ຈັ່ງ
ຊັ້ນພວກເຂົາຈຶ່ງຮູ້ສຶກອັບອາຍຂາຍຫນ້າຊະນິດຮັບບໍ່ໄດ້ພຸ້ນແລ້ວ.
ພວກເຮົາບໍ່ສາມາດຮູ້ໂຕກະໂມຍຢູ່ລະຍະຫນຶ່ງ ແລະ ແມ່ນເວລານີ້
ແລ້ວທີ່ຂ້າພະເຈົ້າເຫັນວ່າ ເປັນສະພາບຮ້າຍແຮງກວ່າຫມູ. ການ
ທີ່ຫານັ້ກຂອງກັນໃນຫນ່ວຍຊີວິດໂຮມຫມູ່ແຫ້ນແຟ້ນບ່ອນຫນຶ່ງ
ກາຍເປັນຄວາມຊົ່ວຮ້າຍແຮງນັ້ນ ມັນບໍ່ແມ່ນຍ້ອນວ່າມີເຄື່ອງອັນໃດ
ອັນຫນຶ່ງເສຍໄປ ຫລືວ່າຜູ້ໃດຜູ້ຫນຶ່ງຄຽດຂົມ, ຫລືວ່າຍ້ອນມີຜູ້ໃດ
ຜູ້ຫນຶ່ງດໍາເນີນການທົດລອງເລື່ອງລັກຂອງຕົນອີກຕໍ່ຕອກ ແຕ່ມັນ
ແມ່ນຍ້ອນວ່າສິ່ງດັ່ງກ່າວເຮັດໃຫ້ອາລົມສຸກສະຫງົບຫມອງມົວໄປ,
ທໍາລາຍຄວາມເຊື່ອຫມັ້ນລະຫວ່າງຫມູ່ຄູ່ເດັກນ້ອຍນໍາກັນ ແລະ
ຍິ່ງແຍ່ໃຫ້ເກີດຄວາມຮູ້ສຶກເປັນປໍລະປັກກັນເຊັ່ນ: ຄວາມສົງໄສ,
ຄວາມວິຕົກກັງວົນຫ່ວງເຄື່ອງຂອງສ່ວນຕົວ, ເກີດຄວາມຮູ້ສຶກເຫັນ
ແກ່ຕົວພາຍໃນ ເຊິ່ງ ເຊື່ອງອໍາໄວ້. ຖ້າຫາກວ່າຈັບໂຕຄົນຜິດບໍ່ໄດ້
ບໍ່ດົນຫມົດຫນ່ວຍຊີວິດໂຮມຫມູ່ກໍຈະເປື່ອຍເຍື່ອຍ: ມີການເວົ້າຊັບ
ຊ້ອນຢູ່ຕາມຂອກແຄແຈຮົ້ວ, ໃນຫໍພັກ, ຊ່ຜູ້ຕ້ອງສົງໄສກໍຖືກຍົກຂຶ້ນ
ມາໃນເວທີປະຊຸມລັບ, ບຸກຄົນທີ່ມີນິໄສແປກຕ່າງຫມູ່ຈະຖືກຫມູ່ຄູ
ທົດສອບຢ່າງສາຫັດ, ແຕ່ມັນແມ່ນກະໂຕບຸກຄົນເຫລົ່ານີ້ແລ້ວທີ່
ເພິ່ນຢາກປົກປ້ອງໄວ້ ເພາະວ່ານິໄສໃຈຄໍຂອງພວກເຂົາເລີ່ມຂະ
ຫຍາຍຕົວໄປຕາມທິດທາງທີ່ຖືກຕ້ອງແລ້ວ. ເຖິງວ່າບໍ່ພໍເທົ່າໃດມື້
ຄົນຂີ້ລັກຈະຖືກຈັບໄດ້ ແລະ ໄດ້ຮັບໂທດຢ່າງສະສົມ ແຕ່ສິ່ງດັ່ງກ່າວ
ກໍບໍ່ສາມາດຮໍ່າຈອດບາດແຜ, ລຶບລ້າງຄວາມຄຽດແຄ້ນ ແລະ ຫລາຍ

ຄົນ ບໍ່ສາມາດກັບຄືນສູ່ສະຖານະເກົ່າອັນສະຫງົບສຸກຂອງຕົນຢູ່ໃນ
ຫນ່ວຍຊີວິດໂຮມຫມູ່ໄດ້. ເບິ່ງພັນຢ່າງດ່ຽວໆແລ້ວກໍລະນຶກຄ່ວ່າ
ການຂັດແຍ້ງເຊື່ອງຊ້ອນຫລັກການຊະນິດອັນຕະລາຍທີ່ສຸດຢູ່ໃນ
ຕົວ ນັ້ນຄືສ້າງຜົນສະທ້ອນຍາວນານເຊັ່ນຄວາມເປັນປໍລະປັກ,
ຄວາມເຈັບແສບຂົມຂື່ນ, ຄວາມຮູ້ສຶກໂດດດ່ຽວ ແລະ ຄວາມ
ຮູ້ສຶກກຽດຊັງມະນຸດຢ່າງແທ້ຈິງ. ຢູ່ໃນຫນ່ວຍຊີວິດໂຮມຫມູ່ແຫ່ງ
ຫນຶ່ງ ການລັກເປັນຫນຶ່ງໃນບັນດາຫລາຍໆປາກົດການທີ່ບໍ່ໄດ້ຮັບ
ອິດທິພົນພິເສດຈາກບ່ອນໃດບ່ອນຫນຶ່ງ ແລະ ໃນນັ້ນພັນພົວກສະມະ
ຄ້າຍຄືກັບປະຕິກິລິຍາທາງເຄມີຫລາຍກ່ວ່າເຈດຕະນາລົມຊົ່ວຮ້າຍ.
ການລັກບໍ່ແມ່ນເຫດການຫນ້າຢ້ານກົວ ພໍພຽງແຕ່ວ່າຢູ່ບ່ອນທີ່ບໍ່ມີ
ຫນ່ວຍຊີວິດໂຮມຫມູ່ ຫລືບ່ອນເຕົ້າໂຮມທາງສຽງມະຫາຊົນ,
ໃນກໍລະນີເຊື່ອງຂອງພັນດໍາເນີນໄປງ່າຍໆ ຄືແຕ່ຂີ້ກະໂຍ, ຜູ້
ຖືກຂະໂມຍເທົ່ານັ້ນທີ່ສ່ວນກ່ຽວພັນກັນ. ການລັກຢູ່ພາຍໃນ
ຫນ່ວຍຊີວິດໂຮມຫມູ່ປຸກລຸກໃຫ້ຊີວິດຕົ້ນຂົ້ນ ແລະ ເຜີຍແຜ່ແນວ
ຄິດເລີກລັບອອກມາ, ດັບສູນຄວາມຄ່ຽງແຄ້ວ ແລະ ຄວາມອົດທົນ
ອັນຈໍາເປັນຕ້ອງມີເພື່ອ ຊີວິດຮ່ວມຫມູ່, ສິ່ງນີ້ແລ້ວທີ່ເປັນໄພເສຍ
ຫາຍອັນຍິ່ງໃຫຍ່ພິເສດຢູ່ໃນສັງຄົມຫນຶ່ງຊຶ່ງປະກອບດ້ວຍ "ພວກ
ຕິດໄພສັງຄົມ".

ໄດ້ສອງມື້ການໂຈລະກໍາຂອງ ອູຊິກອບ ຈ່ຶງເປັນທີ່ເປີດເຜີຍ
ຂ້າພະເຈົ້າກັກຂັງພັນໄວ້ໃນຫ້ອງການຂອງນິຄົມໃນທັນທີ ແລ້ວວາງ
ຍາມຄົນຫນຶ່ງໄວ້ຕໍ່ຫນ້າປະຕູເພື່ອສະກັດກັ້ນການແກ້ແຄ້ນຄືນ. ສະ
ພານາຍກອງຕົກລົງສົ່ງຕົວນັກໂທດໃຫ້ສານຊາວນິຄົມເອງຕັດສິນ.

ສາມແບບນີ້ບໍ່ໄດ້ເກີດຂຶ້ນເລື່ອຍໆດອກຢູ່ໃນນິຄົມຂອງພວກເຮົາ ເພາະ ສ່ວນຫລາຍແລ້ວພວກເດັກນ້ອຍໃຫ້ຄວາມເຊື່ອຫມັ້ນຕໍ່ການຕົກລົງ ຂອງພວກນາຍກອງ. ອູຊຶກອບ ບໍ່ອາດຫວັງວ່າຈະມີຜົນດີອັນໃດ ຕໍ່ມັນຈາກການຕັດສິນຂອງພວກຫມູ່ຂອງມັນ. ກອງປະຊຸມໃຫຍ່ ເລືອກຕັ້ງເອົາຕຸລາການ ແລະ ສຽງສະຫນັບສະຫນູນຢ່າງເປັນເອກະ ສັນກໍເຫັນດີເລືອກເອົາ ກູດລາຕ, ກອກກິບສະກ, ໄຊເຊັນໂກ, ສະຕູປິດຊິນ ແລະ ເປເຮດ, ເພິ່ນເລືອກເອົາ ເປເຮດນັ້ນກໍພຽງ ແຕ່ເພື່ອບໍ່ຢາກໃຫ້ພວກເດັກນ້ອຍ ກູເຮຍແຊ ຄຽດເທົ່ານັ້ນ. ສະຕູ ປິດຊິນ ນັ້ນມີຊື່ສຽງໂດ່ງດັງຍ້ອນຄວາມຍຸຕິທໍາຂອງມັນ. ການເລືອກ ເອົາສາມຄົນທໍາອິດນັ້ນກໍຮັບປະກັນຢ່າງເດັດຂາດປາສະຈາກຄວາມ ໃຈອ່ອນເຫັນອົກເຫັນໃຈໃດໆ.

ການພິຈາລະນາຄະດີໄຂຂຶ້ນໃນຕອນແລງໃນຫ້ອງຫນຶ່ງຊຶ່ງ ແຫນ້ນອັ່ງດ້ວຍຜູ້ຄົນ. ນາງ ເບຣແຊນ ແລະ ລູກຣິນສະກາຍຢາ ໄດ້ເດີນທາງມາຮ່ວມໃນກິດຈະກໍານີ້ໂດຍສະເພາະ.

ອູຊຶກອບ ນັ່ງຢູ່ເທິງແປ້ນມ້າຄົນດຽວ. ໃນລະຍະຫລັງໆມານີ້ ຫນໍ້ຫນ້າດ້ານຫນ້າມົນຂຶ້ນ, ລາງທ່າຂຸຍຂອງກັບຂ້າພະເຈົ້າ ແລະ ພວກເດັກນ້ອຍ, ມັນຫົວຍິ່ງແຂ້ວ ແລ້ວເວົ້າເລື່ອງຫຍາບຊ້າ ທັງ ເຮັດໃຫ້ຫມູ່ຮູ້ສຶກກຽດຊັງຫນ້າຂຶ້ນຕື່ມ. ອາກກາດ ມາຢູ່ນິຄົມ ປີປາຍແລ້ວ, ໃນລະຍະສັ້ນໆນັ້ນນີ້ ມັນມີທ່າທີປ່ຽນແປງຢູ່ແຕ່ທິດ ທາງການປ່ຽນແປງຂອງມັນນີ້ຍັງເປັນຫນ້າສົງໄສຢູ່. ມັນສະອາດຂຶ້ນ ແດ່, ຍືນຕົວກົງຂຶ້ນ, ສັນດັງຂອງມັນຄ່ອຍບໍ່ຍາວກວມລວມເອົາທຸກ ສ່ວນເທິງໃບຫນ້າອີກແລ້ວ ນອກນີ້ມັນຍັງຮູ້ຈັກຍິ້ມຫົວອີກ. ແຕ່

ກ່ຽວກັບນໍ້ຕາມັນຍັງແມ່ນ ອາກກາດີຜູ້ເກົ່າຢູ່, ເປັນມະນຸດທີ່ ໄຮ້ຄວາມເຄົາລົບຕໍ່ເພື່ອນມະນຸດທຸກຄົນ ແລະ ໂດຍ ສະເພາະກັບ ຫນ່ວຍຊີວິດໂຮມຫມູ, ມັນມີຊີວິດຢູ່ກໍແຕ່ເພື່ອກິນໄປມື້ຫນຶ່ງໆເທົ່າ ນັ້ນ.

ແຕ່ກ່ອນ ອູຊຶກອບ ເກງກິວພໍ່ຂອງມັນກັບຕໍາຫລວດ, ແຕ່ຢູ່ນີ້ ຄົນບໍ່ມີໃຜທີ່ຈະສາມາດຄັດຄ້ານມັນໄດ້ຍົກເວັ້ນສະພານາຍກອງຫລື ກອງປະຊຸມໃຫຍ່; ແຕ່ຫມໍບໍ່ມີຄວາມຮູ້ສຶກໃດໆຕໍ່ອົງການປະເພດນີ້. ຄວາມຫມາຍຂອງຄໍາວ່າ ຄວາມຮູ້ສຶກຮັບຜິດຊອບໃນໂຕຂອງມັນຍັງ ຕົບປັ້ຢູ່ ແລະ ນີ້ແລ້ວກິກເຕົ້າຂອງຮອຍຍິ້ມແບບໃຫມ່ຂອງມັນ ແລະ ຄວາມຫນ້າດ້ານຫນ້າໝຶນແບບໃຫມ່ຂອງມັນ.

ແຕ່ບັດນີ້ ອູຊຶກອບ ຫນ້າເມື່ນເຫລືອງແລ້ວ, ແນ່ນອນວ່າສານ ຈັດຕັ້ງໂດຍຫມູ່ຄູ່ຂອງມັນເອງໃນຄັ້ງນີ້ຈະບໍ່ປ່ອຍໃຫ້ມັນຂຶ້ກ້າມໄດ້ ອີກແລ້ວ.

ນາຍກອງຍາມປະຈໍາວັນສັ່ງໃຫ້ທຸກຄົນລຸກຂຶ້ນ, ຄະນະຕຸລາການ ກ້າວເຂົ້າມາ. ກູດລາຕ ເລີ່ມໄຂວາລະປະຊຸມດ້ວຍການອ້າງພິຍານ ແລະ ຜູ້ຮັບເຄາະ. ການຕູ່ຫາຂອງຄະນະຕຸລາການເຕັມໄປດ້ວຍ ຄວາມເດັດຂາດຮ້າຍແຮງ ແລະ ເຍາະເຍີ້ຍ. ມິຊາ ອອບຊາເຣັນ ໂກ ເວົ້າຂຶ້ນວ່າ:

- ເອົາລະ, ພວກເຮົາເຂົ້າໃຈແລ້ວ, ມີຫລາຍຄົນເວົ້າວ່າຫມໍ ອາກກາດີຄົນນີ້ທໍາລາຍກຽດສັກສີຂອງນິຄົມ. ສ່ວນເຮົາຫວະ, ເພື່ອນັກທັ້ງຫລາຍ, ເຮົາຂໍເວົ້າວ່າສິ່ງນັ້ນເປັນໄປບໍ່ໄດ້, ເລື່ອງ ທໍາລາຍກຽດນິຄົມ ແມ່ນເຫດການຫນຶ່ງຊຶ່ງຫມໍບໍ່ສາມາດເຮັດໄດ້,

ມັນບໍ່ແມ່ນສະມາຊິກນິຄົມ... ເວົ້າແລ້ວກໍແລ້ວ... ຈັກມັນເປັນຄົນ
ຊ້ຳບໍ່? ເຊີນພວກເພື່ອນຕັດສິນເອງວ່າມັນແມ່ນຄົນຫລືບໍ່? ຫມາ
ຫລືແມວຍັງມີຄ່າກວ່າ, ເວົ້າແທ້ໃດ. ແລ້ວບັດນີ້ ຊ້ຳເກີດບັນຫາ
ກຶກກ່ຽງກັນວ່າຊິເຮັດແນວໃນກັບມັນ? ພວກເຮົາຊິມັດສອກມັນແລ້ວ
ເຕະຫີວສົ່ງໄປ... ເຮັດແນວນັ້ນຊິມີປະໂຫຍດຫຍັງສຳລັບມັນບໍ?
ເຮົາຂໍສະເຫນີແນວນີ້: ເຮັດຮ້າງໃຫ້ມັນແລ້ວສອນໃຫ້ມັນເທົ່າ.
ພຽງແຕ່ວ່າບໍ່ຕ້ອງໃຫ້ອາຫານກາມກິນມັນຈັກສາມມື້, ເຮົາຂໍຮັບປະ
ກັນວ່າມັນຊິເທົ່າເປັນ, ແລ້ວຕໍ່ໄປກໍບໍ່ຕ້ອງປ່ອຍໃຫ້ມັນເຂົ້າໄປໃນ
ຫ້ອງອີກ.

ມັນແມ່ນຄວາມເວົ້າຫມິ່ນປະຫມາດຢ່ຽບຢ່ຳກັນພີ້ກ, ອາກກາ
ດີ ເສືອດແສງຕາເຄ້ຽມມາໃສ່ ມີຊາ, ຫນ້າແດງຮົ່ນຂຶ້ນແລ້ວ
ງວາກຫນ້າຫນີ.

ເບຣແຊນ ຂໍເວົ້າ, ກູດລາຕ ສະເຫນີວ່າ:

- ເຈົ້າຈະເວົ້າຫລັງຈາກພວກເດັກນ້ອຍເວົ້າແລ້ວໄດ້ບໍ່?

ແຕ່ນາງຊູຊີຫລາຍ ເດນີສ ກໍເລີຍຍິນຍອມ.

ເບຣແຊນ ກ້າວເຂົ້າສູ່ເວທີ ແລ້ວກ່າວຄຳປາໄສບົດຫນຶ່ງຊຶ່ງ
ຮຸນແຮງສົມຄວນ. ບາງບົດຕອນ ບາງວັກຂອງຄວາມເວົ້າຂອງນາງ
ຍັງຄົງຝັງແຫນ້ນຢູ່ໃນຫີວສະຫມອງຂອງຂ້າພະເຈົ້າຈົນຮອດປັດຈຸ
ບັນ:

- ພວກເຈົ້າຕັດສິນເດັກຄົນນີ້ຍ້ອນວ່າມັນລັກເງິນ. ທຸກຄົນທີ່ນີ້
ເວົ້າວ່າມັນແມ່ນຜູ້ຜິດ, ຕ້ອງລົງໂທດມັນຢ່າງຫນັກຫນ່ວງ ບາງຄົນ

ເວົ້າຮອດວ່າຕ້ອງໄລ່ມັນອອກ. ແມ່ນຢູ່ວ່າມັນເປັນຜູ້ຜິດ ແຕ່ຊາວນິຄົມອື່ນໆທຸກຄົນກໍ່ຍັງຜິດຫລາຍກວ່າມັນອີກ.

ພາຍໃນຫ້ອງນິດ ຂະຫນາດວ່າໄດ້ຍິນຮອດສຽງແມງວັນບິນ. ພວກເດັກນ້ອຍຍຶດຄໍອອກເພື່ອເບິ່ງນັກປາກົກທີ່ຍືນຍັນວ່າ ພວກເຂົາເປັນຜູ້ຜິດຢູ່ໃນເລື່ອງກໍລະນີ ອູຊຶກອບ ລັກເງິນ.

- ມັນມາຢູ່ນໍາພວກເຈົ້າຕັ້ງປີກ່ອາແລ້ວ ແຕ່ປານນັ້ນມັນຍັງລັກຢູ່, ເປັນແນວນັ້ນມັນຫມາຍຄວາມວ່າພວກເຈົ້າບໍ່ຊ່ວງສຶກສາອົບຮົມມັນ, ມັນຫມາຍຄວາມວ່າພວກເຈົ້າບໍ່ໄດ້ເອົາໃຈໃສ່ມັນຢ່າງພຽງພໍເຫມາະສົມແບບຫມູ່ຄູ່ຢູ່ນໍາກັນ, ພວກເຈົ້າບໍ່ໄດ້ອະທິບາຍໃຫ້ມັນຮູ້ວ່າ ການດໍາລົງຊີວິດນັ້ນຄວນເຮັດແນວໃດ. ມີຜູ້ເວົ້າຢູ່ຫນ້ວ່າ ມັນບໍ່ຊ່ວງເຮັດວຽກ ແລະ ກ່ອນຫນ້ານີ້ມັນກໍເຄີຍຈົກເຄີຍລັກເຄື່ອງຂອງຫມູ່ຄູ່ມັນມາແລ້ວ. ທັງຫມົດນີ້ສະແດງອອກວ່າ ພວກເຈົ້າບໍ່ໄດ້ເອົາໃຈໃສ່ກໍ່ສ້າງ ອາກກາດີ ຢ່າງພຽງພໍ.

ແສງຕາແວວວາວສະຫລົວສະຫລາດຂອງພວກເດັກນ້ອຍແມ່ນເຫັນໄຟອັນຕະລາຍແລ້ວ ແລະ ຕ່າງຄົນກໍຕ່າງເສືອກແສງຕາເບິ່ງກັນ. ຈໍາເປັນຕ້ອງຍອມຮັບວ່າ ຄວາມສັງຫອນຕໍ່ໄພຂອງພວກເຂົາບໍ່ໄຮ້ປະໂຫຍດເລີຍ ເພາະວ່າບັດນີ້ຫນ່ວຍຊີວິດໂຮມຫມູ່ພວມປະເຊີນຫນ້າກັບການນາບຂູ່ທີ່ຫນ້າເກງຂາມຢ່າງຫນ່ຶ. ແຕ່ ເບຣແຊນ ບໍ່ໄດ້ສັງເກດເຫັນຄວາມວິຕົກກັງວົນຂອງພວກເດັກນ້ອຍ, ນາງສຸດຄວາມເວົ້າລົງດ້ວຍການສະຫລຸບຍາວໆຢ່າງຫນ້າດູຖືນວ່າ:

- ລົງໂທດ ອາກກາດີ ຈະເປັນການແກ້ແຄ້ນສ່ວນຕົວເທົ່ານັ້ນ ແລະ ພວກເຈົ້າກໍບໍ່ຄວນຫລຸດຕົວຕໍ່າລົງຂະຫນາດໃຊ້ວິທີການແກ້

ແຄ້ນ. ພວກເຈົ້າຕ້ອງ ເຂົ້າໃຈວ່າ ປັດຈຸບັນ ອາກກາດ ຕ້ອງການ ຄວາມຊ່ອຍເຫລືອຈາກພວກເຈົ້າ, ມັນຕົກຢູ່ໃນການະລຳບາກ ເພາະ ວ່າເຈົ້າເອົາມັນຂຶ້ນປະຈານຕໍ່ຫນ້າຫມູ່ຫມົດທຸກຄົນແລະມີຜູ້ເວົ້າ ປຽບທຽບມັນໃສ່ກັບສັດເດຍລະສານໂຕຫນຶ່ງ. ຕ້ອງຄັດເລືອກເອົາ ຜູ້ໃດຜູ້ຫນຶ່ງທີ່ເຂັ້ມແຂງກ້າຫານເພື່ອຮັບເອົາ ອາກກາດ, ຄອຍປົກ ປັກ ແລະ ຊ່ອຍເຫລືອມັນ.

ເມື່ອ ເບຣແຊນ ລົງຈາກເວທີນັ້ນ ຢູ່ໃນແກວເດັກນ້ອຍກໍມີ ສຽງອື້ອຶງຟົດນອງ ແລະ ຮອຍຍົ້ມປາກົດຂຶ້ນເທິງໃບຫນ້າພວກ ເຂົາ. ຜູ້ໃດຜູ້ຫນຶ່ງກາມຂຶ້ນສຽງດັງກ້ອງຢ່າງຈິງຈັງວ່າ:

-ຮວ້າຍ... ແມ່ນເພິ່ນເວົ້າອີຫຍັງເກາະຮຶ?

ມີອີກສຽງຫນຶ່ງເຂັ້ມແຂງເດັດຂາດກວ່າຕອບຄືນ ແຕ່ຄຳສັບທີ່ ໃຊ້ມີລັກສະນະສຽດສີເຍາະເຍີ້ຍສົມຄວນ:

-ສູເອີ້ຍ... ພາກັນຊ່ອຍບັກ ອາກກາດ ແດ່!

ຫມົດທັງຫ້ອງຫົວໂຄບຂຶ້ນ. ຖຸລາການທ້າວ ວາເນຍ ໄຊເຊັນ ໂກ ເງີກຫົວອີ່ງພະນັກຕ່ຳອີ, ເອົາຕີນເຄາະລົ້ນຊັກໂຕະ, ກູດລາຕີ ຮ້າຍມັນຫນ້າດຳຕາແດງວ່າ:

-ວາເນຍ... ແມ່ນໂຕເປັນຖຸລາການແນວໃດ ຮຶ?

ອູຊິກອບ ຍັງນັ່ງຢູ່, ກົ້ມຫນ້າເບິ່ງຫົວເຂົ່າເຈົ້າຂອງໃນທັນໃດ ກໍຫົວກ້າກງຶ້ນ ແຕ່ກໍເຊົາປຸບປັບ ແລ້ວກົ້ມຫົວລົງຕ່ຳກວ່າເກົ່າອີກ. ກູດລາຕີ ຢາກເວົ້າອັນໃດອັນຫນຶ່ງກັບມັນ ແຕ່ແລ້ວກໍປ່ຽນໃຈ ພໍ ພຽງແຕ່ແກວ່ງຫົວ. ທັງສັກແສງຕາອ່າວລັ່ງເລບໍ່ຄັກໃຈໃສ່ ອາກກາ ດ.

ເບິ່ງ ນາງ ເບຣແຊນ ຄົ້ນສັງເກດເຫັນສ່ຽບຍ່ອຍເຫລົ່ານັ້ນ, ເພາະວ່ານາງກັບ ຊຸກຣິນສະກາຍຢາ ພວມລົມກັນຢ່າງເມົາມົວ.

ກູດລາຕ ແຈ້ງວ່າ ຄະນະຕຸລາການຈະປະຊຸມກັນຕ່າງຫາກເພື່ອພິຈາລະນາຕັດສິນຄວາມ. ພວກເຮົາຮູ້ວ່າ ຄະນະຕຸລາການຈະໃຊ້ເວລາບໍ່ຕ່ຳກວ່າຫນຶ່ງຊົ່ວໂມງ ເພື່ອຖົກຖຽງບັນຫາໃຫ້ກັບຄວາມຍຸຕິທຳ ແລະ ຂຽນຄຳຕັດສິນເປັນລາຍລັກອັກສອນ. ຂ້າພະເຈົ້າເຊີນແຂກໄປຫ້ອງການຂອງ້ຂ້າພະເຈົ້າ.

ນາງຊຸກຣິນສະກາຍຢາ ນັ່ງກອດແຂນຢູ່ແຈຕັ່ງນວມໃຫຍ່, ທາງເບື້ອງຫລັງແມ່ນນາງ ກູເລຍເຢວາ ທີ່ພວມຕິດຕາມສັງເກດຜູ້ອື່ນໆຢ່າງເອົາໃຈໃສ່ຢາກຮູ້ຈັກຄວາມເທັດຈິງ. ນາງ ເບຣແຊນ ນັ້ນເຊື່ອຫມັ້ນໃຕເອງວ່າ ອັນນີ້ເພິ່ນໄດ້ໃຫ້ບົດຮຽນ "ສຶກສາອົບຮົມຢ່າງແທຈິງ" ແກ່ພວກເຮົາແລ້ວ. ຂ້າພະເຈົ້າເອງຮູ້ສຶກວ່າຄວາມຄຶດຄ້ານຫົວແຂງແປກປະຫລາດຢ່າງຫນຶ່ງເກີດຂຶ້ນໃນຕົວ ມັນບໍ່ແມ່ນ ການຢາກບອກຄວາມຈິງ ຫລືຢາກໄດ້ໄຊຊະນະດອກ ແຕ່ມັນແມ່ນຄວາມຄ້ານທີ່ເກີດຈາກອາລົມຂົມຂື່ນ ແລະ ສະຕິສຳນຶກລອຍຢັ້ນຫນຶ່ງຊ້ຳແນມບໍ່ເຫັນທາງອອກ ຫລືອາລະສຸດທ້າຍແຫ່ງຄວາມພະຍາຍາມຂອງຕົນເອງ.

ເບຣແຊນ ກ້ຶມຂຶ້ນວ່າ:

- ເຈົ້າຄິດບໍ່ເຫັນດີນຳ້ຂ້ອຍເນາະ?... ເປັນທຳມະດາແລ້ວ.

ຂ້າພະເຈົ້າຕອບນາງວ່າ:

- ເຈົ້າຢາກດື່ມນ້ຳຊາບໍ?

ຜູ້ຄົນເຫລົ່ານີ້ປ່ອງບ້ານຫ້ຳຫລັກການຕັກກະສາດແລ້ວ. ວິທີການ

ອັນນັ້ນ, ອັນນັ້ນບໍ່ດີ ຍ້ອນແນວນັ້ນຈຶ່ງຄວນໃຊ້ວິທີການແບບທີ່ຫນຶ່ງ ທັ້ນ. ອີກດົນປານໃດນັ້ນຈຶ່ງຈະສອນການຮັບຮູ້ຕັກກະສາດແຫ່ງສັດ ຈະທຳໄດ້? ເຮັດແນວໃດຈຶ່ງຈະຊີ້ສະແດງໃຫ້ພວກເພິ່ນເຂົ້າໃຈວ່າ ວຽກງານຂອງຂ້າພະເຈົ້າຫມາຍເຖິງຂະບວນປະຕິບັດງານເປັນຊຸດໆ ຕໍ່ເນື່ອງກັນ ອາດຈະຍືດຍາວຫນ້ອຍຫລາຍກວ່າກັນ ແລ້ວແຕ່ກໍລະນີ, ບາງຄັ້ງອາດກິນເວລາຫລາຍປີ, ນອກນັ້ນມັນຍັງຕ້ອງຄົງໄວ້ ເຊິ່ງລັກສະນະປະທະກັນ ແລະ ໃນນັ້ນສິດຜົນປະໂຫຍດຂອງຫນ່ວຍ ຊີວິດໂຮມຫມູ່ ແລະ ປັດເສກບຸກຄົນມັນສັບຊ້ອນເຂົ້າກັນຢ່າງສັບ ສົນຫຍຸ້ງຍາກກວ່າຫມູ່? ເຮັດແນວໃດພວກເພິ່ນຈຶ່ງຈະເຊື່ອຫມັ້ນ ວ່າ ຜ່ານວຽກງານພຶດຕິກຳຕົວຈິງ ກໍ ປີຢູ່ໃນນິຄົມນັ້ນ ຂ້າພະເຈົ້າ ຍັງບໍ່ເຄີຍພົບເຫັນກໍລະນີຄ້າຍຄືກັນອ້ອຍຕ້ອຍຈັກຄູ່ເລີຍ? ເຮັດ ແນວໃດຈຶ່ງຈະອະທິບາຍໃຫ້ພວກເຂົາຮູ້ວ່າ ມັນເປັນເລື່ອງເຫລືອວິ ໄສທີ່ຈະສຶກສອນໃຫ້ນິຄົມສູ້ທົນຍອມຮັບສະພາບໄຮ້ພະລັງຂອງສັງ ຄົມແບບນີ້, ຍອມຮັບຄວາມເຄັ່ງຕຶງໃນຄວາມບໍ່ແນ່ນອນເຊັ່ນຢູ່ໃນກໍ ລະນີຕັດສິນເລື່ອງຂອງ ອູຊິກອບ ໃນວັນນີ້, ມັນບໍ່ແມ່ນວ່າ ອູຊິ ກອບເປັນເປົ້າຫມາຍຫນຶ່ງຂອງວຽກງານສຶກສາອົບຮົມ, ຫລືວ່າ ເດັກນ້ອຍນິຄົມທັງ 600 ຄົນແຍກປ່ຽວ ແຕ່ມັນແມ່ນກະໂຕຫນ່ວຍ ຊີວິດໂຮມຫມູ່ພຸ້ນທີ່ເປັນເປົ້າຫມາຍຂອງການສຶກສາອົບຮົມ.

ນາຍກອງປະຈຳວັນເຊີນໃຫ້ພວກເຮົາກັບເຂົ້າໄປໃນຫ້ອງ. ພວກເດັກນ້ອຍຍືນຟັງຄຳຕັດສິນຢ່າງມິດສະຫງັດ: ຄຳຕັດສິນມີ ເນື້ອໃນດັ່ງຕໍ່ໄປນີ້:

"ໃນຖານະເປັນສັດຕູຂອງຊາວຜູ້ອອກແຮງງານ ແລະ ເປັນຂ້

ກະໂມຍ, ອຸຊຶກອບ ຄວນຖືກໄລ່ອອກຈາກນິຄົມຢ່າງບໍ່ມີຄວາມປານີ ແຕ່ຍ້ອນວ່າຄະນະກວດກາຈາກກະຊວງສຶກສາປະຊາຊົນໃຫ້ຄວາມ ເຫັນອົກເຫັນໃຈຫນໍ, ສານເຊິ່ງຕັ້ງຂຶ້ນໂດຍຫມູ່ຄູ່ຂອງມັນເອງຈຶ່ງ ຕົກລົງວ່າ:

໑. ໃຫ້ ອຸຊຶກອບ ຢູ່ນິຄົມຕໍ່ໄປ.

໒. ໃນລະຍະ ໑ ເດືອນ, ອຸຊຶກອບ ບໍ່ໝີສິດໄດ້ຊື່ວ່າເປັນສະ ມາຊິກຂອງນິຄົມ ແລະ ຖືກໄລ່ອອກຈາກກອງຂອງມັນ ທັງຖືກຕັດ ສິດບໍ່ໃຫ້ເຂົ້າເປັນສະມາຊິກໃນກອງພິເສດໃດໆ. ຫ້າມສະມາຊິກນິ ຄົມທຸກຄົນປາກເວົ້າກັບມັນ, ຊ່ວຍເຫລືອມັນ, ກິນເຂົ້າຮ່ວມໂຕະ ຮັບມັນ, ນອນຢູ່ໃນຫ້ອງດຽວກັບມັນ, ຫລິ້ນຫີວ, ນັ່ງ ແລະ ຍ່າງ ໄປມາກັບມັນ.

໓. ອຸຊຶກອບ ຈະຍັງຢູ່ໃນການບັງຄັບບັນຊາຂອງນາຍກອງເກົ່າ ຂອງມັນຄືເມີຕຣີ ເຊເວລີ ເຊິ່ງໄດ້ຮັບອະນຸຍາດໃຫ້ປາກເວົ້າກັບມັນ ສະເພາະແຕ່ໃນກໍລະນີອັນຮີບດ່ວນເທົ່ານັ້ນ, ອີກຜູ້ຫນຶ່ງທີ່ໄດ້ຮັບສິດນີ້ແມ່ນ ແພດຖ້ຳມັນເຈັບປ່ວຍ.

໔. ອຸຊຶກອບ ຈະມີຕຽງນອນຢູ່ຮ່ວມລະບຽງຂອງຫໍພັກ, ຈະ ກິນເຂົ້າຢູ່ໂຕະຫນຶ່ງຕ່າງຫາກ, ເລຂາສະພານາຍກອງຈະເປັນຜູ້ສັ່ງ ວ່າຕັ້ງໂຕະໃສ່ໃສ, ມັນຈະເຮັດວຽກກໍໄດ້ຖ້າຢາກເຮັດ ແຕ່ເຮັດຢູ່ ຕ່າງຫາກຕາມຫນ້າທີ່ວຽກງານທີ່ນາຍກອງຂອງມັນມອບຫມາຍ ໃຫ້.

໕. ໃຜກໍຕາມທີ່ລະເມີດຄຳຕົກລົງດັ່ງກ່າວ ຈະຖືກໄລ່ອອກຈາກ ນິຄົມທັນທີ, ຕາມຄຳສັ່ງຂອງເລຂາສະພານາຍກອງ.

ຝ. ຄຳຕັດສິນດັ່ງກ່າວຈະຖືກນຳໃຊ້ປະຕິບັດໃນທັນທີທີ່ຜູ້ອຳ
ນວຍການນິຄົມລົງລາຍເຊັນ".

ສຽງຕີບມືດັງອອກມາຈາກຫ້ອງປະຊຸມສະຫນັບສະຫນູນຄຳຕັດ
ສິນ. ກູສະມາເລຊີ ເວົ້າກັບພວກເຮົາວ່າ:

- ຫັ້ນລະ... ດີແລ້ວ ຕັດສິນໄດ້ແນວນີ້ ມັນຊິເປັນປະໂຫຍດ
ດອກ! ປານນັ້ນຍັງມີຜູ້ເວົ້າວ່າ: ຈົ່ງອ່ອຍບັກນ້ອຍນີ້ແດ່, ເຊີນເອົາ
ອີກເອົາໃຈໃຫ້ມັນເປັນອາດຍາເທາະແມ້... ຮ້ອຍ!

ກູສະມາ ທັ່ງຄຳເວົ້າເຫລົ່ານີ້ອອກມາໃສ່ຫນ້ານາງ ເບຣແຊນ
ໂດຍກົງໂດຍບໍ່ຄຶດວ່າຕົນເອງພວມສະແດງຄວາມອວດດີອອກໄປ.
ເບຣແຊນ ເສືອດແສງຕາບໍ່ພໍໃຈໃສ່ປຸ້ມຜົມຫຍອງໆຂອງມັນ ແລະ
ເວົ້າກັບຂ້າພະເຈົ້ານ້ຳສຽງເປັນການເປັນງານວ່າ:

- ເຈົ້າຄຶບໍ່ເຫັນດີນຳຂໍ້ຕົກລົງອັນນີ້?

- ບໍ່ໃດ່, ຂ້ອຍຕ້ອງເຫັນດີນຳມັນລະບໍ່, - ຂ້າພະເຈົ້າຕອບ.

ຢູ່ໃນຫ້ອງເປົ່າແປນຂອງສະພານາຍກອງ, ຊຸກຣິນສະກາຍຢາ
ເວົ້າລົມກັບຂ້າພະເຈົ້າສອງຕໍ່ສອງວ່າ:

- ຂ້ອຍຢາກເວົ້າກັບເຈົ້າ, ຂໍ້ຕົກລົງຕັດສິນອັນນີ້ເປັນແນວໃດ!
ເຈົ້າຄຶດວ່າມັນຖືກຕ້ອງບໍ່?

- ເປັນການຕັດສິນທີ່ຄືສົມຄວນ, - ຂ້າພະເຈົ້າຕອບຄືນ, -ການ
ຂ້ຳບາດ ອາດເປັນວິທີການທີ່ອັນຕະລາຍຢ່າງຫນຶ່ງ ແລະ ໂດຍ
ທົ່ວໄປພວກເຮົາກໍບໍ່ໃຊ້ມັນດອກ ແຕ່ໃນກໍລະນີພິເສດຢ່າງນີ້ກໍສົມ
ຄວນຢູ່.

- ເຈົ້າບໍ່ມີຄວາມສົງໄສເລີຍຫວະ?

- ບໍ່ເລີຍ, ເຈົ້າແລ້ວຕໍ່ວ່າ ຫນໍ ອູຊຶກອບ ຄົນນ້ຶກຫມູ່ກຽດ ລ້ຳພຽງໃດຢູ່ໃນນິຄົມ, ມັນບໍ່ໄດ້ຮັບຄວາມໄວ້ວາງໃຈເລີຍ. ການ ຂວ້ຳບາດໃນຂັ້ນຕົ້ນຈະມີຜົນດີໃນການນຳໃຊ້ຮູບການແບບໃຫມ່ທີ່ ກຶກກົດຫມາຍກ່ຽວກັບສາຍພົວພັນ ຖ້າຫາກວ່າ ອູຊຶກອບ ອົດທົນ ໄດ້ໃນໄລຍະ 30 ມື້ນີ້, ມັນກໍຈະໄດ້ຮັບຄວາມເຄົາລົບນັບຖື ຈາກ ຫມູ່... ມັນເປັນຂໍ້ທົດສອບທ່ີ່ມີກຽດສູງສຳລັບມັນ.

- ແຕ່ຄັນວ່າມັນທົນບໍ່ໄດ້ເດ້?

- ພວກເດັກນ້ອຍກໍຈະໄລ່ມັນໄປເອງ.

- ແລ້ວເຈົ້າກະຊິເຫັນດີນຳຊັ້ນຫວະ?

- ແນ່ນອນແລ້ວ.

- ຊິເຮັດແນວນ້ີ້ໄດ້ແບບໃດ?

- ແລ້ວຊິໃຫ້ເຮັດແບບໃດຊັ້ນ? ຫນ່ວຍຊີວິດໂຮມຫມູ່ມີສິດ ປົກປ້ອງຕົນເອງເດ້.

- ດ້ວຍການສ່ຽງກັບ ອູຊຶກອບ ເອງຫວະ?

- ອູຊຶກອບ ຈະຄົ້ນພົບສັງຄົມທ່ີ່ເຫມາະສົມກັບໂຕມັນເອງ ແລະ ສ່ິງນ້ີ້ກໍຈະເປັນປະໂຫຍດສຳລັບໂຕມັນເອງຄືກັນ.

ລຸກຣົນສະກາຍຢາ ຍ້ີ້ມເສ້ົາໆ:

- ຈະເອ້ີ້ນວິທີການສຶກສາສາດປະເພດນ້ີ້ວ່າແນວໃດ?

ຂ້າພະເຈົ້າບໍ່ຕອບນາງ, ຄາວດຽວນາງກໍຄົ້ນພົບເອງ:

- ອາດຈະແມ່ນສຶກສາສາດແຫ່ງການຕໍ່ສູ້ ບໍ?

- ອາດຈະແມ່ນ.

ຢູ່ໃນຫ້ອງການ ເບຣແຊນ ກຽມຕົວອອກເດີນທາງ, ລາປົດ

ກ້າວເຂົ້າມາໃນຫ້ອງພ້ອມດ້ວຍເຈ້ຍຄຳຕັດສິນ:

-ພວກເຮົາລົງລາຍເຊັນຮັບຮອງບໍ່ ອານໂຕນ ເຊມີອໂນວິດ?

-ແນ່ນອນແລ້ວ... ມັນເປັນການຕັດສິນທີ່ວິເສດສຸດແລ້ວ.

-ພວກເຈົ້າຊິພາກັນແຫຍ້ໃຫ້ບັກນ້ອຍນັ້ນຂ້າໂຕຕາຍແລ້ວ! - ນາງເບຣແຊນ ເວົ້າຂຶ້ນ.

-ແມ່ນໃຜຊິຂ້າໂຕຕາຍ ຫນໍ ອູຊິກອບ ຫັ້ນຫວະ? ໂອ້ຍ! - ລາປິດອຸທານແລ້ວເວົ້າວ່າ: - ຣະຣ່າ... ຄັນມັນຜູກຄໍຕາຍແທ້ກໍບໍ່ຫນ້າເສຍດາຍດອກ... ຍ້ານແຕ່ວ່າມັນຊິບໍ່ຜູກຫັ້ນຫລາຍກວ່າ...

-ໂອ້ຍ... ເປັນຕາຫນ່າຍແທ້! - ນາງກັດແຂ້ວເວົ້າ ແລ້ວ ອອກໄປ.

ພວກແມ່ຍິງເຫລົ່ານັ້ນບໍ່ຮູ້ຈັກ ອູຊິກອບ ແລະ ນິຄົມຂອງພວກເຮົາດີພໍເທື່ອ. ກະໂຕນິຄົມ ໂຮມທັງ ອູຊິກອບ ເອງຕ່າງກໍພໍໃຈ ນຳການຂວ້ຳບາດຄັ້ງນີ້. ພວກເດັກນ້ອຍຈະຕັດຂາດສາຍພົວພັນທຸກຢ່າງກັບ ອາກກາດ ແຕ່ພວກເຂົາຈະບໍ່ມີຄວາມໂກດແຄ້ນຊິງຊັງ, ດູຫມິ່ນຢຽດຢາມຕໍ່ບຸກຄົນທີ່ຫ້ານສິງສານຄົນນີ້ອີກຕໍ່ໄປ. ມັນຄ້າຍກັບວ່າ ຄຳຕັດສິນຂອງສານໄດ້ຮັບເອົາທຸກສິ່ງທຸກຢ່າງເຫລົ່ານີ້ໃຈ້ ຫມົດແລ້ວ. ພວກເດັກນ້ອຍສ້ຳຊອມຕິດຕາມເບິ່ງ ອູຊິກອບ ຢູ່ໄກໆ ດ້ວຍຄວາມຮູ້ສຶກສົນໃຈ ແລ້ວກໍຫລົງໂອ້ລົມສົນທະນາກັນກ່ຽວກັບ ອະດີດ ແລະ ອະນາຄົດທີ່ລໍຄອຍມັນຢູ່ຢ່າງບໍ່ຫມົດບໍ່ສ້ຽງເປັນ. ຫລາຍຄົນແນ່ໃຈວ່າ ການຕັດສິນແບບນີ້ຂອງສານຈະບໍ່ບັງເກີດຜົນມີຄ່າໃດໆ, ເຊັ່ນ ຄວາມເຫັນຂອງ ໂກສເຈຍ ເວດກອບສະກີ ທີ່ວ່າ:

-ນ້ຶຫວະການລ້ຽໂທດ! ຫມໍ ອູຊຶກອບ ກາຍເປັນພະເອກໄປ ເລີຍ! ຄຶດເບິ່ງແມ້... ຄົນຫມິດນ້ຶດົນແນມເບິ່ງມັນ! ພໍປານວ່ານ້ ຄ່າພໍເບິ່ງແຄ່.

ເວົ້າແທ້ແລ້ວ ອູຊຶກອບ ກໍເປັນຄ້າຍຄຶພະເອກເດ່ນຄົນຫນຶ່ງຢູ່. ວາດແວວອວດອ້ຶຂຸ້ຍຢ່າງຫນຶ່ງປາກົດຂຶ້ນບົນໃບຫນ້າຂອງຫມໍຢ່າງ ຈະແຈ້ງ. ມັນຢ່າງກາຍເດັກນ້ອຍອຶ່ນໆໄປພໍປານພະລາຊາ ເຊິ່ງບໍ່ ອາດມີໃຜມີສິດອ້າປາກເວົ້າລົມນໍາເພື່ອກາມບັນຫາໃດຫນຶ່ງ ຫລືໂອ້ ລົມນໍາ. ຢູ່ໂຮງອາຫານ ອູຊຶກອບ ນັ່ງກົນເຂົ້າຢູ່ໂຕະນ້ອຍຫນ່ວຍ ຫນຶ່ງຜູ້ດຽວນັ ແລະ ໂຕະນ້ອຍນ້ຶກໍເປັນຄຶລາຊະບັນລັງຂອງມັນ.

ແຕ່ບໍ່ດົນສະເຫນແຫ່ງການວາງທ່າແບບພະເອກວິລະຊົນແບບ ນ້ຶກໍຈົດຈາງຫາຍເຫຶຍໄປ. ບໍ່ພໍເທົ່າໃດນ້ ອູຊຶກອບ ກໍຮູ້ສຶກເກິງ ຫນາມແຫລມຢູ່ເທິງກະໂຈມຫົວແຫ່ງຄວາມເຊື່ອມເສຍສັກສິຈາກ ການຕັດສິນຂອງຫມູ່ຄູ່ຕົນເອງ. ພວກເດັກນ້ອຍແທ້ຊຶນເຄີຍກັບສະ ຖານະການພິເສດຂອງຫມໍຢ່າງໄວວາ ແຕ່ການຢູ່ໂດດດ່ຽວຍັງຄົງດໍ ເນີນຢູ່ຕໍ່ໄປ. ອາການດ ເລີ່ມຮູ້ສຶກເກິງນ້ຳຫນັກຂອງວັນວັນໂດດ ດ່ຽວຢ່າງຂາດຕົວຂອງຫມໍ ແລະ ວັນເວລາເຫລ່ານັ້ນກ໊ຍືດຍາວ ອອກ, ເວລາເປັນສິບໆຊົ່ວໂມງຜ່ານໄປຢ່າງແປນເປົ່າຊ້ຳຊາກແບບ ເກົ່າ ບ່ມີຮອດແຕ່ຄວາມຮ້ອນອຸ່ນຈາກອາຍຄົນພໍຊິໃຫ້ດີໃຈວ່າ ເປັນ ເຄື່ອງປະດັບປະດາວັນເວລາເຫລ່ານັ້ນ. ໃນເວລາດຽວກັນນັ້ນ ຢູ່ ອ້ອມຂ້າງ ອູຊຶກອບ, ຫນ່ວຍຊີວິດໂຮມຫມູ່ຊ້ຳດໍລົງຊີວິດຢ່າງ ຟົດຟື້ນ, ມີສຽງຫົວ, ສຽງເວົ້າຍອກໄຍເລ້ດລອດອອກຈາກຈອກ ແຈຕ່າງໆ, ລັກສະນະເດ່ນຂອງແຕ່ລະຄົນພ້ັນເດ່ນຂຶ້ນ, ແປວໄຟ

ແຫ່ງມິດຕະພາບ ແລະ ຄວາມເຂົ້າອົກເຂົ້າໃຈກັນຮຸ່ງຮອງຂຶ້ນ. ເຖິງແມ່ນວ່າຈິດໃຈຂອງ ອູຊຶກອບ ແຂງກະດ້າງ ຕໍ່ສົ່ງເຫລົ່ານີ້ມາ ແລ້ວກໍຕາມ ແຕ່ຄວາມອ່ອນຊຶ່ນເບີກບານເຫລົ່ານີ້ກໍຫາກເຄີຍໃກ້ຊິດ ຕິດຕາມພັນຢູ່.

ອາທິດຫນຶ່ງຜ່ານໄປ, ເຊເວລີ ນາຍກອງຂອງພັນກໍມາບອກ ຂ້າພະເຈົ້າວ່າ:

-ອູຊຶກອບ ຂໍອະນຸຍາດເວົ້າກັບເຈົ້າ.

-ບໍ່, ຂ້າພະເຈົ້າຕອບ, ກັນຊິເວົ້າກັບພັນກໍຕໍ່ເມື່ອພັນຮູ້ທິນ ຜ່ານຜ່າຂໍ້ທົດສອບອັນນີ້ໄດ້ຢ່າງສົມກຽດແລ້ວເທົ່ານັ້ນ, ໂຕໄປບອກ ພັນແນວນັ້ນເດ.

ແລະ ແລ້ວບໍ່ດົນຂ້າພະເຈົ້າກໍດີໃຈທີ່ໄດ້ເຫັນວ່າອີງຄໍແຂງກະ ດ້າງບໍ່ເຄື່ອນເຫນັງເປັນຂອງ ອາກກາດີ ໃນເມື່ອກ່ອນ ເລີ່ມຫຍຸ້ຍຸ່ ເຂົ້າຫາກັນຈົນຫນ້າຜາກຂອງພັນເກືດຮ່ອງຂີດໆບໍ່ເລີກແຕ່ພໍແນມ ເຫັນ. ພັນເລີ່ມສ້າງຊອມເບົ່າພວກເດັກນ້ອຍເປັນເວລາຫລາຍຊົ່ວ ໂມງ ທ້າຄຶດຝັນໄປນໍ. ຫມິດທຸກຄົນສັງເກດເຫັນການປ່ຽນແປງ ຈະແຈ້ງຢ່າງຫນຶ່ງຢູ່ໃນທັດສະນະທ່າທີຂອງຫມໍຕ່ອງກາງ. ເຊ ເວລີ ມອບວຽກຮັກສາຄວາມສະອາດເດີ່ນໃຫ້ຫມໍເຮັດເລື້ອຍໆ. ອາກກາດີ ລົງມືເຮັດວຽກຢ່າງເອົາຈິງເອົາຈັງຄັກແນ່ຊະນິດບໍ່ມີຫຍັງ ຕ້ອງຕິໄດ້, ຫມໍປັດກວາດເດີ່ນອັນກ້ວາງຂວາງຂອງພວກເຮົາ, ເອົາ ກະໂລ່ງຂີ້ເຫຍື້ອໄປຖອກ, ເອົາໃຈໃສ່ຮົ້ວໄມ້ອ້ອມຫນາມດອກໄມ້. ໃນຕອນແລງຫມໍກໍມັກອອກມາໃນເດີ່ນພ້ອມດ້ວຍຫມາກຊ້ວນໃນ ມື, ກວາດເກັບເອົາເຈ້ຍເສດ, ກິດກອກຢາ, ຮັກສາຄວາມສະ

ອາດຫນາມດອກໄມ້. ຄັ້ງຫນຶ່ງມັນມານັ່ງຢູ່ຈົນຫມົດແລງໃນຫ້ອງຮຽນ ແລ້ວກຸ່ມຂຽນອັນໃດອັນຫນຶ່ງໃສ່ເຈ້ຍແຜ່ນໃຫຍ່ເຊິ່ງມັ່ນຕົ໋ມາຫມໍໄດ້ເອົາຂຶ້ນຕິດປະກາດໃຫ້ທຸກຄົນອ່ານ, ຂໍ້ຄວາມນັ້ນຂຽນວ່າ:

"ຊາວນິຄົມ, ຈົ່ງນັບຖືແຮງງານຂອງຫມູ່ເພື່ອນແດ່, ຢ່າກົ້ມເສດເຈ້ຍລົງພື້ນດິນ".

-ສູເບິ່ງແມ້, - ກອກກົບສະກີ ເວົ້າຂຶ້ນ, - ມັນຖືວ່າມັນເປັນຫມູ່ພວກເຮົາໃດ໋ບໍ!

ພໍເວລາທົດສອບຜ່ານໄປເກືອບເຄິ່ງຫນຶ່ງ, ສະຫາຍ ນາງ ໂຊຢາ ກໍມາຍັງນິຄົມ, ຖືກເວລາກິນເຂົ້າພໍດີ. ໂຊຢາ ມຸ່ງຫນ້າໄປຍັງໂຕະຂອງ ອູຊຶກອບ ໂດຍກົງ ແລະ ທ່າມກາງຄວາມງຽບສົດຂອງໂຮງອາຫານ, ນາງກາມັນຂຶ້ນທັນທີວ່າ!

-ເຈົ້າເບາະຊື່ ອູຊຶກອບ? ຮູ້ສຶກເປັນແນວໃດບອກມາໂລດ!

ອູຊຶກອບ ເງີຍຫົວຂຶ້ນກ້ຽວຕາແນມເບິ່ງ ໂຊຢາ ຢ່າງມິດງຽບ ແລ້ວນ້ຳສຽງສຸພາບຕອບວ່າ:

-ຂ້ອຍບໍ່ສາມາດເວົ້າກັບເຈົ້າໄດ້, ຕ້ອງໃຫ້ນາຍກອງອະນຸຍາດກ່ອນ.

ສະຫາຍນາງ ໂຊຢາ ຟ້າວແລ່ນໄປຫາ ມິເຕຍ ດ້ວຍຕົນເອງ. ມິເຕຍມາຮອດທ່າທາງຟ້າວຟັ່ງ ສາຍຕາດຳປີ້ປານກ່ານແຈ່ມໃສວ່າ:

-ມີເລື່ອງຫຍັງຊັ້ນຫວະ?

-ອະນຸຍາດໃຫ້ຂ້ອຍລົມກັບ ອູຊຶກອບແດ່.

-ບໍ່ອະນຸຍາດ, - ເຊເວລີ ຕອບ.

-ເປັນຫຍັງຈົ່ງວ່າບໍ່?

- ໂອ້ວ... ກະບໍ່ມີຫຍັງ... ຂ້ອຍບໍ່ອະນຸຍາດຈ໋ອກ.

ສະຫາຍ ນາງ ໂຊຢາ ປົນຂົ້ນມາຮອດຫ້ອງການຂອງຂ້າພະເຈົ້າ ແລ້ວກອກທັ່ງຄວາມເວົ້າໄຮ້ສາລະໃສ່ຂ້າພະເຈົ້າລຸດໆ:

- ມັນຫມາຍຄວາມວ່າແນວໃດນີ້? ຄັນວ່າມັນມີແນວຂໍ້ຮ້ອງ ອ້ອນວອນຫັ້ນເດ້? ສົມມຸດວ່າມັນມີແນວຄິດຢາກແກ້ໄຂແນວໃດ ແນວຫນຶ່ງຫັ້ນເດ້... ມັນແມ່ນການທໍລະມານອ້ອຍຕ້ອຍຕ່ໍານີ້!

- ຂ້ອຍຈ່ອຍຫຍັງບໍ່ໄດ້ແລ້ວສະຫາຍ ໂຊຢາ.

ສ໋ຕໍ່ມາ ຢູ່ກອງປະຊຸມໃຫຍ່, ນາຕາຊາ ເປເຕຣັນໂກ ເປັນຜູ້ເວົ້າ:

- ບັດນີ້ຫມູ່ພວກ ເອ໊ຍຈ່ຽຍົກໂທດໃຫ້ ອູຊີກອບ ແດ່. ຫນໍ ເຮັດວຽກດີ ແລະ ສູ້ທົນຮັບໂທດຢ່າງສົມກຽດ໊ກັບຊາວນິຄົມແທ້. ຂ້ອຍຄິດວ່າຄືນີ້ການນິລະໂທດ.

ສຽງດັງຟົດນັ້ນນອງ໊ຂົ້ນສະແດງຄວາມເຫັນພ້ອມ.

- ເຫັນດີ.

- ອູຊີກອບ ປັບປຸງໂຕເອງໄດ້ດີຫລາຍ...

- ຊິມເຊີຍ...

- ແມ່ນແທ້... ເຖິງເວລາແລ້ວ...

- ຕ້ອງຈ່ອຍບັກນ້ອຍນີ້ແດ່!

ນິການສະເຫນີໃຫ້ນາຍກອງລາຍງານສະພາບ, ເຊເວລີ - ກະແຫລງວ່າ:

- ກັນຂໍເວົ້າແຈ້ງໆໂລດ: ຫນໍກາຍເປັນຄົນໃຫມ່ຜູ້ຫນຶ່ງແລ້ວ

ມ້ວານນີ້ຕອນສາວັນນັ້ນມາຫັ້ນເກາະ ມັນ... ວັນນີ້ພວກເຈົ້າກໍຮູ້ ລະຕິ!

-ເອ້ ຮູ້ແລ້ວ.

-ສາວນັ້ນໄປພົບຫມໍແລ້ວເວົ້າວ່າ: ບັກຫລ້າ, ບັກຄຳນຳມັນ ແຕ່ມັນມີໃຈເດ້... ບ່ຍອມໃຫ້ເພິ່ນຈູງດ້ວຍ. ເຮົາເອງແຕ່ກ່ອນຄຶດ ວ່າ ອາກກາດ ບ່ມີຫວັງຊິປ່ຽນແປງເປັນຄົນຈິບຄົນດີໄດ້ດອກ ແຕ່ ບັດນີ້ເຮົາສາມາດບອກພວກໂຕໄດ້ເລີຍວ່າ... ຢູ່ໃນໂຕຫມໍກໍມີສິ່ງ ໃດສິ່ງຫນຶ່ງຄ້າຍຄືກັບພວກເຮົາ.

ລາປົດ ຍົ້ມປາກກ້ວາງ:

-ຊັ້ນກະໄດ້ແລ້ວ... ນິລະໂທດໄດ້!

-ລົງຄະແນນເວີ້ຍ! - ມີສຽງຮ້ອງຈາກພວກເດັກນ້ອຍ.

ໃນເວລານັ້ນ ອູຊຶກອບ ຍືນໂຕແຂງຢູ່ຂ້າງເຕົາຝີ, ກົ້ມຫົວ ຕ່ຳ. ລາປົດ ກວາດສາຍຕານັບເບິ່ງມັນຊ້ຳ ແລ້ວເວົ້າຢ່າງແຈ່ມ ໃສວ່າ:

-ໂຫ້... ເປັນເອກະສັນພຸ້ນຫວະຫນີ! ອາກກາດ ໂຕຢູ່ໃສ ເວີ້ຍ... ຊິມເຊີຍເດ້, ໂຕເປັນອິດສະຫລະແລ້ວ...

ອາກກາດ ຂຶ້ນໄປປາກົດຕົວເທິງເວທີ, ສາຍຕາກວາດແນມໄປ ທົ່ວໆ, ອ້າປາກຂຶ້ນຄືຈະເວົ້າແລ້ວຊ້ຳໃຫ້ສະອຶ້ນຂຶ້ນ.

ພາຍໃນຫ້ອງໃຜໆກໍໃຈຄ້າມສະທ້ານໄປນຳ, ໃຜຜູ້ຫນຶ່ງຮ້ອງ ຂຶ້ນວ່າ:

-ມ້ວນສາຈົ່ງໃຫ້ມັນເວົ້າ...

ແຕ່ ອູຊຶກອບ ໃຊ້ແຂນເສື້ອເຊັດປ້າຍນ້ຳຕາ, ຂ້າພະເຈົ້າສັ່ງ

ເກດເບິ່ງມັນຄັກໆ ແລ້ວກໍເຫັນວ່າມັນທໍລະມານຫົວໃຈສົມຄວນ, ໃນທີ່ສຸດມັນຈຶ່ງເວົ້າຂຶ້ນວ່າ:

-ຂອບໃຈ... ຫມູ... ທ້ຽງຊາຍ... ແລະຍິງ... ນາຕາຊາ... ເຮົາ... ເຮົາເຂົ້າໃຈທຸກຢ່າງແລ້ວ... ຢ່າຄຶດເທາະວ່າ ອື... ຂໍນ້ຳ ເທາະ...

-ລືມມັນສາ! - ລາປິດ ສັ່ງຢ່າງຂ້ຽວຂາດ.

ອູຊຶກອບ ງຶກຫົວຮັບແບບຍອມຈຳນົນ. ລາປິດ ກ່າວອັດກອງ ປະຊຸມ ແລ້ວພວກເດັກນ້ອຍກໍປຸ້ມຂຶ້ນໄປຫາ ອູຊຶກອບ. ຄວາມໃຈ ກ້ວ້າງຂອງພວກເຂົາໃນວັນນີ້ໄດ້ຮັບຜົນປະໂຫຍດທົດແທນຄືນຢ່າງ ເຫລືອເຟືອ.

ຂ້າພະເຈົ້າຫາຍໃຈຢ່າງປອດໂປ່ງຄ້າຍທ່ານຫມໍຫລັງຈາກເຮັດ ການຜ່າຕັດເທິງມັນສະຫມອງສຳເລັດແລ້ວ.

ເພິ່ນທຳພິທີໄຂກອມມູນ ແລະຊຸນສະກີ ໃນເດືອນທັນວາ. ບັນຍາກາດໃນວັນນັ້ນເຄັ່ງຂຶມເປັນສະຫງ່າ ແລະ ອົບອຸ່ນຫລາຍ.

ກ່ອນຫນ້ານັ້ນບໍ່ເທົ່າໃດມື້, ໃນວັນຫນຶ່ງຊຸ່ງຍອງຫິມະອ່ອນໆ ໄດ້ຮວາຍຮ່ຳຫວ່ານລົງມາ, ພວກເດັກນ້ອຍ ຄ0 ຄົນ ຊຸ່ງທາງ ນິຄົມໄດ້ຄັດເລືອກແລ້ວໃນເຄື່ອງແບບຊຸດໃຫມ່ອ່ຽມ, ສຸບເສື້ອຄຸມ ຂົນກັນຫນາວ, ພວກເຂົາກ່າວອຳລາຫມູ່ຄູ່ແລ້ວອອກເດີນທາງ ຢ່າງຜ່າເມືອງໄປຍັງເຄຫາສະຖານບ່ອນພັກເຊົາແຫ່ງໃຫມ່ຂອງ ພວກເຂົາ. ພວກເຂົາຍ່າງເປັນກຸ່ມນ້ອຍໆແຫ້ຍບຸງກັນ, ແນມ ເບິ່ງໄກໆຄືວ່າພວກເຂົາຄ້າຍໄກ່ນ້ອຍສີດຳຫນ້າຮັກ. ພວກເຂົາໄປ ຮອດກອມມູນ, ເສື້ອຜ້າປົກຄຸມດ້ວຍຍອງຫິມະຂາວຄືຫມາກນຸ່ນ,

ໃບຫນ້າແຈ່ມໃສ ພວງແກ້ມແດງອ່ອງຕ່ອງ. ບໍ່ຕ່າງຫຍັງກັບໄກ່ນ້ອຍ, ພວກເຂົາແລ່ນເລາະໄປອ້ອມງົມຄົນ ຢ່າງມ່ວນຊື່ນອ່ອງໄວ ທັງໃຊ້ສົບຄວັກເຂ່ຍສ້ຳກ່ວມເກົ່ວວຽກງ່ານການຈັດຕັ້ງບໍ່ເຊົ່າ. ປະມານສົບຫ້ານາທີຕໍ່ມາ ພວກເຂົາກໍໄຂກອງປະຊຸມສະພານາຍກອງຂຶ້ນໄດ້, ແລະ ກອງພິເສດທີ ມ ກໍລິ່ງມືຂຶ້ນຍ້ານຕຽງໂລດ.

ຊາວນິຄົມ ກ້ອກກ໋ ໄປຮ່ວມພິທີໄຂໂດຍມີກອງດຸລິຍາງນຳຫນ້າ ໂດຍຄົນທຸ່ງ. ບັດນີ້ພວກເຂົາເປັນແຂກຂອງພວກຫມູ່ຕົນເອງ ເຊິ່ງ ນັບແຕ່ວັນນີ້ໄປຈະມີຊື່ ແປກໃຫມ່ ແລະ ສະຫງ່າງ່ານວ່າ ຊາວ ກອມມູນ. ທ່ານກ່ວງເດັກນ້ອຍ ๔00 ຄົນເຊິ່ງແຕ່ກ່ອນເປັນເດັກ ໄຮ້ຍາດນີ້ ມີພວກ ເຊກ ຜູ້ຮັບຜິດຊອບຫລາຍກວ່າຫມູ່, ມີວຽກ ງ່ານຫລາຍກວ່າຫມູ່ ແລະ ເປັນຜູ້ອອກແຮງງ່ານທີ່ມີກຽດສູງ, ກຸ່ມ ຂອງພວກເຂົາເບິ່ງບໍ່ຄ່ອຍຄົນໃຈບຸນຈັກຫນ້ອຍເລີຍ. ລະຫວ່າງ ສອງກຸ່ມນີ້ເກີດມີສາຍສຳພັນແບບມິດຂຶ້ນທັນທີ ແຕ່ໃນນັ້ນກໍຫາກ ເຫັນໄດ້ຢ່າງຈະແຈ້ງວ່າ ມີຄວາມແຕກຕ່າງລະຫວ່າງຮຸ່ນຄົນ, ມີ ຄວາມເຄົາລົບນັບຖືພິເສດຈາກພວກເຮົາ ມັນແມ່ນຄວາມນັບຖືຂອງ ເດັກນ້ອຍໂຊວຽດຕໍ່ຜູ້ອາວຸໂສກວ່າ. ແຕ່ໃນຂະນະດຽວກັນ, ພວກ ເດັກນ້ອຍເຫລົ່ານີ້ຊ້ຳບໍ່ປະພຶດໂຕແບບ "ເອ້ນ້ອຍໃນຄວາມປົກ ຄອງ", ພວກເຂົາມີການຈັດຕັ້ງຂອງຕົນເອງ, ມີກົດຫມາຍ ແລະ ຂອບເຂດພຶດຕິກຳຂອງຕົນເອງ ເຊິ່ງໃນນັ້ນພວກເຂົາພົບວ່າມີຄວາມ ທໍລະນົງ, ມີຄວາມຮັບຜິດຊອບ ແລະ ຫນ້າທີ່ສົງ້ອນຢູ່.

ເປັນທີ່ເຂົ້າໃຈພາຍໃນກັນເອງວ່າ ວຽກງ່ານຊີ້ນຳກອມມູນນັ້ນ ຈະຖືກມອບໃຫ້ເປັນພາລະຂອງຂ້າພະເຈົ້າ ເຖິງແມ່ນວ່າບໍ່ທັນມີ

ການຕົກລົງກັນ ຫລືປະກາດອອກມາຢ່າງຈະແຈ້ງກ່ອນ.

ເມື່ອປຽບໃສ່ກອມມູນແລ້ວ ເບ້ຍຄົນຄົມ ກ້ອກກີ ເປັນກົດຈະການຫນັ້ກທີ່ລັບສົນກວ່າ ຫຍຸ້ງຍາກກວ່າ. ເມື່ອເສຍສະມາຊິກໄປ ๕0 ຄົນ, ຊາວນິຄົມ ກ້ອກກີກໍຮັບເອົາເດັກນ້ອຍໃຫມ່ມາຕື່ມ ເປັນເດັກນ້ອຍຈາກເມືອງຫລວງຈໍານວນ ๕0 ຄົນ ເຊິ່ງເຄີຍມີບົດຮຽນຮູ້ວ່າອັນໃດເປັນອັນໃດມາແລ້ວ. ເຊັ່ນດຽວກັບແຕ່ກ່ອນ, ພວກມາໃຫມ່ປັບຕົວເຂົ້າກັບລະບຽບວິໄນຣິດຄອງຂອງນິຄົມໄດ້ຢ່າງໄວວາ ແຕ່ວັດທະນະທໍາອັນແທ້ຈິງ ແລະ ບຸກຄະລະພາບອັນແທ້ຈິງຂອງຫນ່ວຍຊີວິດໂຮມຫມູ່ກໍຮູບຖານຂອງມັນຂຶ້ນຕາມຫລັງຢ່າງຊ້າໆ. ທ້າງຫນົດນີ້ລ້ວນແຕ່ເປັນສິ່ງປົກກະຕິແລ້ວ.

ແລວທາງອະນາຄົດອັນສວຍງາມໄຂອອກຕໍ່ຫນ້າພວກເຮົາແລ້ວ: ພວກເຮົາເລີ່ມຄຶດຝັນເຫັນວິທະຍາໄລກໍາມະກອນຂອງຕົນເອງ, ຄຶດເຫັນອາຄານຫລັງໃຫມ່ເພື່ອໃຊ້ເປັນໂຮງຊ່າງ ແລະ ກົນຈັກ ແລະ ການສົ່ງເສີມຊີວິດແບບໃຫມ່. ບໍ່ດົນຕໍ່ມາ ພວກເຮົາກໍໄດ້ອ່ານຫນັງສືພິມວ່າ ກ້ອກກີ ຂອງພວກເຮົາໄດ້ກັບມາຍັງ ສະຫະພາບແລ້ວ.

ບົດທີ ๑๔

ຮາງວັນຕອບແທນ

ລະຍະເວລາແຕ່ເດືອນກໍລະກົດຫາທັນວາ ນັບວ່າເປັນລະຍະງົດງາມກວ່າຫມູ່ລະຍະຫນຶ່ງ. ໃນຕອນນີ້ນາວາຂອງຂ້າພະເຈົ້າສັ່ນສະເທືອນໂຫ້ຍຫ່ຽງຍ້ອນແຮງພະຍຸ ແຕ່ຢູ່ໃນລໍາເຮືອມີຫນ່ວຍ

ຊີວິດໂຮມຫມູ່ຢູ່ສອງຫນ່ວຍ ແຕ່ລະຄະນະລ້ວນແຕ່ດຶເສດຕາມ
ແບບຂອງຕົນເອງ.

ບໍ່ດົນກອມມູນ ແລກຊຶນສະກີ ກໍມີຈຳນວນພົນຮອດ ๑๔0. ຈຳນວນເສີມເຫລົ່ານີ້ແບ່ງເປັນສາມກຸ່ມ ກຸ່ມລະ ม0 ລ້ວນແຕ່ແມ່ນເດັກນ້ອຍໄຮ້ຍາດຂາດພໍ່ແມ່ "ຂັ້ນຫນ່ຳ" ທັ້ງນັ້ນ, ພວກທີ່ດີກວ່າຫມູ່ກໍວ່າແມ່ນ. ຊາວກອມມູນດຳລົງຊີວິດຢ່າງບໍລິສຸດ ແລະ ມີວັດທະນະທຳ, ເບິ່ງແຕ່ໄກຄືວ່າພວກເຂົາເປັນຫນ້າອິດສາກະດໍ. ຜູ້ຄົນສ່ວນຫລວງຫລາຍຮູ້ສຶກອິດສາພວກເຂົາແທ້ ແລະ ຜູ້ອິດສາເຫລົ່ານັ້ນບໍ່ແມ່ນພຽງແຕ່ເດັກໄຮ້ຍາດຂ້າງກະຫນິນເທົ່ານັ້ນດອກ.

ໃນທີ່ສາທາລະນະ, ຊາວກອມມູນປາກົດຕົວຢູ່ໃນຊຸດເສື້ອຜ້າຫນາໃຫມ່ສະອາດຄໍເສື້ອແຂບສີຂາວ. ພວກເຂົາມີວິຖຸລັຍງາປະກອບດ້ວຍອຸປະກອນເປັນໂລຫະສີຂາວ, ແກເປົ່າຕິດຍີ່ຫໍ້ຜະລິດຈາກບໍລິສັດມີຊື່ຂອງເມືອງ ປຣາກ. ຊາວນິຄົມເປັນແຂກເຊີນທີ່ໄດ້ຮັບການຕ້ອນຮັບຢ່າງດີຢູ່ໃນສະໂມສອນກຳມະກອນ ແລະ ສະໂມສອນຂອງຊາວ ເຊກ, ໃນສະຖານທີ່ເຫລົ່ານີ້ພວກເຂົາສະຫງ່າງາມເບີກບານແຈ່ມໃສ ແກ້ມແດງອ່ອງຕ່ອງ. ຫນ່ວຍຊີວິດໂຮມຫມູ່ຂອງພວກເຂົາຍາມໃດກໍມີທ່າທີວ່າ ມີວັດທະນະທຳສູງ ຈົນວ່າບາງຄົນທີ່ມີສະຫມອງອ່ອນຕົ້ນແຕ່ວິພາກວິຈານອອກມາຢ່າງບໍ່ພໍໃຈວ່າ:

- ພວກເຂົາເລືອກເອົາແຕ່ເດັກນ້ອຍດີໆມາ, ເອົາເຄື່ອງນຸ່ງຈີບໆມາໃສ່ໃຫ້ ແລ້ວກໍພາອອກສັງຄົມສະແດງຕົວ ລອງເອົາເດັກນ້ອຍໄຮ້ຍາດຂ້າງກະຫນິນມາແທ້ໆເບິ່ງ!

ແຕ່ຂ້າພະເຈົ້າບໍ່ມີເວລາພໍເພື່ອຈະມາເສຍອົກເສຍໃຈນຳເລື່ອງ

ນ້ຶດອກ. ຂ້າພະເຈົ້າເຮັດວຽກທີ່ຈຳເປັນທັງຫລາຍພາຍໃນເວລາ ๔๘ ຊົ່ວໂມງນີ້ເກືອບ ບໍ່ທັນແລ້ວ. ຂ້າພະເຈົ້າຕ້ອງແລ່ນແຕ່ນີ້ຄືນນີ້ ໄປຫາກອມມູນ, ອອກຈາກກອມມູນມານີ້ຄືນ, ການເສຍເວລາໄປ ນຳການເດີນທາງນີ້ເປັນຄືບ່ອງໂຫນຢູ່ໃນງົບປະມານເວລາຂອງຂ້າ ພະເຈົ້າ. ເຖິງແມ່ນວ່າ ກັນແກວເດັກນ້ອຍບໍ່ໄດ້ສະແດງຕົວວ່າລອຍ ລ່ອງຟູຢູ່ເລີຍ, ແລະ ພວກເຮົາກໍບໍ່ໄດ້ຫລຽວຫ່າງອອກມາຈາກຕາຝັ່ງ ອັນຫນັ້ນຫນຽວຈັກເທື່ອກໍຕາມ ແຕ່ກັນແກວຄູສອນນັ້ນ ຊ້ຳຜັດ ເມື່ອຍລ້າຫມົດແຮງແລ້ວ. ມາຮອດເວລານັ້ນຂ້າພະເຈົ້າຄົ້ນພົບຂໍ້ວິ ນິດໄສ ອັນຫນຶ່ງ ຊຶ່ງເທົ່າທຸກວັນນີ້ຂ້າພະເຈົ້າຍັງຍຶດຫມັ້ນໝັ້ນຢູ່ເຖິງ ວ່າເບິ່ງຄືຂັດກັບຄວາມເຫັນສ່ວນໂຮມຢູ່ກໍຕາມ ນັ້ນຄື: ເດັກ ນ້ອຍປົກກະຕິ ຫລືເດັກທີ່ດຳລົງຊີວິດຢູ່ໃນເງື່ອນໄຂປົກກະຕິທຳມະ ດາ ແມ່ນພວກທີ່ສຶກສາອົບຮົມໄດ້ຍາກກວ່າຫມູ່. ທາດແທ້ຂອງ ພວກເຂົາລະອຽດອ່ອນກວ່າ, ມີຄວາມຮຽກຮ້ອງສູງກວ່າ, ມີວັດທະ ນະທຳເລິກເຊິ່ງກວ່າ ແລະ ມີສາຍພົວພັນຫລາຍຮູບຫລາຍສີກວ່າ. ສິ່ງທີ່ພວກເຂົາຮຽກຮ້ອງຈາກພວກເຮົາ ບໍ່ແມ່ນການກອກເຫເຈດ ຕະນາລົມຊະນິດຊົ່ວພະລັງ ຫລືການແຈກຈ່າຍຄວາມສະທ້ານໃຈ ຢ່າງຫນ້າເບື່ອກອກ ແຕ່ແມ່ນຍຸດທະວິທີອັນສັບສົນກວ່າຫມູ່ພຸ້ນ.

ແຕ່ຊາວນິຄົມ ຫລືວ່າຊາວກອມມູນນັ້ນເຊິ່ງດຳລົງຊີວິດແບບ ຫ່າງເຫີນຈາກສັງຄົມແລ້ວ. ທັງສອງພວກຕ່າງກໍມີຕາຫນ່າງສາຍ ພົວພັນສັງຄົມກັບວົງການ ກົນໂຊໂມນ, ກັບພວກເຍົາວະຊົນ, ນັກ ກິລາ, ທະຫານ ແລະ ສະໂມສອນທັງຫລາຍ. ລະຫວ່າງພວກເດັກ ນ້ອຍກັບຕົວເມືອງນັ້ນ ເສັ້ນທາງທຽບຫລາຍສາຍໄດ້ຖືກຕັດຕໍ່ໄປມາ

ຫາກັນ ແລະ ບົນກະຫນົນນັ້ກບໍ່ແມ່ນແຕ່ຜູ້ຄົນເທົ່ານັ້ນທີ່ທ່ອງທ່ຽວ ໄປມາ ແຕ່ກະແສຄວາມນຶກຄິດ ແລະ ອິດທິພົນຕ່າງໆກໍຊົມໃຊ້ກະ ຫນົນນັ້ນ.

ຍ້ອນແນວນັ້ແລ້ວ ພາບລວມຂອງວຽກງານສຶກສາສາດຈຶ່ງອຸດົມ ສົມບູນຂຶ້ນດ້ວຍຫລາຍຮູບແບບ. ດົນນານແລ້ວທີ່ລະບຽບວິໄນ ແລະ ຫນ້າທີ່ການປະຈຳວັນເຊົ່າເປັນບັນຫາສຳລັບຂ້າພະເຈົ້າ. ມັນ ໄດ້ກາຍເປັນຮິດຄອງຂອງຫນ່ວຍຊີວິດໂຮມຫມູ່ ແລະ ໃນນັ້ນຮິດ ຄອງດັ່ງກ່າວກໍສາມາດສະແດງລົດອອກໄດ້ດີກວ່າຂ້າພະເຈົ້າຊ້ຳອີກ ແລະ ມັນບໍ່ພຽງແຕ່ບັງຄັບໃຫ້ປະຕິບັດຕາມຄວາມຮຽກຮ້ອງຕ້ອງການ ຕາມສັນຊາດຕະຍານຂອງຫນ່ວຍຊີວິດໂຮມຫມູ່ ບໍ່ວ່າຈະແບບບັງ ເອີນ ຫລືແມ່ນແຕ່ໃນໂອກາດເກີດເລື່ອງຫນ້າອັບອາຍ ແລະ ຈຸ່ນ ວາຍກໍຕາມ.

ບໍ່ວ່າຊີວິດຂ້າພະເຈົ້າຈະເຄີຍພົບພໍ້ຄວາມຫຍຸ້ງຍາກມາະເລ້ວ ເທົ່າໃດກໍຕາມ... ແຕ່ຂ້າພະເຈົ້າກໍມີຄວາມສຸກ. ບໍ່ອາດມີໃຜພັນລະ ນາຄວາມປະທັບໃຈປະເພດຫນຶ່ງປະເພດໃດທີ່ເກີດຈາກຄວາມສຸກ ທີ່ເພີ່ນສຳນຶກໄດ້ຢູ່ໃນສັງຄົມເດັກເຊິ່ງເຕີບໃຫຍ່ມາພ້ອມກັບຕົນເອງ, ແລະ ມີຄວາມໄວ້ເນື້ອເຊື່ອໃຈຕໍ່ໂຕເຈ້ຍ່າງບໍ່ມີຂອບເຂດ ແລະ ພ້ອມທີ່ຈະຍ່າງໄປຂ້າງຫນ້າພ້ອມກັບເຈ້ົາ. ຢູ່ໃນສັງຄົມແບບນັ້, ແມ່ນແຕ່ຄວາມປະລາໄຊເອງກໍບໍ່ສາມາດສ້າງບາດແຜໃຫ້, ຄວາມ ເຈັບປວດທໍລະມານໃດໆກໍຈະກືເປັນຄຸນຄ່າສູງສົ່ງ.

ຫນ່ວຍຊີວິດໂຮມຫມູ່ຂອງນິຄົມ ກ້ອກກີ ຕິດແຫນ້ນຢູ່ໃນຫົວ ໃຈຂອງຂ້າພະເຈົ້າຫລາຍກວ່າພວກກອມມູນ. ສາຍພົວພັນມິດຕະ

ພາບຫນັກແຫນ້ນ ແລະ ເລິກເຊິ່ງກວ່າ, ມີຜູ້ຄົນທີ່ຕ້ອງໄດ້ລົງທຶນ ສຽງເພື່ອກອບກູ້ເອົາເຂົາ ແລະ ການຕໍ່ສູ້ດຸເດືອດຂັ້ງຂາດກວ່າ. ຂ້າ ພະເຈົ້າເອງກໍເປັນສິ່ງຈໍາເປັນຢ່າງຫນ້ໍາສໍາລັບພວກເຂົາຫລາຍກວ່າ ຄັ້ນ. ພວກນັກຮຽນຢູ່ກອມມູນ ແຊກຊຶນສະກີ ໂຊກດີຫລາຍທີ່ມີ ພໍ່ຮັກເຊັ່ນພວກ ເຊກາ ກຽມພ້ອມຢູ່ແລ້ວ ສ່ວນພວກເດັກນ້ອຍ ກ້ອກກີ ນອກຈາກຂ້າພະເຈົ້າ ແລະ ກຸ່ມຄູສອນຈໍານວນຫນ້ອຍດຽວ ນັ້ນແລ້ວ ແມ່ນບໍ່ມີໃຜໃກ້ຊິດກັບພວກເຂົາອີກ. ຍ້ອນເນວນີ້ຂ້າພະ ເຈົ້າຈ່ໍາບໍ່ຄິດຈັກເທື່ອວ່າຈະມີເວລາໃດເວລາຫນ້ໍາທີ່ຂ້າພະເຈົ້າຕ້ອງ ແຍກທາງກັບພວກເຂົາ. ຂ້າພະເຈົ້າບໍ່ສາມາດແມ່ນແຕ່ວາດພາບ ເງົາສະພາບການເຊັ່ນນີ້, ມັນຄົງຈະເປັນເຄາະກໍາອັນຍິ່ງໃຫຍ່ທີ່ສຸດ ໃນຊີວິດຂອງຂ້າພະເຈົ້າ.

ກັບຄືນມາຮອດນິຄົມກໍເທົ່າກັບວ່າຂ້າພະເຈົ້າເມືອຮອດບ້ານໂຕ ເອງ ໄດ້ພັກຜ່ອນຢ່າງແທ້ຈິງ ບໍ່ວ່າຢູ່ໃນກອງປະຊຸມສະພານາຍກອງ ຫລືແມ່ນແຕ່ເວລາຕົກຢູ່ໃນສະພາບສັບສົນມີການປະທະກັນອ່າວ ຮຸນ ແຮງ. ແມ່ນນັບແຕ່ນັ້ນມາຂ້າພະເຈົ້າມີນິໄສປະຈໍາໂຕຢ່າງຫນ້ໍາ ແລະ ສູນເສຍຄວາມສາມາດເຮັດວຽກຢູ່ທ່າມກາງບັນຍາກາດງຽບ ສະຫງັດໄປ. ມັນແມ່ນເວລາທີ່ຢູ່ອ້ອມໂຕຂ້າພະເຈົ້າ ແລະ ຢູ່ກະ ໂຕໂຕະເຮັດວຽກເອງ ມີສຽງນັ້ນນອງບົນແຊວຂອງພວກເດັກນ້ອຍ ຂ້າພະເຈົ້າຈ່ໍາຮູ້ສຶກສະບາຍທີ່ສຸດ, ກະແສຄວາມຄຶດວ່ອງໄວ ແລະ ປັນຍາອັນສຸຍແຫລມກໍຫ້າວຫັນເຮັດວຽກຢ່າງເບີກບານ. ຍ້ອນ ເນວນີ້ແລ້ວຂ້າພະເຈົ້າຈ່ໍາສໍານຶກໃນບຸນຄຸນຂອງພວກເດັກນ້ອຍນັກ ຮຽນ ກ້ອກກີ ເປັນພິເສດ.

ແຕ່ກ່ອນໝູນ ເຊກຊິນສະກີ ກໍຊ້ຳຮຸງກຮ້ອງຕ້ອງການຂ້າພະ
ເຈົ້ານັບມື້ນັບຫລາຍຂຶ້ນ. ຢູ່ພຸ້ນມີບັນຫາຍິບຍ່ອຍໃຫມ່ໆຫລາຍຂຶ້ນ
ແລະ ແລວທາງໃນອະນາຄົດຂອງວຸງກງານການສຶກສາອັນໃຫມ່ໆກໍ
ພັນໂຜ່ຂຶ້ນມາຕື່ມ.

ສິ່ງຫນຶ່ງທີ່ແປກໃຫມ່ເປັນພິເສດທ້າບໍ່ຄາດຝັນມາກ່ອນສຳລັບ
ຂ້າພະເຈົ້າ ກໍແມ່ນສັງຄົມຂອງພວກ ເຊກາ. ພວກຂະເຈົ້າເປັນ
ຫນ່ວຍຊີວິດໂຮມຫມູ່ຫນ່ວຍຫນຶ່ງທີ່ບໍ່ສາມາດເວົ້າແນວນັ້ນໄດ້ຢ່າງ
ເຕັມປາກເຕັມຄວາມເກີ່ງພະນັກງານກະຊວງສຶກສາປະຊາຊົນ. ຍ້ຳ
ຂ້າພະເຈົ້າສັ່ງຊອມເບິ່ງຫນ່ວຍຊີວິດໂຮມຫມູ່ນ້ອຍ, ຍ້ຳຂ້າພະເຈົ້າ
ເຊກຊຶມເຂົ້າໃນວຸງກງານຂອງພວກເຂົາຫລາຍຂຶ້ນ, ຂ້າພະເຈົ້າກໍ
ຍ້ຳເຫນັ້ນຄວາມແປກໃຫມ່ຂອງຂະເຈົ້າພັນໂຜ່ອອກມາ. ສິ່ງດັ່ງ
ກ່າວເກີດຂຶ້ນໄດ້ແນວໃດຂ້າພະເຈົ້າເອງກໍບໍ່ຊ່ຳງຕອບດອກ ແຕ່
ຫນ່ວຍຊີວິດໂຮມຫມູ່ຂອງພວກ ເຊກາ ຊົ່ງໄດ້ເຊື່ອຖຸນສິນບັດ
ຫລາຍອັນ ເຊື່ອຕະຫລອດເວລາ ຊ ປີຜ່ານມາຂ້າພະເຈົ້າໄດ້ພະ
ຍາຍາມນຳເຂົ້າມາສອດໃສ່ໃນຫນ່ວຍຊີວິດໂຮມຫມູ່ຂອງຊາວນິຄົມ.
ໃນທັນທີທັນໃດນັ້ນ ຂ້າພະເຈົ້າກໍພົບວ່າຢູ່ຕໍ່ຫນ້ານ້ຳແມ່ນສິ່ງທີ່ຕົນ
ເອງຄຶດວ່າດພາບໄວ້ຢ່າງມີຕົກກະສາດ ແລະ ສິລະປະ, ກອດອອກ
ມາຈາກເຫດການທ້າງຫນ້ານ ແລະ ຫລັກປັດຊະຍາປະຕິວັດທ້າງຫນ້ານ
ແຕ່ເທົ່າທີ່ຜ່ານມາຂ້າພະເຈົ້າບໍ່ເຄີຍພົບມາກ່ອນ ແລະໄດ້ສູນເສຍ
ຄວາມຫວັງວ່າຈະພົບເຫັນມັນແລ້ວ.

ການຄົ້ນພົບຄັ້ງນີ້ມີຄ່າມະຫາສານສຳລັບຂ້າພະເຈົ້າ ທ້າງອຸດົມ
ໄປດ້ວຍຄວາມຫມາຍຫລາຍຈົນຂ້າພະເຈົ້າຄຶດຍ້ານໄປວ່າ ມັນເປັນ

ພຽງພາບຫລອກຫລອນ. ດັ່ງນັ້ນຂ້າພະເຈົ້າຈຶ່ງຮັກສາມັນໄວ້ເປັນ
ຄວາມລັບທີ່ສຸດ ທັງນີ້ໂດຍຕ້ອງການໃຫ້ການຕິດຕໍ່ພົວພັນຂອງຂ້າ
ພະເຈົ້າກັບຜູ້ຄົນເຫລົ່ານີ້ ບໍ່ ມີລັກສະນະເສີມແຕ່ງແປງຂຶ້ນຕື່ມ.

ສະຖານະການອັນນີ້ກາຍເປັນຈຸດຍັນອອກຂອງແນວຄິດກ່ຽວກັບ
ວິຊາການສຶກສາອັນໃຫມ່ຂອງຂ້າພະເຈົ້າ. ຂ້າພະເຈົ້າມີຄວາມສຸກ
ເປັນພິເສດທີ່ສັງເກດເຫັນວ່າ ຄຸນສົມບັດຂອງຫນ່ວຍຊີວິດໂຮມຫມູ
ພວກເຊກາ ນີ້ສ່ອງແສງໃສ່ຄວາມຫຶດຫມິ່ນ ແລະ ຄວາມບໍ່ຄັກແນ່ໃນ
ຮູບແບບຕາມມະໂນພາບອັນນີ້ຢ່າງງ່າຍດາຍ ແລະທຳມະດາສາມັນ
ທີ່ສຸດ, ຮູບແບບດັ່ງກ່າວນີ້ເປັນສິ່ງຊັກນຳອົງການຂອງຂ້າພະເຈົ້າ
ມາຕະຫລອດ. ນັບແຕ່ນັ້ນມາ ຂ້າພະເຈົ້າຈຶ່ງຢູ່ໃນວິໄສແຫມເຫັນ
ເຂົ້າໃຈລາຍລະອຽດຍິບຍ່ອຍຕ່າງໆຫລາຍອັນຢູ່ໃນຫລາຍຂົງເຂດ
ອົງການ ເຊິ່ງຜ່ານມາຍັງຄົງເປັນຄວາມລຶລັບສ່ວນຂ້າພະເຈົ້າຢູ່.
ການທີ່ຄວາມສະຫລົງສະຫລາດຂອງພວກ ເຊກາ ສົມທົບເຂົ້າກັບ
ການໄດ້ສຶກສາຮ່ຳຮຽນ ແລະ ມີວັດທະນະທຳນັ້ນບໍ່ໄດ້ກໍ່ຕົວເປັນຮູບ
ການຂຶ້ນຕາມແບບບັນຍາຊິນລັດເຊຍທີ່ຫນ້າທຶ່ງດຸ້ງດອກ, ຂ້າພະ
ເຈົ້າຮູ້ກ່ອນແລ້ວວ່ານັ້ນຕ້ອງເປັນແບບນີ້ ແຕ່ການທີ່ຄຸນສົມບັດເຫລົ່ານີ້ເກີດຂຶ້ນຢູ່ໃນບຸກຄະລະພາບທີ່ມຊັດຊ້ອາແທ້ໆນັ້ນມັນເຮັດໃຫ້ໄດ້
ແນວໃດ ນີ້ແມ່ນສິ່ງທີ່ຂ້າພະເຈົ້າເຂົ້າໃຈຍາກເຕັມທີ່ແລະ ບັດນີ້ຂ້າ
ພະເຈົ້າຈຶ່ງມີລະດັບພໍເພື່ອສຶກສາຄຳເວົ້າພາສາ, ຂະບວນບາດກ້າວ
ຕັກກະສາດ, ຮູບແບບໃຫມ່ຂອງຄວາມສະທ້ານໃຈ, ການຮຽນຮູ້ລິດ
ຊາດໃຫມ່ໆ, ໂຄງຮ່າງສ້າງລະບົບປະສາດແບບໃຫມ່ ແລະ ອັນທີ່ສຳ

ຄົນກ່ວາຫມູ່ແມ່ນຮູບການຊົມໃຊ້ທ້າວອຸດົມຄະຕິ. ຄົ່ງຮູ້ກັນນັ້ນ ແລ້ວ, ພວກປັນຍາຊົນຂອງພວກເຮົາ, ມີອຸດົມຄະຕິທົ່ວກັບຄົນເຖົ້າ ເຮືອນຜູ້ຫົວແຂງດ້ວນຄົນຫນ້ຳ: ຄົນຂົ່ມ່ໍ່ຍອມຈ່າຍຄ່າເຊົ່າ, ມີ ລົ້ນອາບຢາພິດກັດຕ່ອຍທຸກຄົນ; ຍິວະແຍ່ໃຫ້ຜູ້ຢູ່ອ້ອມຂ້າງຜິດກຽງ ກັນຈົ່ມວ່າໃຫ້ກັນ ແລະ ພະຍາຍາມທົ່ສຸດກ່ອຍຫ່າງອອກຈາກອຸດົມ ຄະຕິ. ບັດນີ້ຂ້າພະເຈົ້າເຫັນອີກແບບຫນ້ຳ: ອຸດົມຄະຕິ ບໍ່ແມ່ນຄົນ ເຖົ້າເຮືອນແຕ່ແມ່ນນັກຈັດການທົ່ດີ, ລາວນັບຖືແຮງງານຂອງຄົນ ເຮືອນໃກ້, ເອົາໃຈໃສ່ການສ້ອມແປງ, ເຄ່ືອງລະບາຍອາຍອຸ່ນ, ທຸກໆຄົນພໍໃຈ ທົ່ໄດ້ມາເຮັດວຽກຢູ່ໃນສຳນັກຂອງລາວ. ຍ່ິງໄປກວ່ານ້ ຂ້າພະເຈົ້າຍັງສົນໃຈໃນທ່າທີຂອງເຂົາຕ່ໍ່ຫລັກການອີກ. ພວກ ເຊກາ ຖືຫລັກການຢ່າງໃສ່ໃຈ ແຕ່ສຳລັບພວກເຂົາເຈົ້າແລ້ວ ຫລັກ ການບໍ່ແມ່ນຜ້ານຕາຜ້ນຫນ້ຽດຄ້ງສ້ານລັບ ຜູ້ຮ່ວມງານບ້ານຄົນ ຂອງ ຂ້າພະເຈົ້າ ດອກ. ສຳລັບພວກ ເຊກາ, ຫລັກການເປັນອຸປະ ກອນວັດແທກທົ່ພວກເຂົາຊົມໃຊ້ເປັນປະຈຳ ຄ້າຍຄືໂມງຢູ່ແຂນ ແຕ່ ໃຊ້ຢ່າງບໍ່ພ້າວຟ່ັງລົກລົນ. ໃນທົ່ສຸດຂ້າພະເຈົ້າກໍເຫັນວ່າ ຊີວິດປົກ ກະຕິຂອງຫລັກການເປັນແນວໃດ ແລະ ເຊ່ືອຫມັ້ນໃນຕິວຕະຫລອດ ໄປວ່າ ຄວາມກຽດຊັງເຊ່ືງຂ້າພະເຈົ້າມ່ີຕ່ໍ້ນັ້ນທົ່ປັນຍາຊົນເອ້ີນວ່າ ຫລັກການ ນັ້ນຖືກຕ້ອງດີແລ້ວ. ເພາະທ້ານ້ເພ່ີນຮູ້ກັນມາຕ້ັງດົນ ແລ້ວວ່າເມ່ືອປັນຍາຊົນຄົນໃດຄົນຫນ້ຳລ້ວມ່ີເຮັດອັນໃດອັນຫນ້ຳ ຕາມຫລັກການແລ້ວ ອີກບໍ່ຮອດເດ່ືອ້ໂມງຕ່ໍ້ມາ ກະໂຕເຂົາເອງ ແລະ ແມ່ນແຕ່ຜູ້ຄົນທົ່ຢູ່ອ້ອມຮອບໂຕເຂົາກໍຈະຕ້ອງໄດ້ກົນຢາຊູຫົວ ໃຈໂລດ.

ຂ້າພະເຈົ້າຍັງເຫັນຈຸດພິເສດອື່ນໆອີກເຊັ່ນ: ອາລົມຈິດພິກ
ໄຫວອ່ອງໄວໃນທຸກສະພາບການ, ການເວົ້າຈາຄັກແນ່, ຄວາມ
ກຽດຊັງຕໍ່ແບບຕໍາລາສໍາເລັດຮູບ, ຄວາມບໍ່ອາດສາມາດນັ່ງເອ້ເຕ້ຢູ່
ໃນຕັ່ງອ່ອນ ຫລືນັ່ງພຸງຄາໂຕະ, ແລະ ຈຸດສຸດທ້າຍກໍຄື ຄວາມສາ
ມາດໃນການເຮັດວຽກຢ່າງຄ່ອງແຄ່ວ ແລະ ບໍ່ມີຂອບເຂດ, ໂດຍ
ບໍ່ມີການສະແດງທ່າທີວ່າ ກົກບັງຄັບ ຫລືເຮັດແບບຫນ້າໃຫ້ວ້ຫລັງ
ຫລອກ, ບໍ່ມີສິ່ງໃດທີ່ຊີ້ສະແດງວ່າ ແມ່ນຄວາມຊຶນເຄີຍອັນຫນ້າ
ອະເຫຍື່ອງແບບ "ນັກບຸນ ຜູ້ທົນທໍລະມານ", ແລະ ອັນຈິເສດ
ກວ່າຫມູ່ ກໍແມ່ນຂ້າພະເຈົ້າໄດ້ພົບ ແລະ ຮູ້ສຶກພາຍໃນຕົວເອງວ່າ
ຂ້າພະເຈົ້າໄດ້ສໍາຜັດກັບສິ່ງດີເລີດຢ່າງຫນຶ່ງຊຶ່ງບໍ່ອາດ ຂະຫນານ
ນາມຢ່າງອື່ນໄດ້ ນອກຈາກ "ກາວສັງຄົມ", ມັນແມ່ນຈິດສໍານຶກຕໍ່
ເລອທາງອະນາຄົດຮ່ວມກັນ, ມັນແມ່ນຄວາມກຽມພ້ອມທຸກຂະນະ
ທີ່ຈະເຫັນວຽກງານຂອງສະມາຊິກທຸກຄົນໃນຫນ່ວຍຊີວິດໂຮມຫມູ່,
ສະຕິສໍານຶກອັນກາວອນກ່ຽວກັບເປົ້າຫມາຍອັນຍິ່ງໃຫຍ່ຮ່ວມກັນ ອັນ
ເປັນສະຕິສໍານຶກ ເຊິ່ງບໍ່ເຄີຍຫລັກສະນະຕາມຄໍາພີໃດໆ ຫລືບໍ່ຖືກ
ກັບກາລະເວລາ ແລະ ຄວາມເວົ້າລ້າໄຮ້ຄວາມຫມາຍ, ແລະ
"ກາວສັງຄົມ" ອັນນັ້ກຫາຊື້ບໍ່ໄດ້ຢູ່ໃນຮ້ານຄ້າໃນລາຄາ ๕ ອັດດອກ
ເພື່ອຈະໃຊ້ສະເພາະຢູ່ໃນກອງປະຊຸມ, ການຊຸມນຸມຕ່າງໆເທົ່າ
ນັ້ນ ແລະ ທັງກໍບໍ່ແມ່ນການທໍາຍິ້ມແຍ້ມແບບສຸພາບໃສ່ຫນ້າກັນ
ແລະ ກັນ, ແຕ່ມັນແມ່ນຄວາມເປັນອັນຫນຶ່ງອັນດຽວທີ່ແທ້ຈິງ
ເປັນຫນ່ວຍເຄື່ອນເຫນັງ, ຫນ່ວຍແຮງງານ, ມີຄວາມຮັບຜິດ

ຊອບ ແລະໃຫ້ການຊ່ວຍເຫລືອກັນ, ມັນແມ່ນຫນ້ວຍປະເພນີອັນ
ຫນຶ່ງ.

ພວກນັກຮຽນຂອງນິຄົມ ແຊກຊຶນສະກີ ກາຍເປັນເປົ້າຫມາຍ
ທີ່ພວກ ເຊກາເອົາໃຈໃສ່ຫ່ວງໄຍເປັນພິເສດ ຈັ່ງຊັ້ນຈຶ່ງພາກັນຢູ່
ຢ່າງເປັນສຸກ, ພວກເຂົາໄດ້ແຕ່ພາກັນເບິ່ງ ແລະ ຮັບເອົາທຸກຢ່າງ
ທີ່ເພິ່ນກຽມໄວ້ເພື່ອພວກເຂົາແລ້ວເທົ່ານັ້ນ. ສ່ວນຂ້າພະເຈົ້າເອງ
ກໍບໍ່ຈຳເປັນຄຶດຈິນຫໍ້ອຊິແຕກ ຫລືຫມັ້ນຫໍ້ອຊິນຝາເພື່ອເຮັດໃຫ້
ພວກຫໍ້ອຫນ້າເຂົ້າໃຈເຖິງຄວາມຈຳເປັນ ແລະ ຄຸນປະໂຫຍດຂອງ
ການມີເພເນີນຢູ່ໃນຖິ່ງສ້ຳ.

ຂ້າພະເຈົ້າມີຄວາມເພິ່ງພໍໃຈຫລາຍແລ້ວ, ເມື່ອພະຍາຍາມ
ຫຍໍ້ຫນີບັນເຂົ້າໃຫ້ເປັນສູດສັ້ນໆ ຂ້າພະເຈົ້າຈຶ່ງເຂົ້າໃຈວ່າ ຂ້າພະ
ເຈົ້າໄດ້ຮູ້ຈັກມັກແກ່ນຢ່າງໃກ້ຊິດກັບຊາວບອນເຊວິກທີ່ແທ້ຈິງແລ້ວ,
ຄົນປະເພດທີ່ຂ້າພະເຈົ້າຖືເອົາເປັນແບບຢ່າງນັ້ນ ບໍ່ພຽງແຕ່ເປັນຜົນ
ຜະລິດມະຫັດສະຈັນຂອງຄວາມນຶກຄຶດໄຝ່ຝັນຂອງຂ້າພະເຈົ້າເທົ່າ
ນັ້ນ ແຕ່ມັນແມ່ນກະໂຕຄວາມເປັນຈິງເອງ, ໂດຍສະເພາະຍິ່ງມັກ
ກາຍມາເປັນພາກສ່ວນຫນຶ່ງຢູ່ໃນວຽກງານຂອງຂ້າພະເຈົ້າ ແລ້ວຂ້າ
ພະເຈົ້າກໍຍິ່ງຮູ້ສຶກສະດຸ້ງຕົວຫລາຍຂຶ້ນ.

ຈັ່ງຊັ້ນວຽກງານຂອງຂ້າພະເຈົ້າຢູ່ກອມມູນຈຶ່ງບໍ່ຖືກລົມປ່ອງບ້າ
ອັນໃດເປົ່າວິ, ມັນແມ່ນວຽກຍາກ, ແນ່ນອນແລ້ວ ແຕ່ກໍຫາກບໍ່ເຫລືອ
ວິໄສຄວາມສະຫລາດຂອງມະນຸດດອກ.

ຊີວິດຂອງຊາວກອມມູນນັ້ນກໍບໍ່ໄດ້ສົມບູນພູນສຸກປາສະຈາກບັນ
ຫາເລັກໆນ້ອຍໆຄ້ຳຄືນທາງນອກແນມເຫັນດອກ. ພວກ ເຊກາ

ແບ່ງປັນເງິນເດືອນຂອງພວກເຂົາເຈົ້າສ່ວນໃດສ່ວນຫນຶ່ງເພື່ອຢູ້ມຊຸ
ຊ່ອຍເຫລືອຊາວກອມມູນ ແຕ່ສິ່ງດັ່ງກ່າວ ບໍ່ເຫມາະສົມທີ່ຈະເຮັດ
ທ້ງສໍາລັບພວກເຮົາ ແລະ ກໍທ້ງສໍາລັບຂະເຈົ້າເອງ.

ໄດ້ສາມເດືອນມາແລ້ວທີ່ກອມມູນປະສົບກັບພາວະອັດຕະຄັດ
ຢ່າງແທ້ຈິງ. ພວກເຮົາເຍ້ືອນມ້ືຈ່າຍເງິນເດືອນ ແລະ ການຊໍາລະ
ຄ່າອາຫານກໍເຮັດໄດ້ຢ່າງລໍາບາກ. ໂຮງຊ່າງຕ່າງໆບໍ່ໄດ້ສ້າງລາຍຮັບ
ເປັນຕ່ອນເປັນອັນເລີຍ ເພາະວ່າມັນແມ່ນຊໂຮງ່າງປະເພດເຝ້ກ
ແອບອີຊາຊີບ, ເປັນຄວາມຈິງທ່ີວ່າ ຕ້ງແຕ່ຊຸມມ້ືທໍາອິດພຸ້ນແລ້ວ,
ຂ້າພະເຈົ້າກັບພວກເດັກນ້ອຍໄດ້ພາກັນລາກແກ່ເອົາເຄ່ືອງຂອງອຸປະ
ກອນໂຮງເຮັດເກ້ີບໄປໄວ້ໃນເຈມ້ືໆບ່ອນຫນຶ່ງ ແລ້ວພວກເຮົາທ້ງ
ຫມ້ິດກໍພາກັນເອົາຫມອນມາອັດປາກອັດດ້ງມັນໄວ້. ພວກເຊກາທໍ
ທ່ານ້ໍ່ເຫັນການຄາດຕະກໍາອັນນ້ັນເລີຍແຕ່ຢູ່ໃນໂຮງຊ່າງປະເພດອ່ືນ
ພວກເຮົາຊໍ້ານ້ໍ່ສາມາດດໍາເນີນວຽກທ່ີສ້າງກໍາໄລໃຫ້ໄດ້.

ຄ້ງຫນຶ່ງຫ້ວຫນ້າຂອງພວກເຮົາເຊ້ີນຂ້າພະເຈົ້າໄປພົບຢູ່
ເຮ້ືອນ, ລາວເຮັດຫນ້າຫຍຸ້ງຄ້ືຢູ່, ຊ້ີງຄ້ືດເຄ້ືອງ, ວາງໃບເລ້ືກ
ເງິນໃບຫນຶ່ງລ້ີງໃສ່ໂຕະແລ້ວເວ້ົາວ່າ:

- ມ້ືເທ່ົານ້ໍ້ລະ.

ຂ້າພະເຈົ້າເຂ້ົາໃຈທັນທ.

- ເທ່ົາໃດ?

- ສິບພັນ! ງວດສຸດທ້າຍແລ້ວ... ພວກເຮົາໄດ້ເບ້ີກລ່ວງຫນ້າ
ມາກ່ອນປ້ີຫນຶ່ງແລ້ວ ບັດນ້ໍ້ເລ້ີຍບ່ໍ່ເຫລ້ືອຫຍັງ - ລອງຫມຸນໃຊ້...
ອ້ີຕານ້ໍ້ເບ້ີ ລາວເປັນຄົນເຮັດແທ້ທໍາຈິງ.

ສອງສາມມື້ຕໍ່ມາ ພວກເຮົາກໍເຫັນຊາຍຄົນຫນຶ່ງປາກົດຕົວເຂົ້າ
ມາໃນກອມມູນ, ທ່າທາງບໍ່ຊີ້ງວ່າເປັນຜູ້ກ່ຽວຂ້ອງກັບວິຊາການສຶກ
ສາຈັກຫນ້ອຍ, ລາວຊື່ວ່າ ໂຊໂລມອນ ບໍຣິດໂຊວິດ ໂກຄານ.
ລາວເກົ່າແລ້ວ ອາຍຸປະມານ ຫ0, ເປັນພະຍາດຫົວໃຈ, ເປັນ
ຫືດ, ເປັນເສັ້ນປະສາດ, ເຈັບເອິກ ແລະ ລີ້ພຸງເອ້ເລ້. ແຕ່ໃນ
ຕົວບຸລຸດຜູ້ນີ້ມີຄວາມດູຫມັ່ນຢາກເຄື່ອນໄຫວຜິດທໍາມະດາ ແລະ
ໂຊໂລມອນ ບໍຣິດໂຊວິດ ກໍບໍ່ສາມາດເສີຍເມີຍຕໍ່ຄວາມດຸຫມັ່ນອັນ
ນີ້, ລາວບໍ່ມີທຶນຮອນຕິດຕົວມານໍ, ບໍ່ມີວັດຖຸດິບໃດໆ, ບໍ່ມີທັງ
ຫົວຄິດປະດິດສ້າງແບບເລີດລ້ໍາ ແຕ່ຢູ່ໃນຮ່າງກາຍພິການນັ້ນພະລັງ
ແຮງສະແຫວງວຸງກຟົດບົບໆຢູ່ ແລະ ລາວກໍບໍ່ສາມາດກະຈາຍມັນ
ອອກໃຊ້ເວລາຢູ່ໃນລະບອບເກົ່າ. ສິ່ງນັ້ນກໍຄືຄວາມສະຫລາດ,
ແນວຄິດສຸຂະທັດນິຍົມ, ນິໄສມັກຕໍ່ສູ້, ການຮູ້ຈັກປະເມີນຄົນ,
ການຮູ້ຈັກອະໄພ, ການບໍ່ຮູ້ຈັກຫລັກການ ເຊິ່ງກໍໄປກັນໄດ້ດີຢ່າງ
ປະຫລາດກັບອາລົມຈິດອ່ອນໄຫວ ແລະ ຄວາມສັດທາຕໍ່ແນວຄິດ
ໃດຫນຶ່ງ. ເບິ່ງຄ້າຍຄືວ່າທັງຫມົດເຫລົ່ານີ້ເຂົ້າແກັບເຂົ້າເກຍກັນ
ຢ່າງຫນ້າພາກພູມໃຈ, ເພາະ ໂຊໂລມອນ ບໍຣິດໂຊວິດ ມັກເວົ້າ
ເລື້ອຍໆວ່າ:

- ເຈົ້າຍັງບໍ່ຮູ້ຈັກເກົ່າ ໂກຄານ ເທື່ອ! ເມື່ອໃດເຈົ້າຮູ້ຈັກແລ້ວ
ເຈົ້າຫາກຊິເວົ້າເອງດອກ!

ລາວເວົ້າຖືກ, ເມື່ອພວກເຮົາຮູ້ຈັກ ໂກຄານ ແລ້ວພວກເຮົາ
ຈຶ່ງເວົ້າວ່າ: ລາວເປັນຄົນດີເດັ່ນຜູ້ຫນຶ່ງ. ພວກເຮົາຕ້ອງການບົດ
ຮຽນຊີວິດຂອງລາວຢ່າງຂະຫນາດເລີຍ. ເວົ້າແທ້ແລ້ວບາງຄັ້ງບົດ

ຮຸງນອັນນີ້ກໍສຳແດງຕິວອອກພາຍໃຕ້ຮູບການທີ່ເຮັດໃຫ້ພວກເຮົາ ຂົນຫນາວລຸກ ແລະ ພວກເຮົາຈົນບໍ່ຢາກເຊື່ອສາຍຕາຕົນເອງ.

ອັນຫນຶ່ງ ໂຊໂລມອນ ບໍ່ຮົດໂຊ້ດ ເອົາໄມ້ທ່ອນໃສ່ກອງນ ເຕັມກອງນຫນຶ່ງມາກອມມູນ.

- ເອົາມາເຮັດຫຍັງ?

- ເອົາມາເຮັດຫຍັງອາຕີ? ແລ້ວສາງເດ້ຊັ້ນ? ຂ້ອຍຮັບໃບສັ່ງ ເຮັດໂຕະຕັ່ງຕູ້ສຳລັບສະກາບັນກໍ້ສ້າງ ເຮັດແລ້ວມັນກໍຕ້ອງມີສາງ ມ້ຽນເຄື່ອງຢູ່ບ່ອນໃດບ່ອນຫນຶ່ງຊັ້ນຕ່ວ!

- ບໍ່ຈຳເປັນຕ້ອງມີສາງຢູ່ໃສນ່າ, ພວກເຮົາເຮັດແລ້ວ ກໍສົ່ງໄປ ໃຫ້ສະກາບັນເລີຍ.

- ເຮ້ຍ... ເຈົ້າຄຶດແທ້ໆຫວະ ວ່າມັນແມ່ນສະກາບັນ? ມັນບໍ່ ແມ່ນດອກເດ້... ຂີ້ຕ໋ວະອ້ອຍຕ້ອຍເລີຍລະ! ຄັນວ່າມັນແມ່ນສະກາ ບັນແທ້ ຈ້າງຂ້ອຍກໍບໍ່ໄດ້ຕິດຕໍ່ກັບມັນຕ່ວ.

- ອ້າວ ບໍ່ແມ່ນສະກາບັນ ແລ້ວແມ່ນຫຍັງ?

- ອັນວ່າສະກາບັນຫັ້ນ ມັນເປັນແນວໃດເກາະ? ເຂົາຢາກ ເອົ້ນແນວໃດ ເຂົາກະເອົ້ນຕາມນັກເຂົາລະບໍ່, ສົ່ງສຳຄັນແມ່ນໃຫ້ມີ ເງິນເປັນພໍ. ເມື່ອພວກເຂົາມີເງິນ ພວກເຂົາກໍຢາກໄດ້ໂຕະຕັ່ງ ຊັ້ນເພື່ອຮັກສາໂຕະຕັ່ງ ຕ້ອງມີຫລັງຄາບັງແດດບັງຝົນ, ເຈົ້າກໍຮູ້ດີ ແລະ ກ່ອນຊິເຮັດຫລັງຄາໄດ້ ພວກເຂົາກໍໃຊ້ເວລາເພາະວ່າດຽວນີ້ ຍັງບໍ່ມີຮອດຝາ.

- ຈັ່ງໃດກະຍ່າ ພວກເຮົາຊິບໍ່ເຮັດສາງດອກ.

- ກະອັນນີ້ແລ້ວ. ຂ້ອຍບອກພວກເຂົາແລ້ວ ແຕ່ພວກເຂົາຄຶດ

ວ່າກອມມູນແຊກຊຶນສະກີ ເປັນຄື... ສະກາບັນແບບຢ່າງບ່ອນຫນຶ່ງ ຊັ້ນນ່າ ແລ້ວມັນກໍຕ້ອງມາສິນນຳເລື່ອງສາງນີ້ນຳ... ເວົ້າພໍປານວ່າ ພວກເຮົາມີເວລາເຮັດແດ່ເນາະ!

-ແລ້ວພວກເຂົາວ່າແນວໃດ?

-ພວກເຂົາກະວ່າ ຫາດາສ້າງຫັ້ນນ່າ! ໃນເມື່ອວ່າພວກເຂົາຖືແຮງຂ້ອຍກໍເລີຍບອກວ່າ ລາຄາ ८0 ພັນເດີ. ແຕ່ມັນເວົ້າວ່າບໍ່ຄວນສ້າງ ຂ້ອຍກໍບໍ່ວ່າຫຍັງ ເອົາຕາມໃຈເຈົ້າ. ເປັນຫຍັງຈ່ຳຊິສ້າງສາງລະເນາະ? ໃນເມື່ອວ່າອັນທີ່ເຮົາຕ້ອງການແມ່ນໂຮງຊ່າງປະກອບພຸ້ນຫລາຍກວ່າ.

ສອງອາທິດຕໍ່ມາ ໂຊໂລມອນ ບໍຣິດໂຊວິດ ກໍລົງມືສ້າງໂຮງຊ່າງ. ມີການຝັ່ງເສົາ, ພວກຊ່າງກໍລົງມືວາງຝາ.

-ໂຊໂລມອນ ບໍຣິດໂຊວິດ, ເຈົ້າເອົາເງິນມາແຕ່ໃສເພື່ອເຮັດໂຮງຊ່າງປະກອບເຄື່ອງບ່ອນນີ້?

-ເອົາມາແຕ່ໃສວ່າຕິ? ຂ້ອຍບໍ່ໄດ້ບອກເຈົ້າຫວະຊັ້ນ? ເພິ່ນກອກເງິນມາໃຫ້ພວກເຮົາ ८0 ພັນ...

-ແມ່ນໃຜ?

-ອ້າວ ກະສະກາບັນ, ເຈົ້າກະຮູ້ເດ້.

-ກອກມາເຮັດຫຍັງ?

-ເຮັດຫຍັງ? ພວກເຂົາຢາກໃຫ້ເຮັດສາງ... ຫັ້ນເດ້... ແລ້ວຂ້ອຍຊິສົນຊັ້ນຫວະ?

-ຟ້າວກ່ອນ, ໂຊໂລມອນ ບໍຣິດໂຊວິດ, ແຕ່ມັນທີ່ເຈົ້າພວມ

ສ້າງຢູ່ຫນ້ານັ້ນບໍ່ແມ່ນສາງຫັ້ນເດ້ ມັນແມ່ນໂຮງຊ່າງປະກອບພຸ້ນ ຕ່ວ່າ.

ໂຊໂລມອນ ບໍ່ຮິດໂຊ່ວິດ ເຮັດຫນ້າບໍ່ພໍໃຈທັນທີ:

-ໂອ້ຍ... ຈັ່ງແມ່ນຄັກ... ເປັນຕາຫົວແທ້ໆ? ແລ້ວແມ່ນໃຜ ບອກຂ້ອຍວ່າບໍ່ຕ້ອງມີສາງລະ? ບໍ່ແມ່ນເຈົ້າເອງຫວະ?

-ຕ້ອງສົ່ງເງິນຄືນ.

ໃບຫນ້າຂອງ ໂຊໂລມອນ ບິດບ້ຽວຢ່າງລ້ຽງກຽດ.

-ຟັງເດ້ທ້າວ, ບໍ່ຄວນຊິຂາດແມ່ຄິດຊິມໃຊ້ຫມູນໃຊ້ປານນີ້ ເລີຍນ່າ. ແມ່ນໃຜຊິເປັນຜູ້ສົ່ງເງິນໂຊກຕ່ອນນີ້ຄືນ? ເຈົ້ານັ້ນ ເບາະ? ເຈົ້າຍັງມີສະຕິດີຫມັ້ນຫນຽວພໍຈະເຮັດແນວນັ້ນ ແຕ່ຄືນ ຂ້ພະຍາດຄ້ຂ້ອຍຂ້ອຍເຮັດບໍ່ໄດ້ ຂ້ອຍບໍ່ຍອມເອົາສະຕິຂອງຂ້ອຍໄປ ທົດສອບແນວນີ້ດອກ... ສົ່ງເງິນຄືນ ຮ!

-ຊັ້ນຫາກພວກເຂົາຮູ້ເດ້!

-ອາມໂຕນ ເຊມີວໂນວິດ, ເຈົ້າກໍ່ຄ່ວ່າສະຫລາດສະຫລຽວຢູ່ ນ່າ. ແມ່ນພວກເຂົາຊິຮູ້ຫຍັງ? ເອົາລະ ສົມມຸດວ່າພວກເຂົາຮູ້... ແລ້ວພາກັນມາມ້ອນ, ພວກເຮົາກະສ້າງຊັ້ນຕ່ວ່າ? ແຕ່ເຈົ້າເຫັນວ່າ ມີປ້າຍຂຽນບອກໄວ້ຊັ້ນຫວະ ວ່າແມ່ນໂຮງຊ່າງປະກອບຫັ້ນ?

-ແລ້ວບາດເຈົ້າຊິລົງມືເຮັດວຽກລະ?

-ແມ່ນໃຜສາມາດຫ້າມບໍ່ໃຫ້ຂ້ອຍເຮັດວຽກລະ? ບາງທີອາດຊິ ແມ່ນສະກາບັນກໍ່ສ້າງຊັ້ນເບາະ? ແລ້ວຄັນແມ່ນຂ້ອຍຢາກເຮັດວຽກ ຢູ່ກາງແຈ້ງ ຫລືວ່າຢູ່ໃນສາງລະ? ມີກົດຫມາຍບັງຄັບຊັ້ນເບາະ? ບໍ່ມີເລີຍ.

ເຫດຜົນອ້າງອີງຂອງ ໂຊໂລມອນ ບໍຣິດໂຊວິດ ນັ້ນມາກມາຍ ໄຮ້ຂອບເຂດ, ລາວຕັ້ງແມ່ນຄວາຍຕູ້ພະລ້ຽມະຫາສານທີ່ຫມັ້ນບຸກ ໃສ່ອຸປະສັກທຸກແນວ. ມາຮອດເວລານັ້ນພວກເຮົາບໍ່ຕ້ານທານຄັດ ຄ້ານອັນໃດລາວ ເພາະຄວາມພະຍາຍາມຂອງພວກເຮົາກຶ້ຍງບຸ່ນ ຕັ້ງແຕ່ທຳອິດແລ້ວ.

ຕົກເກີ່ງລະດູບານໃຫມ່ ເມື່ອມ້າທ້າງຄູ່ຂອງພວກເຮົາສາມາດ ອອກກິນຫຍ້າຢູ່ກາງທົ່ງຫນົດຄືນ, ກອກກົບສະກີ ໄດ້ກ່າມຂ້າພະ ເຈົ້າວ່າ:

- ແມ່ນ ໂຊໂລມອນ ບໍຣິດໂຊວິດ ລາວສ້າງອີ່ສ້ຽງຢູ່ຄອກມ້າ ນັ້ນ?

- ແມ່ນຫຍັງເກາະ? ລາວສ້າງອີ່ສ້ຽງຊັ້ນຫວະ?

- ເອີ ລາວລືງມືແລ້ວເດ້! ຄືວ່າໄປຕິດຕັ້ງຫມໍ້ຕົ້ມອັນໃດອັນ ຫນຶ່ງນີ້ລະມີທໍ່ຄວັນນຳ.

- ບອກລາວມາຫາໄປ໋.

ໂຊໂລມອນ ບໍຣິດໂຊວິດ ມາຫາຂ້າພະເຈົ້າ, ເປົ້ອນແຕ່ຫົວ ຮອດຕີນ, ຫາຍໃຈຫອບເມື່ອຍ, ເຫື່ອເຕັມໂຕຕາມເຄີຍ.

- ແມ່ນເຈົ້າໄປສ້າງຫຍັງໃສ່ນັ້ນ?

- ຂ້ອຍສ້າງຫຍັງຊັ້ນຫວະ ເຕົາຫລອມ, ເຈົ້າກະຮູ້ເດ້.

- ເຕົາຫລອມຊັ້ນຫວະ? ແຕ່ຕົກລົງກັນແລ້ວວ່າ ຊິເຮັດໃສ່ ດ້ານຫລັງຫ້ອງອາບນ້ຳ.

- ເປັນຫຍັງຊິເຮັດໃສ່ພຸ້ນ ໃນເມື່ອວ່າມີບ່ອນເຫມາະສົມກຽມ ພ້ອມຢູ່ແລ້ວ?

- ໂຊໂລມອນ ບໍຣິດໂຊວິດ!

- ເອ້... ແລ້ວມີຫຍັງລະ ຈ່ຳຮ້ອງແຕ່ ໂຊໂລມອນ ບໍຣິດໂຊວິດ ອີກ!

- ແລ້ວມ້າເດ້ຊັ້ນ? - ກອກກົບສະກີ ກາມ.

- ມ້າກະໃຫ້ມັນຢູ່ນອກ ກິນອາກາດສົດແດ່ຊັ້ນຕ່ວ, ໂຕໂລດ ຄິດວ່າຊິມີແຕ່ພວກໂຕຫັ້ນຫວະຕ້ອງການອາກາດສົດ ສ່ວນມ້າໃຫ້ມັນຫ້ານໃຈດົມເອົາກິ່ນຂ້ຶງດແນວໃດກະໄດ້ຊັ້ນເນາະ? ເອ້ ຈ້ຳ ແມ່ນພວກເຈົ້າເປັນນາຍດີເນາະ!

ເວົ້າແທ້ແລ້ວພວກເຮົາຈົນປັນຍາໂຕ້ກຸ່ງລາວ, ແຕ່ປານນັ້ນ ວິເຕຍ ກ້ຍັງຮຶດສູ້ຢູ່:

- ແລ້ວບາດຕິກຮອດລະດູຫນາວເດ້?

ແຕ່ ໂຊໂລມອນ ບໍຣິດໂຊວິດ ກໍເຮັດໃຫ້ມັນຈົນຕາແຈອີກ:

- ເອ້ ຈ້ຳແມ່ນໂຕແນ່ໃຈເນາະວ່າ ຊິຮອດລະດູຫນາວແລ້ວ.

- ໂຊໂລມອນ ບໍຣິດໂຊວິດ! - ວິເຕຍ ຮ້ອງຢ່າງເຫລືອໃຈ.

ໂຊໂລມອນ ບໍຣິດໂຊວິດ ຍອມກ໋ອຍຫລັ່ງຫນ້ອຍຫນຶ່ງ:

- ເອ້ ເອົາລະ ສົມມຸດວ່າຮອດຍາມຫນາວແລ້ວຊິມີຫຍັງລະ? ພວກເຮົາຊິປຸກຄອກມ້າໃນເດືອນຕຸລາບໍ່ທັນຊັ້ນຫວະ? ສຳລັບພວກໂຕ ມັນຊິມີຫຍັງເລ່ືອງທ່ໍ້ ຫລ໊ືວ່າພວກໂຕຢາກໃຫ້ກັນຟຸມເພ໊ືອຍ ເງິນ 4000 ຣຸບ ກ໊ືມດຽວນ໊ີໂລດ?

ພວກເຮົາຫ້ານໃຈໃຫຍ່ ຍອມຈຳນົນຕໍ່ເຫດຜົນຂອງລາວ. ໂຊໂລມອນ ບໍຣິດໂຊວິດ ດູຕົນພວກເຮົາຈ່ຳອະທິບາຍທ້ານັ້ນນ໊ືອ໊ືມ່ວ:

-ພຶດສະພາ, ມິຖຸນາ, ກໍລະກົດ... ແລ້ວ... ຕໍ່ມາ... ເດືອນ ຫຍັງເອີ້ ສິງຫາ, ກັນຍາ...

ລາວລົ້ງເລບຶດຫນຶ່ງ ແລ້ວເວົ້າຕໍ່ຢ່າງວ່ອງໄວຫນັກແຫນ້ນວ່າ:

-ຕຸລາ... ຜ ເດືອນ! ຄຶດເບິ່ງພວກເຈົ້າ! ໃນ ຜ ເດືອນເງິນ ८000 ຮຸບກໍຈະອອກດອກຕໍ່ໄປອີກ ८000, ແລ້ວພວກເຈົ້າຊ້ຳຢາກ ປະຄອກມ້າເປົ່າໆໄວ້ຕັ້ງ ຜ ເດືອນ? ທຶນຕາຍແບບນີ້ເຮັດໄດ້ຫວະ?

ສຳລັບ ໂຊໂລມອນ ບໍຣິດໂຊວິດ ນັ້ນ, ເງິນທຶນຕາຍເກົ່ງຈະຢູ່ ໃນຮູບການທີ່ບໍ່ເປັນພຶດເປັນໄພຈັກຫນ້ອຍ ລາວກໍບໍ່ຍອມໃຫ້ເປັນ.

-ຂ້ອຍນອນບໍ່ຫລັບນ່າ, - ລາວເວົ້າ, ມັນຊິຫລັບລົງຊັ້ນຫວະ ໃນເມື່ອມ້ວງກເຮັດຈົນກ້ວມຫົວແນວນີ້, ແຕ່ລະນາທີຫມາຍເກົ່ງ ປະຕິບັດການອັນຫນຶ່ງ. ແມ່ນໃຜອອກຫົວຄຶດໃຫ້ນອນດົນປານນີ້ ຣ?

ພວກເຮົາຫລັບໄຫລ ຢ່າງເປັນສຸກ ຢູ່ໃນຄວາມອັດສະຈັນ: ຫວ່າງບໍ່ດົນມານີ້ແທ້ໆ ພວກເຮົາຍັງທຸກຍາກຂະຫນາດ ແຕ່ດຽວນີ້ ໂຊໂລມອນ ບໍຣິດໂຊວິດ ມີໄມ້ມີໂລຫະ, ມີເຄື່ອງກົ່ງເປັນກອງທ້ພູ ທ້ພາ: ເວລາເຮັດວຽກໃນຕອນກາງເວັນຂອງພວກເຮົາໂຮງຮຸ່ງດ້ວຍ ແປວໄຟແຫ່ງຄຳສັບເຫລົ່ານີ້: ໃບແຈ້ງການ, ໃບເຊັກເງິນ, ໃບ ເບີກຈ່າຍລ່ວງຫນ້າ, ໃບຮັບສິບພັນ, ຊາວພັນ, ...ຢູ່ສະພາບາຍ ກອງ ໂຊໂລມອນ ບໍຣິດໂຊວິດ ມິດຟັງຄຳປາໄສຂອງພວກເດັກ ນ້ອຍດ້ວຍທ່າທີທີ່ຫນ້ວຍແກມຫນຶ່ນປະຫມາດ ເມື່ອພວກເຂົາເວົ້າ ຮອດເງິນ ສ00 ຮຸບ ເພື່ອຊ້ຳສ້ຳຂາຍາວ, ລາວບອກວ່າ:

-ຈັ່ງແມ່ນສູຕັ້ງບັນຫາເນາະ? ເດັກນ້ອຍຢາກໄດ້ສ້ຳ... ມັນບໍ່

ແມ່ນແຕ່ ม00 ທໍ່ນັ້ນໃດ໋ຊິພໍນະ, ເງິນທໍ່ນັ້ນມັນກະໄດ້ສ້ຳບໍ່ດີ... ມັນຕ້ອງ ๑๐๐๐ ຮຸບພຸ້ນ...

-ແລ້ວເງິນຢູ່ໃສລະ? -ພວກເດັກນ້ອຍຖາມຂຶ້ນແຊວໆ.

-ພວກສູມືມືຫົວ, ແລ້ວສູຄຶດວ່າ ມືເຮັດຫຍັງລະຫັ້ນ? ຫົວຫັ້ນເອົາໄວ້ໃສ່ຫມວກທໍ່ນັ້ນຫວະ? ຢ່າເດ້... ບໍ່ແມ່ນຈັ່ງຊັ້ນດອກ! ສູເຮັດວຽກຕື່ມອີກຈັກ ๑๕ ນາທີຢູ່ໂຮງຊ່າງ ແລະ ກັນຊິຫາເງິນໃຫ້ໂລດ ๑๐๐๐ ຮຸບ, ບາງທີອາດຊິຫລາຍກວ່ານັ້ນຊ້ຳ. ມັນແລ້ວແຕ່ພວກສູຊິເຮັດໄດ້ນ່າ.

ໂຊໂລມອນ ບໍຣິດໂຊວິດ ເກັບເອົາເຄື່ອງມືເກົ່າໆລາຄາຖືກໆມາໃສ່ໄວ້ຫ້ອງໂຮງຊ່າງຊະນິດເບົາບາງ ເຊິ່ງກໍຄືກັບສາງມ້ຽນເຄື່ອງຢູ່, ລາວມັດທຸກສິ່ງທຸກຢ່າງເຂົ້າກັນດ້ວຍເຊືອກ ແລະ ດ້ວຍສັນຍາ ແລະ ລາວກອມມູນກໍສຸມຈິດໃຈໃສ່ສາງອຸດສາຫະກຳແຫ່ງນີ້ ຢ່າງພໍອີກພໍໃຈ. ພວກເຂົາເຮັດທຸກຢ່າງນັບຕັ້ງແຕ່ເຄື່ອງໄມ້ສຳລັບສະໄໝສອນ, ຮ່າງຕຽງ, ຫລອດທໍ່, ສ້ຽຂາສັ້ນ, ເສື້ອກັລາແບບຕາເວັນຕົກ, ໂຕະຮຽນຫນ້ງສື, ຕັ່ງອີ້, ເຄື່ອງກະຕຸກເນອມອດໄຟ ແຕ່ພວກເຂົາເຮັດທຸກສິ່ງທຸກຢ່າງເຫລົ່ານີ້ຢ່າງຫລວງຫລາຍ ເພາະວ່າການຜະລິດຕາມແບບຂອງ ໂຊໂລມອນ ບໍຣິດໂຊວິດ ນັ້ນມີການແບ່ງງານຊະນິດຍອດຍ້ຽມສຸດຂີດເລີຍ.

-ແມ່ນໂຕຊິຮຽນເປັນຊ່າງໄມ້ແທ້ບໍ່ນີ? ແຕ່ເບິ່ງຫນ້ີ ຈັ່ງໃດໂຕກະຊິບໍ່ໄດ້ເປັນຊ່າງໄມ້ດອກ, ໂຕຊິເປັນແພດພຸ້ນ... ເຮົາຮູ້ແລ້ວ. ຊັ້ນກະເຫລົ່ານ່ານ່ໄມ້ກົນພະນັກຕັ່ງອີ້ຫັ້ນ, ເລື່ອງຫຍັງໂຕຊິໄປເຮັດຕັ່ງຫນິດຫນ່ອຍລະ? ເຮົາຈ່າຍຄ່ໄມ້ກົນຄູ່ລະ ๑ ອັດ ໂຕກະຊິໄດ້

ເງິນຮອດ ⑤0 ອັດຕໍ່ມື້... ໂຕບໍ່ມີເມຍບໍ່ມີລູກຕ່ວ...

ຊາວກອມມູນພາກັນຫົວໂຄບໆຢູ່ໃນລະພານາຍກອງ ແລະ ຈົ່ມ ວ່າໃຫ້ ໂຊໂລມອນ ບໍຣິດໂຊວິດ ກ່ຽວກັບການຜະລິດຊະນິດ "ຕົ້ນ ມໍ່ໄດ້ຢູ່ລ້ວ" ຂອງລາວແຕ່ພວກເຮົາໄດ້ວາງແຜນທາງດ້ານອຸດສາ ຫະກຳ ແລະ ການເງິນໄວ້ແລ້ວ, ມັນແມ່ນແຜນການອັນສຳຄັນ ຫລາຍກ່ວາຫມູ.

ມີການນຳໃຊ້ລະບົບໃຫ້ເງິນເດືອນກັບຊາວກອມມູນ ພໍປານວ່າ ພວກເຮົານັ້ນບໍ່ເຄີຍເປັນພະນັກງານກ່ຽວກັບການສຶກສາ ມາຈັກເທື່ອ ແລະ ເຮັດຄືກັບວ່າ ບໍ່ເຄີຍມີໂຕມານ ແລະ ສະເຫນທັງຫມົດ ຂອງມັນຢູ່ໃນໂລກນີ້. ເມື່ອພວກຄູສອນຢາກສະເຫນີໃຫ້ ໂຊໂລ ມອນ ບໍຣິດໂຊວິດ ເອົາໃຈໃສ່ບັນຫາໃນແງ່ສຶກສາສາດຂອງການມີ ເງິນເດືອນ, ລາວກໍຕອບວ່າ:

-ພວກເຮົາຕ້ອງສຶກສາອົບຮົມຄົນສະຫລາດ, ຂ້ອຍຄິດວ່າຊິ ເປັນແນວນັ້ນ ແລ້ວຄົນຊິສະຫລາດແນວໃດຖ້າມັນເຮັດວຽກບໍ່ໄດ້ ເງິນເດືອນ?

-ແລ້ວຄວາມຄິດເດ້ ໂຊໂລມອນ ບໍຣິດໂຊວິດ, ຕາມຄວາມ ເຫັນຂອງເຈົ້າ, ຄວາມຄິດບໍ່ມີລາຄາຫວະ?

-ເມື່ອຄົນຜູ້ຫນຶ່ງເຮັດວຽກແລ້ວໄດ້ຮັບເງິນເດືອນ ມັນກໍຈະ ເກີດມີຄວາມຄິດຈົນບໍ່ຮູ້ວ່າຊິເອົາມັນໄວ້ໃສ່ພຸ້ນລະ ແຕ່ເມື່ອມັນຂາດ ເງິນມັນຈະມີຄວາມຄິດດຽວຄືຊິໄປຢືມນຳໃຜ? ນີ້ແມ່ນຄວາມຈິງ.

ໂຊໂລມອນ ບໍຣິດໂຊວິດ ເປັນໄມ້ງັດຊະນິດມີປະໂຫຍດທີ່ສຸດ ສຳລັບຫນ່ວຍອອກແຮງງານຂອງພວກເຮົາ. ພວກເຮົາຮູ້ວ່າຕັກກະ

ສາດທົ່ມິດມົນຂອງລາວນັ້ນເປັນສິ່ງທົ່ມາຈາກອີກໂລກຫນຶ່ງ ແຕ່ຢູ່ໃນຄວາມທ້າວທັນມີພະລັງຂອງລາວນັ້ນ ຕັກກະສາດຂອງລາວຊ້ຳຍັງນຳໃສ່ອະຄະຕິຕ່າງໆຢ່າງດຸດຶເອດ ແລະ ສຸດໃຈ, ບາງຄັ້ງກໍ ກໍ່ໃຫ້ເກີດຄວາມຮຸນຮ້ອງຕ້ອງການແບບວິທີເຮັດວຽກແນວໃຫມ່.

ກອມມູນ ແຊກຊຶນສະກີ ກ້າວເຂົ້າສາມາດກຸ້ມຕົນເອງຢ່າງສົມບູນຢ່າງງ່າຍດາຍທົ່ສຸດ ເກືອບຢາກວ່າບໍ່ມີການອອກແຮງງານໃດໆ ແລະ ເບິ່ງຄືວ່າບໍ່ແມ່ນໄຊຊະນະອັນສຳຄັນຢ່າງຫນຶ່ງສຳລັບພວກເຮົາ. ໂຊໂລມອນ ບໍຣິດໂຊວິດ ບໍ່ເວົ້າຫລົ້ນເວົ້າລ້ຳຈັກເທ່ືອ:

-ນີ້ແມ່ນຫຍັງ? ຊາວກອມມູນ ເຣົ0 ຄົນບໍ່ສາມາດຫາເງິນລ້ຽງກຸ້ມຕົນເອງຫວະ? ມັນຕ້ອງເຮັດໄດ້ບ່າ! ບາດທ່າພວກເຂົາຢາກເຫລົ້ຳຊຳປາຍນ້ັນເດ້ຊັ້ນ? ຫລືວ່າເມຍພວກເຂົາຢາກແຕ່ງເພດຫນເດ!

ຊາວກອມມູນສົມຫວັງໃນການປະຕິບັດແຜນການອຸດສາຫະກຳຂອງພວກເຂົາອັນໃຫມ່ໄປເລ້ືອຍໆ, ດ້ວຍຄວາມພະຍາຍາມອັນຍິ່ງໃຫຍ່ຮ່ວມກັນ. ແຕ່ລະມ້ືພວກ ເຊກາ ມາຫາພວກເຮົາ, ພວກເພ່ືນກັບເດັກນ້ອຍພາກັນພິຈາລະນາລາຍລະອຽດປີກຍ່ອຍທຸກຢ່າງ, ປ່ອງຫວ່າງເລັກໆນ້ອຍໆທຸກຢ່າງ, ສູ້ຍັນຕ້ານກັບທ່າອຽງເຫັນແກ່ລາຍໄດ້ຂອງ ໂຊໂລມອນ ບໍຣິດໂຊວິດ, ຕ້ານກັບການຜະລິດສິນຄ້າຄຸນນະພາບຕ່ຳ ແລະ ການຟຸມເຟ້ືອຍຊະຊາຍ. ບົດຮຽນການຜະລິດແບບອຸດສາຫະກຳຂອງຊາວກອມມູນນັບມ້ືນັບສັບສົນຂ້ຶນ ແລະ ພວກເຂົາກໍສາມາດຫັນມາຕ່ຳຫນ້ີຕົ້ມ ໂຊໂລມອນ ບໍຣິດໂຊວິດ ຈົນລາວໂມໂຫຂ້ຶງຄຽດຂ້ຶນ:

- ແມ່ນຫຍັງກັນລະນີ? ພວກເຂົາຮູ້ຫມົດລູ້ລົ້ນລູ່ແນວແລ້ວເດ້ ບາດນີ້! ພວກເຂົາຢາກມາສອນຂ້ອຍອີກວ່າ ເຂົາເຮັດຫົວຈັກລົດໄຟ ຢູ່ໂຮງງານ ຄາຄົບພຸ້ນແບບໃດ? ແມ່ນພວກເຂົາຮູ້ອີ່ຫຍັງແດ່ນໍ້ກ່ຽວ ກັບວຽກຢູ່ພຸ້ນນະ?

ໃນທັນໃດນັ້ນຄຳຂວັນປະໂຫຍກຫນ່ຳຊ້ຳທຸກຄົນຮູ້ດີກໍສ່ອງແສງ ສະຫວ່າງໃສ່ເສັ້ນທາງຂອງພວກເຮົານັ້ນຄື: "ພວກເຮົາຕ້ອງມີໂຮງ ງານທີ່ແທ້ຈິງ".

ພວກເຮົາເລີ່ມເວົ້າກັນຮອດໂຮງງານຫລາຍຂຶ້ນ. ຍິ່ງເງິນເປັນ ພັນໆຮຸບແລ່ນມານອນກອງຢູ່ໃນບັນຊີທະນາຄານ ຂອງພວກເຮົາ ຫລາຍເທົ່າໃດ, ຄວາມຝັນກ່ຽວກັບໂຮງງານກໍ່ຍິ່ງເລີ່ມເປັນຮູບຈະ ແຈ້ງເຫັນລາຍລະອຽດຄັກແນ່ຂຶ້ນ ບິນເສັ້ນທາງທີ່ຢູ່ໃກ້ ແລະ ມີ ທາງກາຍເປັນຄວາມຈິງໄດ້ຫລາຍທີ່ສຸດ. ແຕ່ສິ່ງດ່ກ່າວເກີດຂຶ້ນໃນ ພາຍຫລັງ.

ນັກຮຽນຂອງກອມມູນ ແຊກຊຶມສະກີ ກັບເດັກນ້ອຍນິຄິມ ກ້ອກກີ ມີໂອກາດພົບພໍ້ກັນເລື້ອຍ. ພວກເຂົາໄປຍ້ຽມຢາມກັນໃນ ວັນອາທິດ, ໄປກັບເປັນກອງເປັນຫມ່ວຍ, ແຂ່ງຂັນເຕະບານແດ່, "ໂກຣິດກີ"* ແດ່, ລ້ຽງອາບນ້ຳ ແລະ ແລ່ນນ້ຳກ້ອນ, ໄປທ່ຽວ ຫລິ້ນ ແລະ ໄປຊຸມລະຄອນນຳກັນ.

ທ້າວນິຄິມ ແລະ ກອມມູນສົມທົບກຳລັງກັນເລື້ອຍໆເພື່ອເຮັດ ກິດຈະກຳຫລາຍອັນ, ຮວມຂະບວນກັບພວກກົມໂຊໂມນ ແລະ

---

* ໂກຣິດກີ: ເກມຫລິ້ນພົ້ນເມືອງລັດເຊຍປະເພດຫນ່ຳ.

ເຍົາວະຊົນ, ໄປຢ້ຽມຢາມ ແລະ ຄຳນັບແຂກ, ແລະ ໄປທ່ອງ ທ່ຽວ. ຂ້າພະເຈົ້າມັກລະຍະເວລານີ້ຫລາຍ, ມັນແມ່ນວັນແຫ່ງໄຊ ຊະນະອັນແທ້ຈິງຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າກໍຮູ້ດີວ່າ ມັນ ແມ່ນໄຊຊະນະອັນນີ້ແລ້ວທີ່ເປັນອັນສຸດທ້າຍຂອງຂ້າພະເຈົ້າ.

ໃນມື້ເຊັ່ນນີ້ຈະມີການອ່ານຄຳສັ່ງພິເສດ ທັງຢູ່ໃນນິຄົມ ແລະ ກອມມູນຄືກັນ ເພື່ອແນະນຳເລື່ອງການນຸ່ງເຄື່ອງ, ສະການທີ ແລະ ເວລານັດພົບ, ທັງເດັກນ້ອຍນິຄົມ ແລະ ຊາວກອມມູນນຸ່ງເຄື່ອງຄື ກັນຄືສັ້ງຂາສັ້ນແບບຂີ້ມ້າ, ໃສ່ກີ່ງຕົນຫນາ, ເສື້ອຄໍຂາວ ແລະ ຫມວກສຸບແສ່ວ. ຕາມທຳມະດາແລ້ວ ຂ້າພະເຈົ້າມັກໄປນອນຄ້າງ ຄືນຢູ່ກັບເດັກນ້ອຍ ກ້ອກກີ ພຸ້ນກ່ອນຄືນຫນຶ່ງ, ມອບພາລະຢູ່ ກອມມູນໃຫ້ ກຽກກີຊອບ. ພວກເຮົາອອກເດີນທາງໄປກູເຮຍແຊ ໂດຍຄຶດໄລ່ເວລາເດີນທາງໄວ້ ມ ຊົ່ວໂມງ ແລະ ລົງໄປຕ້ອເມືອງ ໂດຍຜ່ານໄປທາງພູເຍັນ, ຈຸດນັດພົບທີ່ຕົກລົງກັນໄວ້ຍາມໃດກໍຢູ່ຕໍ່ ຫນ້າຕຶກຄະນະກຳມະການບໍລິຫານງານສູນກາງ ຂອງອູກຣາອຶນ ບ່ອນເປັນເດີ່ນກ້ວາງປູຢາງ ເອີ້ນວ່າເດີ່ນ ເຕເວເລັບ.

ຢູ່ໃນເມືອງ, ແກວຢ່າງເດັກນ້ອຍ ກ້ອກກີ ມີວາດຊົງງົດງາມພິ ລຶກ. ແກວກ້ວາງຂະຫນາດ ຝ ຄົນເກືອບກອມເອົາທາງຍ່າງຫມົດ ນັບທັງທາງລົດພ້ອມ. ຢູ່ເບື້ອງຫລັງພວກເຮົາ ມີຕູ້ລົດລາງເປັນ ສິບໆຕໍ່ທາງກັນຍາວ, ພວກຄົນຂັບຕ່າງກໍໂມໂຫ ພາກັນບີບແກ ແປ໋ດໆຢ່າງບໍ່ຂາດມື ແຕ່ພວກເດັກນ້ອຍທີ່ຍ່າງຢູ່ທາງປີກຂວາຮູ້ຈັກ ຫນ້າທີ່ຂອງພວກເຂົາດີ: ພວກເຂົາຍ່າງຢ່າງເຄັ່ງຂຶມຫນັກແຫນ້ນ ເຮັດບາດກ້າວອ່ອກ້ວາງໆ, ເສືອກແສງຕາຂີ້ຫລັກໄປເບິ່ງທາງຍ່າງ

ບາງຂະນະ ໂດຍບໍ່ເອົາໃຈໃສ່ນຳລິດລາງ ຫລືວ່າຄົນຂັບ ແລະ ສຽງ ແກນັ້ນແມ່ນແຕ່ຫນ້ອຍດຽວ, ຢູ່ຫລັງຫມູ່ແມ່ນ ເປໂຕຣ ກຣາບ ເຊັນໂກ, ຫນຶ່ງທຸງຮູບສາມຫລ່ຽມຜືນຫນຶ່ງ, ຝຸງຊົນແນມເບິ່ງ ຫນ້ດ້ວຍຄວາມສົນໃຈແກມສົງໄສ ແລະ ນິຍົມຊົມຊອບເປັນພິເສດ ແລະພວກເດັກນ້ອຍກໍແຫຍ້ກັນເຂົ້າມາໃກ້ໆມັນຈົນ ເປໂຕຣ ຮູ້ສຶກ ເຄືອງໆ, ຢາກອາຍຫລັບຕາລົງ. ຜືນທຸງສາມຫລ່ຽມຂອງຫນ້ປົວ ສະບັດຢູ່ຊ້ກັບປາຍດ້ງຄົນຂັບລິດ ແລະ ເປໂຕຣ ກໍເບິ່ງຄ່ວ່າບໍ່ໄດ້ ຍ່າງຢຽບພື້ນດິນ ແຕ່ລ່ອງລອຍປ່ີຢູ່ໃນສຽງອ້ືອ້ືງນັ້ນນອງຂອງລິດ ລາງ.

ຈົນຮອດເດ່ີນ ໂຮຊາ ລຸກຊຳບອກ ແກວ່ຍ່າງຂອງພວກເຮົາຈ່ົ ຫລີກອອກຈາກທາງ ລິດແລ່ນກາຍພວກເຮົາໄປຄັນຕ່ໍຄັນ, ຝຸງຄົນ ໃນລິດປ່ອນຫົວອອກຈາກປ່ອງຢ້ຽມມາເບິ່ງພວກເຮົາທ້ັງຫົວທ້ັງຍ້ກ ມືສະແດງວ່ຍາກຮ້ຽໃຫ້ພວກເດັກນ້ອຍ ສ່ວນພວກເຂົາຊ້ຳພາກັນ ຍ້ມຕອບແບບຊ່ືງຕາມພາສາເດັກນ້ອຍ ໂດຍບໍ່ແຕກແກວ່ຫລ່ຍ່າງຜ່ິດ ບາດແຕ່ຍ່າງໃດ. ເປັນຫຍັງຊິບ່ຍອກໄຍຫລ້ັນກັບຝຸງຊົນໃນເມ່ືອງ ແລະ ເຮັດພາໂລພວກເຂົາຈັກຫນ້ອຍລະ? ເຂົາເຈ້ົາລ້ວນແຕ່ແມ່ນ ໄທກັນເອງເທ່ົານ້ັນ, ມ່ີແຕ່ຄົນດ່ີ, ບໍ່ແມ່ນພວກຊຸນນາງເຈ້ົານາຍ ທ່ົາໃດອ່ີກແລ້ວທ່ີ່ມາຂ່ີ້ດເລາະຢູ່ຕາມກະຫນ່ິນ, ບ່ໍ່ມ່ີພວກມ່ອມ ນ່ົງຄວ່ງແຂນມາກ່ັບບ່ າວທະຫານຫນ້ າເຫລ່ືອງຄ່ີໂອບເຜ່ົ່ , ບ່ໍ່ມ່ີ ເຈ້ົາຂອງຮ້ານຄ້ົ້າກ້ົ້ມແສງຕາກອດກາຕ່ໍາຫນ່ີຕ່ິຽນໃສ່ພວກເຮົາອ່ີກ, ພວກເຮົາຍ່ າງໄປແບບເປັນເຈ້ົ້າຕ່ິນເອງ, ຜ່ານຕ່ິວເມ່ືອງຂອງພວກ ເຮົາ, ພວກເຮົາບ່ໍ່ແມ່ນ "ເດັກນ້ອຍພາຍໃຕ້ບຸນບາລະມ່ີ" ຂອງໃຜ

ອີກແລ້ວ ແຕ່ແມ່ນຊາວນິຄົມ ກ້ອກກີ. ການທີ່ພົ້ນທຸ່ງສີເຂຽວຂອງ ພວກເຮົາປົວສະບັດຢູ່ຕໍ່ຫນ້າພວກເຮົາ ແລະ ສຽງແກທອງແດງທີ່ ເສບເພງຈ້ຽຫວະເດີນຂອງຈອມພົນ ບູດີນນີ້ນ ບໍ່ແມ່ນວ່ານັ້ນບໍ່ ມີຄວາມຫມາຍຫຍັງເດ້.

ພວກເຮົາລ້ຽວເພື່ອຕັດໄປສູ່ເດີ່ນ ເຕເວເລັບ, ຂຶ້ນໂນນຫນ້ອຍ ຫນຶ່ງ ແລ້ວກໍແນມເຫັນປາຍເສົາທຸ່ງຂອງພວກກອມມູນ ແຊກຊຶນ ສະກີ, ຕໍ່ມາກໍແນມເຫັນແກວຄໍເສື້ອຂາວຊ້ຳຈັດ ແລະ ໃບຫນ້າ ເປັນມິດ ແລະ ລະແວດລະອ້ຽຂອງພວກເຂົາ, ຫລຽວເບິ່ງຊ່ອງ ແຂນຍົກຂຶ້ນຄຳນັບພ້ອມກັນເພື່ອບຽດຕາມສຽງບັນຊາຂອງ ກຽກ ກີຊອບ ແລະ ສຽງດົນຕີກໍດັງກ້ອງສະທ້ອນນຳໜ້າອີກວົນາທີດຽວເທົ່ານັ້ນ ວົງດຸລິຍາງຂອງພວກເຮົາກໍຈະຢຸດເສບເພງຈ້ຽຫວະເດີນ ແລະ ສົ່ງທຳນອງຕອບຄຳນັບໄປແທນ.

ພຽງນາທີດຽວເທົ່ານັ້ນ, ນາທີດຽວແທ້ໆສຳລັບໃຫ້ ກຽກກີ ຊອບ ສະເຫນີລາຍງານ, ພວກເຮົາຢືນປະຈັນຫນ້າທ່າມກາງ ຄວາມງຽບສະຫງັດຂາດຂັ້ນ. ແລະ ເມື່ອເລີກແກວະແລ້ວ ພວກເດັກ ນ້ອຍແລ່ນເຂົ້າຫາກັນ, ກອດພັນກ້ຽວກັນທັງຫົວຍອກໄຍກັນ ຂ້າພະ ເຈົ້າຈົ່ງຄຶດເຫັນ ດຣ. ໂຟສ ຊາຍເຍຍລະມັນຜູ້ຫົວແຫລມຄົນນີ້ ຄົງອຶດສາຂ້າພະເຈົ້າພໍແຮງ, ລາວໂຊກບໍ່ດີເລີຍທີ່ເລືອກເກີດຜິດ ສະໄຫມ ແລະ ເລືອກເອົາໂຄງຮ່າງສັງຄົມທີ່ບໍ່ເຫມາະສົມຈັກດີ!

ຖ້າຫາກວ່າພວກເຮົາມາພົບກັນກ່ອນວັນອາທິດ, ມິເຕຍ ເຊເວ ລີ ຈະຕ້ອງມາຫາຂ້າພະເຈົ້າສະເຫມີ ແລະ ສະເຫນີວ່າ:

-ເຈົ້າຮູ້ບໍ່ນໍ້ແລ້ງນີ້ພວກຢູ່ ກ້ອກກີ ເຂົາຊິສ້ຽພົ້ນເລື່ອງ "ເຮອ

ປະຈັນບານ ໂປຕ໋ຳກິນ" ໃດ໋, ສ່ວນເລື່ອງອາຫານການກິນນັ້ນມີ ພຽງພໍ.

ແລ້ວໃນຕອນຄ່ຳຄືນແບບນີ້ ຈົນຮອດເດິກດື່ນພວກເຮົາກໍປຸກ ໂປດວອກກີ້ດ້ວຍສຽງບັນເລງເພງເດີນຈາກວົງດຸລິຍາງທ້າງສອງ ພວກ ເຮົາ, ສຽງດັງອ້ຶ້ອງຈະແກ່ຍາວຢູ່ໂຕະກິນເຂົ້າ, ຢູ່ຫ໋ຳພັກ ແລະ ຢູ່ ໃນສະໂມສອນ. ພວກເດັກນ້ອຍຮຸ່ນອ້າຍຈະເວົ້າຮອດລົມພະຍຸໃນ ຍຸກຕົ້ນໆ ແລະ ວັນເວລາອັນງົດງາມໃນປີ ກ່ອນໆ ສ່ວນພວກເດັກ ນ້ອຍຮຸ່ນໃຫມ່ກໍມິດຟ້ຽງທ້ຽງຄ໋ຶດອ໋ຶດສາໄປນ໋ຳ.

ນັບແຕ່ເດ໋ືອນເມສາເປັນຕົ້ນມາ ການມາມ໋ືຄົນຂອງ ກ້ອກກີ ກາຍເປັນຫ໋ືອ໋ຂ໋ືສົນທະນາຕົ້ນຕໍລະຫ່ວ່າງຫມູ່ຄູ່ຂອງພວກເຮົາ. ເພ໋ືນ ຂຽນຈົດຫມາຍມາບອກພວກເຮົາວ່າ ຈະມາ ຄາຄິບ ເປັນພິເສດໃນ ເດ໋ືອນກໍລະກົດ ແລ້ວຈະມາຢູ່ມ໋ືຄົນສາມ໋ື. ດົນນານມາແລ້ວທ໋ີ່ພວກ ເຮົາຂຽນຈົດຫມາຍຕ໋ິດຕ໋ໍ່ກັບເພ໋ືນ. ພວກເດັກນ້ອຍທ໋ີ່ບ໋ໍ່ເຄ໋ີຍເຫັນ ເພ໋ືນຈັກເທ໋ືອຮູ້ສ໋ຶກສ໋ຳນ໋ຶກວ່າມ໋ີເພ໋ືນມາຢູ່ໃນກັນເກ໋ືອພວກເຮົາແລ້ວ, ພວກເຂົາດ໋ີໃຈພ໋ໍປານເດັກນ້ອຍເວລາເຫັນຮູບແມ່. ພວກເດັກນ້ອຍ ທ໋ີ່ສູນເສ໋ຍຄອບຄົວ ແລະ ຕະຫລອດເສ໋ັ້ນທາງຊ໋ີວ໋ິດອັນຍ໋ືດຍາວບ໋ໍ່ ເຄ໋ີຍຮູ້ຈັກກັບຄວາມອົບອຸ່ນນັ້ນ, ພວກເຂົາເປັນຜູ້ດຽວທ໋ີ່ຮູ້ດ໋ີທ໋ີ່ສຸດວ່າ ໃນໂລກນ໋ຶ້ບາງເວລານັ້ນມັນຫນາວເຢ໋ືອກເຢັນເທ໋ົ່າໃດ, ພວກເຂົາ ເຂົ້າໃຈດ໋ີທ໋ີ່ສຸດວ່າຄວາມຫ່ວ່າງໄຍ. ຄວາມອ໋ົ່ນອ່ຽຍຈາກຜູ້ອາວຸໂສ, ຈາກຄົນຜູ້ມ໋ີຈ໋ິດໃຈໂອບອ້ອມອາລ໋ັ້ນເປັນແນວໃດ.

ພວກເດັກນ້ອຍນ໋ືຄົນ ກ້ອກກີ ບ໋ໍ່ຮູ້ຈັກສະແດງຄວາມນ໋ຶ່ມນວນ ອ່ອນຫວານອອກແບບໃດ ເພາະວ່າພວກເຂົາຕ໋ິລາຄາມັນໄວ້ສູງ

ໂພດ. ຂ້າພະເຈົ້າຢູ່ກັບພວກເຂົາມາ ຊຸ ປີ; ຫລາຍຄົນຕິດພັນຂ້າພະ
ເຈົ້າ ແຕ່ບໍ່ເຄີຍມີຈັກເທື່ອໃນຊຸມປີຫລ້ານີ້ທີ່ຈະມີໃຜຈັກຄົນສະ
ແດງຄວາມອ່ອນຫວານຕາມຄວາມຫມາຍທຳມະດາ ຂອງຄຳສັບ.
ຂ້າພະເຈົ້າຮັບຮູ້ຈິດອາລົມຂອງພວກເຂົາໄດ້ ກ້ຍອນສັນຍານທີ່ຂ້າພະ
ເຈົ້າຄົນດຽວຮູ້ ຄືຄວາມເລິກລ້ຳໃນແສງຕາ, ໃບຫນ້າແດງເຮື່ອ,
ຄວາມເອົາໃຈໃສ່ສົ່ງຊອມເບິ່ງຂ້າພະເຈົ້າຢູ່ແຈໃດແຈຫນຶ່ງ, ນ້ຳສຽງ
ເວົ້າແຫບໆແບບໃດແບບຫນຶ່ງ, ອາການແລ່ນເຕັ້ນສັກຄະໂຍງເມື່ອ
ພົບພໍ້ກັບຂ້າພະເຈົ້າ. ຍ້ອນແນວນີ້ແລ້ວຂ້າພະເຈົ້າຈຶ່ງເຫັນວ່າ ເມື່ອ
ພວກເດັກນ້ອຍເວົ້າເຖິງ ກ້ອກກີ ນັ້ນມັນເຕັມໄປດ້ວຍຄວາມອ່ອນ
ຫວານນຶ່ມນວນເຫລືອຮັບ, ພວກເຂົາຫືອໂຫຍຄວາມເບີກບານພໍ
ພຽງໃດ ເມື່ອໄດ້ຮັບຂ່າວວ່າເພິ່ນຈະມາ.

ການມາຢ້ຽມຢາມນິຄົມຂອງ ກ້ອກກີ ເປັນຮາງວັນສູງສຸດຢ່າງ
ຫນຶ່ງ. ໃນສາຍຕາຂອງພວກເຮົາ, ມັນບໍ່ ທັນສົມຄວນແນວນັ້ນ
ເທື່ອຂ້າພະເຈົ້າເວົ້າແທ້ໆ. ຜົນຮາງວັນສູງສົ່ງອັນນີ້ຕົກມາເປັນຂອງ
ພວກເຮົາ ໃນລະຍະ ທີ່ທົ່ວສະຫະພາບໂຊວຽດພວມກະກຽມຕ້ອນ
ຮັບການກັບມາຂອງນັກປະພັນໃຫຍ່ຄົນນີ້, ນັ້ນມັນຫມາຍຄວາມວ່າ
ນິຄົມຂອງພວກເຮົາເຊິ່ງເປັນຫົວຫນ່ວຍສັງຄົມນ້ອຍໆ ບ່ອນຫນຶ່ງ
ອາດຈະຖືກຫລົງລືມປົນກັ້ມຢູ່ໃນຄົ້ນຟອງແຫ່ງຄວາມຟົດຟື້ນລວມ.

ແຕ່ວ່າມັນບໍ່ຖືກລືມ, ສິ່ງດັ່ງກ່າວປະທັບໃຈພວກເຮົາຫລາຍ
ແລະ ນຳເອົາຄຸນຄ່າອັນສູງສົ່ງມາສູ່ຊີວິດຂອງພວກເຮົາ.

ມີການກະກຽມເພື່ອຕ້ອນຮັບ ກ້ອກກີ ຫລັງຈາກໄດ້ຮັບຈົດ
ຫມາຍຂອງເພິ່ນພຽງວັນດຽວ. ເພິ່ນໄດ້ສົ່ງຂອງຂວັນອັນເອື້ອອາລີ

ຢ່າງຫນ໋ຶ່ງມາໃຫ້ພວກເຮົາກ່ອນ ແລະ ຍ້ອນສິ່ງດັ່ງກ່າວນ໋ຶ້ເອງພວກ
ເຮົາຈ໋ຶ່ງສາມາດຮ່ຳບາດແຜຈ່ຳນວນສຸດທ້າຍ ທ໋ຶ່ຫລ໋ຶ່ງເຫລ໋ຶ່ອມມາຈາກ
ກູເຮຍແຊ ເກ໋ຶ່າ.

ແມ່ນກະໂຕເວລານ໋ຶ້ເອງທ໋ຶ່ພວກເພ໋ຶ່ນຮຸງກຮ້ອງໃຫ້ຂ້າພະເຈ້ົ້າສະ
ເຫນ໋ຶ່ລາຍງານ. ຂ້າພະເຈ້ົ້າຕ້ອງສະເຫນ໋ຶ່ໃຫ້ບັນດາຜູ້ຊ໋ຶ່ຽວຊານຮູ້ທ໋ຶ່ດ
ສະ໋ຶດ, ນັກປາດ ທາງດ້ານວ໋ຶ່ຊາການສ໋ຶກສາວ່າຄະຕ໋ຶ່ພ໋ຶດປະຈ່ຳຕ໋ຶ່ວຂອງ
ຂ້າພະເຈ້ົ້າທາງດ້ານວ໋ຶ່ຊາການຄູນ໋ຶ້ມ໋ຶ່ຫຍ້ັງແດ່ ແລະ ຫລ໋ຶ ກການທ໋ຶ່ຂ້າ
ພະເຈ້ົ້ານ່ຳໃຊ້ໄດ້ເປ໋ຶ່ນແນວໃດ. ບ່ໍ ອ໋ຶ ດແຕ່ຂ້ົ້ອ້າງອ໋ຶ ງສ໋ຶ ນດອກ ເພ໋ຶ ່ອ
ຮຸງກຮ້ອງອະທ໋ຶ ບາຍຢ່ າງລະອຽດຢ ູ່ໃນນ໋ຶ ້.

ຂ້າພະເຈ້ົ້າກະກຽມຕ໋ຶ ວຢ ່ າງສຸດຂ໋ຶ ດ ເພ໋ຶ ່ອການທ໋ຶ ດສອບ ຄ ັ ້ງ ນ ້ ໋ ຶ .
ເ ກ ໋ ຶ ງ ແ ມ ່ ນ ວ ່ າ ຂ ້ າ ພ ະ ເ ຈ ້ ົ ້ າ ບ ່ ໍ ຫ ວ ັ ງ ຄ ອ ງ ຄ ອ ຍ ວ ່ າ ຈ ະ ໄ ດ ້ ຮ ັ ບ ຄ ວ າ ມ ເ ມ ດ ຕ າ
ຫ ລ ໋ ຶ ກ ການ ຜ ່ ອ ນ ສ ັ ້ ນ ຜ ່ ອ ນ ຍ າ ວ ໃ ດ ໆ ກ ໍ ຕ າ ມ .

ໃ ນ ທ ໋ ຶ ່ ສ ຸ ດ ຂ ້ າ ພ ະ ເ ຈ ້ ົ ້ າ ກ ໍ ກ ້ າ ວ ເ ຂ ົ ້ ້ າ ໄ ປ ໃ ນ ຫ ້ ອ ງ ຫ ນ ໋ ຶ ່ ງ ກ ວ ້ າ ງ ໆ ເ ພ ດ ານ
ສ ູ ງ ປ ອ ດ ໂ ປ ່ ງ ດ ໋ ຶ , ໃ ນ ນ ັ ້ ນ ມ ໋ ຶ ີ ແ ຕ ່ ເ ຕ ັ ້ ຽ ງ ສ າ ສ ະ ດ າ ແ ລ ະ ສ າ ວ ິ ກ . ມ ັ ນ
ແ ມ ່ ນ ກ ອ ງ ປ ະ ຊ ຸ ມ ເ ພ ໋ ຶ ່ ອ ຕ ັ ດ ສ ິ ນ ຄ ະ ດ ໋ ຶ ສ ະ ເ ພ າ ະ ຢ ່ າ ງ ຫ ນ ໋ ຶ ່ ງ ນ ັ ້ ນ ເ ອ ງ . ໃ ນ ທ ໋ ຶ ່
ນ ໋ ຶ ້ ທ ັ ດ ສ ະ ນ ະ ທ ໋ ຶ ່ ສ ະ ແ ດ ງ ອ ອ ກ ນ ັ ້ ນ ຕ ້ ອ ງ ສ ຸ ພ າ ບ ວ ິ ກ ວ ິ ນ ອ ້ ອ ມ ໂ ຄ ້ ງ ນ ໋ ຶ ່ ມ
ນ ວ ນ , ເ ຮ ັ ດ ໃ ຫ ້ ຫ ວ ນ ຄ ໋ ຶ ດ ຄ ລ ໋ ຶ ນ ເ ກ ໋ ຶ ງ ກ ໋ ຶ ່ ນ ຫ ອ ມ ກ ້ ວ ່ າ ງ ກ າ ດ ຂ ອ ງ ອ ອ ກ ປ ອ ງ
ໂ ປ ໄ ຄ ່ ຂ ໋ ຶ ດ ງ ໍ , ຂ ອ ງ ປ ໋ ຶ ້ ມ ເ ກ ໋ ຶ ່ າ ໆ ແ ລ ະ ໂ ຕ ະ ຕ ັ ່ ງ ຫ ລ ້ ອ ນ ສ ໋ ຶ ເ ພ ັ ້ ຍ ຍ ້ ອ ນ
ກ ານ ນ ັ ່ ງ ກ ູ ເ ກ ໋ ຶ ອ ຄ ໋ ຶ ້ ນ ຄ ້ ວ ້ າ ແ ຕ ່ ດ ິ ນ . ແ ຕ ່ ພ ວ ກ ສ າ ສ ະ ດ າ ແ ລ ະ ສ າ ວ ິ ກ
ຢ ູ ່ ຫ ນ ໋ ຶ ້ ບ ່ ໍ ມ ໋ ຶ ຫ ນ ວ ດ ເ ຄ ົ ້ າ ຂ າ ວ ຍ າ ວ , ບ ່ ໍ ມ ໋ ຶ ຊ ່ ສ ຽ ງ ເ ປ ັ ນ ທ ໋ ຶ ່ ສ ັ ກ ກ າ ລ ະ ຫ ລ ໋ ຶ
ເ ປ ັ ນ ເ ຈ ້ ົ ້ າ ຂ ອ ງ ກ ານ ຄ ໋ ຶ ້ ນ ພ ົ ບ ຍ ່ ໋ ຶ ງ ໃ ຫ ຍ ່ ອ ັ ນ ໃ ດ . ພ ວ ກ ເ ຂ ົ ້ າ ມ ໋ ຶ ີ ສ ິ ດ ອ ັ ນ ໃ ດ ຈ ໋ ຶ ່ ງ
ມ ໋ ຶ ີ ວ ິ ງ ສ ັ ບ ພ ະ ລ ັ ງ ສ ໋ ຶ ີ ອ ອ ມ ຫ ົ ວ ແ ລ ະ ກ ໍ ອ ັ ກ ຂ ະ ລ ະ ສ ັ ກ ສ ິ ດ ໄ ວ ້ ໃ ນ ມ ໋ ຶ ? ຢ ່ າ ງ

ໃດກໍດີ ພວກເຂົາກໍເປັນບຸກຄົນຜູ້ຄ່ອງໄວ ຜູ້ຫລົບບ່ຽງຢູ່ເບື້ອງຫລັງ ປະຕູເພື່ອສ້າງສວຍງາມຂອງຊີວິດໃຊ້ງດຈະຖືກແຈກຢາຍກະຈາຍ ອອກໄປ.

ຜູ້ທີ່ທ້າວຫັນຂັນແຂງກ່ອນຫມູ່ແມ່ນອາຈານ ຊາຍກົນ; ແມ່ນ ທ້າວ ຊາຍກົນຜູ້ດຽວກັນທີ່ເຄີຍເຮັດໃຫ້ຂ້າພະເຈົ້າຄຶດເຫັນບົດ ເລົ່າເລື່ອງຂອງ ເຊກອບ ຫວ່າງ ປີກ່ອນນັ້ນແລ້ວ.

ຢູ່ໃນຄຳສະຫລຸບຂອງລາວ ຊາຍກົນ ບໍ່ປ່ອຍໃຫ້ມີຫຍັງເຫລືອ ຄ້າງຢູ່ໃນຕົວຂ້າພະເຈົ້າພໍເມັດເລີຍ:

-ສະຫາຍ ມາກາເຣັນໂກ ວາງຂະບວນວິຊາການສຶກສາເທົ່າ ແນວຄຶດກ່ຽວກັບຫນ້າທີ່! ແມ່ນຢູ່ວ່າໃນນັ້ນລາວໄດ້ຕົ່ມຄຳສັບ "ກຳ ມາຊີບ" ໃສ່, ແຕ່ສະຫາຍເອີ້ຍ, ສິ່ງດັ່ງກ່າວນັ້ນມີແຕ່ເຊື່ອງບ້າ ທາດແທ້ຂອງແນວຄຶດຊ້ຳ. ພວກເຮົາຂໍແນະນຳໃຫ້ສະຫາຍ ມາກາ ເຣັນໂກ ດຳເນີນການອະທິບາຍຢ່າງຕົດແທດ ທີ່ສຸດກັບປະຫວັດ ການເກີດຮູບການຂອງແນວຄຶດກ່ຽວກັບຫນ້າທີ່, ມັນແມ່ນແນວຄຶດ ຫນ້າທີ່ຕ່ຳຕ່ຳເກີດນຳສາຍການພົວພັນແບບນາຍທຶນ, ແມ່ນແນວຄຶດຫນ້ຳ ທີ່ມັກສະນະເປັນການຄ້າຢ່າງເລິກເຊິ່ງ. ວິຊາການສຶກສາໂຊ່ງດ ຊອກວິທີສຶກສາອົບຮົມໃຫ້ບຸກຄົນຮູ້ຈັກສະແດງກຳລັງ ແລະ ຫົວຄຶດ ປະດິດສ້າງຢ່າງເສລີ ບໍ່ເຄີຍມີການສ້າງແນວຄຶດວ່າດ້ວຍຫນ້າທີ່ແບບ ພວກນາຍທຶນ.

ນັບວ່າເປັນຄວາມເສຍດາຍເລິກເຊິ່ງຢ່າງຫນຶ່ງ ແລະ ກໍເປັນ ເລື່ອງແປກປະຫລາດສາຫັດອີກດ້ວຍທີ່ໃນວັນນີ້ພວກເຮົາໄດ້ມາຍົນ ຄຳຮຽກຮ້ອງຫາການສຶກສາອົບຮົມສ້າງອາລົມສຳນຶກກ່ຽວກັບກຽດ

ຈາກປາກຂອງຜູ້ອຳນວຍການສອງສະຖາບັນແບບຢ່າງ ຜູ້ຫນ້ານັບຖື ຄົນຫນຶ່ງ. ພວກເຮົາເຮັດແນວອື່ນບໍ່ໄດ້ແລ້ວນອກຈາກລຸກຂຶ້ນຄັດ ຄ້ານກັບຄຳຮຽກຮ້ອງອັນນີ້. ທັດສະນະໂຊວຽດສົມທົບສຽງຂອງມັນ ເຂົ້າກັບສຽງວິທະຍາສາດຢ່າງສະບາຍ, ມັນບໍ່ຍອມໃຫ້ມີການຫັນກັບ ໄປຫາຈິດສຳນຶກອັນນີ້ທີ່ເຮັດໃຫ້ພວກເຮົາຈື່ໄດ້ດີວ່າ ອະພິສິດແມ່ນ ຫຍັງ, ເຄື່ອງແບບ ແລະ ບ່າຂຶດຂອງພວກນາຍທະຫານແມ່ນ ຫຍັງ.

ພວກເຮົາບໍ່ສາມາດຖືກຫຽງກັນກ່ຽວກັບແນວຄິດທຸກຢ່າງ ເຊິ່ງສະ ເຫນີອອກຢູ່ໃນລາຍງານກ່ຽວກັບການຜະລິດ. ມັນອາດເປັນໄປໄດ້ ວ່າ ເບິ່ງໃນແງ່ຄວາມອຸດົມສົມບູນທາງດ້ານວັດຖຸຂອງນິຄົມແລ້ວ ສິ່ງດັ່ງກ່າວເປັນປະໂຫຍດຢູ່ ແລະ ວິທະຍາສາດການສຶກສາບໍ່ອາດ ຄາດຄະເນໃຫ້ການຜະລິດເປັນບັດໃຈສຳຄັນຫນຶ່ງຂອງການສຶກສາ, ແລະ ດ້ວຍເຫດຜົນອັນນີ້ນຳ ມັນບໍ່ສາມາດຮັບຮອງເອົາຂໍ້ວິນິດໄສ ເຫລົ່ານີ້ໄດ້: "ແຜນການອຸດສາຫະກຳ ແລະ ການເງິນ ແມ່ນຜູ້ ສຶກສາທົດເລີດ". ການຮັບຮູ້ແບບນີ້ກໍ່ແມ່ນສິ່ງອື່ນໃດ ນອກຈາກ ການຕີຄວາມຫມາຍຫຍາບໆຂອງແນວຄິດວ່າດ້ວຍການສຶກສາອົບຮົມ ດ້ວຍການອອກແຮງງານ.

ມີຫລາຍຄົນຂຶ້ນເວົ້າ ແລະ ຫລາຍຄົນມີຄຳຖາມ. ໃນທີ່ສຸດ ຂ້າພະເຈົ້າກໍອົດກັ້ນບໍ່ຟັງ, ຄວາມໂມໂຫແລ່ນຖົ້ມຫນ້າແລ້ວຂ້າພະ ເຈົ້າຈັດການຖອກນ້ຳມັນລົງໃສ່ໄຟກອງຮ້າຍທັນທີ:

- ບາງທີເຈົ້າອາດຈະເວົ້າຖືກຢູ່ບ່ອນວ່າ ພວກເຮົາຈະບໍ່ເຂົ້າໃຈ ກັນ, ຂ້ອຍບໍ່ເຂົ້າໃຈເຈົ້າ. ຕາມຄວາມເຫັນຂອງເຈົ້ານັ້ນໂລດເຫັນ

ວ່າຫົວຄິດປະດິດສ້າງແມ່ນສິ່ງທີ່ເກີດຂຶ້ນເອງນໍ້, ຕົກລົງມາແຕ່ຟ້າ ບໍ່ມີໃຜຮູ້ວ່າມັນມາແຕ່ໃສ, ບໍ່ແມ່ນຜົນງານຂອງໃຜຫນຶ່ງ. ຂ້າພະເຈົ້າຂໍບອກພວກທ່ານເປັນເທື່ອທີສາມວ່າ ຫົວຄິດປະດິດສ້າງເກີດຂຶ້ນໄດ້ເມື່ອມີພາລະຫນ້າທີ່, ເມື່ອມີຄວາມຮູ້ສຶກຮັບຜິດຊອບຕໍ່ການປະຕິບັດພາລະນັ້ນ, ມີຄວາມຮັບຜິດຊອບຕໍ່ເວລາທີ່ສູນເສຍໄປໃນເມື່ອວ່ານັ້ນມີຄວາມສຽກຮ້ອງຂອງຫນ່ວຍຊີວິດໂຮມຫມູ. ແຕ່ປານນັ້ນພວກທ່ານກໍຍັງບໍ່ເຂົ້າໃຈຂ້າພະເຈົ້າເທື່ອ ແລ້ວຍັງເວົ້າຮອດຫົວຄິດປະດິດສ້າງກັບຂ້າພະເຈົ້າອີກ, ມັນບໍ່ມີເນື້ອໃນ ແລະ ແຍກຕົວຕັດຂາດອອກຈາກການອອກແຮງງານ. ສໍາລັບເຈົ້າ, ເພື່ອຢາກສະແດງວ່າຜູ້ໃດມີຫົວຄິດປະດິດສ້າງນັ້ນ ໃຫ້ເຂົາກົ້ມເບິ່ງໄສ້ຕົນເອງກໍໄດ້ແລ້ວ...

ໂອ້ຍ ຈັ່ງແມ່ນພວກສາສະດາ ອາຈານເຫລົ່ານັ້ນພາກັນຄຸດຂຶ້ນຈົ່ມປ້ອຍດ່າຂ້າພະເຈົ້າ, ບໍ່ຈັກນິບໄຫວ້ ແລະ ປ້ອຍແຊ່ງ! ເມື່ອເຫັນວ່າແປວໄຟ ລຸກລາມໄຫມ້ໄປແລ້ວ ແລະ ເກີຍ່າງໃດຂ້າພະເຈົ້າກໍບໍ່ສາມາດກອຍຫລັງຄືນໄດ້ແລ້ວ, ບໍ່ມີຫຍັງຊິເສຍອີກແລ້ວ ເພາະວ່າທຸກສິ່ງທຸກຢ່າງວອດວາຍໄປແລ້ວ, ຂ້າພະເຈົ້າເວົ້າຕໍ່ວ່າ:

- ພວກເຈົ້າບໍ່ສາມາດຕີລາຄາທ້ົງການສຶກສາອົບຮົມທ້ົງຫົວຄິດປະດິດສ້າງດອກ ເພາະວ່າ ພວກເຈົ້າບໍ່ເຂົ້າໃຈບັນຫານີ້ຈັກເມັດ.

- ແລ້ວເຈົ້າຫັ້ນເດ ເຈົ້າຮູ້ບໍ່ວ່າເລີ່ນເວົ້າແນວໃດກ່ຽວກັບຫົວຄິດປະດິດສ້າງນີ້?

- ເອີ ຂ້ອຍຮູ້.

- ເຈົ້າບໍ່ຮູ້ຈັກດອກ.

ຂ້າພະເຈົ້າຈົກເອົາປຶ້ມນ້ອຍອອກມາ ແລ້ວເປີດອອກອ່ານແຮງໆ:
"ຫົວຄຶດປະດິດສ້າງແມ່ນການຮູ້ຈັກກອຍຫລ້ຽງຢ່າງມີລະບຽບວິໄນ
ເຄ່ັງຄັດ", ເລນິນເວົ້າຢູ່ໃນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ
ບອນເຊວິກ ແຫ່ງລັດເຊຍ ວັນທີ ८ ກໍ ມີນາ ๑๙८८.

ພວກສາສະດາ ພາກັນມິດອົ້ງໄປຄາວຫນ່ຶ ແລ້ວກໍຮ້ອງຂຶ້ນວ່າ:

- ມັນກ່ຽວຫຍັງກັບການກອຍຫລ້ຽງລະ?

- ຂ້າພະເຈົ້າ ຢາກໃຫ້ພວກທ່ານເອົາໃຈໃສ່ນໍາການພິວພັນລະ
ຫວ່າງ ລະບຽບວິໄນ ແລະ ຫົວຄຶດລິເລີ່ມ. ນອກນີ້ຂ້າພະເຈົ້າເອງ
ກໍມີຄວາມຈໍາເປັນ ທີ່ຈະຕ້ອງສູ້ທ້າກອຍຢ່າງມີລະບຽບ.

ພວກສາສະດາຫລັບຕາທຶບໆແລ້ວຈຸ້ມຫົວເຂົ້າຫາກັນຢ່າງພ້າວ
ພັ່ງ, ຊຸ້ມຊັບກັນທ້ວງດຶງເຈ້ຍຂຽນໄປມາ. ກອງປະຊຸມລັບຜ່ານມະຕິ
ຂອງມັນຢ່າງເປັນເອກະສັນວ່າ:

"ລະບົບດໍາເນີນການສຶກສາອົບຮົມແບບສະເຫນີມານັ້ນ ບໍ່ແມ່ນ
ແບບວິທີໂຊວຽດ".

ຫມູ່ຄູ່ຂອງຂ້າພະເຈົ້າຫລາຍຄົນກໍຢູ່ໃນກອງປະຊຸມ ແຕ່ພວກ
ເຂົາບໍ່ປາກ, ໃນນັ້ນຍັງມີພວກກຸ່ມຫນ່ຶ: ພວກເຂົາພາກັນມິດຟັງ
ການກ້ກກຽງຢ່າງເອົາໃຈໃສ່ ທັງຈົດບັນທຶກໃສ່ປຶ້ມນ້ອຍໆຂອງພວກ
ເຂົາເຈົ້າໄປພ້ອມ ຈາກນັ້ນກໍອອກໄປໂດຍບໍ່ລໍຖ້າຟັງການຕັດສິນ.

ພວກເຮົາກັບມານິຄົມໃນຕອນກາງຄືນເດິກດື່ນ, ຂ້າພະເຈົ້າມີ
ພວກຄູສອນແລະສະມາຊິກຫ້ອງການຊາວຫນຸ່ມກົມໂຊໂມນຈໍານວນ
ຫນ່ຶງມານໍາ. ເວລາເດີນທາງກັບມານັ້ນ ໂຈຣາ ໂວນກອບ ກົ່ມນ້ໍ
ລາຍປົດ ແລະ ຈົ່ມຮ້ອຍວ່າ:

- ເຮັດແນວໃດຈ່ຳວ່າ ເວົ້າແນວນັ້ນອອກມາໄດ້ເນາະ ພວກນັ້ນ! ສຳລັບພວກເຂົາໂລດເທ້ນວ່າບໍ່ມີຫຍັງຄືກງດສັກສີ່ຊົ່ນຫວາ, ນິຄົມພວກເຮົາບໍ່ມີກງດຫວະ? ຊົ່ນກງດບໍ່ມີຫວະ?

- ຢ່າໄປສົນໃຈມັນເທາະ, ອາມໂຕ ເຊມືອໂນວ໊ດ, - ລາ ປົດເວ້ົ້ຂົ້ນ. - ພວກເຂົາຢູ່ໃນກະຕ່າດຽວກັນ, ພວກນັກຕໍ່ແຍ...

- ເອ໊... ກັນບໍ່ໄດ້ສົນໃຈໃຫ້ຄວາມສຳຄັນອີ່ຫຍັງດອກ, ຂ້າພະເຈົ້າບອກເພື່ອໃຫ້ພວກເດັກນ້ອຍອຸ່ນໃຈ.

ແຕ່ເວລານັ້ນ ເພິ່ນຈັດການກັບເລ່ືອງນ້ົຮຽບຮ້ອຍໄປແລ້ວ.

ໂດຍບໍ່ລັ່ງເລຫລົ້ມຫົວໃຫ້ໃຜ, ຂ້າພະເຈົ້າລົງມ໊ືລົບລ້າງ ຫນ່ວຍຊ໊ືວ໊ດໂຮມຫມູ່ທັນທ໊ີ, ຂ້າພະເຈົ້າຈັດການສົ່ງພວກເປັນຫມູ່ ຮັກແພງທັ້ງຫລາຍອອກຫນ໊ີຈາກ ນິຄົມ. ການກະທຳດັ່ງກ່າວເປັນ ຄວາມຈຳເປັນຢ່າງຫນ່ຶ ເພື່ອບໍ່ໃຫ້ພວກເຂົາ ຕົກເປັນເຄ່ືອງມ໊ືທ໊ດ ສອບພາຍໃຕ້ລະບອບໃຫມ່ ແລະ ເພື່ອບໍ່ໃຫ້ເປັນການປະເຮ໊ືອນຮ້ຽ ຄວາມບໍ່ພໍໃຈຢູ່ໃນນິຄົມອ໊ກຕໍ່ໄປ.

ຂ້າພະເຈົ້ຍ່ືນໃບລານຳຢູເຣັບ ໃນມ໊ືຕໍ່ມານັ້ນໂລດ. ເຂົາຢຸດຊ໊ຶ ຄາວຫນ່ຶ ແລ້ວບ໊ືບມ໊ືຂ້າພະເຈົ້າແຫນ້ນຢ່າງມ໊ດໆ. ຂ້າພະເຈົ້ຍ່າ ອອກມາ ລາວຈ່ຳຮ້ອງນຳວ່າ:

- ຟ້າວກ່ອນ!... ຊ໊ເຮັດແນວໃດ? ທ່ານ ກ້ອກ໊ ຊ໊ມາຫ້ົ ເດ້!

- ເຈ້ົ້ອາດຊ໊ຶດວ່າ ຂ້ອຍຊ໊ຶຍອມໃຫ້ຜູ້ອ່ືນຕ້ອນຮັບ ກ້ອກ໊ ແທນຂ້ອຍໃດ້ຫ້ົ ເນາະ?

- ເອ໊... ຊ໊ນຫວາ!

ລາວແລ່ນກັບຄືນຫ້ອງການ ທັງຈົ່ມພຸມໆວ່າ:

- ຕາຍຫ່າແລ້ວບາດນີ້, ຕາຍຄັກໆ...

- ເປັນຫຍັງຈັ້ນຫວະ?

- ຂ້ອຍຊິຫນີຈາກກນີ້... ໄປທາງໃດກະຊິໄປ!

ຂ້າພະເຈົ້າປ່ອຍລາວໄວ້ກັບເຈຖຕະນາດີ້ນນີ້, ລາວະແລ່ນອອກ ມາທັນຂ້າພະເຈົ້າຢູ່ຮ່ອມ:

- ອານໂຕນ ເຊມືອໂນວິດ... ເຈົ້າ ອຸກໃຈແມ່ນບໍ?

- ໂອ້ຍ... ແມ່ນອີ່ຫຍັງລະ? ຂ້າພະເຈົ້າເວົ້າຄືນທັງຫົວ,

- ເປັນຫຍັງເຈົ້າຈົ່ງເວົ້າແນວນີ້... ໂອ້ຍ ປັນຍາຊິນເອີ້ຍ! ໄດ້ລະ... ຂ້ອຍຊິອອກຈາກ ນິຄົມໃນມື້ທ່ໍ ກ້ອກກີ ລາເມືອນັ້ນລະ, ຊິມອບ ອຳນາດໃຫ້ ລູກບົນ ສ່ວນເຈົ້າຈະເຮັດແນວໃດກໍຕາມໃຈ.

- ເຈົ້າ...!

ຂ້າພະເຈົ້າບໍ່ບອກໃຜຈັກຄົນວ່າ ຂ້າພະເຈົ້າຈະໄປ ແລະ ຢູ ເຮັບ ກໍຮັກສາຄຳສັນຍາ, ລາວອັດປາກນິດເລີຍ.

ຂ້າພະເຈົ້າໄປໂຮງງານຕ່າງໆ, ພົບພວກອຳນວຍການ ແລະ ໄປ ຫາພວກເຊກາ. ບັນຫາກ່ຽວກັບການຈັດສົ່ງນັກຮຽນອອກນີ້ ມັນມີ ມາແຕ່ດົນແລ້ວຈັ່ງຊັ້ນວິທີ:ແລ່ນເຕັ້ນຂອງຂ້າພະເຈົ້າ ຈົ່ງບໍ່ເຮັດໃຫ້ຄົນ ຢູ່ໃນນິຄົມແປກໃຈ. ອີງໃສ່ການຊ່ວຍເຫລືອຂອງພວກຫມູ່ຄູ່ຫລາຍ ຄົນ ຂ້າພະເຈົ້າຈົ່ງພໍຫາວຽກຫາງານ ຢູ່ໃນໂຮງງານເພື່ອງຄາຄົບໃຫ້ ພວກເດັກນ້ອຍ ກ້ອກກີ ໄດ້ ຢ່າງບໍ່ລຳບາກປານໃດພ້ອມທັງບ່ອນພັກ ພາອາໄສຢູ່ໃນເພື່ອງນຳ. ເອີກາເຕີຣີນາ ກຣີກໍເຮັບນາ ກັບ ກູເລຍ ເຢວາ ເປັນຜູ້ຈັດການເລື່ອງນີ້, ພວກນາງທັງສອງຮູ້ຈັກວຽກນີ້ດີ

ທ້າງຫ້າງຫົບເຄື່ອງນ້ອຍໃຫ້ພວກເຂົາພ້ອມ. ຍ້ງເວລາອີກສອງເດືອນ ກ້ອກກີ ຈ່ຶງຈະມາ, ພວກເຮົາມີເວລາກະກຽມຢ່າງພຽງພໍ.

ຊາວນິຄົມ ກ້ອກກີ ຮຸ່ນເກົ່າ ກ້າວໄປສູ່ຊີວິດໃນສ້ງຄົມເທ່ົ່ອລະຄົນສອງຄົນຕິດຕໍ່ກ້ັນ. ພວກເຂົາອຳລາຈາກໄປດ້ວຍນ້ຳຕານອງຫນ້າ ແຕ່ນ້ັນນ້ັນບ່ໍແມ່ນເພາະຄວາມເສ້ົາໂສກດອກ ພວກເຮົາຍ້ງຈະໄດ້ພົບເຫ້ັນກ້ັນອີກຢູ່. ພວກເຮົາສ່ິງທາງພວກເຂົາຢ່າງມ້ີກຽດ, ມ້ີຂະບວນແຫ່, ທະຫານອ້ີງຄະລ້ັກ ແລະ ຜ້ືນກຸ້ງ ກ້ອກກ້ີປ້ືອສະບ້ັດ. ຜູ້ຈາກໄປມ້ີ ຕາຣາແນ້ັດ, ໂອໂລຄ້ົບ, ກູດ, ເລຊ, ກາລາແຕ້ັງໂກ, ເຟໂດເຣ້ັນໂກ, ໂກຣ້ິໂຕ, ອາໂລດຊາ ກ້ັບ ໂຈຣາ ໂອນກອບ, ລາປ້ົດ, ກູດລາຕ, ສະຕູປ້ົດຊ້ິນ, ໂຊໂຣກາ ແລະ ຜູ້ອ່ືນໆອ້ີກຫລາຍຄົນ. ຂ້ົ້າພະເຈ້ົ້າກ້ັບໂກວານ ຕ້ົກລ້ົງກ້ັນຫາທາງຮ້ັກສາບາງຄົນໄວ້ເປ້ັນພະນ້ັກງານກ້ືນເງ້ືນເດ້ືອນຢູ່ໃນນ້ິຄົມ ເພ້ືອປ້ອງກ້ັນບ່ໍໃຫ້ນ້ິຄົມຂາດຜູ້ນຳຈ້ືນເກ້ືນໄປ. ຂ້ົ້າພະເຈ້ົ້າຍ້ົ້ายนักธรรม ທ່ົ້ກຽມເຂ້ົ້າວ ທະຍາໄລກຳມະກອນໄປຢູ່ກອນໝູນແຊກຊ້ິນສະກ້ີຈ້ືນຮອດລະດູໃບໄມ້ຫລ່ົ່ນ. ພວກພະນ້ກງານຄູສອນຄູເຝ້ິກຕ້ອງຢູ່ໃນນ້ິຄົມໄປລະຍະຫນ້ຶ່ງກ່ອນເພ້ືອບ່ໍໃຫ້ວຽກງານຢຸດສະງ້ັກ. ມ້ີແຕ່ ໂກວານ ຜູ້ດຽວບ່ໍຍອມຢູ່, ລາວບ່ໍ້ຳຮອດວ້ິນາທ້ີສຸດທ້ົ້າຍຊ້ຳ ກ້ັບໄປບ້ົ້ານນອກກ່ອນ.

ຢູ່ໃນວ້ິສ້ັບພະລ້ັງສ້ີຮາງວ້ັນທ້ົ່ຄອບຫ້ົວຂ້ົ້າພະເຈ້ົ້າຢູ່ໃນເປ້ົ້ານ້ັ້ນ ຍ້ັງມ້ີລ້ັງສ້ີຫນ້ຶ່ງສະຫວ່ຳງສະໄຫວຢ່ຳງບ່ໍຄ່ຳດ້ຶດ: ນ້ັນເປ້ັນສ້ິ່ງເຫ້ືອວ້ິໄສທ້ົ່ຈະລ້ືບລ້ຳງຫນ່ວຍຊ້ີວ້ິດໂຮມຫມູ້່ທ້ົ່ມ້ີພະລ້ັງຈ້ັງຊ້ຳຮອດ ๔๐๐ ຄົນ. ແທນບ່ອນພວກທ້ົ່ຈາກໄປໃນລະຍະທ້ຳອ້ິດ, ພວກເດ້ັກນ້ອຍ

ຮຸ່ນໃຫມ່ກໍເປັນຜູ້ກ້າຫານ, ທ້າວ່ອງໄວທ້າວທັນ ສະຫລາດສະ
ຫລຽວ ແລະ ມີອາລົມດີເທົ່າໆກັນ. ກັນແກ່ວພວກເດັກນ້ອຍນິຄົມ
ຮັດແຫນ້ນເຂົ້າຫາກັນພ້ອມແກ່ວທະຫານເວລາສູ້ຮົບ. ມັນບໍ່ພຽງ
ແຕ່ວ່າຫນ່ວຍຊີວິດໂຮມຫມູ່ເອງບໍ່ຢາກຕາຍແຕ່ມັນຮອດບໍ່ຢາກຄຶດ
ຫາຄວາມຕາຍຈ້ຳ. ມັນດຳລົງຊີວິດຢ່າງເຂັ້ມຂຸ້ນຄືກັບລົດໄຟ ກ້າວແລ່ນ
ໄປສຸດຄວາມໄວຕາມຮາງລົດທີ່ຍືນຍ່ຽນ ແລະ ແນ່ນອນ, ຫນ່ວຍຊີ
ວິດໂຮມຫມູ່ກະກຽມຕົນເພື່ອຕ້ອນຮັບການຍ່ຽມຢາມຂອງ ນາຍຊຶມ
ກ້ອກີ ຢ່າງສະຫງ່າງາມ ແລະນິ່ມນວນ.

ວັນເວລາຜ່ານໄປ ແລະ ບັດນີ້ກໍແມ່ນວັນເວລາທີ່ສວຍງາມແລະ
ເປັນສຸກແລ້ວ. ບໍ່ຕ່າງຫຍັງກັບນວນນາລາ, ເວລາກ່ຽວຂອງ
ພວກເຮົາໄຂຂຶ້ນ ປະດັບປະດາດ້ວຍການອອກແຮງງານ, ຮອຍຍິ້ມ
ແລະ ຄວາມສະຫວ່າງສະໄຫວຢູ່ໃນແຈວທາງອະນາຄົດຂອງພວກ
ເຮົາ, ມັນເຕັມໄປດ້ວຍກ້ອຍຄຳອິບອຸ່ນແບບເພື່ອນມິດສະຫນິດສະ
ຫນົມ. ຄວາມກ້າວິນຂອງພວກເຮົາຫ້ອຍຢູ່ເທິງຫົວພວກເຮົາຄ້າຍ
ວົ່ງແຫວນຟ້າ, ຄວາມຝັນຄ້າຍໂຄມສ່ອງແສງປະກາຍໄປທົ່ວທ້ອງ
ຟ້າ.

ດ້ວຍຄວາມເບີກບານມ່ວນຊື່ນຫນັກແຫນ້ນຄືຜ່ານມານັ້ນແລ້ວ,
ພວກເຮົາພາກັນກຽມສະເຫລີມສະຫລອງບຸນຄົ້ງຍິ່ງໃຫຍ່ເປັນປະ
ຫວັດສາດຂອງພວກເຮົາ.

ໃນທີ່ສຸດວັນນັ້ນກໍມາເຖິງ.

ວັນນັ້ນຕັ້ງແຕ່ເຊົ້າມາ, ມີຂະບວນລົດໃຫຍ່, ລົດຈັກຂອງປະຊາ
ຊົນ, ເຈົ້າຫນ້າທີ່, ນັກຂ່າວຫນັງສືພິມ, ນັກຖ່າຍຮູບ, ນັກຖ່າຍ

ຮູບເງົາ ເປັນກອງຮ້ອຍເດີນທາງມາຍັງນິຄົມ, ພວກເຂົາມາພັກເຊົາ ຢູ່ອ້ອມໆນິຄົມປານຊາວພັດກຶ່ນ. ອາຄານຕ່າງໆປະດັບປະດາດ້ວຍ ພວງມາໄລ ແລະທຸງ, ຕາມເດີ່ນຣາບພຽງມີດອກໄມ້ເຕັມໄປຫມົດ, ພວກເດັກນ້ອຍຜູ້ຊາຍຍືນລຽນແຖວຫ່າງໆຢາຍມາແຕ່ໄກ, ຢູ່ເທິງກະ ຫນົບ ອາກຕູຣະກາ ແມ່ນອັດສະວິນເທິງຫລັງມ້າ, ຢູ່ໃນເດີ່ນແມ່ນ ນາຍຍາມອົງຄະລັກ. ມາກຊິມ ກ້ອກກີ ໃສ່ຫມວກສີຂາວ, ໃບຫນ້າ ທ່ົ່ນເຕັ້ນຂອງເພິ່ນເຕັມໄປດ້ວຍຄວາມສຸຂຸມ ແສງຕາແຝງຄວາມ ເປັນມິດ, ເພິ່ນລົງຈາກລົດໂອໂຕ, ເສືອກແສງຕາເບິ່ງອ້ອມຮອບ ຕົນເອງ ແລ້ວຍົກມືສັ່ນໆຂຶ້ນລູບຫນວດຫນາແບບຊາວກໍາມະກອນ ແລ້ວຍິ້ມ:

-ສະບາຍດີ! ນ້ີແມ່ນເດັກນ້ອຍຂອງເຈົ້າຫວະ? ເອ້ີ... ດີແລ້ວ... ໄປກັນເທາະ!

ພິທີເຄົາລົບທຸງຕາມສຽງຂອງວົງດຸລິຍາງເລ່ີມຂຶ້ນແລ້ວ, ຝ່າມື ສັ່ນໆຂອງພວກເດັກນ້ອຍທ່ີຍຶດເດ່ອອກ, ແສງຕາໂຮງຮ່ຶງຂອງພວກ ເດັກນ້ອຍ, ຫົວໃຈທ່ີເປ່ີຍມເຜ່ີຍຂອງພວກເຂົາ ທັງຫມົດນ້ີປູລວາດ ອອກຕ່ໍາຫນ້າ ກ້ອກກີ ບ່ໍຕ່າງຫຍັງກັບຜ້າພົມເພ່ືອໃຫ້ລາວຍ່າງຜ່ານ ເຂ້ົາໄປ.

ກ້ອກກີ ເຄ່ືອນຕົວຢ່າງລັບເຂ້ົາໄປໃນແຖວເດັກນ້ອຍ...

ບົດທ່ີ ๑๕

ບົດສ້ອນທ້າຍ

ເຈັດປ່ີຜ່ານໄປແລ້ວ, ທຸກຢ່າງກາຍເປັນເລ່ືອງຂອງອະດ່ີດແລ້ວ ແຕ່ຂ້າພະເຈ້ົາຍັງຈ່ືຈໍາທຸກຢ່າງໄດ້ດ່ີ, ຈ່ືໄດ້ແມ່ນແຕ່ທ່າທາງເລັກໆ

ນ້ອຍໆໃນວັນນັ້ນ ຫລັງຈາກລິດໄຟທີ່ພາເອົາ ກ້ອກີ ກັບເມືອ ແລ່ນຫ່າງອອກໄປ. ກະແສຈິດ ແລະ ອາລົມຂອງພວກເຮົາລ່ອງ ລອຍຕິດຕາມເພິ່ນໄປ, ດວງຕາຂອງພວກເດັກນ້ອຍໂຮງຮຸ່ງໄປດ້ວຍ ຄວາມອິບອຸ່ນແຫ່ງການອຳລາຈາກກັນ ແລະ ໃນວິນຍານຂອງຂ້າພະ ເຈົ້ານັ້ນກໍເກີງເວລາທີ່ຕ້ອງດຳເນີນການເລັກໆນ້ອຍໆອັນຫນຶ່ງແລ້ວ. ພວກສະມາຊິກນິຄົມ ກ້ອກີ ແລະ ແຊກຊຶນສະກີ ຍືນຍາຍໄປຕາມ ທາງແຄມຮາງລິດໄຟ, ປາຍແກທອງເຫລືອງຂອງສອງວົງດຸລິຍາ ແລະ ປາຍຄັນທຸງອອກແສງສະທ້ອນເຫລື້ອມແພບໆ. ລິດໄຟສາຍ ຊຶນນະບົດຂະບວນຫນຶ່ງໄປ ຣິຊອບພວມຈະອອກແລ່ນຢູ່ຮາງຂ້າງ ກັນ. ຊູກບິນ ຫຍັບເຂົ້າມາຫາຂ້າພະເຈົ້າ:

-ພວກນິຄົມ ກ້ອກີ ຂຶ້ນລິດໄດ້ແລ້ວແມ່ນບໍ?

-ໄດ້ແລ້ວ.

ພວກເຂົາແລ່ນກາຍຂ້າພະເຈົ້າໄປເພື່ອຂຶ້ນຕູ້ລິດໄຟ, ຜົນທຸງແພ ໄຫມເກົ່າແກ່ແລ່ວໄຫມຄຳ ແລະ ນັກເປົ່າແກຢູ່ຫັ້ນແລ້ວ. ປະມານ ນາທີດຽວ, ຫ້ອປ້ອມໆຂອງພວກເດັກນ້ອຍທັງຊາຍ ທັ້ງຍິງກໍປ່ອນ ປໍລ້ອອກມາຕາມປ່ອງຢ້ຽມ, ແສງຕາແລເຫລືອດມາຫາຂ້າພະເຈົ້າ, ພວກເຂົາພາກັນຮ້ອງວ່າ:

-ອານໂຕນ ເຊມືອໂນວ໌, ຂຶ້ນມາພ້ຶ້ແມ້!

-ເຈົ້າບໍ່ມາຫລະ? ເຈົ້າຊິໄປກັບພວກກອມມູນແມ່ນບໍ?

-ແຕ່ອົ່ນ ເຈົ້າຊິມາຫາພວກເຮົາແມ່ນບໍ?

ເວລານັ້ນຂ້າພະເຈົ້າເຂັ້ມແຂງດີແລ້ວ ຈັ່ງຊັ້ນຈົ່ງຍືມໃຫ້ພວກ ເດັກນ້ອຍໄດ້. ແຕ່ເມື່ອ ຊູກບິນ ກັບມາ, ຂ້າພະເຈົ້າເອົາຄຳສັ່ງໃຫ້

ຫມໍ, ຢູ່ໃນນັ້ນມັນເວົ້າແຈ້ງວ່າ ເມື່ອຂ້າພະເຈົ້າໄປ "ພັກຜ່ອນ" ແລ້ວ, ວຽກງານຊຶ່ນໍາຢູ່ໃນນິຄົມແມ່ນພາລະຂອງຫມໍ.

ລູກບິນ ແນມເບິ່ງຄໍາສັ່ງດ້ວຍທ່າທີບໍ່ເຂົ້າໃຈ:

-ແປວ່າ... ເຖິງວາລະສຸດທ້າຍແລ້ວຫວະຫນີ?

-ແມ່ນແລ້ວ, ວາລະສຸດທ້າຍ! - ຂ້າພະເຈົ້າຕອບ.

-ໂອ້ຍ... ແລ້ວຊິໃຫ້ເຮັດແນວໃດ... -ລູກບິນ ຢາກເວົ້າອັນໃດອັນຫນຶ່ງ ແຕ່ນາຍສະຖານີລົດໄຟເປົ່າຫມາກຫວີດຂຶ້ນ ດັງແສບຫູກ່ອນ, ລູກບິນ ກໍເລີຍບໍ່ເວົ້າຫຍັງ. ຫມໍກອຍທ່າງອອກໄປທັງແກວ່ງແຂນແບບຫມິດຫວັງ, ຫັນຫລັງໃສ່ປ່ອງຢ້ຽມຕູ້ລົດໄຟ.

ລົດໄຟສາຍຊຶນນະບົດກະຕຸກຄືງເຄື່ອນຕົວ, ພວງຜົມເດັກນ້ອຍຜ່ານຫນ້າຂ້າພະເຈົ້າໄປລຸດໆຄືກັບໃນອັນບຸນອັນຫນຶ່ງ. ພວກເຂົາຮ້ອງ "ລາກ່ອນ" ທັງດຶງຫມວກແລ່ວຂຶ້ນແກວ່ງໄກວໄປມາຢູ່ເທິງປາຍນິ້ວມື. ໂກໂຣຕອບ ຢືນຢູ່ປ່ອງຢ້ຽມສຸດທ້າຍ, ຍົກມືຄໍານັບຢ່າງບໍ່ເວົ້າຫຍັງຈັກຄວາມ ແລ້ວຍົ້ມ.

ຂ້າພະເຈົ້າອອກມານອກເດີ່ນ, ພວກນັກຮຽນກອມມູນ ແລຸກຊຶນສະກີ ຢືນລຽນແຖວລໍ້າຂ້າພະເຈົ້າຢູ່ຂ້າພະເຈົ້າໃຫ້ສັນຍານ ແລ້ວພວກເຮົາກໍພາກັນຍ່າງຜ່ານໃນເມືອງໄປຮອດກອມມູນ.

ຂ້າພະເຈົ້າບໍ່ໄດ້ກັບຄືນໄປ ກູເຮຍແລ ອີກຈັກເທື່ອ.

ເຈັດປີແຫ່ງຊີວິດໂຊວຽດຜ່ານໄປແລ້ວ, ໃນຄວາມຈິງມັນຫມາຍຄວາມວ່າມັນຫລວງຫລາຍກວ່າເຈັດປີຈັກກະພັດ.

ໃນລະຍະນີ້ປະເທດຂອງພວກເຮົາໄດ້ເດີນຕາມເສັ້ນທາງແຫ່ງໄຊຊະນະຂອງແຜນການ ຫ ປີ ຄັ້ງທີ ໑, ແລະຄັ້ງທີ ໒ ກໍສໍາເລັດໄປ

ສ່ວນຫລວງຫລາຍແລ້ວ. ໃນເບິ່ງນັ້ນທົ່ວໂລກພວມແອບຮ່ວມເຄົ່າ ລົບທົ່ງນາທາງພາກຕາເວັນອອກຂອງ ເອີລົບ ຫລາຍກວ່າລະຍະ 300 ປາຍປີທົ່ລາຊະວົງ ໂຮມານອບ ຄອງອຳນາດ. ໃນລະຍະ ເວລາດັ່ງກ່າວນີ້, ກ້ານແຂນຊົ້ນຂອງຄົນໄດ້ເຕີບໃຫຍ່ແຂງແຮງ ແລະ ບັນຍາຊົນແບບໃຫມ່ຂອງພວກເຮົາກໍກຳເນີດເຕີບໃຫຍ່ຂຶ້ນ.

ພວກນັກຮ່ວມນິຄົມ ກ້ອກິ ກໍເຕີບໃຫຍ່ຄືກັນ ແລະ ກະແຈກ ກະຈາຍໄປທົ່ວໂລກຂອງຊາວໂຊວຽດ, ບັດນີ້ຂ້າພະເຈົ້າເອງຮອດບໍ່ ສາມາດສຳນຶກເຫັນພວກເຂົາມາຢູ່ເຕົ້າໂຮມກັນ. ບໍ່ສາມາດຄວາມຈັບ ໂຕວ໌ສະວະກອນ ຊາໂດຣອບ ເຊົ່ງໄປບຸຫມັ້ນຢູ່ແຈໃດແຈຫນຶ່ງໃນສະ ຖານທົ່ກໍ່ສ້າງແຫ່ວຕວກເໜນີ, ບໍ່ສາມາດນັດພົບ ກັບແວກຊະເນັບ, ແພດປະຈຳກອງທັບພິເສດທາງພາກຕາເວັນອອກໄກ ຫລືແພດໃຫຍ່ ດຣ. ບູຣູນ ຢູ່ ເຢຍໂຣສລາວ. ແມ່ນແຕ່ ນິດຊິນອບ ແລະ ໂຊ ເຣັນ ເຊິ່ງຍັງເປັນເດັກນ້ອຍຢູ່ແທ້ໆ ກໍຍັງບິນຈາກຂ້າພະເຈົ້າໄປໄກ ແຕ່ບໍ່ແມ່ນຍ້ອນປຶກອັນອ່ອນ ນິ້ມຂອງຄວາມເຫັນອົກເຫັນໃຈແບບ ນັກສຶກສາຂອງຂ້າພະເຈົ້າຄືແຕ່ຄາວກ່ອນດອກ ແຕ່ຫນໍບິນໄປດ້ວຍ ປີກເຫລັກກ້າຂອງຍິນໂຊວຽດ. ສ່ວນ ເຊລາປູຕິນ ນັ້ນມັນກໍ່ບໍ່ໄດ້ ຄິດຜິດດອກ ເມື່ອມັນຢືນຢັນວ່າມັນຈະເປັນທະຫານອາກາດ, ຊູຮາ ເຊເວລິກໍເປັນນັກບິນຄືກັນ ທັງນີ້ເພື່ອບໍ່ເຮັດຄັບອ້າຍຂອງມັນທົ່ ເລືອກອາຊີບເປັນນາຍທະຫານເຮືອຢູ່ທະເລນ້ຳກ້ອນເຫນືອ.

ບາງເວລາຂ້າພະເຈົ້າກໍຖືກຫມູ່ສະຫາຍທົ່ມາຍມາຢ້ຽມຢາມນິຄົມ ສ້ຳຖາມວ່າ:

- ແມ່ນແທ້ຫວະ ເຂົາເວົ້າກັນວ່າໃນຫມູ່ພວກເດັກນ້ອຍໄຮ້ຍາດ

ນັ້ນມີຫລາຍຄົນສະຫລຸງສະຫລາດ ... ຄືວ່າມີແຈ້ປະເສີດ ຫົວຄິດ ປະດິດສ້າງຊັ້ນນ່າ ... ເວົ້າສູ່ຟັງແດ່ ພວກເປັນນັກປະພັນ, ສິລະປິນ ກໍມີຫວະ ?

ນັກປະພັນຫວະ ? ແນ່ນອນພວກເຮົາກໍມີຄືກັນ, ສິລະປິນກໍມີ. ຖ້າບໍ່ມີຄົນພວກນີ້ແລ້ວ ກໍຈະບໍ່ມີຫນ່ວຍຊີວິດໂຮມຫມູ່ໃດດອກດຳລົງຄົງຕົວຢູ່ໄດ້, ຖ້າບໍ່ມີພວກເຂົາກໍບໍ່ສາມາດອອກຫນ້າສື່ພົ້ນຕົດຝາໄດ້. ແຕ່ຂ້າພະເຈົ້າຂໍຍອມຮັບວ່າ ຮູ້ສຶກເສຍໃຈຫລາຍຢູ່, ນັກຮຽນນິຄົມກ້ອກິ ຂອງພວກເຮົາບໍ່ໄດ້ເປັນນັກປະພັນຫລືສິລະປິນຈັກຄົນ, ແຕ່ນັ້ນມັນບໍ່ແມ່ນວ່າ ພວກເຂົາຂາດແຈ້ປະເສີດດອກ ແຕ່ມັນແມ່ນຍ້ອນສາເຫດອື່ນ: ພວກເຂົາຖືກຊີວິດ ແລະ ບັນຫາປະຈຳວັນວັນທັນດ່ວນຄຸບຄໍໄວ້ກ່ອນ.

ສ່ວນ ການາບານີ ກໍບໍ່ໄດ້ເປັນນັກກະເສດສາດດອກ. ເມື່ອ ຫມໍອອກຈາກວິທະຍາໄລກຳມະກອນ ນັ້ນຫມໍບໍ່ໄດ້ເຂົ້າຮຽນຕໍ່ໃນສະຖາບັນກະເສດສາດຊ້ຳ, ຫມໍບອກຂ້າພະເຈົ້າຢ່າງເດັດດ່ຽວວ່າ :

- ຢ່າຫົວນັ້ນເທາະ, ເຂົ້າບະເລກັບໄກຫັ້ນ, ຂ້ອຍຢູ່ບໍ່ໄດ້ດອກ ຄົນບໍ່ມີເດັກນ້ອຍ, ຍັງມີອີກຕັ້ງຫໍ່ໃດ ... ເດັກນ້ອຍທີ່ຄີຢູ່ກາງກະຫນົບພຸ້ນ, ໃນເມື່ອວ່າເຈົ້າເອງ ອາມໂຕນ ເຊມືອໂນວິດ, ເຈົ້າໄດ້ຕໍ່ສູ້ລຳບາກຍາກຊາເພື່ອພວກເຂົາມາຕັ້ງຫໍ່ໃດແລ້ວ, ຂ້ອຍກໍເຮັດໄດ້ຄືກັນ.

ເປັນແນວນີ້ແລ້ວທີ່ ເຊມີຍ໋ ການາບານີ ກ້າວເຂົ້າສູ່ອາຊີບສູງຄ່າເຊັ່ນຄູສຶກສາອົບຮົມສັງຄົມ ແລະ ຫມໍກໍຊິສັດຕໍ່ອາຊີບນີ້ມາຕະຫລອດທຸກວັນນີ້ ເຖິງວ່າຫມໍໄດ້ຮັບບົດຮຽນເຈັບແສບຮຸນແຮງກວ່າ

ນັກຕໍ່ສູ້ເຫລົ່ານີ້ທຸກຄົນກໍຕາມ. ເຊມີຍາແຕ່ງດອງກັບສາວນ້ອຍຈາກ
ເມືອງ ແຊກນິກອບ ຄົນນັ້ນແລ້ວ ມີລູກຊາຍນ້ອຍນຳກັນຄົນຫນຶ່ງອາ
ຍຸສາມປີ ຕາດຳປິ້ຕາຜູ້ເປັນແມ່ ແລະ ມີຊີວິດຊີວາຄືຜູ້ພໍ່ນັ້ນ.
ແລ້ວລູກຊາຍຄົນນີ້ກໍຖືກນັກຮຸນຄົນຂອງ ເຊມີຍາ ປາດໂຕາຍໃນ
ຕອນກາງເວັນແດ່ນແດ້ມຫນຶ່ງ, ນັກຮຸນຄົນນັ້ນເປັນໂລກຈິດ ຖືກ
ສົ່ງມາທົ່ນີ້ໃນຖານະ "ກໍລະນີຫຍຸ້ງຍາກ" ແລະ ເຫດການແບບນີ້ບໍ
ແມ່ນຄັ້ງທຳອິດຂອງມັນ ແຕ່ຫົວໃຈຂອງ ເຊມີຍາ ບໍ່ຫວັ່ນໄຫວ, ບໍ
ຈົ່ມວ່າປ້ອຍແຊ່ງໃຜຈັກຄົນ, ຫມໍຢູ່ປະຈຳການໃນແນວຫນ້າຂອງ
ພວກເຮົາຕໍ່ໄປ. ຫມໍພຽງແຕ່ຂຽນຈົດຫມາຍມາຫາຂ້າພະເຈົ້າສັ້ນໆ,
ໃນນັ້ນຫມໍ ສະແດງຄວາມແປກໃຈຫລາຍກວ່າຄວາມເຈັບປວດ.

ມັດເວີຍ ເບຍລູກິນ ກໍຄືກັນ ບໍ່ສົນຕໍ່ຮຸນຮອດຊັ້ນສູງ. ຮອດ
ມື້ງາມຍາມດີວັນຫນຶ່ງ ຂ້າພະເຈົ້າກໍໄດ້ຮັບຈົດຫມາຍສະບັບຫນຶ່ງ
ຂອງມັນ:

"ອານໂຕນ ເຊມີອໂນວິດ, ຂ້ອຍຕັ້ງບໍ່ບອກຫຍັງເຈົ້າ, ອະໄພ
ໃຫ້ຂ້ອຍດ້ວຍ, ຂ້ອຍຊິເປັນວິສະວະກອນໄດ້ແບບໃດ ໃນເມື່ອຫົວ
ໃຈຂ້ອຍເປັນທະຫານ. ເວລານີ້ຂ້ອຍຢູ່ໃນໂຮງຮຸນກອງທະຫານ
ມ້າແຫ່ງຫນຶ່ງ. ຢູ່ຫນີ້ອກກໍຄືກັນ ຂ້ອຍເຮັດແບບໂງ່ໆ, ຂ້ອຍພາດ
ວິທະຍາໄລກໍາມະກອນ, ກໍເປັນເລື່ອງບໍ່ຄັກປານໃດເນາະ, ແຕ່ວ່າຂໍ
ໃຫ້ເຈົ້າຂຽນຫາຂ້ອຍຈັກຄວາມສອງຄວາມແດ່, ຄັນຊັ້ນຂ້ອຍນອນບໍ່
ຫລັບ!".

ເມື່ອຄົນຄື ເບຍລູກິນ ນອນບໍ່ຫລັບແລ້ວ... ພວກເຮົາກໍສາມາດ
ດຳລົງຊີວິດຢູ່ໄດ້... ຢູ່ໄດ້ດົນເຕີບພຸ້ນແລ້ວ, ເພາະມີຄົນແບບ ເບຍລູ

ກິນ ນຳຫນ້າໃນຫນ່ວຍປະຈັນບານຂອງກອງທະຫານມ້າໂຊວງດ ແລະ ຂ້າພະເຈົ້າກ່ຍັງມີຄວາມເຊື່ອຫມັ້ນຫນັກແຫນ້ນຕື່ນຂຶ້ນອີກເມື່ອ ມັດເວີຍ ມາພົບຂ້າພະເຈົ້າ, ທ່ຶ່ານຂອງກ່ມີຫມາຍຍິດນາຍທະ ຫານ, ເຂົາສູງໃຫຍ່ເຂັ້ມແຂງສົມບູນ, ກ็ໄດ້ວ່າ "ສຳເລັດຮູບ" ແລ້ວນັ້ນລະ.

ບ່ມີແຕ່ ມັດເວີຍ ເທ່ານັ້ນ ຜູ້ທ່ຶ່ກ็ດີກັນ, ລ້ວນແຕ່ເຂັ້ມແຂງ ເປັນຜູ້ໃຫຍ່ຫມົດ: ອິດຊາຈີ ເປັນນາຍຊ່າງເຕັກນິກ, ນິຊາ ອອບ ຊາເຣັນໂກ ເປັນຄົນຂັບລົດ, ໂອເລັກ ອອກເນັບ ເຮັດວຽກ ຢູ່ຂະແຫນງຊົນລະປະທານຢູ່ແຄມທະເລ ກາສະປຽນ, ນາຮູດຊາ ເລັບເຊັນໂກ ເປັນນາງຄູ, ໂຊໂຮກາ ເປັນຄົນຂັບລົດລາງ, ໂອໂລ ຄົບ ເປັນຊ່າງໄຟຟ້າ, ໂກຣິໂຕ ເປັນຊ່າງຕ່ຫໍ່, ເຟໂດເຣັນໂກເປັນ ຜູ້ຄຸມວຽກຂອງຫນ່ວຍຈັກ ແລະ ສະກາມີລົດໄກ, ອາໂລດຊາ ໂວນ ກອບ, ເດນິສ ກູດລາຕ ແລະ ໂຈຣາ ໂວນກອບ ເປັນນັກເຄື່ອນ ໄຫວຂອງພັກ; ນາກເຊັນໂຣສ ຜູ້ມີນິໄສເປັນຊາວບອນເຊວິກຜູ້ ຫນ່ຶ່ງນັ້ນ ຍັງຄົງຮັກສາຈິດວິນຍານ ອັນລະອຽດອ່ອນຂອງຫມໍ ແລະ ສ່ຶ່ອນ່ຶ່ອີກຢູ່.

ແຕ່ໃນລະຍະ ກ ປີນີ້ ກ็ມີຫລາຍຄົນຢູ່ທ່ຶ່ຂ້າພະເຈົ້າບ່ເຫັນ. ອານໂຕນມົດງຽບໄປໃນໂລກຂອງມ້າຢູ່ແຫ່ງໃດແຫ່ງຫນ່ຶ່ງ, ມັນບ່ ຂຽນຫນັງສືຫາຂ້າພະເຈົ້າເລີຍ, ລາປົດ ຜູ້ເບີກບານຕ່ຊ່ືດ, ທ້າວ ກູດ ຊ່າງເກີບທ່ົດ, ນັກກ່ສ້າງຜູ້ຍ່ຶ່ງໃຫຍ່ ຕາຣາເນັດ... ພວກນ້ີພາ ກັນຫລົບຫົບໄປທາງໃດທາງຫນ່ຶ່ງ. ຂ້າພະເຈົ້າບ่ຄ็ດຄຽດໃຫ້ພວກ ເຂົາຫລ็ຳຫນ็ຕ็ຽນພວກເດັກນ້ອຍຂ้ລ็ມເຫລ่ານ็ດອກ. ຊ็ວິດຂອງ

ພວກເຮົາເຕັມໄປດ້ວຍວຽກງານພໍເຮງແລ້ວ ຈັ່ງຊັ້ນນັ້ນກໍ່ບໍ່ຈຳເປັນ ສະເຫມີໄປດອກທີ່ຈະຄິດຫວນຫາແຕ່ອາລົມຈິດວ່ອກແວ້ກຂອງພໍ່ ແມ່ຫລືຄູສອນ. ທ້ານ ແລະ ທ້ານັ້ນເບິ່ງໃນແງ່ເຕັກນິກແລ້ວ ເຮັດ ແນວໃດກໍ່ບໍ່ສາມາດເຕົ້າໂຮມຫມິດທຸກຄົນໄດ້ດອກ. ຕັ້ງແຕ່ຢູ່ນິຄົມ ກ້ອກກີ ເອງມີເດັກນ້ອຍທ້າຊາຍ ແລະ ຍິງມາຢູ່ທ່ໍໃດແລ້ວ ແລະທ່ີ ບ່ໍໄດ້ອອກຊ່ືຢູ່ຫນ້ີ ແຕ່ທຸກຄົນກໍ່ມີຊີວິດຊີວາ, ຮັກແພງໃກ້ຊິດເທ່ົາໆ ກັນ. ຫລັງຈາກຫນ່ວຍຊີວິດໂຮມຫມູ່ຢູ່ນິຄົມ ກ້ອກກີ ແຕກສະ ຫລາຍໄປ, ກ ປີຜ່ານໄປແລ້ວ, ທຸກຢ່າງເຕັມໄປດ້ວຍກ່ືນອາຍປະ ເພດດຽວກັນ, ມັນແມ່ນກ່ືນອາຍຂອງຄວາມຫນຸ່ມແຫນ້ນ, ຂອງ ການຕ່ໍສູ້ຂອງພວກເຂົາ, ຂອງໄຊຊະນະ ແລະ ຄວາມພ່າຍແພ້, ຂອງແປວຮຸ່ງຈາກດວງຕາ ແລະ ຮອຍຍ້ິມປະເພດລ້ົງຕາຂອງພວກ ເຂົາ.

ຫນ່ວຍຊີວິດຂອງນັກຮຽນ ເຊກຊິນສະກີ ຍັງສືບຕ່ໍຊີວິດອັນເຂ້ັມ ແຂງມາຮອດປັດຈຸບັນ. ກ່ຽວກັບເລ່ືອງນ້ີເພ່ິນສາມາດສ້າງບົດກະວ່ີ ພິນກ່ຽວກັບສຶກສາສາດໄດ້ຫລວງຫລາຍຢ່າງບ່ໍຫມິດບ່ໍສ້ຽງເປັນ.

ຢູ່ປະເທດຂອງຊາວໂຊວຽດ ເພ່ິນຈະຂຽນປ້ົມກ່ຽວກັບຫນ່ວຍຊີ ວິດໂຮມຫມູ່ເພາະປະເທດຊາວໂຊວຽດແມ່ນປະເທດ ທ່ີດີຍອດຍ້ຽມ ສຳລັບຫນ່ວຍຊີວິດໂຮມຫມູ່. ແນ່ນອນວ່າເພ່ິນຄົງຈະຂຽນໄດ້ຢ່າງ ສະຫລວງສະຫລາດກວ່າ ອັນທ່ີເພ່ືອນມິດຊາວພູ ໂອລິມປັດ ຂອງ ຂ້າພະເຈ້ົາໄດ້ເຮັດໄປ, ຈົນພາກັນໄດ້ນິຍາມດັ່ງຕ່ໍໄປນ້ີ: "ຫນ່ວຍຊີ ວິດໂຮມຫມູ່ ແມ່ນກຸ່ມຄົນທ່ີພົວພັນກັນດ້ວຍພຶດຕິກຳປ້ົນກັນ ແລະ ມີປະຕິກິລິຍາພ້ອມກັນຕາມການກະຕຸ້ນອັນນ້ັນຫລືອັນນ້ີ".

ພວກເດັກນ້ອຍ ກ້ອກກີ ມີນຳກັນແຕ່ ๕๐ ຄົນຫນຶ່ງ ເມື່ອພວກ
ເຂົາພາກັນມາຮອດຫ້ອງພັກງາມໆຂອງກອມມູນ ແຊກຊຶນສະກີ ໃນ
ວັນຫນຶ່ງຂອງລະດູຫນາວເມື່ອຫິມະລົງຮວາຍຮຳ, ພວກເຂົານຳເອົາ
ທຸກສິ່ງທຸກຢ່າງທີ່ຄົ້ນພົບແລ້ວຕິດຕົວມານຳ, ມັນມີທັງຄວາມຊຶນ
ເຄີຍ, ຄວາມສາມາດປັບຕົວເອງ, ລະບົບເຕັກນິກເພື່ອຕັ້ງຫນ່ວຍ
ຊີວິດໂຮມຫມູ່ຢ່າງຄົບກ້ວນ, ມີທັງວິທີການເຕັກນິກແບບຫນຸ່ມໆ
ຂອງມະນຸດທີ່ຫລຸດພົ້ນອອກຈາກນາຍຄຸມ. ບົນເສັ້ນທາງໃຫມ່ ແລະ
ສົດໃສ, ຫ້ອມລ້ອມອົບອຸ່ນໄປດ້ວຍຄວາມຫ່ວງໄຍຂອງພວກເຊກາ,
ແຕ່ລະວັນໄດ້ຮັບການອຸ້ມຊູຈາກພະລັງງານຂອງພວກເຂົາ, ວັດທະ
ນະທຳຂອງພວກເຂົາ ແລະ ພອນສະຫວັນຂອງພວກເຂົາ, ກອມ
ມູນເຕີບໃຫຍ່ຂຶ້ນເພື່ອສ້າງຫນ່ວຍຊີວິດໂຮມຫມູ່ຊົງສະເຫນແຮງ, ມີ
ຄວາມດຸຫມັ່ນເຮັດວຽກຢ່າງແທ້ຈິງຫມັ້ນຄົງ ແລະ ມີວັດທະນະທຳ
ສັງຄົມນິຍົມໃນລະດັບສູງ ທັງບໍ່ປ່ອຍໃຫ້ມີຫຍັງຫລົງເຫລືອມາຈາກ
ບັນຫາໄຮ້ສາລະອັນນີ້: "ການປົວແປງຄົນ".

ເຈັດປີແຫ່ງການໃຊ້ຊີວິດແບບຊາວກອມມູນແຊກຊຶນສະກີ ກໍ
ແມ່ນ ๗ ປີແຫ່ງການຕໍ່ສູ້ຄັກັນ, ມັນແມ່ນ ๗ ປີແຫ່ງຄວາມເຄັ່ງ
ຕຶງຮຸນແຮງ.

ນັບເປັນເວລາດົນນານມາແລ້ວ ທີ່ພວກເຮົາໄດ້ມາເພທຳລາຍ
ໂຮງຊ່ວງປະກອບແຜ່ນໄມ້ອັດຂອງໂຊໂລມອນ ບໍຣິດໂຊວິດ ຢູ່ໃນ
ຫ້ອງອາຍອຸ່ນ, ແລະຕໍ່ຈາກໂຊໂລມອນ ບໍຣິດໂຊວິດ ເອງ ກໍມີວິ
ສະວະກອນຕັ້ງທ່ໍໃດຄົນຕິດຕາມມາ, ໃນຈຳພວກນີ້ ມີຫລາຍຄົນທີ່
ຄວນໄດ້ຮັບການຍົກຍ້ອງຄືຜູ້ມີຊື່ສຽງສຳຄັນຫລາຍໆຂອງສະຫະພາບ.

ໃນປີ ດ.ສ.ດ, ຊາວກອມມູນໄດ້ສ້າງໂຮງງານປະກອບເຄື່ອງ ໄຟຟ້າຫລັງທຳອິດຂອງພວກເຂົາ, ໃນຫ້ອງໂລ່ງກາງທີ່ກວ້າງໃຫຍ່ ແລະ ແຈ້ງ ປະດັບປະດາດ້ວຍດອກໄມ້ ແລະ ຮູບພາບຄົນນັ້ນ ມີ ເຄື່ອງຈັກເປັນສິບໆຫນ່ວຍ ຕັ້ງຍາຍລຽນກັນລ້ວນແຕ່ປະເພດສັບສົນ ພິລຶກພິລ້ຳເຫລືອເຊື່ອ: ມີເຄື່ອງກົງ "ວັນເດີເຣີ", "ຊຳຊັນ ແວກ ແກ", "ຣິນເດີແມສແຕ", "ແຣນແກ", "ມາຣາດ", ມັນບໍ່ແມ່ນ ສ້ຳຂ້ຳນັ້ນເດັກນ້ອຍຫລືໂຄງຕຽງອີກແລ້ວ ທີ່ຜະລິດອອກຈາກມືຊາວ ກອມມູນ ແຕ່ມັນເປັນເຄື່ອງຈັກຄົບຊຸດອັນນ້ອຍໆແຕ່ຈິບຫາຍ ປະ ກອບດ້ວຍເຄື່ອງອາໄຫລ່ເປັນຮ້ອຍໆຕ່ອນລ້ວນແຕ່ອາໄສ "ວິຊາເລກ ຂັ້ນສູງສຸດ" ທັ້ງນັ້ນ.

ແລ້ວທີ່ສັ່ງຄົນກອມມູນກໍຕົ້ນເຕັ້ນ ແລະ ກະຕົລົນຕ໋ "ວິຊາ ເລກຂັ້ນສູງ" ນຄກບແຕ່ຄາວກອນພວກເຮົາຕົ້ນເດີນ ຫ້ວຜກກາດ ຂາວຫ້ວພັນພິລຶກ, ງົວແມ່ພັນຊຶມເມີທານ, ແລະ ພວກວາດຊີ ວາດຊີເລັບວິດ ກັບ ມ້າບັກນ້ອຍ.

ເມື່ອໂຮງຊ່ຳງປະກອບຜະລິດຈັກກົງໃຫຍ່ກ ''ແຊກຊຶນສະກີ'' ອອກແລ້ວນຳໄປທົດລອງປະຕິບັດວຽກງານ, ວາເຊຍ ອາເລັກເຊັບ ເຊົ່ງກາຍເປັນອ້າຍບ່າວໃຫຍ່ແຕ່ດົນແລ້ວນັ້ນ ກໍສຽບສາຍໄຟຟ້າໃສ່ ມັນ, ວິສະວະກອນພ້ອມດ້ວຍຊາວກອມມູນ, ກຳມະກອນປະມານ ๔๐ ຄົນ ທີ່ຄຶດວິຕົກກັງວົນພາກັນກົ້ມຫ້ວລົງໄປທາງສຽງຄາງຫ໋ມໆ ຂອງມັນ ແລ້ວຫ້ວຫນ້າວິສະວະກອນ ກອກບູນອບ ຈ໋ງເວົ້ຂຶ້ນເສ້ໆ ວ່າ:

- ມັນເກີດຫມັດໄຟ...

-ເວນຕາຍເອີ້ຍ, ຫມັດຊ້ຳບ່າ! -ວາເຊຍເວົ້າ.

ພວກເຂົາເອົ່ຶອງຄວາມເສົ້າໄວ້ໃຕ້ຮອຍຍິ້ມແລ້ວພາກັນຫາມຈັກກົ່ຄືນມາໂຮງຊ່າງ ແລ້ວກຸມມ້າງກຸມແປງ, ກວດກາ, ຄົດໄລ່ເລກກອນຮາກ, ເລກໂລກາຣິດ ຢູ່ຕະຫລອດສາມມື້ ທັ້ງແຕ້ມຮູບໂຄງຮ່າງເຕັມໄປຫມົດ. ເສັ້ນໂຄ້ງຈາກວົງວຽນແລ່ນສັບສົນຢູ່ເທົ່ງແຜ່ນເຈ້ຍຕາກາໂຣນ້ອຍ, ເຄ່ົອງເຫລົາຊະນິດແຫລມຄົມ "ເຄັນເງັນແບກເຊ" ຊຸດເຫລົາເຄ່ົອງປະກອບ, ດ້ວມ໊ແມ່ນອນຂອງເດັກນ້ອຍຫມູນກຽວທັນເຄ່ົອງອາໄຫລ່ຕິວສຳຄັນກວ່າຫມູ່ເຂົ້ຳ, ດວງຈົດວົນຍານເຕັມໄປດ້ວຍຄວາມຫ່ວງໄຍຂອງພວກເຂົາ ຄອງຄອຍການທົດລອງຄັ້ງໃຫມ່ດ້ວຍໃຈຈົດຈ່ໍ.

ໄດ້ສາມມື້ແລ້ວ, ເພ່ົນຈ່ໍາເອົາ ຈັກກົ່ "ເຊກຊິນສະກີ" ຂ໊ົນສູ່ແປ້ນທົດລອງ, ອີກຄັ້ງຫນ່ຶ່ງ ຄົນປະມານຊາວປາຍໄດ້ກ໊ົມຫົວໃສ່ມັນ ແລະ ວິສະວະກອນກອກບູນອບ ກໍ່ເວົ້າເສ້ົາງ໊ອີກຄັ້ງຫນ່ຶ່ງວ່າ:

-ມັນຊິຫມັດ.

-ມັນຊິຫມັດ... ບັກຂ໊ົ້ຄງດ! -ວາເຊຍ ອາເລັກເຊເຍັບເວົ້ຳ.

-ຈັກອາເມລິກາບ່ໍ່ຫມັດເດ໊ົ, -ກອກບູນອບ ຈ່ົ່ມຢ່ຳງເສຍດາຍ.

-ເອ໊ົ... ມັນບ່ໍ່ຫມັດ, -ວາເຊຍ ຢ໊ົນຢັນຕ໊ົ່ມຄ໊ົນ.

-ບ່ໍ, ມັນບ່ໍ່ຫມັດ, ວິສະວະກອນອ໊ົກຜູ້ຫນ່ຶ່ງຢ໊ົນຢັນນ໋ຳ.

-ກະແມ່ນແລ້ວ... ມັນບ່ໍ່ໄດ້ຫມັດຈັກຫນ້ອຍ! ພວກເດັກນ້ອຍ

ທ້າຫມົດເວົ້າຂຶ້ນໂດຍບໍ່ຮູ້ວ່າຈະໂທດຈະຄຽດໃຫ້ໃຜ: ໃຫ້ຕົນເອງ ຫລືໃຫ້ຈັກກົງ, ໃຫ້ທ່ອນເຫລັກກ້ານ້ຳເບີ ๔ ຫັ້ນ, ໃຫ້ພວກ ແມ່ຍິງທີ່ເປັນຜູ້ຄຽນລວດທອງ ຫລື ວິສະວະກອນ ກອກບູນອບ ເອງ.

ແຕ່ຢູ່ທາງເບື້ອງຫລັງກຸ່ມຄົນທີ່ພາກັນຍືນຂຶ້ນຍ່ຽຍຕົນ, ຫົວແຕງ ຫຍຸ້ງຫຍອງຂອງຫມໍ ຕົມາ ໂອດາຣິຢຸກປໍລໍ້ຂຶ້ນກາງຫມູ່, ຫມໍພັບ ຕາໄວ້ ແລ້ວເວົ້າທ້າຫນ້າແດງວ່າ:

- ຈັກອາເມລິກາຫັ້ນກໍຫມັດແບບນີ້ຄັກນ້ອຍຕ້ອຍ.

- ແມ່ນໂຕຮູ້ມາແຕ່ໃສ?

- ເຮົາຈ໋ຢູ່ນ່າ... ຕອນເພິ່ນຕິດຕັ້ງມັນທຳອິດຫັ້ນ, ມັນກະຕ້ອງ ຫມັດແນວນີ້ລະ ຍ້ອນປິ່ນລົມ!

ບໍ່ມີໃຜເຊື່ອ ຕົມາ ແລ້ວກໍພາກັນເອົາຈັກກົງສ່ຽນກັບມາໂຮງຊ່າງ ແລ້ວທຸກຄົນກໍກຸ້ມໃຊ້ປັນຍາສະຫມອງ, ໃຊ້ຄວາມຄຶດຄວາມສາມາດ ສຸມໃສ່ມັນ. ບັນຍາກາດພາຍໃນຫນ່ວຍຊີວິດໂຮມຫມູ່ອຸ່ນເອົ້າຂຶ້ນ ຢ່າງຈະແຈ້ງ, ຢູ່ໃນຫໍພັກ, ຫ້ອງສະໂມສອນ ແລະ ຫ້ອງຮຽນ ລ້ວນແຕ່ເຕັມໄປດ້ວຍຄວາມອຶຕົກກັ້ງວົນ.

ຢູ່ອ້ອມໆ ໂອດາຣິຢຸກເກີດມີຄົນກຸ່ມນ້ອຍໆກຸ່ມຫນຶ່ງ.

- ແນ່ນອນແລ້ວວ່າ ພວກເຮົາກໍຕ້ອງງົມໆຫາໆໄປແບບນີ້ແລ້ວ ເພາະວ່າແມ່ນເຄື່ອງຈັກຫນ່ວຍທຳອິດຂອງພວກເຮົາເດ້, ແຕ່ຈັກອາ ເມລິການັ້ນມັນຫມັດຫລາຍກວ່ານີ້ເດ!

- ບໍ່ນ່າ!

- ຫມັດ... ຫມັດລະບໍ!

- ບໍ່!

- ຫມັດ!

ໃນທີ່ສຸດພວກເຮົາກໍອົດທົນຕໍ່ໄປບໍ່ໄຫວ, ພວກເຮົາສົ່ງມັນໄປ ນິດສະກູ ແລະ ພວກເຮົາກໍຍອມກົ້ມຫົວໃຫ້ພວກຮຸ່ນອ້າຍ.

- ເອົາບັກ "ແບັກແອັນແດກເກີ" ໃຫ້ພວກເຮົາສາ.

ແລ້ວເພິ່ນກໍສົ່ງເຄື່ອງຍົ້ວ້ຳດ່ຳກ່ວມາໃຫ້ພວກເຮົາ.

ຈັກອາເມລິກາຫນ່ວຍນຶ້ມາຮອດກອມມູນ, ເພິ່ກໍລົງມືຕິດຈັກ ມັນໂລດ. ບັດນີ້ມືຫົວຄົນໄປຈຸ້ມກົ້ມໃສ່ມັນຢູ່ຫັ້ນກາຍ ນ00 ອົກ... ຕ້ງວ່າຫນິດໂຮງຊ່າງພຸ້ນລະ, ຫົວໃຈສາມຮ້ອຍຫນ່ວຍຂອງຊາວ ກອມມູນຈິດຈໍ່ຕິດຕາມນຳມັນ. ວາເຊຍຫນ້າເນີ້ນເມື່ອບິນກະດຸມຕໍ່ ໄຟ, ພວກວິສະວະກອນກັ້ນລົມຫັນໃຈ... ແລະ ແລ້ວທ່ານກາງສຽງ ອົນອົວຂຽງເຄື່ອງຈັກ ໂອດາຣິຢຸກກໍເວົ້າຂຶ້ນຫນິດແຮງຢ່າງຫນັກ ແຫນ້ນວ່າ:

- ເຫັນບໍ່... ເຮົາເວົ້າແລ້ວນ່າ...

ໃນເວລາດຽວກັນ ກໍມີສຽງຫາຍໃຈໂລ່ງດ້ງລອຍຂຶ້ນເຫນືອບໍລິ ເວນກອມມູນ ແລະ ບິນຂຶ້ນສູ່ຟາກຟ້ານະພາໄລ, ເສງຕາວິຕົກກັງ ວົນຫນິດສ້ຽງໄປເຫລືອໄວ້ແຕ່ຮອຍຍິ້ມເທິງໃບຫນ້າ.

- ຕົນາ ເວົ້າຖືກແລ້ວ!

ພວກເຮົາລືມວັນເວລາຕົ່ນເຕັ້ນຄ້ານີ້ໄປຕັ້ງແຕ່ດົນແລ້ວ ເພາະ ວ່າ ... ນັບເປັນເວລາເທິງນານມາແລ້ວທີ່ໂຮງຊ່າງຂອງພວກເຮົາໄດ້ ຜະລິດເຄື່ອງຈັກແບບນຶ້ອອກວັນລະ ຫ0 ເຄື່ອງ ແລະ ເຄື່ອງຈັກ ພວກນັ້ກບໍ່ຫມັດແລ້ວ ເພາະ ເຖິງແມ່ນວ່າ ໂອດາຣິຢຸກ ເວົ້າ

ກຶກກໍຕາມ, ແຕ່ກໍຍັງມີຄວາມຈິງອັນຫນຶ່ງຢູ່ໃນການຄິດໄລ່ເລກ ສ້າງລວມອັນສັບສົນ ແລະ ໃນຫົວຂອງວິສະວະກອນ ກອກບູ ນອບ:

- ມັນຕ້ອງບໍ່ຫມັດນ່າ!

ທຸກສິ່ງທຸກຢ່າງເຫລົ່ານີ້ກຶກລືມໄປແລ້ວ ເພາະວ່າພວກເຮົາຍັງມີບັນຫາອື່ນ ມີວຽກງານອື່ນໆເຮັດ.

ໃນປີ ດລມ໔, ຢູ່ກອມມູນເພິ່ນເວົ້າກັນວ່າ:

- ພວກເຮົາຊິຜະລິດກ້ອງໄລກາ!

ຜູ້ເວົ້າຄວາມນີ້ແມ່ນພວກ ເຊກາ ຄົນຫນຶ່ງ, ເຂົາເປັນນັກປະຕິວັດກໍາມະກອນ ບໍ່ແມ່ນວິສະວະກອນຫລືຊ່າງແວ່ນຕາ, ຫລືນັກປະດິດກ້ອງຖ່າຍຮູບ. ພວກເຊກາຄົນອື່ນໆທີ່ເປັນນັກປະຕິວັດ ແລະ ບອນເຊວິກ ເວົ້າວ່າ:

- ເອົາໂລດແຫລ້ວ... ໃຫ້ຊາວກອມມູນ ຜະລິດ "ໄລກາ" ເບິ່ງ!

ໃນເວລານັ້ນຊາວກອມມູນບໍ່ໄດ້ຕື່ນເຕັ້ນຈັກດີ:

- ໄລກາ ຫວະ? ແມ່ນຫລ້ວພວກເຮົາຊິເຮັດ!

ແຕ່ຄົນອື່ນໆຕ້ອງຮ້ອງເຊັ່ນ ພວກວິສະວະກອນ, ຊ່າງແວ່ນຕາ ພາກັນຕອບວ່າ:

- ໄລກາ ຫວະ? ເຈົ້າເວົ້າຫຍັງ ຮະ ຮ່າ?

ການຕໍ່ສູ້ຄັ້ງໃຫມ່ລະເບີດຂຶ້ນ, ມັນແມ່ນປະຕິບັດການແບບໂຊວຽດຢ່າງຫນຶ່ງ ທີ່ສັບສົນສຸດຂີດຄັ້ນກັບຫລາຍໆອັນທີ່ດໍາເນີນໄປໃນລະຍະຫລາຍໆປີຢູ່ພາຍໃນປະເທດຊາດຂອງພວກເຮົາ. ການຕໍ່ສູ້ອັນນີ້

ເຮັດໃຫ້ເກີດຄວາມຕື່ນເຕັ້ນຫວາດສຽວທຸກປະເພດ ມີການຄາດຄະເນກ້ວ້ອນ, ມີການຄິດຮົ່ນຕອງຢ່າງເຄັ່ງຕຶງ, ແບບຮູບເສັ້ນ, ການທົດລອງ ແລະ ປັບປຸງຢ່າງງຽບໆພາຍໃນຫ້ອງວິທະຍາສາດ, ເສດຝຸ່ນຈາກດິນຈີ່ໃນເວລາກໍ່ສ້າງ... ແລະການບຸກໂຈມຕີຊ້ຳສອງ, ແລ້ວກໍບຸກອີກເທື່ອໃຫມ່ ຈາກກັນເກວຊາວກອມມູນຢູ່ໃນໂຮງຊ່າງ, ຕື່ມຂ້ຫມໍ້ຂ້ເຈຍເຂົ້າອີກແລ້ວ ກໍສຸມແຮງໃສ່, ແລະ ຢູ້ອ້ອມຮອບພວກເຮົາ ຍັງມີສຽງຫາຍໃຈໃຫຍ່ແບບສິງໂສຕິເກົ່າຢູ່ ແລະ ມີການລົ້ວຕາຢູ່ເບື້ອງຫລັງແວ່ນແກ້ວແບບລ້ຳວ່າ:

- ເຮັດໄລກາ ຫວະ ເດັກນ້ອຍຫມູ່ນີ້? ເຮັດແກ້ວສ່ອງແບບແມ່ນອນຂະຫນາດເສັ້ນຜົມຫວະ ຮະຮະ...

ແຕ່ເດັກນ້ອຍທັ້ງຊາຍ ແລະ ຍິງຂອງພວກເຮົາຈຳນວນ ๕๐๐ ຄົນໄດ້ບຸກເຂົ້າໃສ່ໂລກແຫ່ງຄວາມລັກແມ່ຂະຫນາດນ້ອຍ, ວິນວາຍຢູ່ນຳໃຍແມງມຸມທີ່ເຊື່ອມໂຍງກັນຢູ່ໃນຈັກຈຸ່ນຈະນິດລັກແມ່, ວິນວາຍຢູ່ນຳການອະນຸໂລມທີ່ຈຳກັດຕິວແມ່ນອນ, ຄວາມກ້ຽງໂຄ້ງ ແລະ ເສັ້ນເສງລ້ຳສີຂອງແວ່ນແກ້ວ, ບາງຄັ້ງທັນມາຍົ້ມຫົວໃສ່ພວກເຊກາ:

- ເອົາເລີຍສູ ເດັກນ້ອຍ, ເຮັດໂລດບໍ່ຕ້ອງຢ້ານ! -ພວກ ເຊກາ ບອກພວກເຂົາເຊັ່ນນີ້.

ໂຮງງານທົ່ງດ່ຽງ ແລະ ດິເດັ່ນທົ່ພະລິດກ້ອງກ່ຳຍຮູບທົ່ມີຍ່ຫ້ຳ "ແຟດ"* ຂະຫຍາຍຕິວເຕີບໃຫຍ່ຢູ່ພາຍໃນນິຄົມ, ມີສວນດອກໄມ້

---

* "ແຟດ" ຊ່ແລະນາມສະກຸນຫຍ້ຂອງ ເຊກຊິນສະກີ ຊ່ງແມ່ນຊ່ຫຍ້ຂອງກ້ອງກ່ຳຍຮູບແບບໄລກາຂອງໂຊວຽດ.

ອ້ອມຮອບ; ເດີ່ນປູຢາງ ແລະ ບໍ່ນ້ຳພຸ. ຫລ່ຽງບໍ່ດົນນານັ້ ສາວ ກອມມູນໄດ້ນຳເອົາກ້ອງຖ່າຍຮູບ "ແຟດ" ຫນ່ວຍທີ່ຫມຶ່ນແລ້ວ, ຫນ່ວຍທີ່ງາມສະຫງ່າ ແລະ ຄັກທີ່ສຸດໄປວາງເທິງໂຕະ ຂອງລັດ ຖະມຸນຕີ.

ຫລາຍສິ່ງຫລາຍຢ່າງກາຍເປັນເລື່ອງຂອງອະດີດໄປແລ້ວ ແລະ ຫລາຍ ຢ່າງກໍຖືກລືມໄປ. ລັດທິວິລະຊົນແບບປະຖົມປະການ, ພາ ສາປາກເວົ້າແບບຊາວຕະຫລາດ ແລະ ສິ່ງເສດເຫລືອເກົ່າໆດັບສູນ ໄປເອົາເອງຕັ້ງດົນນານແລ້ວ. ໃນທຸກໆລະດູບານໃຫມ່, ວິທະຍາ ໄລກຳມະກອນ ແລະ ກອມມູນໄດ້ສົ່ງນັກສຶກສາໃນສະກາບັນຊັ້ນສູງ ຫລາຍໆສິບ ຄົນ, ໃນຈຳນວນນັ້ກໍ່ດົນກໍຈະສຳເລັດອອກມາແລ້ວ ພວກເຂົາຈະເປັນວິສະວະກອນ, ນາຍແພດ, ນັກປະຫວັດສາດ, ນັກທໍລະນີສາດ, ນັກບິນ, ນັກກໍ່ສ້າງເຮືອກຳປັ່ນ, ນັກວິທະຍຸ, ຄູ ສອນ, ນັກດົນຕີ, ສິລະປິນ, ນັກຮ້ອງ. ໃນລະດູຮ້ອນພວກປັນຍາ ຊົນເຫລົ່ານັ້ກໍພາກັນມາຍັ່ງຍຸຢາມອ້າຍນ້ອງກຳມະກອນຢູ່ກອມມູນ ຄື ພວກຊ່າງຊ່ຽນ, ນາຍຊ່າງບັນຊາຈັກກົງ, ຊ່າງໄມ້, ນັກຄິດໃຫລ່ຂະ ຫນາດ... ຫລັງຈາກນັ້ນກໍຈະມີກາຍຢ່າງຂະບວນໃຫຍ່. ການຢ່າງ ຂອງພວກເຮົາກາຍເປັນບຸນປະຈຳປີຢ່າງຫນຶ່ງ. ຊາວກອມມູນລຽງ ແຖວ ຝ ຄືແຕ່ກ່ອນ, ວົງດຸລິຍາງ ແລະ ທຸງອອກຫນ້າ, ຂະບວນ ຢ່າງເດີນໄປຫລາຍພັນກິໂລແມັດ ຜ່ານແມ່ນ້ຳ ໂອນກາ, ແຫລມ ກຣິມ, ເຂດພູ ກັບກາດ, ນິຄສະກູ, ໂອແດດຊາ ແລະ ແຄມຝັ່ງ ທະເລ ອາຊອບ.

ແຕ່ຢູ່ນິຄົມຫລືວ່າ ໃນເວລາເດີນທາງໃນລະດູຮ້ອນຂອງພວກ

ເຮົາ, ໃນຊຸມມື້ທໍ່ "ຍັງມີການໄອແຄ້ກໆ" ກໍຄືທຸກໆວັນ ວັນທໍ່ຊີວິດ ອອກແຮງງານຂອງຊາວກອມມູນກະຈາຍກືບຫອມອ່ອນຂອງມັນອອກ ຢ່າງມຶດໆນັ້ນແລ້ວ, ມັກມີນັກນ້ອຍຫົວປ້ອມຕາໃສແລ່ນອອກມາເກືຍ ຊານ... ປົ່ນປາຍແກຂອງມັນຂຶ້ນເທິງທ້ອງຟ້າແລ້ວບັນເລງສຽງຮຸກ ເອ້ີນປະຊຸມ ນາຍກອງ ຢ່າງສັ້ນໆຂ້ົນ. ແລະ ທຸກຢ່າງ ກໍເຫມືອນ ກັບແຕ່ກ່ອນ, ພວກນາຍກອງແລ່ນເຂົ້າປະຈຳບ່ອນເອ່ືຍຫລັງໃສ່ ຝາ, ພວກສະຫລອກກອກກໍເຂົ້າໄປນຳ ນັ່ງລົງກັບພ້ືນຫ້ອງຢູ່ຕິດໆ ຝານັ້ນໂລດ. ດ້ວຍຄວາມເອົາຈິງເອົາຈັງແບບໂພດເຫລືອຄ່ືເກົ່າ ເລ ຂາກອງປະຊຸມນາຍກອງຈະຮ້ອງບອກພວກໂຊກຮ້າຍວ່າ: "ອອກໄປ ຢືນຢູ່ກາງ... ຢືນກົງໄວແລ້ວ... ເວົ້າຄວາມຈິງອອກມາ!"

ທຸກຢ່າງກໍຄືທໍ່ຜ່ານມາແຕ່ກ່ອນນັ້ນແລ້ວ, ມີເຫດການ ອຸບັດ ເຫດຕ່າງໆເກີດຂ້ຶນ, ບາງຄ້ັງກໍເກີດມີບຸກຄົນເດ່ັນໂປໂລຂ້ຶນ ແລະ ບາງຂະນະກໍຄືກັບຢູ່ໃນຮ້ົງເຜ້ົາ, ຫນ່ວຍຊີວິດໂຮມຫມູ່ເຂ່ືອນແຂງ ຫ້ວາຫັນບຸກໃສ່ຈຸດທໍ່ເປັນໄພຕໍ່ຫມູ່, ແລ້ວວິທະຍາສາດການສຶກສາ ກໍຍັງຄົງເປັນວິທະຍາສາດຂະແຫນງຫນ້ຶງທໍ່ດຸເດ່ືອດ ແລະ ເຂ້ົາໃຈ ຍາກຄືເກົ່າ.

ແຕ່ທຸກຢ່າງສະດວກງ່າຍດາຍຂ້ຶນກວ່າເກົ່າແລ້ວ! ວັນເວລາບຸກ ເບ້ີກຍຸກຕ້ົນຢູ່ນິຄົມ ກ້ອກກີ ຂອງຂ້າພະເຈ້ົາຢູ່ຫ່າງໄກຫລາຍແລ້ວ, ວັນເວລາທໍ່ເປັນຕາອັບອາຍ ແລະ ໄຮ້ພະລັງ, ມາຮອດປັດຈຸບັນ ເບ້ຶາມັນຄ້າຍກັບເປັນກະດານນ້ອຍໆແຊກຢູ່ໃນຂອບແກ້ວແຄບ ທ່ານ ກາງທ້ວທັດວັນບຸນຄ້ົງຫນ້ຶງ. ວຽກງານງ່າຍຂ້ຶນ. ຢູ່ໃນສະຫະພາບ ໂຊວຽດເວລານັ້ນເກີດມີຕາຫນ່າງກ້ີແຫ້ນປະຕິບັດການສຶກສາແລ້ວ

ແລະ ພັກກໍໄດ້ທຳລາຍບໍ່ເກີດສຸດທ້າຍຂອງພວກເດັກນ້ອຍຕິດໄພສັງ
ຄົມ ແລະ ອະນາທາແລ້ວ.

ບາງທີອາດຈະຍັງບໍ່ດົນດອກ, ຢູ່ປະເທດພວກເຮົາເພິ່ນຈະເລີ
ປະພັນ "ບົດກະວີແຫ່ງສຶກສາສາດ" ແລ້ວຂຽນເລື່ອງງ່າຍໆ ແລະ
ຈົມໃຈ້ໄດ້ເຊັ່ນ "ວິທີສຶກສາອົບຮົມແບບກອມມູນິດ" ຂຶ້ນ.

ຄາຄົບ, ໑໙໘໕ - ໑໙ມ໕.

ບັນດາ ທ່ານຜູ້ອ່ານທີ່ນັບຖື!

ສຳນັກພິມ "ຣາດູກາ" ຂໍສະແດງຄວາມຂອບໃຈລ່ວງ
ໜ້າມາຍັງທ່ານຜູ້ອ່ານທີ່ໃຫ້ຄວາມຄິດເຫັນກ່ຽວກັບການ
ແປ ແລະ ການຮຽບຮຽງປຶ້ມຫົວນີ້.

ດັ່ງນັ້ນ ຖ້າຫາກທ່ານມີຄຳສະເໜີອັນໃດທີ່ຈະເປັນ
ການຊ່ວຍໃຫ້ການປັບປຸງການພິມໃນຄັ້ງຕໍ່ໄປດີຂຶ້ນກວ່າເກົ່າ
ແລ້ວກະລຸນາສົ່ງຄວາມຄິດເຫັນໄປຍັງ:

119859, Zoubovski boulevard, 17,
Moscou, URSS.

ບັນດາຜູ້ອ່ານທີ່ຮັກແພງ!

ໃນປີ ໑໙໙໐ ສຳນັກພິມ "ຣາດຸກາ"
ຈະຈັດພິມປຶ້ມ ຂອງ ແສກເກີ ອາເລັກໄຊເອບ
"ບາງເຫດການໃນປະຫວັດສາດ ລັດເຊຍ".

А. Макаренко, педагогическая поэма,
В трех книгах, книга третья

на лаосском языке.
Перевод сделан по изданию
Макаренко А. С. Собрание сочинений в 7-ми томах,
изд-во Академии педагогических наук, РСФСР,
т. I, 1950.

ສຳນັກພິມ "ຣາດູກາ"
ມົດສະກູ